ຄະນະກຳມະການ ແຜນການ ແລະ ການລົງທຶນ

# ບົດລາຍງານການຈັດຕັ້ງປະຕິບັດ
# ໄລຍະເຄິ່ງເວລາ
# 2003 ຫາ 2005

ກອງທຶນຫລຸດຜ່ອນຄວາມທຸກຍາກ

# ບົດລາຍງານ ການຈັດຕັ້ງປະຕິບັດເຄິ່ງເວລາ

## ຂອງ ກອງທຶນຫລຸດຜ່ອນຄວາມທຸກຍາກ

2003 - 2005

# <u>ສາລະບານ</u>


***ຊື່ຫຍໍ້*** **7**

***ສະຫລຸບຫຍໍ້*** **9**

***I. ຄວາມເປັນມາຂອງ ທລຍ*** **12**

1.1. ພາບລວມຂອງກອງທຶນຫລຸດຜ່ອນຄວາມທຸກຍາກ 12

1.2 ຈຸດປະສົງຂອງ ທລຍ ແລະ ບົດລາຍງານເຄິ່ງໂຄງການຂອງການຈັດຕັ້ງປະຕິບັດ 14

1.3. ຫລັກການຂອງ ທລຍ 15

1.4. ບັນດາໂຄງການທີ່ ທລຍ ສະໜັບສະໜູນ ແລະ ບໍ່ສະໜັບສະໜູນ 16

***2. ວິທີການ, ຄວາມຄືບໜ້າ ແລະ ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດຂອງ ທລຍ*** **20**

2.1. ສາມອົງປະກອບສຳຄັນຂອງ ທລຍ 20

2.2. ຈຸດເດັ່ນຂອງກິດຈະກຳ ແລະ ຂັ້ນຕອນຕ່າງໆໃນການຈັດຕັ້ງປະຕິບັດໃນແຕ່ລະຮອບວຽນ 21

2.3 ການພົບປະສະມາຄົມ ແລະ ການປະເມີນຄວາມຕ້ອງການຂອງບ້ານ 26

2.4. ການວາງເປົ້າຫມາຍ, ການກຳນົດໄລຍະ ແລະ ການແບ່ງປັນແຫລ່ງທຶນ 29

2.4.1 ແຫລ່ງທຶນ ແລະ ການແບ່ງງົບປະມານ ຂອງ ທລຍ 29

2.4.2. ວິທີການ ແລະ ການຄັດເລືອກກຸ່ມ 31

2.4.3. ໄລຍະຂອງການຈັດຕັ້ງປະຕິບັດ 38

2.4.4. ມູນຄ່າຂອງໂຄງການຍ່ອຍໃນແຕ່ລະຮອບວຽນ 40

2. 5. ຜົນສຳເລັດ ແລະ ສິ່ງທ້າທາຍທັງໝົດໃນຮອບວຽທີ I ແລະ II 40

2. 5.1. ຜົນສຳເລັດຕົ້ນຕໍຂອງການຈັດຕັ້ງປະຕິບັດ 40

❖ *ຮອບວຽນທີ 1* 40

❖ *ຮອບວຽນທີ II* 42

2.6.2. ການປະກອບສ່ວນຂອງຊຸມຊົນ ແລະ ການຄິດໄລ່ໃນຮອບວຽນທີ 1 ແລະ ທີ 2 50

2.6.3. ພາບລວມ ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ຈາກຮອບວຽນ I ແລະ II 53

***3. ຜົນສຳເລັດ ແລະ ສິ່ງທີ່ເປັນບັນຫາຂອງແຕ່ລະໜ່ວຍງານ*** **59**

3.1. ໜ່ວຍງານ ບໍລິຫານ ແລະ ການເງິນ 59

3.1.1. ພາບລວມຄວາມຄືບໜ້າຂອງການບໍລິຫານການເງິນ: 60

3.1.2. ຜົນສຳເລັດ ແລະ ສິ່ງທີ່ເປັນບັນຫາ 63

3.2. ໜ່ວຍງານຕິດຕາມ ແລະ ປະເມີນຜົນ 69

3.2.1. ພາບລວມຂອງໜ່ວຍຕິດຕາມ ແລະ ປະເມີນຜົນ ........ 69
3.2.2. ຜົນໄດ້ຮັບ ແລະ ບັນຫາທີ່ພົບພໍ້ ........ 74
3.2.3. ວຽກທີ່ກໍາລັງຈັດຕັ້ງປະຕິບັດ ແລະ ແຜນວຽກຂອງໜ່ວຍງານ ........ 82
3.3. ໜ່ວຍງານພັດທະນາຊຸມຊົນ ........ 83
3.3.1. ພາບລວມຂອງການຈັດຕັ້ງປະຕິບັດວຽກງານດ້ານພັດທະນາຊຸມຊົນ ........ 83
3.3.2. . ວຽກງານຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສໍາພັນ (IEC) ........ 84
3.3.3. ການຝຶກອົບຮົມ ........ 89
3.3.4. ກິດຈະກໍາສ້າງລາຍຮັບ ........ 93
3.3.4.1. ການຝຶກອົບຮົມກິດຈະກໍາສ້າງລາຍຮັບ ........ 93
3.3.4.2.ການຝຶກອົບຮົມ ການປົກປັກຮັກສາສິ່ງແວດລ້ອມ (NRC) ........ 94
3.3.4.3. ກຸ່ມທ້ອນເງິນຂັ້ນບ້ານ ຫລື ກອງທຶນໝູນວຽນຂັ້ນບ້ານ ........ 94
3.3.5. ສະຫລຸບລວມວຽກຂອງໜ່ວຍງານ ........ 95
3.4. ໜ່ວຍງານຈັດຕັ້ງປະຕິບັດ ວຽກງານວິຊາການ ແລະ ການຈັດຊື້-ຈັດຈ້າງ ........ 96
3.4.1. ພາບລວມຂອງໜ່ວຍງານ ........ 96
3.4.2. ຜົນສໍາເລັດໃນໄລຍະຜ່ານມາ ........ 98
3.4.3. ບັນຫາ ແລະ ບົດຮຽນທີ່ຖອດຖອນໄດ້ ........ 101
3.4.4. ແຜນວຽກທີ່ຈະເຮັດໃນຕໍ່ໜ້າ ........ 104
4.5. ກ່ຽວກັບພະນັກງານ (ການປະເມີນພະນັກງານ) ........ 104

***4. ສະຫລຸບຫຍໍ້ ແລະແຜນວຽກສໍາລັບຮອບວຽນ III........ 106***

4.1. ບົດສະຫລຸບຫຍໍ້ ........ 106
4.2. ກິດຈະກໍາສໍາລັບຮອບວຽນ III ........ 108
4.3. ແຜນວຽກສໍາລັບຮອບວຽນທີ III........ 109

***Annex........ 109***

**ເອກະສານຊ້ອນທ້າຍ 1: ສະຫລຸບການຈັດຕັ້ງປະຕິບັດ ໂຄງການໃນຮອບວຽນ I ,II**
**ເອກະສານຊ້ອນທ້າຍ 1.1: ຂໍ້ມູນສໍາລັບຮອບວຽນທີໜຶ່ງ ແລະສອງ**
**ເອກະສານຊ້ອນທ້າຍ 2: ແຜນວຽກສໍາລັບ ການຈັດຕັ້ງປະຕິບັດ ໃນຮອບວຽນ II**
**ເອກະສານຊ້ອນທ້າຍ 3: ຜົນຂອງການສໍາຫລວດ LECS 3**
**ເອກະສານຊ້ອນທ້າຍ 4: ບົດສະຫລຸບຫຍໍ້ ຂອງການເຮັດສໍາມະນາໄລຍະເຄິ່ງການ**
**ເອກະສານຊ້ອນທ້າຍ 5: ການຝຶກອົບຮົມທັງໝົດສໍາລັບຮອບວຽນທີ I, II.**

ເອກະສານຊ້ອນທ້າຍ  **6:** ງົບປະມານ ແລະ ຂໍ້ມູນທັງໝົດຂັ້ນເມືອງ ໃນຮອບວຽນ **II**

ເອກະສານຊ້ອນທ້າຍ  **7:** ບົດສະຫລຸບການຈັດຊື້- ຈັດຈ້າງ 2003 ຫາ 2004

ເອກະສານຊ້ອນທ້າຍ  **8.** ງົບປະມານທີ່ແບ່ງປັນໃຫ້ເມືອງ ສໍາລັບຮອບວຽນ  **III**

ເອກະສານຊ້ອນທ້າຍ  **9:** ສະຫລຸບຂໍ້ມູນທັງໝົດຂອງຮອບວຽນ  **III**

ເອກະສານຊ້ອນທ້າຍ **10:** ແຜນວຽກຂອງແຕ່ລະໜ່ວຍງານໃນຮອບວຽນ **III**

*Table of Table*

ຕາຕະລາງ 1: ໂຄງການທີ່ຖືກສະໜັບສະໜູນໂດຍ ທລຍ........................................................................ 17
ຕາຕະລາງ 2: ຕົວຊີ້ບອກຄວາມທຸກຍາກ...................................................................................... 30
ຕາຕະລາງ 3: ການຈັດແບ່ງງົບປະມານໃຫ້ 14 ເມືອງ, ຮອບວຽນທີ 2, (ສົກປີ 2004-2005)..................... 34
ຕາຕະລາງ 4: ການຈັດແບ່ງງົບປະມານໃຫ້ແຕ່ລະເມືອງໃນຮອບວຽນ 3 (ສົກປີ 2005-2006) .................... 37
ຕາຕະລາ 6: ສັງລວມການຈັດຕັ້ງປະຕິບັດໂຄງການຢູ່ແຕ່ລະເມືອງ, ເຂດ ໃນຮອບວຽນທີ 1 ເຖິງ 3............. 39
ຕາຕະລາງທີ 7: ລາຍລະອຽດຜົນສຳເລັດຂອງການຈັດຕັ້ງປະຕິບັດໃນຮອບວຽນທີ II ................................ 42
ຕາຕະລາງທີ 8: ຕົວຊີ້ບອກສຳຄັນຂອງການຈັດຕັ້ງປະຕິບັດ .................................................................. 44
ຕາຕະລາງທີ 9: ສົມທຽບການແບ່ງປັນງົບປະມານຂອງຮອບວຽນທີ 1 ແລະ ຮອບວຽນທີ 2 ......................... 45
ຕາຕະລາງທີ10: ສະຫລຸບແຜນການຈັດຕັ້ງປະຕິບັດໂຄງການຍ່ອຍ, ງົບປະມານ ແລະ ການນຳໃຊ້
ມາຮອດທ້າຍເດືອນ ທັນວາ 2005............................................................................................... 48
ຕາຕະລາງທີ 10.1 ລາຍລະອຽດໂຄງການຍ່ອຍໃນແຕ່ລະຂະແໜງການ ແລະ
ການແບ່ງປັນງົບປະມານໃຫ້ແຕ່ລະກຸ່ມໃນຮອບວຽນທີ 1 ແລະ ຮອບວຽນທີ 2 .......................................... 49
ຕາຕະລາງທີ 11: ຄວາມຄືບໜ້າຂອງໂຄງການຍ່ອຍຂອງທຸກເມືອງ, ຮອບວຽນທີ II (2004-2005) ............ 50
ຕາຕະລາງທີ 12: ມູນຄ່າການປະກອບສ່ວນຂອງຊຸມຊົນ........................................................................ 51
ຕາຕະລາງທີ13: ການຄິດໄລ່ການປະກອບສ່ວນຂອງຊຸມຊົນຂອງທຸກແຂວງ............................................ 53
ຕາຕະລາງທີ 14: ຈຳນວນງົບປະມານໃຊ້ຈ່າຍທັງໝົດ ລວມທັງງົບປະມານຂອງໂຄງການ ນັບແຕ່ກໍລະກົດ
2002 ຫາ 31 ກັນຍາ 2005........................................................................................................ 67
ຕາຕະລາງທີ 15: ສົມທຽບເປີເຊັນຂອງການໃຊ້ຈ່າຍ ແລະ ງົບປະມານ ຂອງ ເງິນກູ້ຢືມ ແລະ
ການຈັດຕັ້ງປະຕິບັດ ນັບແຕ່ກໍລະກົດ 2002 ຫາ 31 ກັນຍາ 2005 ........................................................ 67
ຕາຕະລາງທີ 16: ງົບປະມານທີ່ຍັງເຫລືອ .......................................................................................... 68
*ຕາຕະລາງທີ 17: ຄາດຄະເນງົບປະມານທີ່ຕ້ອງຈ່າຍແຕ່ ເດືອນ 10/2005 - 9/2008*.............................. 68
ຕາຕະລາງ l8:ສັງລວມການຈັດຕັ້ງປະຕິບັດຂອງໜ່ວຍງານ ຕິດຕາມ ແລະ ປະເມີນຜົນ.............................. 74
ຕາຕະລາງ 21 ຊະນິດຂອງອຸປະກອນ ຫລື ເຄື່ອງມືທີ່ຖືກຜະລິດສຳລັບ 4 ເມືອງໃໝ່ (2004-2005) ........... 86
ຕາຕະລາງ 22: ການຈັດຝຶກອົບຮົມ ໃນຮອບວຽນ I - II, 2003-05 (ສຳລັບ 3 ແຂວງເກົ່າ)........................ 89
ຕາຕະລາງ 23: ປະເພດຂອງເຄື່ອງມືສຳລັບການຝຶກອົບຮົມໃນຮອບວຽນ I - II, 200305 .......................... 90
ຕາຕະລາງ24: ມູນຄ່າໂຄງການ ຂອງ ທລຍ ແລະ ໂຄງການອື່ນໃນ ສປປລາວ .......................................... 99
ຕາຕະລາງ ທີ 24 ແມ່ນສະແດງໃຫ້ເຫັນ ເປີເຊັນຂອງ ພະນັກງານ ທີ່ລາອອກ ໃນຮອບວຽນ I ແລະ II......... 104
ຕາຕະລາງ 25 ສະຫລຸບຈຳນວນໂຄຄງການໃດຫລະປະເພດໃນແຕ່ລະເມືອງສຳລັບຮອບວຽນ III............. 108

## <u>ຊື່ຫຍໍ້</u>

| | |
|---|---|
| APB | Agricultural Promotion Bank |
| BOL | Bank of the Lao PDR |
| BOQ | Bill of Quantity |
| BTC | Belgium Technical Cooperation |
| CD | Community Development |
| CDD | Community Driven Development |
| CTPC | Communication Transportation Post and Construction |
| District: | An administrative unit working under the direction of Provincial administrations (142 districts throughout the Lao PDR) |
| GOL | Government of Laos |
| IDA | International Development Association |
| IEC | Information Education and Communication |
| IGA | Income Generation Activities |
| Khet | Khet is a grouping of village, at the subdistrict level |
| LA | Lao Agreement |
| Lao PDR | Lao People Democratic Republic |
| Lao PRY | Lao People's Revolutionary Youth |
| LECS | Lao Expenditure and Consumption Survey |
| LNFC | Lao National Front for Reconstruction |
| LNR | Lao National Radio |
| LTUF | Lao Trade Union Federation |
| LWU | Lao Women's Union |
| MIS | Management Information System |
| M&E | Monitoring and Evaluation |
| NSC | National Statistics Centre |
| OPT | Operations Planning Training |
| PM | Prime Minister |

| | |
|---|---|
| PMT | PRF Project Management Team |
| PRA | Participatory Rural Appraisal |
| Province: | The Lao PDR is divided into 18 provinces each with an appointed governor and local administration. |
| PRF | Poverty Reduction Fund |
| SDR | Special Drawing Rights |
| SOE | Statement of Expenditure |
| TA | Technical Advisor |
| TOE | Training of Enumerator |
| TOT | Training of Trainer |
| UCD | Unit Cost Database |
| UXO | Unexploded Ordnance |
| VNPA | Village Need Priority and Assessment (Also a form designed by the PRF to record the outputs of each village participatory workshops) |
| WB | World Bank |

## ສະຫລຸບຫຍໍ້

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ແມ່ນການຈັດຕັ້ງໃໝ່ພາຍໃຕ້ຄວາມພະຍາຍາມຂອງລັດຖະບານໃນການຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນບັນດາເຜົ່າຕາມມະຕິຂອງກອງປະຊຸມໃຫຍ່ຄັ້ງທີ 7 ຂອງສູນກາງພັກ, ໂດຍການສະໜັບສະໜູນຂອງທະນາຄານໂລກ **(ເງິນກູ້ຢືມເລກທີ 3675LA- 19,345,000 ລອນ ດາ)** ເພື່ອປະກອບສ່ວນເຂົ້າໃນວຽກງານພັດທະນາເສດຖະກິດ-ສັງຄົມ ໃນການລຶບລ້າງ ຄວາມ ທຸກຍາກໃຫ້ປະຊາຊົນລາວ ໂດຍສະເພາະປະຊາຊົນບັນດາເຜົ່າທີ່ອາໄສຢູ່ເຂດຫ່າງໄກສອກຫລີກ ທລຍ ໄດ້ຖືກສ້າງຕັ້ງຂຶ້ນໂ**ດຍຕາມດຳລັດ ເລກທີ 073/ນຍ** ລົງວັນທີ 31 ພຶດສະພາ 2002 ແລະ ບັນລຸເງື່ອນໄຂສັນຍາເງິນກູ້ໃນເດືອນກຸມພາ 2003 ໂດຍມີໄລຍະຈັດຕັ້ງປະຕິບັດ 5 ປີ. ຈຸດປະສົງຂອງ ທລຍ ແມ່ນ ເພື່ອສ້າງຂີດຄວາມສາມາດ ແລະ ໂອກາດໃຫ້ແກ່ປະຊາຊົນໃນຂັ້ນບ້ານ ທີ່ຈົດຢູ່ ໃນລະດັບທີ່ທຸກຍາກເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການລົງທຶນພັດທະນາຂອງລັດໃນບ້ານຂອງເຂົາເຈົ້າດ້ວຍຕົນເອງ, ເພື່ອສ້າງໂຄງລ່າງ ໃຫ້ການບໍລິການຢ່າງທົ່ວເຖິງ ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງ / ສະຖາບັນທ້ອງຖິ່ນໂດຍ ສະໜັບສະໜູນຂະບວນການຕັດສິນໃຈ ແລະ ແກ້ໄຂບັນຫາແບບມີສ່ວນຮ່ວມ.

ກອງທຶນຫລຸດຜ່ອນຄວາມທຸກຍາກເປັນໂຄງການທີ່ຖືກເຊັນສັນຍາບົນພື້ນຖານຂອງຫລັກການຈັດຕັ້ງປະຕິບັດ ແລະ ການຊີ້ນຳກໍຄືວິວັດທະນການໃໝ່ຂອງການພັດທະນາໂດຍມີການປະເມີນຜົນກະທົບຢ່າງເປັນໄລຍະ.

ກອງທຶນຫລຸດຜ່ອນຄວາມທຸກຍາກແມ່ນອົງປະກອບໜຶ່ງທີ່ສະໜັບສະໜູນ ຍຸດທະສາດການເຕີບໂຕ ແລະ ຫລຸດຜ່ອນຄວາມທຸກຍາກ ແຫ່ງຊາດ (NGPES) ມັນໄດ້ສະແດງໃຫ້ເຫັນເຖິງໜຶ່ງໃນເປົ້າມາຍຂອງການພັດທະນາດ້ານເສດຖະກິດ ແລະ ສັງຄົມ ຂອງລັດຖະບານແຫ່ງ ສປປ ລາວ ເຊິ່ງ ທລຍ ແມ່ນໄດ້ຮັບສະໜັບສະໜູນຈາກທະນາຄານໂລກໂດຍເງິນກູ້ໃນອັດຕາດອກເບ້ຍຕ່ຳ ແລະ ໃຊ້ເວລາຊຳລະຄືນໃນໄລຍະຍາວກວ່າສີ່ສິບປີ. ໂຄງການທີ່ຖືກຈັດຕັ້ງປະຕິບັດໂດຍ ທລຍ ແມ່ນບົນພື້ນຖານຂອງການຈັດຕັ້ງປະຕິບັດ ທີ່ອີງໃສ່ຄວາມຕ້ອງການທີ່ສະເໜີຈາກຊຸມຊົນໃນບັນດາໂຄງການທີ່ຢູ່ໃນຄູ່ມືການຈັດຕັ້ງປະຕິບັດຂອງທລຍ ເຊິ່ງໃຫ້ມີການອະທິບາຍຢ່າງກະຈ່າງແຈ້ງກ່ຽວກັບໂຄງການທີ່ຖືກສະໜັບສະໜູນ ແລະ ບໍ່ຖືກສະໜັບສະໜູນຈາກ ທລຍ ຜູ້ຊ່ວຍດ້ານວິຊາການຈະເປັນຜູ້ສະໜອງກ່ຽວກັບການອອກແບບໂດຍພື້ນຖານການປະເມີນຄ່າ ແລະ ການຊີ້ນຳຕ່າງໆ, ແຕ່ ທລຍ ຈະບໍ່ດຳເນີນການກໍ່ສ້າງເອງແຕ່ຈະໃຫ້ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດ ຫລື ຖ້າແມ່ນໂຄງການໃຫຍ່ແມ່ນຈະໃຫ້ຜູ້ມອບເໝົາເປັນຜູ້ຈັດຕັ້ງພ້ອມທັງອອກແບບ ແລະ ການດຳເນີນງານເຊິ່ງທຶນໃນການກໍ່ສ້າງຈະມອບໃຫ້ຊຸມຊົນບໍລິຫານໂດຍຜ່ານບັນຊີຂອງເຂດທີ່ເປີດໄວ້ໃນທະນາຄານຂອງເມືອງ ຫລື ບາງເຂດເປີດໄວ້ຢູ່ທະນຄານຂອງແຂວງ.

ການຈັດຕັ້ງປະຕິບັດວຽກງານທີ່ຜ່ານໂຄງການ ທລຍ ແມ່ນອີງໃສ່ການຕັດສິນໃຈ ແລະ ມອບຄວາມຮັບຜິດຊອບໃຫ້ຊາວບ້ານ, ເຊິ່ງຊາວບ້ານມີທາງເລືອກກ່ຽວກັບປະເພດຂອງໂຄງການ ແລະ ຂໍ້ສະເໜີຕ່າງໆ ບໍ່ພຽງແຕ່ເທົ່ານັ້ນ ທລຍ ກໍ່ອະນຸຍາດໃຫ້ຊາວບ້ານເລືອກ ໃນການຈັດຕັ້ງປະຕິບັດໂຄງການຍ່ອຍດ້ວຍຕົວເຂົາເອງ ຫລື

ເຮັດສັນຍາກັບ ຜູ້ຮັບເໝົາເຊິ່ງເຂົາຈະເປັນຜູ້ຄວບຄຸມທາງດ້ານ ການເງິນໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະເຊິ່ງກິດຈະກຳດັ່ງ ກ່າວບໍ່ເຄີຍມີອົງການໃດໆໃນ ສປປ ລາວ ຈັດຕັ້ງປະຕິບັດມາກ່ອນ.

ບົດລາຍງານເຄິ່ງໄລຍະທຳອິດຂອງກໂຄງການ ທລຍ ແມ່ນການທົບທວນຄືນຂະບວນການຈັດຕັ້ງປະຕິບັດຂອງ ທລຍ ຕັ້ງແຕ່ເລີ້ມຕົ້ນເພື່ອເປັນການປຶກສາຫາລືກ່ຽວກັບຜົນໄດ້ຮັບ ແລະ ບັນຫາຕ່າງໆທີ່ພົບພໍ້ເພື່ອຊອກຫາວິທີແກ້ໄຂ ແລະ ຂໍ້ສະເໜີເພື່ອເປັນວິທີທາງເພື່ອປັບປຸງການຈັດຕັ້ງປະຕິບັດໂຄງການໃນຊ່ວງເວລາທີ່ຍັງເຫລືອເຊິ່ງມັນເປັນການສະຫລຸບໂດຍຫຍໍ້ກ່ຽວກັບຜົນການຈັດຕັ້ງປະຕິບັດໃນຮອບທີ 1, ທີ 2 ແລະ ການເລີ່ມຕົ້ນຂອງຮອບວຽນ 3.

ກອງປະຊຸມສຳມະນາເຄິ່ງໄລຍະທຳອິດຂອງໂຄງການຂອງໂຄງການ ທີ່ໄດ້ຈັດຂຶ້ນຢູ່ນະຄອນຫລວງວຽງຈັນໄດ້ຈັດຂຶ້ນຈາກວັນທີ 8-9/12/2005 ເພື່ອປຶກສາຫາລືຜົນໄດ້ຮັບ ແລະ ສະເໜີບາງຂໍ້ແນະນຳເພື່ອຈັດຕັ້ງປະຕິບັດໃຫ້ມີຜະສິດທິພາບ ແລະ ຜະສິດທິຜົນຫລາຍກ່ວາເກົ່າໃນອານາຄົດ.

ທລຍ ໄດ້ເລີ້ມຈັດຕັ້ງປະຕິບັດໂຄງການໃນ 3 ຮອບວຽນທີ 1 ຢູ່ 3 ແຂວງ 10 ເມືອງເປົ້າໝາຍ, ເຊິ່ງສາມແຂວງທີ່ເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ ທລຍ ຄື: ແຂວງ ຫົວພັນ, ສະຫວັນນະເຂດ ແລະ ຈຳປາສັກ ເຊິ່ງປະກອບມີ 913 ບ້ານ, 10ເມືອງ ແລະ121 ເຂດ ເຊິ່ງບ້ານທີ່ຈັດຕັ້ງປະຕິບັດຕົວຈິງມີປະມານ 558 ບ້ານ, ມີປະຊາກອນ 138,123 ຄົນ ຫລື ປະມານ 64% ຂອງຈຳນວນທັງໝົດ 372, 668 ຄົນ, ມີຈຳນວນ 248 ໂຄງການຍ່ອຍ, ເຊິ່ງນຳໃຊ້ງົບປະມານທັງໝົດປະມານ 1,069,934 ດອນລາ ຫລື ປະມານ 11 ຕື້ກີບ (ຕົ້ນທຶນສະເລ່ຍຕໍ່ໂຄງການ 4,350 ດອນລາ/ ໂຄງການ)

ທລຍ ໄດ້ເລີ້ມຕົ້ນຈັດຕັ້ງປະຕິບັດຮອບວຽນສອງໃນເດືອນ ກໍລະກົດ ປີ 2004, ເຊິ່ງໄດ້ຈັດຕັ້ງຢູ່ໃນສາມແຂວງເກົ່າຄືໃນຮອບວຽນ ທຳອິດ ແຕ່ໄດ້ເພີ່ມຈຳນວນເມືອງຂຶ້ນຈາກ 10 ເປັນ 14 ເມືອງ, ຈຳນວນເຂດຈາກ 121 ເຂດມາເປັນ 188 ເຂດ, ຈຳນວນບ້ານຈາກ 913 ມາເປັນ 1.431 ບ້ານ, ງົບປະມານທັງໝົດວາງແຜນໄວ້ສຳລັບການຈັດຕັ້ງປະຕິບັດແມ່ນ 3.101.000 ດອນລາ ສະຫະລັດ ໃນຈຳນວນ 431 ໂຄງການ, ເຊິ່ງໃນທ້າຍເດືອນກັນຍາ 2005 ຈຳນວນໂຄງການທັງໝົດ ໄດ້ຖືກຈັດຕັ້ງປະຕິບັດ ແລະ ໃນທ້າຍ ເດືອນທັນວາ ປີ 2005 ມີຈຳນວນ 364 ໂຄງການຍ່ອຍ ຫລື 84% ແມ່ນຖືກຈັ້ຕປະຕິບັດສຳເລັດ ແລະ ຈຳນວນທຶນ 29 ຕື້ກີບ ຫລື 92% ແມ່ນຖືກໂອນເຂົ້າບັນ ຊີ ເຂດເຂດເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ, ເຊິ່ງໂຄງການທີ່ຖືກຈັ້ດຕັງປະຕິບັດສ່ວນໃຫຍ່ແມ່ນລະບົບນ້ຳສະອາດກ່ຽວກັບການສຶກສາ ແລະ ການຍົກລະດັບທາງຊົນນະບົດຕົ້ນທຶນໂດຍສະເລ່ຍສຳລັບຮອບວຽນດັ່ງກ່າວ ແມ່ນ 7.200 ລອນລາ ຕໍ່ໂຄງການ.

ການຂະຫຍາຍກິດຈະກຳໄປສູ່ສອງແຂວງໃໝ່, ຊຽງຂວາງ ແລະ ສາລະວັນ ໃນເດືອນ ມິຖຸນາ 2006 ມັນຮຽກ ຮ້ອງໃຫ້ມີການຝຶກອົບຮົມສຳລັບພະນັກງານໃໝ່ ທີ່ຈັດຕັ້ງປະຕິບັດວຽກງານໃນແຂວງດັ່ງກ່າວ ແລະ

ການຝຶກອົບຮົມ ກໍ ໄດ້ຈັດຂຶ້ນທັງສອງແຂວງຊ່ວງເດືອນ ມິຖຸນາ ເຖິງ ສິງຫາ 2005. ໃນຮອບວຽນ 3, ທລຍ ຈະໄດ້ເຮັດວຽກຢູ່ 5 ແຂວງ ໃນ 20 ເມືອງ, ພະນັກງານທັງໝົດ 138 ຄົນ ໃນທົ່ວປະເທດ.

ເຖິງວ່າ ທລຍ ຈະເລີ່ມຈັດຕັ້ງປະຕິບັດ ໂຄງການໃນຮອບວຽນ 3 ແລ້ວກໍຕາມ ແຕ່ກໍ່ຍັງມີບາງໂຄງການ ໃນຮອບ ວຽນ 1 ແລະ 2 ຍັງກຳລັງຈັດຕັ້ງປະຕິບັດຢູ່ ແລະ ຄາດວ່າ ປະສຳເລັດໃນທ້າຍປີ 2005 ນີ້. ຫລັງຈາກກອງປະຊຸມຈັດລຽງ ບຸລິມະສິດຂັ້ນເມືອງສຳເລັດແລ້ວ, ມີຈຳວນ 668 ໂຄງການ ໄດ້ຖືກຈັດລຽງເປັນ ບຸລິມະສິດຂັ້ນເມືອງ, ແຕ່ ຫລັງຈາກກອງ ປະຊຸມຕັດສິນຄັ້ງສຸດທ້າຍ ທີ່ສຳເລັດລົງ ໃນເດືອນ ທັນວາ 2005 ແມ່ນມີຈຳນວນ 533 ໂຄງການໄດ້ຖືກ ຈັດຕັ້ງປະຕິບັດ ໃນຮອບວຽນດັ່ງກ່າວ ແລະ ມີງົບປະມານ ທັງໝົດ 4.163.000 ດອນລາ, ສຳລັບໃຊ້ໃນການຈັດຕັ້ງປະຕິບັດ ໂຄງການ ທັງໝົດ ໃນຮອບວຽນນີ້

ໃນຮອບວຽນ 3 ນີ້ ທລຍ ໄດ້ເໜັ້ນໃສ່ຄຸນນະພາບຂອງໂຄງການຍ່ອຍ ດ້ວຍການເພີ້ມວິຊາການຊຸມ ຊົນ ຈາກໂຮງຮຽນ ວິຊາຊີບຢູ່ແຂວງ ສະຫວັນນະເຂດ ແລະ ຈຳປາສັກຊ່ວຍໃນການຝຶກອົບຮົມໃຫ້ ໃຫ້ວິຊາ ການເຂດ ໃນການຮັກສາ ແລະ ຄວບຄຸມຄຸນນະພາບ ຂອງສິ່ງກໍ່ສ້າງ.

ການປັບປຸງລະບົບຖານຂໍ້ມູນໃໝ່ໄດ້ຈັດຂຶ້ນດ້ວຍການເຫັນດີລະຫວ່າງທີມງານບໍລິຫານສູນກາງ ແລະ ທະນາຄານໂລກທີ່ໃຫ້ບໍລິສັດທີ່ປຶກສາ APIS ເຂົ້າມາຊ່ວຍໃນການອອກແບບ ແລະ ການປັບປຸງຈະເລີ່ມແຕ່ ທ້າຍເດືອນ ກັນຍາ ເຖິງ ທ້າຍເດືອນທັນວາ 2005 ຈຶ່ງຈະສຳເລັດລະບົບດັ່ງກ່າວ ແລະ ການຈັດຝຶກອົບຮົມ ດ້ານ ການນຳໃຊ້ຖານຂໍ້ມູນໃນຂຶ້ນສູນກາງ ແລະ ຂັ້ນແຂວງຈະໄດ້ຈັດຂຶ້ນໃນ ເດືອນ ມັງກອນ 2006 ເຊິ່ງຫລັງຈາກ ການຝຶກອົບຮົມແລ້ວ ທີມງານຂັ້ນແຂວງຈະຕ້ອງທຳການປ້ອນຂໍ້ມູນທີ່ຍັງບໍ່ທັນໄດ້ປ້ອນໃນໄລຍະຜ່ານມາເຂົ້າສູ່ ລະບົບໃໝ່ ແລະ ສົ່ງໃຫ້ ທລຍ ສູນກາງບໍ່ໃຫ້ກາຍ ທີ 25 ຂອງແຕ່ລະ ເດືອນ , ເລີ່ມແຕ່ເດືອນກຸມພາ 2006 ເປັນ ຕົ້ນໄປ.

ຕໍ່ກັບການຂະຫຍາຍກິດຈະກຳ ຂອງ ທລຍ ໄປສູ່ 4 ຕົວເມືອງໃໝ່ ໃນຮອບວຽນທີ 4, ແຕ່ອີງຕາມ ຄວາມ າມາດຂອງ ທລຍ ແລະ ຈຳນວນການລາອອກຂອງທີມງານ ທລຍ ແມ່ນມີຈຳນວນຫລວງຫລາຍ ສະນັ້ນ, ທາງທະນາຄານໂລກ ເຫັນດີ ໃຫ້ຂະຫຍາຍໄປສູ່ເມືອງດຽວຄື ເມືອງວຽງທອງ ແຂວງຫົວພັນເທົ່ານັ້ນ, ສ່ວນອີກ 3 ເມືອງ ຍັງເຫລືອໃຫ້ລໍ ຖ້າຜົນຂອງ ການ ຈັດຕັ້ງປະຕິບັດ ຕົວຈິງໃນຮອບວຽນທີ 3 ວ່າເປັນສິ່ງ ທີ່ພໍໃຈພຽງໃດ ແລ້ວຈຶ່ງພິຈາລະນາກ່ຽວກັບການ ຂະຫຍາຍ ກິດຈະ ກຳໄປສູ່ເມືອງດັ່ງກ່າວທີ່ຍັງເຫລືອ.

# I. ຄວາມເປັນມາຂອງ ທລຍ

## 1.1. ພາບລວມຂອງກອງທຶນຫລຸດຜ່ອນຄວາມທຸກຍາກ

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ແມ່ນອີກຄວາມພະຍາຍາມນຶ່ງຂອງລັດຖະບານ ສປປລາວ ໃນການເລັ່ງໃສ່ພັດທະນາເສດຖະກິດສັງຄົມຂອງຊາດ, ເວົ້າລວມກໍ່ແມ່ນການຫລຸດຜ່ອນຄວາມທຸກຍາກ ລວມທັງຊົນເຜົ່າຕ່າງໆທີ່ຢູ່ອາໃສໃນເຂດຮ່າງໄກສອກຫລີກ, ທລຍ ແມ່ນພາກສ່ວນນຶ່ງຂອງແຜນງານຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ຖືກສ້າງຕັ້ງຂຶ້ນເພື່ອຊ່ວຍໃນການພັດທະນາພື້ນຖານໂຄງລ່າງຂະໜາດນ້ອຍ, ແລະ ກິດຈະກຳອື່ນໆ ເຊັ່ນ ການຈັດຫານ້ຳສະອາດ, ການຄົມມະນາຄົມ, ການສຶກສາ, ສາທາລະນະສຸກ, ກະສິກຳ ແລະ ຂະແໜງການອື່ນໆ ເພື່ອຫລຸດຜ່ອນຄວາມທຸກຍາກ ໃນເຂດຮ່າງໄກສອກຫລີກ. ເງິນທີ່ນຳໃຊ້ໃນການລົງທຶນໃຫ້ແກ່ບ້ານທຸກຍາກນັ້ນ ແມ່ນຖືກນຳໃຊ້ໂດຍສອດຄ່ອງກັບທາງເລືອກຂອງຊາວບ້ານ ຊຶ່ງແມ່ນນຶ່ງໃນຫລັກການຂອງ ທລຍ, ປະຊາຊົນເປັນຜູ້ຮ່ວມກັນຕັດສິນໃຈຄັດເລືອກ ແລະ ລົງທຶນໃສ່ໂຄງການທີ່ເໝາະສົມໃຫ້ແກ່ຊຸມຊົນຂອງເຂົາເຈົ້າ

ໃນປີ 2002, ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຂໍການຊ່ວຍເຫລືອຈາກອົງການຈັດຕັ້ງສາກົນ (IDA) ເພື່ອຊ່ວຍໃນການພັດທະນາໃນໝູ່ບ້ານໃນເຂດຮ່າງໄກສອກຫລີກ, ໂດຍສະເພາະແມ່ນເລັ່ງໃສ່ເປົ້າໝາຍກໍ່ຄືເມືອງທີ່ທຸກຍາກໃນປະເທດໂດຍເລັ່ງໃສ່ການພັດທະນາແບບມີສ່ວນຮ່ວມແລະການຕັດສິນໃນໂດຍແມ່ນປະຊາຊົນເປັນຜູ້ຄິດເປັນຜູ້ເລືອກ ເປັນຜູ້ຕັດສິນໃຈຮັບເອົາ.

ເວົ້າລວມ, ກອງທຶນຫລຸດຜ່ອນຄວາມທຸກຍາກ ແມ່ນຖືກສ້າງຕັ້ງຂຶ້ນໂດຍດຳລັດຂອງ ນາຍົກລັດຖະມົນຕີ ສະບັບເລກທີ 073/ນຍ, ລົງວັນທີ 31 ພຶດສະພາ 2002, ໂດຍເບື້ອງຕົ້ນແມ່ນການກູ້ຢືມດອກເບ້ຍຕ່ຳຈາກທະນາຄານໂລກ, ກຳນົດເວລາ 40 ປີ, ເງິນກູ້ຢືມທັງໝົດ 19.5 ລ້ານ ໂດລາສະຫະລັດອາເມລິກາ, ແລະ ໃນນີ້ມີເງິນສົມທົບຂອງລັດຖະບານ 1.3 ລ້ານໂດລາສະຫະລັດ. ໃນນີ້ດຳລັດຍັງລະບຸອີກວ່າ ກອງທຶນຫລຸດຜ່ອນຄວາມທຸກຍາກສາມາດລະດົມທຶນຈາກແຫ່ງອື່ນເພື່ອມານຳໃຊ້ໃນການຈັດຕັ້ງປະຕິບັດໂຄງການ, ຍິ່ງໄປກ່ວານັ້ນ, ກອງທຶນຫລຸດຜ່ອນຄວາມທຸກຍາກຍັງເປັນອົງກອນອິດສະຫລະສາມາດບໍລິຫານເປັນເອກະລາດ ໂດຍການຊີ້ນຳຂອງສະພາບໍລິຫານ ທີ່ມີທ່ານຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການແຜນການ ແລະ ການລົງທຶນເປັນປະທານ

ກອງທຶນຫລຸດຜ່ອນຄວາມທຸກຍາກມີອາຍຸຂອງການຈັດຕັ້ງປະຕິບັດທັງໝົດ 5 ປີ, ນັບແຕ່ປີ 2002 - 2008, ໂດຍຮອບວຽນທີ 1 ຂອງການຈັດຕັ້ງປະຕິບັດແມ່ນປີ 2003-2004, ໃນຮອບວຽນທີນຶ່ງ ກອງທຶນໄດ້ຈັດຕັ້ງປະຕິບັດກວມເອົາທັງໝົດ 10 ເມືອງ ໃນ 3 ແຂວງຄື: ແຂວງຫົວພັນ, ສະຫວັນນະເຂດ ແລະ ຈຳປາສັກ, ໃນຮອບ

ວຽນທີ 2 ສົກປີ 2004-2005 ຂອງການຈັດຕັ້ງປະຕິບັດກວມເອົາ 14 ເມືອງ 3 ແຂວງ. ໃນສອງຮອບວຽນ ທລຍ ໄດ້ລົງທືນໃສ່ໂຄງການຍ່ອຍທັງໝົດ 4,170,000 ໂດລາສະຫະລັດ, ສ່ວນໃນຮອບວຽນທີ 3 ຄືນັບຈາກ ເດືອນ 6 ປີ 2005, ທລຍ ໄດ້ຂະຫຍາຍໜ້າວຽກອອກໄປອີກ 2 ແຂວງ 6 ເມືອງ ຄື: ແຂວງ ຊຽງຂວາງ ຢູ່ເມືອງ ຄູນ, ເມືອງຄຳ ແລະ ເມືອງໜອງແຮດ, ແຂວງສາລະວັນ ຢູ່ເມືອງ ຕຸ້ມລານ, ສະມ້ວຍ ແລະ ຕະໂອ້ຍ ແລະ ໃນ ຮອບວຽນນີ້ຄາດວ່າຈະນຳໃຊ້ງົບປະມານທັງໝົດ 4 ລ້ານກ່ວາໂດລາສະຫະລັດ

ສັງລວມຂໍ້ມູນຂອງ ທລຍ

- ແຫລ່ງເງິນ: ເງິນກູ້ຢືມ, ເລກທີ 3675 LA ກູ້ຈາກທະນາຄານໂລກ
- ຈຳນວນກູ້ຢືມ: 19,345,000 ໂດລາສະຫະລັດ
- ເງິນລັດຖະບານປະກອບສ່ວນ: 1,330,000 ໂດລາສະຫະລັດ
- ລວມມູນຄ່າໂຄງການທັງໝົດ: 21,000,000 ໂດລາສະຫະລັດ (ໂດຍປະມານ)
- ມື້ເຊັນສັນຍາ: ດຳລັດເລກທີ 073/ນຍ, ລົງວັນທີ 31 ພຶດສະພາ 2002
- ເລີ້ມລົງພາກສະໜາມ: ເດືອນເມສາ 2003
- ຊື່ໂຄງການ: ກອງທືນຫລຸດຜ່ອນຄວາມທຸກຍາກ
- ເລີ້ມຕົ້ນກອງທືນເປັນທາງການ: ວັນທີ 3 ກຸມພາ 2003
- ປະເພດຂອງໂຄງການ: ກອງທືນສັງຄົມ
- ຂື້ນກັບພາກສ່ວນ ຄະນະກຳມະການແຜນການ ແລະ ການລົງທືນ
- ປະຈຸບັນຈັດຕັ້ງປະຕິບັດຢູ່: 5 ແຂວງ ຄື: ແຂວງຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ

**<u>ການຄັດເລືອກບ້ານ ແລະ ກິດຈະກຳຂອງບ້ານ</u>**

ໃນແຕ່ລະຮອບວຽນແຕ່ລະເມືອງຈະໄດ້ຮັບການແບ່ງປັນງົບປະມານ ຊຶ່ງຂື້ນກັບຈຳນວນບ້ານທຸກຢູ່ໃນເມືອງ ຂອງຕົນ, ໃນນີ້ບ້ານທຸກແມ່ນອີງໃສ່ 5 ເງື່ອນໄຂ, ແຕ່ລະເງື່ອນໄຂແມ່ນໄດ້ລະບຸຢູ່ໃນ ດຳລັດຂອງທ່ານນາຍົກ ລັດຖະມົນຕີ ສະບັບເລກທີ 010 / ນຍ (ປີ 2001) ດັ່ງສາມາດສັງລວມເອົາເນື້ອໃນທີ່ກ່ຽວຂ້ອງດັ່ງລຸ່ມນີ້:

- ຈຳນວນພົນທຸກໃນບ້ານກວມເອົາເກີນ 50% ຫລື ປະມານ 51% ຂື້ນໄປຖືວ່າເປັນບ້ານທຸກ
- ບໍ່ມີໂຮງຮຽນຢູ່ໃນບ້ານ ຫລື ໂຮງຮຽນໄກ້ຄຽງບ້ານ
- ບໍ່ສາມາດເຂົ້າເຖິງການບໍລິການດ້ານສາທາລະນະສຸກ ເຊັ່ນ: ບໍ່ມີສຸກສາລາ ຫລື ຖົງຢາປະຈຳບ້ານ ຫລື ບໍ່ສາ ມາດເຂົ້າເຖິງໂຮງໝໍໄດ້ໂດຍການຍ່າງພາຍໃນ 6 ຊົ່ວໂມງ
- ບໍ່ມີນ້ຳດື່ມ-ນ້ຳໃຊ້ ທີ່ສະອາດ
- ບໍ່ມີທີນທາງເຂົ້າເຖິງບ້ານ (ມີແຕ່ທາງຍ່າງທີ່ສາມາດເຂົ້າເຖິງໄດ້ໃນລະດູແລ້ງ)

ທລຍ ໄດ້ຈັດອັນດັບຄວາມທຸກຍາກທັງໝົດອອກເປັນ 6 ລະດັບຄື: ບໍ່ທຸກ, ອັດຕາຄວາມທຸກຍາກຕໍ່າຫລາຍ, ອັດຕາຄວາມທຸກຍາກຕໍ່າ, ອັດຕາຄວາມທຸກຍາກປານກາງ, ອັດຕາຄວາມທຸກຍາກສູງ ແລະ ອັດຕາຄວາມທຸກຍາກສູງທີ່ສຸດ.

ງົບປະມານຂອງ ທລຍ 75% ຈະສຸມໃສ່ການລົງທຶນໃສ່ປະຊາຊົນໃນຂັ້ນບ້ານ, ງົບປະມານທີ່ມອບໃຫ້ຊຸມຊົນແມ່ນງົບປະມານຊ່ວຍເຫລືອລ້າ ເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ, ເພື່ອທີ່ຈະໄດ້ຮັບງົບປະມານ ແລະ ມີສ່ວນຮ່ວມໃນໂຄງການ, ປະຊາຊົນໃນແຕ່ລະບ້ານຕ້ອງໄດ້ສ້າງແຜນ, ຈັດຕັ້ງປະຕິບັດ, ຄຸ້ມຄອງບໍລິຫານ ແລະ ດູແລຮັກສາ ໂຄງການຍ່ອຍຂອງພວກເຂົາເຈົ້າເອງ

## 1.2 ຈຸດປະສົງຂອງ ທລຍ ແລະ ບົດລາຍງານເຄິ່ງໂຄງການຂອງການຈັດຕັ້ງປະຕິບັດ

ຈຸດປະສົງຂອງ ທລຍ ແມ່ນ:

- ຊ່ວຍເຫລືອຊາວບ້ານໃນການພັດທະນາໂຄງລ່າງຂະໜາດນ້ອຍ ແລະ ໃຫ້ເຂົາເຈົ້າໄດ້ຮັບການບໍລິການດ້ານຕ່າງໆຕາມຄວາມຈໍາເປັນ ແລະ ເໝາະສົມ
- ສ້າງຂີດຄວາມສາມາດເພື່ອມອບສິດໃຫ້ຊາວບ້ານທຸກຍາກເປັນຜູ້ວາງແຜນ, ເປັນຜູ້ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທຶນຢູ່ໃນໝູ່ບ້ານດ້ວຍຕົນເອງຕາມຮູບແບບການແບ່ງຂັ້ນຄຸ້ມຄອງ ແລະ ຄວາມໂປ່ງໃສເປັນຫລັກ
- ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ, ສະໜັບສະໜູນຂະບວນການຕັດສິນໃຈ ແລະ ການແກ້ໄຂຂໍ້ຂັດແຍ່ງແບບມີສ່ວນຮ່ວມຕັ້ງແຕ່ຂັ້ນບ້ານ, ເຂດ ແລະ ເມືອງ, ໂດຍໃຫ້ມີສ່ວນກ່ຽວຂ້ອງຢ່າງກ້ວາງຂວາງຂອງຊາວບ້ານ ໂດຍສະເພາະເພດຍິງ ແລະ ຊົນເຜົ່າສ່ວນນ້ອຍ

❖ ***<u>ວິໄສທັດຂອງ ທລຍ</u>***

"ຕອບສະໜອງແນວທາງນະໂຍບາຍ ຂອງພັກ ໃນການສ້າງ ຄວາມເຂັ້ມແຂງ, ຄວາມສາມາດໃຫ້ແກ່ ຊຸມຊົນທີ່ຢູ່ໃນເຂດຫ່າງໄກສອກຫລີກ ໂດຍເຮັດວຽກຄຽງບ່າຄຽງໄລ່ກັນເພື່ອໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນທັງໃນປັດຈຸບັນ ແລະ ອະນາຄົດ "

❖ *<u>ພາລະກິດຂອງ ທລຍ</u>*

1. ສະໜັບສະໜູນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນຕາມຂັ້ນຕອນ ແລະ ລະບົບໂດຍໃຫ້ສອດຄ່ອງ ກັບນະໂຍບາຍແບ່ງຂັ້ນຄຸ້ມຄອງຂອງລັດຖະບານ ສ ປ ປ ລາວ
2. ນໍາໃຊ້ທຶນກູ້ຢືມ, ທຶນຂອງລັດ ແລະ ທຶນອື່ນໆ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ
3. ຫລຸດຜ່ອນຄວາມທຸກຍາກຂອງຊຸມຊົນຢູ່ຊົນນະບົດ
   ໂດຍນໍາໃຊ້ແຜນງານແບບມີສ່ວນຮ່ວມຢ່າງເຕັມສ່ວນ, ໃຫ້ຊຸມຊົນສາມາດກວດສອບ ແລະ ຄຸ້ມຄອງ

ກິດຈະກຳດ້ວຍຕົນເອງໄດ້ເຊັ່ນ: ການກໍ່ສ້າງໂຄງລ່າງຂະໜາດນ້ອຍ, ການພັດທະນາທັກສະຊີວິດ ແລະ ການສ້າງລາຍຮັບ

4. ເຮັດໃຫ້ປະຊາຊົນຜູ້ທຸກຍາກ ແລະ ຊົນເຜົ່າສ່ວນນ້ອຍໄດ້ຮັບຜົນປະໂຫຍດຈາກການປັບປຸງສະພາບທາງ ດ້ານເສດຖະກິດ-ສັງຄົມ ລວມທັງປະເທດ

ຈຸດປະສົງຂອງ ທລຍ ແມ່ນເພື່ອຊ່ວຍໃຫ້ລັດຖະບານໃນການຫລຸດຜ່ອນຄວາມທຸກຍາກ ໂດຍຜ່ານຂະບວນການກະຈາຍອຳນາດລົງສູ່ທ້ອງຖິ່ນຄື ໃຫ້ປະຊາຊົນໄດ້ມີໂອກາດຄັດເລືອກ ແລະ ຊີ້ບອກຄວາມຕ້ອງການໃນການພັດທະນາ ແລະ ຄຸ້ມຄອງໂຄງການຂະໜາດນ້ອຍໂດຍຜ່ານຂະບວນການລົງທຶນ ແລະ ສຸມໃສ່ການພັດທະນາປັບປຸງພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ແລະ ສິ່ງທີ່ເປັນປະໂຫຍດອື່ນໆໃຫ້ແກ່ຊຸມຊົນ ໃນນີ້ລວມທັງຂະບວນການສົ່ງເສີມໃຫ້ເກີດລາຍຮັບ ໂດຍການຝຶກອົບຮົມ ແລະ ຜ່ານກິດຈະກຳຕ່າງໆ

ດັ່ງນັ້ນ, ***ເປົ້າໝາຍຂອງບົດລາຍງານໄລຍະເຄິ່ງຂອງການຈັດຕັ້ງປະຕິບັດຂອງ ທລຍ*** ກໍ່ເພື່ອສະທ້ອນໃຫ້ເຫັນຂະບວນການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ໃນນີ້ລວມທັງສິ່ງທີ່ເປັນຜົນສຳເລັດ ແລະ ສິ່ງທີ່ຍັງມີຂອດຫຍຸ້ງຍາກ ແລະ ຄຳຄິດເຫັນຕ່າງໆ ເພື່ອປັບປຸງການຈັດຕັ້ງປະຕິບັດໃນເຄິ່ງເວລາທີ່ຍັງເຫລືອ.

### 1.3. ຫລັກການຂອງ ທລຍ

ທລຍ ຖືກອອກແບບ ແລະ ຈັດຕັ້ງປະຕິບັດບົນ 7 ຫລັກການພື້ນຖານ ທີ່ເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາໂຄງການ, ກໍຄືທິວຄິດປະດິດສ້າງຂອງທ້ອງຖິ່ນ, ແລະການປະເມີນຜົນໂຄງການ ແລະ ຜົນກະທົບຂອງມັນ, ລຸ່ມນີ້ ແມ່ນການສືບຕໍ່ອະທິບາຍບັນດາຫຼັກການຂອງໂຄງການຄື :

1. ເລີ່ມແຕ່ງ່າຍໄປຫາຍາກ
2. ຊາວບ້ານເປັນຜູ້ເລືອກ ແລະ ຕັດສິນໃຈເອງ
3. ຊາວບ້ານມີສ່ວນຮ່ວມທຸກຂັ້ນຕອນ
4. ມອບຄວາມເປັນເຈົ້າຂອງ ແລະ ຄວາມຮັບຜິດຊອບໃຫ້ຊາວບ້ານ
5. ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້
6. ການລົງທຶນທີ່ກຸ້ມຄ່າ ແລະ ຍືນຍົງ
7. ມີຄວາມເຫັນອົກເຫັນໃຈຜູ້ທຸກຍາກ

**ເຊິ່ງລາຍລະອຽດຂອງແຕ່ລະຢ່າງມີດັ່ງລຸ່ມນີ້:**

1. **ເລີ່ມແຕ່ງ່າຍໄປຫາຍາກ:**

   ຮູບແບບເຕັກນິກການກໍ່ສ້າງແມ່ນງ່າຍດາຍຊາວບ້ານສາມາດເຮັດເອງໄດ້ໂດຍອີງໃສ່ທ່າແຮງຂອງຊາວບ້ານ

2. **ຊາວບ້ານເປັນຜູ້ເລືອກ ແລະຕັດສິນເອງ:**

ມີຫລາຍໆຢ່າງທີ່ມີຄວາມຈຳເປັນ, ມີຫລາຍໂຄງການຍ່ອຍທີ່ ສາມາດໃຫ້ໄດ້ ຖ້າຫາກວ່າຊາວບ້ານຕັດສິນໃຈເລືອກເອົາເອງ, ແຕ່ບາງໂຄງການບໍ່ສາມາດອະນຸຍາດໃຫ້ໄດ້

3. **ຊາວບ້ານມີສ່ວນຮ່ວມທຸກຂັ້ນຕອນ:**
ຊາວບ້ານຈະໄດ້ໃຫ້ການຮ່ວມມືກັບກອງທຶນຫລຸດຜ່ອນຄວາມທຸກຍາກ ແລະ ປະກອບສ່ວນດ້ານວັດຖຸ,ແຮງງານ ແລະ ອື່ນໆ ພ້ອມທັງສະໝັກໃຈເຂົ້າຮ່ວມໃນການເຮັດວຽກກັບ ທລຍ.

4. **ມອບຄວາມເປັນເຈົ້າຂອງ ແລະ ຄວາມຮັບຜິດຊອບໃຫ້ແກ່ຊາວບ້ານ:**
ຊາວບ້ານຈະຕ້ອງເປັນເຈົ້າການ ໃນການວາງແຜນ, ຈັດຕັ້ງປະຕິບັດ, ປົກປັກຮັກສາ ແລະ ຄຸ້ມຄອງດ້ວຍຕົນເອງ

5. **ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້:**
ສະຫລຸບລາຍງານ ແລະ ເຜີຍແຜ່ລາຍຮັບລາຍຈ່າຍຂອງໂຄງການຢູ່ທຸກກອງປະຊຸມມີກະດານຂ່າວ ຂອງເຂດເພື່ອແຈ້ງຂ່າວທຸກການເຄື່ອນໄຫວໃຫ້ໝົດທຸກຄົນຮັບຮູ້ ແລະ ຕິດຕາມ

6. **ການລົງທຶນທີ່ກຸ້ມຄ່າ ແລະ ຍືນຍົງ:**
ຈັດແບ່ງທຶນໃຫ້ສອດຄ່ອງ ກັບສະພາບຄວາມທຸກຍາກຕົວຈິງ ຂອງບ້ານຜູ້ທຸກຍາກໄດ້ຮັບຜົນປະໂຫຍດຈາກໂຄງການ ໂຄງ ການມີຄວາມຍືນຍົງ ແລະ ໃຊ້ໄດ້ແບບກຸ້ມຄ່າ

7. **ມີຄວາມເຫັນອົກເຫັນໃຈຜູ້ທຸກຍາກ:**
ໃຫ້ການຊ່ວຍເຫລືອແລະເຫັນອົກເຫັນໃຈປະຊາຊົນຜູ້ທຸກຍາກ ຂາດເຂີນໃນບ້ານ

## 1.4. ບັນດາໂຄງການທີ່ ທລຍ ສະໜັບສະໜູນ ແລະ ບໍ່ສະໜັບສະໜູນ

### 1. ບັນດາໂຄງການທີ່ ທລຍ ໃຫ້ການສະໜັບສະໜູນ

ກອງທຶນ ທລຍ ສາມາດສະໜອງງົບປະມານສຳລັບການຈັດຕັ້ງປະຕິບັດກິດຈະກຳທີ່ສະເໜີ ແລະ ຖືກຮັບຮອງ ເອົາໂດຍຊາວບ້ານ ໃນນີ້ລວມທັງ ກິດຈະກຳດ້ານກໍ່ສ້າງພື້ນຖານໂຄງລ່າງ ແລະ ທາງດ້ານການຝຶກອົບຮົມ, ທັງໝົດນີ້ຖ້າຫາກມີການປ່ຽນແປງ ຕ້ອງໄດ້ມີການຕົກລົງເຫັນດີລະຫວ່າງລັດຖະບານ ແລະ ທະນາຄານໂລກຈຶ່ງສາມາດເຮັດໄດ້, ສະນັ້ນ, ບັນດາໂຄງການຕ່າງໆທີ່ ທລຍ ສາມາດສະໜອງໃຫ້ໄດ້ຈຶ່ງໄດ້ເຮັດເປັນຕາຕະລາງສັງລວມດັ່ງລຸ່ມນີ້:

**<u>ລາຍການວຽກງານຂອງໂຄງການ</u>**

ໂຄງການເປີດໂອກາດໃຫ້ຊາວບ້ານສະເໜີ ແລະຮັບທຶນເຂົ້າໃນໂຄງລ່າງພື້ນຖານ ແລະການຝຶກອົບຮົມຫຼາຍປະເພດຂອງຊຸມຊົນ.

1. ໂຄງລ່າງພື້ນຖານຂອງຊຸມຊົນ

**ຕາຕະລາງ 1: ໂຄງການທີ່ຖືກສະໜັບສະໜູນໂດຍ ທລຍ**

| ປະເພດໂຄງການຍ່ອຍ | ລາຍການທີ່ມີເງື່ອນໄຂຮັບທຶນໄດ້ | ລາຍການທີ່ບໍ່ມີເງື່ອນໄຂ | ວິທີການຈັດຊື້ທີ່ອາດຖືກນຳໃຊ້ |
|---|---|---|---|
| ຄົມມະນາຄົມ ແລະ ຂົນສົ່ງ | ຂົວ, ທາງຍ່າງ, ທາງລົ້/ກວຽນ, ທໍ່ລອດທາງ, ທາງລົງທ່າບັກ, ຮ້ານທຽບເຮືອ, ສ້ອມແປງ ແລະປັບປຸງທາງ | ທາງໃໝ່ ແລະການປູທາງດ້ວຍດິນ, ຫີນ/ຢາງ | ວິທີການເປີດກ້ວາງ |
| ລະບົບນ້ຳ | ນ້ຳສ້າງ, ລະບົບນ້ຳປະປາອາໃສແຮງດຶງດູດ, ຝາຍນ້ອຍ, ສະນ້ຳ, ອື່ນໆ | ການຕໍ່ນ້ຳປະປາເຂົ້າເຮືອນ | ຊຸມຊົນມີສ່ວນຮ່ວມ |
| ຊົນລະປະທານ ແລະການລະບາຍນ້ຳຂອງຊຸມຊົນ | ຝາຍ, ຄອງເໝືອງ, ເຂື່ອນຕະລິ່ງ, ປະຕູນ້ຳ, ທາງລະບາຍນ້ຳ ແລະໂຄງສ້າງອື່ນໆ | ຈັກສູບນ້ຳໄຟຟ້າ | ຊຸມຊົນມີສ່ວນຮ່ວມ |
| ຕະຫຼາດ, ຫໍປະຊຸມ &ສຸຂະພິບານຊຸມຊົນ | ອາຄານ, ຮ່ອງ, ຫ້ອງນ້ຳ, ນ້ຳສ້າງ, ແລະເຄື່ອງປະກອບຕ່າງໆ | ຈັກຜະລິດກະແສໄຟຟ້າ | ຊຸມຊົນມີສ່ວນຮ່ວມ |
| ສຸກສາລາ ຫຼື ຫ້ອງປິ່ວພະຍາດ ແລະສາທາລະນູປະໂພກດ້ານສຸຂະພິບານອື່ນໆ | ອາຄານ, ເຟີນີເຈີ, ຫ້ອງນ້ຳ, ເຄື່ອງໃຊ້ ແລະຢາປິ່ວພະຍາດ, ອຸດໜູນພະຍາບານ/ຜະດຸງຄັນ(ເປັນເງິນສົດຫຼືວັດຖຸ) | ຈັກຜະລິດກະແສໄຟຟ້າ | ວິທີການເປີດກ້ວາງ |
| ໂຮງຮຽນ, ໂຮງລ້ຽງເດັກ ແລະສາທາລະນູປະໂພກດ້ານສຸຂະພິບານອື່ນໆ | ອາຄານ, ຫ້ອງນ້ຳ, ອຸດໜູນຄູ(ເປັນເງິນສົດຫຼືວັດຖຸ), ເຄື່ອງໃຊ້, ອຸບປະກອນ, ເຟີນີເຈີ | ເຄື່ອງໃຊ້ຕ່າງໆທີ່ລັດຖະບານປະກອບໃຫ້ | ຊຸມຊົນມີສ່ວນຮ່ວມ |
| ການສະໜອງໄຟຟ້າໃຫ້ຊຸມຊົນ | ໄຟຟ້ານ້ຳຕົກຂະໜາດນ້ອຍ, ການຕໍ່ສາຍ | ຈັກຜະລິດກະແສໄຟໃຊ້ນ້ຳ ມັນແອດຊັງ ຫຼື ກາຊວນ | ຊຸມຊົນມີສ່ວນຮ່ວມ |

ນອກຈາກນັ້ນ, ຍັງມີການຝຶກອົບຮົມຕ່າງໆທີ່ ທລຍ ສາມາດສະໜອງໃຫ້ໄດ້, ໂດຍອີງຕາມການນຳສະເໜີຕົວຈິງຂອງຊາວບ້ານ, ແລະ ການປ່ຽນແປງປະເພດຂອງໂຄງການຢູ່ໃນທາງເລືອກຂອງຊາວບ້ານນີ້ຄາດວ່າຈະສະເໜີໃຫ້ສາມາດກວມເອົາໜ້າວຽກທີ່ຈຳເປັນ ແລະ ເປັນຄວາມຮຽກຮ້ອງຕ້ອງການຕົວຈິງໃນປີຕໍ່ໄປເຊັ່ນ:ການຊ່ວຍເຫລືອດ້ານການຂະຫຍາຍເສດຖະກິດພາຍໃນຊຸມຊົນ ຫລື ການສະນັບສະໜູນດ້ານກິດຈະກຳການສ້າງລາຍຮັບ, ສະໜັບສະໜູນກຸ່ມຕ່າງໆທີ່ມີຢູ່ໃນຂັ້ນທ້ອງຖິ່ນ, ສະໜັບສະໜູນດ້ານວິຊາຊີບ ການກຸ້ມຕົນເອງ ແລະ

ສະໜັບສະໜູນດ້ານສິນເຊື່ອ ແລະ/ຫລື ກຸ່ມທ້ອນເງິນ ເພື່ອໃຫ້ການບໍລິການດ້ານສິນເຊື່ອ ແລະ ກູ້ຢືມ ແລະ ການເຮັດກິດຈະກຳຕ່າງໆທີ່ເປັນຜົນປະໂຫຍດແກ່ຊຸມຊົນ.

ຫລັງຈາກກອງຈະຊຸມຈັດລຽງບູລິມະສິດຂັ້ນເມືອງໃນຮອບວຽນທີ III, ກອງທຶນຫລຸດຜ່ອນ ຄວາມທຸກຍາກໄດ້ ຈັດແບ່ງກຸ່ມຂອງໂຄງການອອກເປັນ 5 ກຸ່ມໃຫຍ່ຄື:

| | |
|---|---|
| ກະສິກຳ (AG): | ແມ່ນກຸ່ມທີ່ກ່ຽວຂ້ອງກັບທຸກໆໂຄງການດ້ານກະສິກຳ |
| ຄຂປກ (CTPC): | ການຄົມມະນາຄົມເຊັ່ນ: ເສັ້ນທາງ ລວມທັງດ້ານພະລັງງານ ເຊັ່ນ: ໄຟຟ້າ |
| ສຶກສາ (ED): | ໂຄງການດ້ານການສຶກສາ (ອຸປະກອນການຮຽນ-ການສອນ, ການກໍ່ສ້າງໂຮງຮຽນ ແລະ ສ້ອມແປງ, ຫລື ອຸປະກອນໃນການກໍ່ສ້າງ ຫລື ສ້ອມແປງໂຮງຮຽນ) |
| ສາທາ (HL): | ດ້ານສາທາລະນະສຸກ ລວມທັງ ນ້ຳສະອາດ |
| ສ້າງລາຍຮັບ (IGA): | ກິດຈະກຳສ້າງລາຍຮັບຕ່າງໆ ແລະ ລວມທັງການຝຶກອົບຮົມທີ່ກ່ຽວຂ້ອງກັບການສ້າງລາຍຮັບ |

ໃນຮອບວຽນທີ III, ຫລຍ ໄດ້ເນັ້ນໃສ່ການຈັດຕັ້ງປະຕິບັດຢູ່ໃນຂະແໜງການຕ່າງໆເຊັ່ນ: ການໃຫ້ການສະໜັບສະໜູນໂຄງການດ້ານກະສິກຳ, ດ້ານຄົມມະນາຄົມ/ຂົນສົ່ງ, ດ້ານການສຶກສາ, ດ້ານສາທາລະນະສຸກ ແລະ ດ້ານກິດຈະກຳສ້າງລາຍຮັບ ຕິດພັນກັບການຝຶກອົບຮົມ

1. ດ້ານກະສິກຳ: ໃນດ້ານນີ້ແມ່ນລວມທັງທຸກກິດຈະກຳທີ່ກະທົບໃສ່ວຽກງານດ້ານກະສິກຳເຊັ່ນ: ແນວພັນພືດ, ລະບົບຊົນລະປະທານ, ຝາຍກັ້ນນ້ຳ, ຝາຍນ້ຳລົ້ນ ແລະ ໜອງປາ
2. ດ້ານ ຄຂປກ: ການກິດຈະກຳທີ່ກ່ຽວຂ້ອງທາງດ້ານເສັ້ນທາງ, ການເຂົ້າເຖິງ, ການຄົມມະນາຄົມ ໃນນີ້ລວມທັງ ລະບົບໄຟຟ້າ ເຊັ່ນ: ຍົກລະດັບທາງຊົນນະບົດ, ການສ້ອມແປງຂົວ, ໄຟຟ້າແສງຕາເວັນ, ໄດປັ່ນໄຟຂະໜາດນ້ອຍ, ຕະຂ່າຍໄຟຟ້າເຂົ້າບ້ານ
3. ດ້ານການສຶກສາ: ໃນດ້ານນີ້ແມ່ນລວມທັງ ການກໍ່ສ້າງ ແລະ ສ້ອງແປງໂຮງຮຽນ ປະເພດຕ່າງໆ, ການໃຫ້ການສະໜັບສະໜູນ ດ້ານອຸປະກອນການຮຽນ-ການສອນ
4. ດ້ານສາທາລະນະສຸກ: ໃນນີ້ແມ່ນລວມທັງ ໂຮງໝໍ, ສຸກສາລາ, ຖົງຢາ, ນ້ຳລິນ, ນ້ຳປາດານ, ນ້ຳສ້າງ ແລະ ວິດຖ່າຍ
5. ກິດຈະກຳສ້າງລາຍຮັບ: ໃນນີ້ລວມທັງປ່າສະຫງວນ, ວັງສະຫງວນ, ການຝຶກອົບຮົມກ່ຽວກັບວິຊາຊີບຕ່າງໆ

ບັນດາກິດຈະກຳຕ່າງໆ ທີ່ ຫລຍ ບໍ່ໃຫ້ການສະໜັບສະໜູນ:

- ທາງໃຫມ່
- ການສ້ອມແປງໜ້າທາງ
- ການປູທາງ (ດ້ວຍຫີນ, ດ້ວຍອາສະຟານ)

- ຈັກຜະລິດກະແສໄຟ, ຈັກສູບນໍ້າໃຊ້ແອດຊັງ ຫຼື ໃຊ້ກາຊວນ;
- ການຕໍ່ທໍ່ນໍ້າເຂົ້າເຮືອນ;
- ອຸບປະກອນ ຫຼື ວັດຖຸ ທີ່ສາມາດນໍາໃຊ້ທຶນຈາກແຫຼ່ງທຶນອື່ນໆ;
- ເລື່ອຍໄຟຟ້າ;
- ຢາປາບສັດຕູພືດ ຫຼື ສານເຄມີອັນຕະລາຍອື່ນໆ;
- ການລົງທຶນທີ່ກະທົບທາງລົບຕໍ່ສິ່ງແວດລ້ອມ;
- ການຈັດຫາທີ່ດິນ (ຊື້ ຫຼື ເຊົ່າ), ບໍ່ວ່າໃນເງື່ອນໄຂໃດໆ;
- ກໍ່ສ້າງ, ຟື້ນຟູ, ຫຼື ສ້ອມແປງອາຄານຫ້ອງການຂອງລັດຖະບານ;
- ຈ່າຍເງິນເດືອນໃຫ້ລັດຖະກອນ ຫຼື ເງິນເດືອນພະນັກງານສັງກັດອົງການຈັດຕັ້ງທີ່ລັດອຸບປະຖໍາ;
- ກິດຈະການທີ່ຄືນຈໍານວນຫຼາຍຮັບບໍ່ໄດ້ (ບໍ່ວ່າຈະແມ່ນຊົນເຜົ່າໃດກໍຕາມ).

**ການຈັດຕັ້ງປະຕິບັດກິດຈະກໍາພາຍໃຕ້ກອງທຶນຫລຸດຜ່ອນຄວາມທຸກຍາກນັບແຕ່ປີ 2002-2008**

| | 2002 | 2003 | 2004 | 2005 | 2006 | 2007 | 2008 |
|---|---|---|---|---|---|---|---|
| ດໍາລັດນາຍົກລັດຖະມົນຕີ | ພຶດສະພາ 31 | | | | | | |
| ສັນຍາເງິນກູ້ | ສິງຫາ 19 | | | | | | |
| ໂຄງການເລີ່ມຕົ້ນ | | ກຸມພາ 3 | | | | | |
| ເລີ່ມລົງພາກສະໜາມ | | ເມສາ | | | | | |
| ການປະເມີນດ້ານວິຊາການ ແລະ ດ້ານຜູ້ໄດ້ຮັບຜົນປະໂຫຍດ | | | | • | | | |
| ການທົບທວນເຄິ່ງໄລຍະໂຄງການ | | | | • | | | |
| ຮອບວຽນທີ I | | • | • | | | | |
| ຮອບວຽນທີ II | | | • | • | | | |
| ຮອບວຽນທີ III | | | | • | • | | |
| ຮອບວຽນທີ IV | | | | | • | • | |
| ຮອບວຽນທີ V | | | | | | • | • |
| ໄລຍະສຸດທ້າຍຂອງໂຄງການ | | | | | | | ມີນາ |

## 2. ວິທີການ, ຄວາມຄືບໜ້າ ແລະ ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດຂອງ ທລຍ

ໃນຂະນະທີ່ຈັດຕັ້ງປະຕິບັດ ແລະ ລວບລວມເອົາປະສົບການໃນການຈັດຕັ້ງປະຕິບັດຂອງ ຄະນະກຳມະການ ແຜນການ ແລະ ການລົງທຶນ, ກອງທຶນຫລຸດຜ່ອນຄວາມທຸກຍາກ ໄດ້ແປງ ແລະ ພັດທະນາເຄື່ອງມື ແລະ ວິທີ ການທີ່ແທດເໝາະໃນການຈັດຕັ້ງປະຕິບັດຢູ່ໃນເມືອງທຸກຍາກຂອງ ສປປລາວ, ເພື່ອເອົາ ໄປລວມໃສ່ໃນເງື່ອນ ໄຂເງິນກູ້.

ບົດລາຍງານການຈັດຕັ້ງປະຕິບັດເຄິ່ງໂຄງການຂອງການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ກໍ່ເຊັ່ນ ດຽວກັນ ຈຸດປະສົງອັນຕົ້ນຕໍກໍ່ເພື່ອສະທ້ອນໃຫ້ເຫັນ ຜົນສຳເລັດຂອງການຈັດຕັ້ງປະຕິບັດ, ຄວາມຄືບ ໜ້າຂອງການຈັດ ຕັ້ງປະຕິບັດ, ຈຸດດີ ແລະ ຈຸດອ່ອນ, ເພື່ອຊອກຫາວິທີທາງເພື່ອແກ້ໄຂ, ວິເຄາະ ແລະ ໃຫ້ຄຳຄິດເຫັນເພື່ອແກ້ ໄຂໃຫ້ແກ່ການຈັດຕັ້ງປະຕິບັດໃນເຄິ່ງເວລາທີ່ຍັງເຫລືອ. ສະນັ້ນ, ບົດລາຍງານການຈັດຕັ້ງປະຕິບັດ ເຄິ່ງໂຄງ ການຂອງ ທລຍ ໄດ້ເຮັດຂື້ນໂດຍນຳໃຊ້ 2 ວິທີການທີ່ແຕກຕ່າງກັນ ເພື່ອວິເຄາະຄວາມ ຄືບໜ້າຂອງການຈັດ ຕັ້ງປະຕິບັດບັດກິດຈະກຳຂອງ ທລຍ ໃນຮອບວຽນທີ 1 ແລະ 2

ວິທີການທີ 1, ແມ່ນລວບລວມເອົາພາບລວມຂອງການຈັດຕັ້ງປະຕິບັດທີ່ນອນຢູ່ໃນບົດລາຍງານປະຈຳປີ, ໃນປື້ມຄູ່ມືການຈັດຕັ້ງປະຕິບັດ, ເຊັ່ນ: ການຈັດຕັ້ງປະຕິບັດໃນຮອບວຽນຜ່ານມາໄດ້ໄປຕາມຈຸດປະສົງທີ່ໄດ້ລະບຸຢູ່ໃນແຜນການ ຫລື ຢູ່ໃນຄູ່ມືການຈັດຕັ້ງຫລືບໍ່.

ວິທີການທີ 2, ທຸກໜ່ວຍງານພາຍໃນ ທລຍ ສູນກາງ ຕ້ອງໄດ້ເຮັດບົດລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດພາຍໃນໜ່ວຍງານຂອງຕົນເອງ ນັບແຕ່ມື້ເລີ້ມຕົ້ນຂອງການຈັດຕັ້ງປະຕິບັດກິດຈະກຳພາຍໃຕ້ກອງທຶນຫລຸດຜ່ອນຄວາມທຸກຍາກ

### 2.1. ສາມອົງປະກອບສຳຄັນຂອງ ທລຍ

- ງົບປະມານທີ່ອະນຸມັດໃຫ້ໜຶ່ງບ້ານແມ່ນມີເພດານຢູ່ປະມານ 25,000 ໂດລາສະຫະລັດ ເພື່ອປັບປຸງພື້ນຖານໂຄງລ່າງຂອງຊຸມຊົນ ຫລື ສຳລັບການຝຶກອົບຮົມ, ພະນັກງານຂອງ ທລຍ ໃຫ້ຂໍ້ມູນແກ່ຊາວບ້ານເພື່ອເປັນຂໍ້ມູນໃນການຕັດສິນໃຈ ແລະ ສຶກສາ ເພື່ອຊ່ວຍໃນການຄັດເລືອກໂຄງການ. ການພັດທະນາພື້ນຖານໂຄງລ່າງ ແມ່ນລວມທັງ ຂົວ, ທາງຍ່າງ, ທາງກວຽນ, ທໍ່ນ້ຳລອດ, ທາງໂຄ້ງ, ການຍົກລະດັບທາງຊົນນະບົດ, ໂຮງຮຽນ, ສຸກສາລາ, ຫໍປະຊຸມ ລວມທັງ ລະບົບນ້ຳປະປາຊຸມຊົນ, ຊົນລະ ປະທານ, ລະບົບລະບາຍນ້ຳເສຍ, ຕະຫລາດຊຸມຊົນ ແລະ ໃນປີຕໍ່ໄປຄາດວ່າຈະຂະຫຍາຍກິດຈະກຳອອກໄປສູ່ ການໃຫ້ທຶນການສຶກສາ, ການນຳໃຊ້ງົບປະມານເພື່ອປ້ອງກັນຄວາມອຶດຫິວ ແລະ ຫາຍຍະນະ, ເສດຖະກິດຂະໜາດນ້ອຍ ແລະ ສົ່ງເສີມການໃຫ້ບໍລິການດ້ານຕ່າງໆ.

- ການເສີມສ້າງຄວາມອາດສາມາດໃຫ້ທ້ອງຖິ່ນ, ພະນັກງານວິຊາການຂັ້ນແຂວງຢູ່ໃນແຕ່ລະແຂວງຈະເປັນຜູ້ຊ່ວຍດ້ານວິຊາການໃຫ້ແກ່ທີມງານເຂດ ໃນການກະກຽມບົດສະເໜີໂຄງການຍ່ອຍ, ລວມທັງທີມງານ ວິຊາການ ແລະ ພັດທະນາຊຸມຊົນ ຂັ້ນແຂວງ ແລະ ຂັ້ນເມືອງ, ນອກຈາກນັ້ນ, ຍັງໃຫ້ການຊ່ວຍເຫລືອດ້ານບໍລິຫານການເງິນ, ວິທີການຈັດຊື້-ຈັດຈ້າງ ແລະ ການສະໜອງຂໍ້ມູນຕ່າງໆ
- ການບໍລິຫານໂຄງການໃນຂັ້ນສູນກາງ, ແມ່ນນຳໃຊ້ງົບປະມານເຂົ້າໃນການວ່າຈ້າງພະນັກງານ, ນຳໃຊ້ເຂົ້າໃນການບໍລິຫານ, ການຕິດຕາມ, ການລາຍງານ ແລະ ການຈັດຕັ້ງປະຕິບັດ ພາຍໃນກອງທຶນຫລຸດຜ່ອນຄວາມທຸກຍາກຂັ້ນສູນກາງ, ໃນນີ້ຍັງລວມທັງການວ່າຈ້າງບໍລິສັດ ຫລື ວິຊາການຈາກພາຍນອກເຂົ້າມາຊ່ວຍໃນການເຮັດການຝຶກອົບຮົມ, ໃນການຕິດຕາມໂຄງການ, ໃນການປັບປຸງດ້ານບັນຊີໃນການເຮັດການກວດສອບບັນຊີປະຈຳປີ, ໃນການເຮັດປະເມີນດ້ານການຈັດຊື້-ຈັດຈ້າງ, ການໃຫ້ການບໍລິການດ້ານຕ່າງໆ ແລະ ລວມທັງໜ້າວຽກພິເສດອື່ນໆ.

## 2.2. ຈຸດເດັ່ນຂອງກິດຈະກຳ ແລະ ຂັ້ນຕອນຕ່າງໆໃນການຈັດຕັ້ງປະຕິບັດໃນແຕ່ລະຮອບວຽນ

- ມີສ່ວນຮ່ວມໂດຍຜ່ານການປຶກສາຫາລື, ການໃຫ້ຄະແນນ ແລະ ຄັດເລືອກໂຄງການ
- ມີການແບ່ງຂັ້ນຄຸ້ມຄອງໃນການຈັດຕັ້ງຂອງ ທລຍ
- ມີຄວາມໂປ່ງໃສ ຜ່ານກອງປະຊຸມຕ່າງໆ ແລະ ກະດານຂ່າວ
- ສາມາດກວດສອບໄດ້ ໂດຍຜູ້ໄດ້ຮັບຜົນປະໂຫຍດ, ສະພາບໍລິຫານ ຫລື ຜູ້ໃຫ້ທຶນ
- ໂອນເງິນເຂົ້າບັນຊີເຂດໂດຍກົງ ແລະ ໃຫ້ຕົວແທນເຂດເປັນຜູ້ບໍລິຫານຄຸ້ມຄອງ ອັນສະແດງເຖິງຄວາມເປັນເຈົ້າຂອງຊຸມຊົນ ແລະ ສອດຄ່ອງກັບຫລັກການຂອງ ທລຍ

*ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ໃນແຕ່ລະຮອບວຽນແມ່ນມີຂັ້ນຕອນທີ່ກຳນົດໄວ້ຄົບຖ້ວນ*

ຂັ້ນຕອນໃນການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ໃນແຕ່ລະຮອບວຽນ ແມ່ນໄດ້ຖືກກຳນົດ ແລະ ຈັດຕັ້ງເປັນຮູບປະທຳໃນ ຮອບວຽນທີ 1, 2 ແລະ ເຊັ່ນດຽວກັນໃນຮອບວຽນທີ 3, ຊຶ່ງປະກອບດ້ວຍຂັ້ນຕອນຕ່າງໆດັ່ງຕໍ່ໄປນີ້:

### 1. ຂັ້ນຕອນໃນການກະກຽມ

ການກະກຽມຄວາມພ້ອມແມ່ນຈະໄດ້ຈັດຂື້ນຜ່ານການຝຶກອົບຮົມ ເພື່ອໃຫ້ເຂົ້າໃຈແຈ້ງທຸກຂັ້ນຕອນຂອງການຈັດຕັ້ງປະຕິບັດພາຍໃຕ້ກອງທຶນ ທລຍ ແລະ ໃນນີ້ຍັງລວມທັງ ຕ້ອງໄດ້ກະກຽມຄວາມພ້ອມດ້ານວິຊາການດ້ານຕ່າງໆ, ທັງການຈ້າງທີ່ປຶກສາຈາກພາຍນອກ ແລະ ຜ່ານການເຮັດວຽກຕົວຈິງ, ສ່ວນຫລາຍແລ້ວການຈັດການຝຶກອົບຮົມໃນລັກສະນະນີ້ຈະແມ່ນພະນັກງານພາຍໃນ ທລຍ ເອງເປັນຜູ້ຈັດຕັ້ງປະຕິບັດ

### 2. ການຈັດກອງປະຊຸມພົບປະສະມາຄົມ

ການຈັດກອງປະຊຸມພົບປະສະມາຄົມ ຈຸດປະສົງແມ່ນເພື່ອເຮັດໃຫ້ທ້ອງຖິ່ນ ທີ່ ທລຍ ຈະໄປຈັດຕັ້ງປະຕິບັດກິດຈະກຳນັ້ນໄດ້ເຂົ້າໃຈເຖິງຫລັກການ, ຂັ້ນຕອນ ແລະ ໜ້າວຽກ ທີ່ຈະຈັດຕັ້ງຮ່ວມກັບ ບ້ານ, ທີ່ປຶກສາ, ຜູ້ປະສານງານ ແລະ ພະນັກງານຝ່າຍລັດ, ເພື່ອໃຫ້ການຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນມີສ່ວນຮ່ວມຈາກທຸກພາກສ່ວນທີ່ກ່ຽວຂ້ອງ, ຕິດຕິດໃນການນຳໃຊ້ງົບປະມານຕ່າງໆເພື່ອໃຫ້ເກີດຄວາມໂປ່ງໃສ ແລະ ໃນນີ້ຍັງລວມທັງການມີສ່ວນຮ່ວມຕິດຕາມໂຄງການຂອງຊາວບ້ານພ້ອມ, ການພົບປະສະມາຄົມນອກຈາກຈະຈັດເປັນກອງປະຊຸມຢູ່ໃນຂັ້ນແຂວງ, ຂັ້ນເມືອງ, ຂັ້ນເຂດ ແລະ ຂັ້ນບ້ານ, ກໍ່ຍັງມີການຂັບຂວຍໂຄສະນາຜ່ານສື່ຕ່າງໆ ເຊັ່ນ: ວາລະສານ, ຮູບພາບ, ໂຄສະນາຜ່ານວິທະຍຸ ແລະ ແຫ່ລງຂໍ້ມູນອື່ນໆອີກດ້ວຍ

### 3. ກອງປະຊຸມຈັດລຽງບູລິມະສິດຄວາມຕ້ອງການຂັ້ນບ້ານ

ຜູ້ປະສານງານຂອງ ທລຍ ຈະຈັດກອງປະຊຸມຈັດລຽງບູລິມະສິດຂັ້ນບ້ານໃນທຸກໆບ້ານຂອງເມືອງທີ່ ທລຍ ຈັດຕັ້ງປະຕິບັດຢູ່ ໂດຍການຮ່ວມມືຂອງຕົວແທນບ້ານ, ເຖົ້າແກ່ແນວໂຮມ, ອຳນາດການປົກຄອງຂັ້ນບ້ານ ແລະນາຍບ້ານ. ການຈັດລຽງບູລິມະສິດຄວາມຕ້ອງການຂັ້ນບ້ານນີ້ກຸ່ມຊາຍ ແລະ ກຸ່ມຍິງຈະໄດ້ແຍກກັນເພື່ອຄົ້ນຄ້ວາຫາສິ່ງທີ່ບ້ານຕົນເອງຕ້ອງການ, ຫລັງຈາກນັ້ນກຸ່ມຍິງ ແລະ ກຸ່ມຊາຍຈະເອົາຄວາມຕ້ອງການຂອງກຸ່ມຕົນມາລວມກັນ ແລ້ວເອົາມາຈັດລຽງໃຫ້ເປັນບູລິມະສິດຂອງບ້ານຕົນ 3 ຢ່າງ, ຢ່າງນ້ອຍ 1 ໃນ 3 ຕ້ອງຄັດເລືອກມາຈາກກຸ່ມຍິງ, ຫລັງຈາກນັ້ນຈະໄດ້ຄັດເລືອກເອົາຕົວແທນບ້ານ 3 ທ່ານ (ຢ່າງນ້ອຍເພດຍິງ 1 ທ່ານ) ເພື່ອຈະນຳເອົາບູລິມະສິດຂອງບ້ານຕົນຂຶ້ນໄປປຶກສາຫາລືຢູ່ໃນຂັ້ນເຂດ.

### 4. ກອງປະຊຸມຈັດລຽງບູລິມະສິດຂັ້ນເຂດ

ຈຸດປະສົງຂອງກອງປະຊຸມຈັດລຽງບູລິມະສິດຂັ້ນເຂດແມ່ນເພື່ອຈັດລຽງບູລິມະສິດຄວາມຕ້ອງການຂອງເຂດຕົນເພື່ອນຳສະເໜີຕໍ່ກອງປະຊຸມຈັດລຽງບູລິມະສິດຂັ້ນເມືອງ, ໃນນີ້ກອງປະຊຸມຕ້ອງຄັດເລືອກ 6 ບູລິມະສິດຄວາມຕ້ອງການຂອງເຂດຕົນໂດຍແມ່ນຕົວແທນບ້ານເປັນຜູ້ປ້ອງກັນບູລິມະສິດຄວາມຕ້ອງການຂອງບ້ານ ຕົນ. ຫລັງຈາກທີ່ໄດ້ບູລິມະສິດຄວາມຕ້ອງການທັງໝົດຂອງເຂດແລ້ວ ກອງປະຊຸມຈະໄດ້ຄັດເລືອກເອົາຕົວແທນເຂດ 4 ທ່ານ (ຍິງ 2 ທ່ານ ແລະ ຊາຍ 2 ທ່ານ) ເພື່ອໄປປ້ອງກັນບູລິມະສິດຄວາມຕ້ອງການຂອງເຂດຕົນ ໃນກອງປະຊຸມຈັດລຽງບູລິມະສິດຄວາມຕ້ອງການ ແລະ ກອງປະຊຸມຕັດສິນ ຂັ້ນເມືອງໃນຂັ້ນຕໍ່ໄປ

### 5. ກອງປະຊຸມຈັດລຽງບູລິມະສິດຂັ້ນເມືອງ

ກອງປະຊຸມຈັດລຽງບູລິມະສິດຂັ້ນເມືອງແມ່ນການນຳເອົາທຸກບູລິມະສິດຄວາມຕ້ອງການຂອງເຂດໃນເມືອງ ມາລວມເຂົ້າກັນ ແລະ ປຶກສາຫາລື ລະຫວ່າງຕົວແທນເຂດ, ພະນັກງານ ທລຍ ແລະ ຜູ້ຕາງໜ້າຫ້ອງການຂະແໜງວິຊາການຕ່າງໆອ້ອມຂ້າງເມືອງ ແລະ ແຂວງ, ແລະເນື່ອງຈາກຄວາມຕ້ອງ ການທີ່ຈັດລຽງໃນແຕ່ລະປີມີຈຳນວນຫລວງຫລາຍແຕ່ງົບປະມານຈຳກັດ, ດັ່ງນັ້ນ, ທລຍ ຈຶ່ງບໍ່ສາມາດສະໜອງຄວາມຕ້ອງການທັງ

ໝົດໃນແຕ່ລະປີ ແລະ ຍ້ອນແນວນັ້ນການຄັດເລືອກເອົາບູລິມະສິດຂັ້ນເມືອງຈຶ່ງຄຳນຶງເຖິງໂຄງການໃດຈະໃຫ້ຜົນປະໂຫຍດແກ່ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນໃນທ້ອງຖິ່ນໄດ້ຫລາຍກ່ວາ ແລະ ຈະຖືເອົາໂຄງການນັ້ນເປັນໂຄງການຢູ່ໃນບູລິມະສິດຂັ້ນເມືອງໃນປີນັ້ນໆ ແລະ ໂຄງການທີ່ບໍ່ໄດ້ຖືກ ຈັດລຽງ ອາດ ສະມາດ ນຳສະເໜີໃນກອງປະຊຸມຈັດລຽງບູລິມະສິດຂັ້ນບ້ານ, ຂັ້ນເຂດ ແລະ ຂັ້ນເມືອງໄດ້ອີກໃນປີຕໍ່ໄປ. ນອກຈາກນີ້ບັນດາໂຄງການທີ່ບໍ່ໄດ້ຖືກຈັດລຽງ ແລະ ພິຈາລະນາຈັດຕັ້ງປະຕິບັດກອງທຶນ ທລຍ ຍັງພະຍາຍາມຊອກຫາຈາກແຫ່ງຊ່ວຍເຫລືອອື່ນໆ ເຊັ່ນ: ລັດຖະບານ ຫລື ອົງການຈັດຕັ້ງ ສາກົນຜູ້ໃຫ້ທຶນຊ່ວຍເຫລືອຕ່າງໆ

## 6. ການກະກຽມການອອກແບບ, ງົບປະມານ ແລະ ວິທີການຈັດຕັ້ງປະຕິບັດ

ຫລັງຈາກກອງປະຊຸມຈັດລຽງບູລິມະສິດຂັ້ນເມືອງ ໂຄງການທີ່ຖືກຈັດລຽງຈະໄດ້ສົ່ງໃຫ້ພະນັກງານວິຊາການຂັ້ນເມືອງ, ຂັ້ນແຂວງ ເພື່ອລົງສຳຫລວດຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດໂຄງການ, ຊາວບ້ານຈະເປັນຜູ້ຂຽນບົດສະເໜີໂຄງການ ລວມທັງງົບປະມານ ແລະ ວິທີການຈັດຊື້-ຈັດຈ້າງໂດຍການຊ່ວຍເຫລືອດ້ານວິຊາການຈາກເມືອງ, ແຂວງ. ຫລັງຈາກນັ້ນຈະໄດ້ໄດ້ກອງປະຊຸມຊ້ອງໜ້າທຸກເຂດ (Inter Khet Meeting) ເພື່ອຮັບຮອງການອອກແບບ ແລະ ງົບປະມານຂອງໂຄງການຍ່ອຍ, ຫລັງຈາກການເຫັນດີຂອງເຂດ, ກໍ່ຖືວ່າໂຄງການສາມາດຈັດຕັ້ງປະຕິບັດໄດ້ ແລະ ຈະນຳໄປຕັດສິນ ແລະ ຮັບຮອງເອົາໂຄງການຍ່ອຍໃນກອງປະຊຸມຕັດສິນໂຄງການຍ່ອຍຄັ້ງສຸດທ້າຍ ຢູ່ໃນຂັ້ນເມືອງ

## 7. ການຈັດຕັ້ງປະຕິບັດ

ການຈັດຕັ້ງປະຕິບັດໂຄງການຍ່ອຍແມ່ນຈະອີງໃສ່ຫລາຍຂັ້ນຕອນຂອງການຈັດຕັ້ງປະຕິບັດ, ນັບແຕ່ການກະກຽມຈົນເຖິງການຈັດຕັ້ງປະຕິບັດຕົວຈິງພາກສະໜາມ ແລະ ອື່ນໆ, ໃນນີ້ຍັງລວມທັງການເອົາເຂດໄປຕິດຕາມກັນ (ການໄປຖອດຖອນບົດຮຽນຢູ່ເຂດອື່ນຂອງຜູ້ປະສານງານເຂດ), ການຕິດຕາມ ແລະ ການລາຍງານ, ໃນການຈັດຕັ້ງປະຕິບັດໂຄງການຍ່ອຍນີ້ມັນຮຽກຮ້ອງຕ້ອງໄດ້ມີການຕິດຕາມ ແລະ ການສັງເກດການເພື່ອໃຫ້ເປັນໄປຕາມຫລັກການຂອງ ທລຍ ດັ່ງນີ້:

- ຊຸມຊົນເປັນເຈົ້າຂອງໂຄງການ, ດັ່ງນັ້ນ, ທຸກການຈັດຕັ້ງປະຕິບັດ ແລະ ການຕັດສິນໃຈຕ້ອງແມ່ນຄວາມຮັບຜິດຊອບຂອງປະຊາຊົນພາຍໃນເຂດ
- ທຸກໆການວ່າຈ້າງທີ່ຕ້ອງການແຮງງານຄົນ, ຊາວບ້ານຜູ້ທຸກຍາກຈະຖືກພິຈາລະນາກ່ອນເພື່ອເຂົ້າມາຄັດເລືອກຈັດຕັ້ງປະຕິບັດ ຫລື ເຮັດວຽກໃຫ້ໃນຊຸມຊົນນັ້ນໆ
- ເມື່ອມີໜ້າວຽກໃດທີ່ຊຸມຊົນບໍ່ສາມາດຈັດຕັ້ງປະຕິບັດເອງໄດ້, ຊຸມຊົນສາມາດຈັດຫາແຮງງານ, ນາຍຊ່າງ ຫລື ຊ່ຽວຊານຈາກທາງນອກມາຊ່ວຍໃນການຈັດຕັ້ງປະຕິບັດໄດ້ ຖ້າຫາກວ່ານອນຢູ່ໃນສັນຍາຂອງການຈັດຕັ້ງປະຕິບັດໂຄງການ

**8. ກອງປະຊຸມສະຫລຸບງວດ**

ກອງປະຊຸມສະຫລຸບງວດແມ່ນຈະຈັດຂຶ້ນກ່ອນການຂໍເບີກຈ່າຍງົບປະມານໃນທຸກໆງວດ, ໃນກອງປະຊຸມນີ້ ຈະໄດ້ທົບທວນຄືນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ, ບັນຫາ ແລະ ການນຳໃຊ້ງົບປະມານ ທັງໝົດມາຮອດມື້ຈັດກອງປະຊຸມ.

**9. ກອງປະຊຸມປະເມີນຜົນ ແລະ ມອບຮັບໂຄງການຍ່ອຍຂັ້ນເມືອງ**

ກ່ອນການຈັດຕັ້ງປະຕິບັດສິ້ນສຸດໃນທຸກຮອບວຽນ ແລະ ກ່ອນທີ່ຈະກະຈາຍງົບປະມານໃໝ່ໃຫ້ໃນແຕ່ລະຮອບ ວຽນ ກອງປະຊຸມປະເມີນຜົນ ແລະ ມອບຮັບໂຄງການຍ່ອຍຂັ້ນເມືອງ ຈະຕ້ອງໄດ້ຖືກຈັດຂຶ້ນ ເພື່ອສະແດງເຖິງ ຄວາມໂປ່ງໃສຂອງການຈັດຕັ້ງປະຕິບັດໃນຮອບວຽນຜ່ານມາຊຶ່ງຜ່ານການຈັດຕັ້ງປະຕິບັດມາປະມານ 6-8 ເດືອນ, ແຕ່ການຈັດຕັ້ງປະຕິບັດໃນຮອບວຽນຕໍ່ໄປອາດມີພຽງແຕ່ 3-4 ເດືອນເທົ່ານັ້ນ.

**10. ການໄກ່ເກ່ຍບັນຫາ ແລະ ແກ້ໄຂຂໍ້ຂັດແຍ່ງ**

ການໄກ່ເກ່ຍບັນຫາ ແລະ ແກ້ໄຂຂໍ້ຂັດແຍ່ງແມ່ນບັນຫາໃຈກາງຂອງກອງທຶນ, ລະບົບຖານຂໍ້ມູນນີ້ແມ່ນນອນ ຢູ່ໃນພາກສ່ວນນຶ່ງຂອງລະບົບຄຸ້ມຄອງບໍລິຫານຂໍ້ມູນ ຂອງຂັ້ນສູນກາງ ແລະ ຂັ້ນແຂວງ, ຂໍ້ມູນດັ່ງກ່າວນີ້ຈະ ເປັນຂອດຕັດສິນໃຫ້ແກ່ຜົນສຳເລັດຂອງການຈັດຕັ້ງປະຕິບັດໂຄງການ

11. ການຈັດຕັ້ງປະຕິບັດ ແລະ ການດູແລຮັກສາ

ການຈັດຕັ້ງປະຕິບັດ ແລະ ການດູແລຮັກສາແມ່ນນຶ່ງໃນເງື່ອນໄຂຂອງການຈັດຕັ້ງປະຕິບັດໂຄງການ ຊຶ່ງເປັນ ໜ້າທີ່ຮັບຜິດຊອບຂອງເຂດ ແລະ ບ້ານທີ່ຈັດຕັ້ງປະຕິບັດໂຄງການນັ້ນໆ. ທຸກໂຄງການຈະໄດ້ຖືກສຸ່ມກວດ ເພື່ອຊອກຫາຂໍ້ບົກຜ່ອງຂອງການຈັດຕັ້ງປະຕິບັດ ແລະ ການດູ ແລຮັກສາໂຄງການ ແລະ ຈະນຳໃຊ້ຂໍ້ມູນເລົ່າ ນີ້ເພື່ອເປັນຕົວຊີ້ບອກ ຄວາມເປັນເຈົ້າການຂອງຊຸມຊົນ ແລະ ຄວາມຍືນຍົງຂອງໂຄງການ

**12. ມາດຕະການໃນການລົງໂທດ**

ມາດຕະການໃນການລົງໂທດ ແມ່ນມີການຳນົດ ແລະ ເຫັນດີ ເພື່ອໃຫ້ການຈັດຕັ້ງປະຕິບັດຂອງປະຊາຊົນທຸກ ຍາກຜູ້ທີ່ໄດ້ຮັບຜົນປະໂຫຍດ ໄດ້ຮັບໝາກຜົນ, ມາດຕະການໃນການລົງໂທດຍັງມີຈຸດປະສົງເພື່ອເຮັດຂະ ບວນການຈັດຕັ້ງປະຕິບັດມີຄວາມໂປ່ງໃສ່ຢູ່ໃນແຕ່ລະຂັ້ນ, ມາດຕະການໃນການລົງໂທດຍັງຕໍ່ (1) ມາດຕະ ການໃນການລົງໂທດຢູ່ໃນຂັ້ນຊຸມຊົນ (2) ມາດຕະການໃນການລົງໂທດທາງລັດຖະການ, ຕາມມາດຕະການ ໃນທາງກົດໝາດ ແລະ (3) ມາດຕະການໃນການລົງໂທດຕໍ່ ທລຍ, ຢູ່ໃນບັນດາມາດຕະການລົງໂທດໃນຂັ້ນ ຕ່າງໆນີ້ ຕ້ອງໄດ້ອະທິບາຍ ແລະ ໃຫ້ຂໍ້ມູນຕໍ່ທຸກພາກສ່ວນຢ່າງຈະແຈ້ງ ກ່ອນຈະນຳເອົາເຂົ້າບັນທຶກໃນປຶດ

ລາຍງານຕ່າງໆຂອງທຸກກອງປະຊຸມ, ແລະ ທຸກມາດຕະການລົງໂທດຕ້ອງໄດ້ປະກາດແຈ້ງການຄັກແນ່, ສາມາດນຳສະແດງຕໍ່ສາທາລະນາຊົນ ໂດຍສະເພາະຕ້ອງມີຕິດໄວ້ຢູ່ໃນກະດານຂ່າວ

**ການເຄື່ອນໄຫວວຽກງານຕາມວົງຈອນຂອງ ທລຍ**



ກະກຽມການອອກແບບ ແລະ ງົບປະມານ ແລະ ການແນະນຳກ່ຽວກັບວິທີຈັດຊື້

## 2.3 ການພົບປະສະມາຄົມ ແລະ ການປະເມີນຄວາມຕ້ອງການຂອງບ້ານ

ຫລັກການ ແລະ ຈຸດປະສົງຂອງ ທລຍ ແມ່ນຂື້ນກັບການປຸກລະດົມໃຫ້ມີສ່ວນຮ່ວມໃຫ້ຫລາຍທີ່ສຸດຂອງຊຸມຊົນ, ຕົວຈິງ ທຸກວິທີການທີ່ນຳໃຊ້ໃນການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ແມ່ນເນັ້ນໃສ່ການມີສ່ວນ ຮ່ວມສູງສຸດຂອງປະຊາຊົນ

ສັງຄົມແມ່ນດ່ານທຳອິດຢູ່ໃນຂັ້ນພື້ນຖານ ແລະ ຖືເປັນອັນສຳຄັນຢູ່ໃນຂັ້ນຕອນຂອງການຈັດຕັ້ງປະຕິບັດ ເພື່ອ ສະໜັບສະໜູນຕໍ່ຜົນສຳເລັດຂອງການຈັດຕັ້ງປະຕິບັດໃນອານາຄົດ, ຈຳນວນພົນທີ່ເຂົ້າຮ່ວມກອງ ປະຊຸມພົບ ປະສະມາຄົມຂັ້ນແຂວງ, ຂັ້ນເມືອງ, ຂັ້ນເຂດ ແລະ ຂັ້ນບ້ານ ລວມທັງພາກສ່ວນທີ່ມາ ຈາກພະ ແນກ ການຕ່າງໆ ທີ່ກ່ຽວຂ້ອງເຊັ່ນ: ມາຈາກ ຂະແໜງກະສິກຳ ແລະ ປ່າໄມ້, ມາຈາກຂະແໜງສຶກສາ, ມາຈາກ ຂະ ແໜງຄຂປກ ພະແນກ ແຜນການ ແລະ ການລົງທືນ, ຊປປລາວ, ມາຈາກ ອົງການຈັດຕັ້ງສາກົນຕ່າງໆ ເພື່ອ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດກິດຈະກຳ ຕ່າງໆ ຂອງ ທລຍ

### *ການເລີ້ມຕົ້ນຈັດຕັ້ງປະຕິບັດໃນຮອບວຽນທີ I*

ອີງຕາມບົດລາຍງານຈາກ ເມືອງ ແລະ ແຂວງ, ຈຳນວນຜູ້ເຂົ້າຮ່ວມກອງປະຊຸມພົບ ປະສາມາ ຄົມແມ່ນ ມີຈຳ ທີ່ໜ້າພຶງພໍໃຈ, ກອງປະຊຸມພົບປະສະມາຄົມໄດ້ຈັດຂື້ນຢູ່ໃນ 3 ເມືອງເລີ້ມຕົ້ນ ຄື: ເມືອງສົບເບົາ ຢູ່ແຂວງ ຫົວພັນ, ເມືອງມູນລະປະໂມກ ຢູ່ແຂວງຈຳປາສັກ ແລະ ເມືອງເຊໂປນ ຢູ່ແຂວງສະຫວັນ ລະຫວ່າງກາງເດືອນ ເມສາ 2003, ໃນນີ້ມີຈຳນວນບ້ານທັງມົດ 305 ບ້ານ ຢູ່ໃນ 37 ເຂດ ຂອງເມືອງເລີ້ມຕົ້ນ ຈັດຕັ້ງປະຕິບັດກ່ອນ, ແລະ ໄດ້ເລີ້ມຕົ້ນຈັດກອງປະຊຸມພົບປະສະມາຄົມ ຂອງ 7 ເມືອງທີ່ຍັງເຫລືອ ທັງໝົດ 615 ບ້ານໃນ 76 ເຂດ (ໃນນີ້ມີເມືອງ ຊຽງຄໍ້ ແລະ ເມືອງແອດ ຢູ່ແຂວງຫົວພັນ, ເມືອງນອງ ແລະ ເມືອງວິລະບູລີ ຢູ່ແຂວງສະຫວັນນະ ເຂດ ແລະ ເມືອງປະທຸມພອນ ແລະ ເມືອງໂຂງ ຢູ່ແຂວງຈຳປາສັກ)



ໃນປີ 2003, ກອງປະຊຸມພົບປະສະມາຄົມໄດ້ກວມເອົາປະມານ 920 ບ້ານ, 121 ເຂດ ໃນ 10 ເມືອງ, ໃນນີ້ເກີດຂື້ນໄດ້ກໍ່ຍ້ອນການປະສານສົມທົບທີ່ດີ ລະຫວ່າງ ທລຍ ແລະ ອຳນາດການປົກຄອງທ້ອງຖິ່ນ, ການກະກຽມການຈັດຕັ້ງປະຕິບັດຍັງເປັນຕົວວັດແທນໃຫ້ການປະຕິບັດວ່າຈະເກີດຜົນສຳເລັດໄດ້ນ້ອຍຫຼາຍ

ເທົ່າໃດ, ການເຕົ້າຮວມປະຊາຊົນເພື່ອເຂົ້າ ຮ່ວມກອງປະຊຸມ ສ່ວນຫລາຍການແຈ້ງການ ແລະ ຊຸກຍູ້ໃຫ້ຊາວບ້ານເຂົ້າຮ່ວມຈະແມ່ນນາຍບ້ານ ຊື່ງນອນຢູ່ ໃນອຳນາດ ການ ປົກຄອງທ້ອງຖິ່ນ

ໃນນີ້ການສຳຫລວດດ້ານອົງການຈັດຕັ້ງສັງຄົມ ຍັງແມ່ນອີກວຽກນຶ່ງທີ່ສຳຄັນຊື່ງນອນຢູ່ໃນສັນຍາເງິນກູ້ລະຫວ່າງລັດຖະບານແຫ່ງ ສປປລາວ ກັບ ທະນາຄານໂລກ, ດັ່ງນັ້ນ, ທລຍ ຈື່ງໄດ້ວ່າຈ້າງບໍລິສັດທີ່ປຶກສາຈາກພາຍນອກເພື່ອມາເຮັດການສຳຫລວດ (ກໍລະນີສຶກສາ) ໃນເດືອນ ກຸມພາ 2004, ຮ່າງບົດລາຍງານຂອງການເຮັດກໍລະນີສຶກສາດັ່ງກ່າວແມ່ນສຳເລັດຮ່າງສຸດທ້າຍໃນເດືອນ ພຶດສະພາ 2004, ແຕ່ພາຍຫລັງການຄົ້ນຄ້ວາ ແລະ ພິຈາລະນາຈາກທີມງານ ທລຍ ຂັ້ນສູນກາງ ເຫັນວ່າບົດລານງານແມ່ນບໍ່ສອດຄ່ອງ ແລະ ບໍ່ຖືກຕາມເງື່ອນໄຂທີ່ລະບຸໄວ້ຢູ່ໃນໜ້າວຽກຂອງທີມງານເຮັດການສຳຫລວດ, ທລຍ ພາຍຫລັງການເຮັດການສຳຫລວດຈື່ງໄດ້ຈັດກອງປະຊຸມໃນເດືອນ ກໍລະກົດ 2005 ເພື່ອຄົ້ນຄ້ວາໃຫ້ຄຳຄິດຄຳເຫັນປະກອບເປັນແຜນເພື່ອຈັດຕັ້ງປະຕິບັດໃຫ້ແກ່ທີມງານສຳຫລວດ ສົ່ງໃຫ້ທະນາຄານໂລກ ແລະ ສະພາບໍລິຫານເພື່ອພິຈາລະນາ, ແລະ ເພື່ອຕິດຕາມວຽກນີ້ ໄດ້ກຽມແຜນການ ແລະ ວິທີການໃນການຕິດຕາມຄັກແນ່

## *ການເລີ້ມຕົ້ນການຈັດຕັ້ງປະຕິບັດໃນຮອບວຽນທີ II*

ໃນຮອບວຽນທີ 2 ການຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນ ທລຍ ໄດ້ຂະຫຍາຍອອກໄປຕື່ມອີກ 4 ເມືອງຄື: ເມືອງຫົວເມືອງ, ເມືອງວຽງໄຊ ແລະ ເມືອງຊຳໃຕ້ ຢູ່ແຂວງຫົວພັນ, ເມືອງພິນ ແຂວງສະຫວັນນະເຂດ. ເຊັ່ນດຽວກັນກັບຮອບວຽນທີໜຶ່ງເມື່ອໜ້າວຽກຂະຫຍາຍໄປສູ່ເມືອງໃໝ່ຕ້ອງໄດ້ຈັດກອງປະຊຸມພົບປະສະມາຄົມຂື້ນເພື່ອແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ໂດຍສະເພາະແມ່ນອຳນາດການປົກຄອງທ້ອງຖິ່ນ, ຫ້ອງການເຕັກນິກວິຊາການອ້ອມຂ້າງ ເຊັ່ນ: ສຶກສາ, ສາທາ, ຄຂປກ, ກະສິກຳ ແລະ ອົງການຈັດຕັ້ງມະຫາຊົນພາຍໃນເມືອງ

ຫລັງຈາກກອງປະຊຸມພົບປະສະມາຄົມຂັ້ນເມືອງ, ກໍ່ຕ້ອງໄດ້ຈັດກອງປະຊຸມດັ່ງກ່າວຢູ່ໃນຂັ້ນເຂດ ແລະ ພ້ອມກັນນັ້ນກໍ່ໄດ້ເຮັດການຝຶກອົບຮົມໃຫ້ຜູ້ປະສານງານເຂດ ເພື່ອຊ່ວຍໃຫ້ ທລຍ ໃນການເກັບກຳຂໍ້ມູນ ຄວາມຕ້ອງການທີ່ເປັນບູລິມະສິດຂັ້ນບ້ານ

ຂະບວນການໃນການຈັດຕັ້ງປະຕິບັດໂຄງການຍ່ອຍແມ່ນເລີ້ມຕົ້ນຢູ່ໃນຂັ້ນບ້ານ, ຫລາຍກອງ ປະຊຸມໄດ້ຖືກຈັດຂື້ນ ແລະ ດຳເນີນໄປບົນພື້ນຖານຫລັກການຂອງ ທລຍ, ການຈັດຕັ້ງປະຕິບັດໃນຮອບວຽນ 2 ແມ່ນກວມເອົາ 10 ເມືອງເກົ່າໃນຮອບວຽນທີ 1 ແລະ ເພີ່ມອີກ 4 ເມືອງໃໝ່ໃນຮອບວຽນທີ 2, ລວມທັງໝົດ 14 ເມືອງ, 188 ເຂດ, 1412 ບ້ານ. ການເຮັດກອງປະຊຸມພົບປະສະມາຄົມຂັ້ນບ້ານ ແລະ ກອງປະຊຸມຈັດລຽງບູ ລິມະສິດຄວາມຕ້ອງການຂັ້ນບ້ານນອກຈາກພະນັກງານ ທລຍ ແຂວງ ແລະ ເມືອງແລ້ວ ຍັງມີຜູ້ປະ ສານງານເຂດທີ່ເປັນອາສາສະມັກເຮັດວຽກໃຫ້ ທລຍ ໂດຍບໍ່ມີເງິນເດືອນແຕ່ໄດ້ຮັບເງິນອຸດໜູນເວລາເຮັດວຽກໃຫ້ ທລຍ ເປັນຜູ້ຈັດຕັ້ງ ປະຕິບັດ ຕັ້ງແຕ່ຮອບວຽນທີ 1 ໂດຍການໃຫ້ຄຳແນະນຳ ແລະ ຊ່ວຍເຫລືອ ດ້ານວິຊາ ການ ຈາກ

ທີມງານ ແຂວງ ແລະ ເມືອງ. ແຕ່ກອນທີ່ຈະເຮັດກອງປະຊຸມພົບປະສະມາຄົມໃນແຕ່ລະຂັ້ນ ຂັ້ນບ້ານ, ຂັ້ນເຂດ, ຂັ້ນເມືອງ ແລະ ຂັ້ນແຂວງ, ໜ່ວຍງານ ຂໍ້ມູນ, ການສຶກສາ ແລະ ປະຊາສໍາພັນ (IEC) ໄດ້ກຽມ ເອກະ ສານ ຂອງກອງປະຊຸມໃນ ທຸກຂັ້ນ ລວມທັງເອກະສານຕ່າງໆທີ່ຈໍາເປັນໃນກອງປະຊຸມ, ເອກະສານ, ຮູບພາບ, ສັນຍາ ແລະ ອື່ນໆ.

ຫລັງຈາກນັ້ນ, ກອງປະຊຸມໃຂຂັ້ນຕ່າງໆກໍ່ໄດ້ຖືກຈັດຂຶ້ນ, ເພື່ອຊອກຫາສິ່ງທີ່ເປັນບູລິມະສິດຂອງບ້ານ, ແລ້ວນໍາ ເອົາໄປຈັດລຽງບູລິມະສິດຢູ່ໃນກອງປະຊຸມຈັດລຽງຂັ້ນເຂດ, ຄັດເລືອກ ແລະ ຕັດສິນເອົາໂຄງ ການ ຍ່ອຍຢູ່ໃນຂັ້ນເມືອງ, ໂດຍຜ່ານຂະບວນການປຶກສາຫາລືກັບຊຸມຊົນທີ່ໄດ້ຮັບຜົນປະໂຫຍດ ຫລັງຈາກນັ້ນ ຈຶ່ງ ສໍາເລັດເປັນ ບົດສະເໜີໂຄງການຍ່ອຍ (ໂດຍຕື່ມໃສ່ແບບຟອມບົດສະເໜີໂຄງການຍ່ອຍ) ຊຶ່ງລວມເອົາ ຂໍ້ມູນ ທັງໝົດເພື່ອນໍາ ສະເໜີ, ລວມທັງງົບປະມານ ແລະ ການອອກແບບ, ເຊັ່ນດຽວກັນກັບ ວິທີການໃນ ການຈັດ ຊື້-ຈັດຈ້າງ ແລະ ຄວາມສ່ຽງຕໍ່ລະເບີດທີ່ບໍ່ທັນແຕກ ແລະ ການປະເມີນດ້ານຜົນ ກະທົບຕໍ່ສິ່ງແວດ ລ້ອມ, ແລະ ໃນຕອນທ້າຍສຸດກອງປະຊຸມຕັດສິນໂຄງການຍ່ອຍຄັ້ງສຸດທ້າຍຂັ້ນເມືອງຈະໄດ້ຖືກຈັດຂຶ້ນ ເພື່ອ ຮັບ ຮອງເອົາງົບປະມານ ແລະ ໂຄງການເປັນຄັ້ງສຸດທ້າຍ

*ການເສີມສ້າງຄວາມອາດສາມາດ*

ການຝຶກອົບຮົມໃຫ້ພະນັກງານທຸກຄົນທີ່ຈັດຕັ້ງປະຕິບັດກິດຈະກໍາພາຍໃຕ້ ທລຍ ຖືວ່າເປັນອັນສໍາຄັນ ແລະ ຈໍາ ເປັນເພື່ອໃຫ້ ທລຍ ສາມາດບັນລຸຈຸດປະສົງທີ່ຕັ້ງໄວ້, ພະນັກງານ ທລຍ ໃນທຸກຂັ້ນ ຈະໄດ້ຮັບ ການ ຝຶກ ອົບ ຮົມ ໃນການກະກຽມການນໍາສະເໜີໂຄງການ ແລະ ການຈັດຕັ້ງປະຕິບັດ ກ່ອນການ ເລີ່ມຕົ້ນ ການຈັດ ຕັ້ງປະຕິບັດຕົວຈິງຈະເລີ້ມຕົ້ນ,ການຝຶກອົບຮົມດັ່ງກ່າວແມ່ນໄດ້ຈັດຂື້ນຢູ່ຫ້ອງປະຊຸມຊັ້ນລຸ່ມຂອງ ກອງທຶນຫລຸດ ຜ່ອນຄວາມທຸກຍາກໃນລະຫວ່າງກາງເດືອນ ມິຖຸນາ 2003, ແລະ ລາຍການໆຝຶກອົບຮົມມີດັ່ງນີ້:

- ❖ ຂໍ້ແນະນໍາ ແລະ ບົດຮຽນທີ່ຖອດຖອນໄດ້ໃນພາກສະໜາມ ຈາກພະນັກງານຜູ້ທີ່ໄດ້ຜ່ານວຽກຕົວຈິງ ໃນໄລຍະເຮັດວຽກງານພົບປະສະມາຄົມ
- ❖ ຍໍ້າຄືນຫລັກການຂອງ ທລຍ, ຮອບວຽນຂອງການຈັດຕັ້ງປະຕິບັດຂອງ ທລຍ, ແຜນວຽກ ແລະ ອື່ນໆ
- ❖ ຫລັກການໃນການເຮັດວຽກແບບມີສ່ວນຮ່ວມ ສໍາຫລັບພະນັກງານວິຊາການ ແລະ ພະນັກງານ ທີ່ເຮັດ ວຽກພາຍໃຕ້ກອງທຶນ ທລຍ ຜູ້ອື່ນໆ, ເນັ້ນການມີສ່ວນຮ່ວມຂອງຊຸມຊົນ ແລະ ຊຸກຍູ້ໃຫ້ປະຊາຊົນເປັນ ເຈົ້າການໃນການຈັດຕັ້ງປະຕິບັດ ທຸກຂະບວນການວາງແຜນ ແລະ ຕັດສິນໃຈ ເພື່ອໃຫ້ປະຊາຊົນເປັນ ເຈົ້າໃນການຄຸ້ມຄອງຮັກສາ ແລະ ອື່ນໆ.
- ❖ ຂະບວນການ ແລະ ຄວາມຕ້ອງການເບື້ອງຕົ້ນ ໃນທຸກໆໂຄງການຍ່ອຍຂອງ ທລຍ
- ❖ ການປັບປຸງ ແລະ ແກ້ໄຂ ແບບມີສ່ວນຮ່ວມເຂົ້າໃນຮ່າງບົດສະເໜີໂຄງການຍ່ອຍ ຂອງຄູຝຶກ/ຜູ້ປະ ສານງານ ຊຶ່ງໃນພາກນີ້ ທລຍ ສູນກາງແມ່ນເນັ້ນໜັກໃສ່

ກ່ອນການເລີ່ມຕົ້ນການຈັດຕັ້ງປະຕິບັດ ໃນຮອບວຽນທີ 3 (ສົກປີ 2005-2006) ທີມງານ ທລຍ ໄດ້ວາງແຜນ ເພື່ອຂະຫຍາຍໜ້າວຽກອອກໄປອີກ 2 ແຂວງ 6 ເມືອງໃໝ່ ຄື: ແຂວງຊຽງຂວາງ ແລະ ແຂວງສາລະວັນ ໃນນີ້ ແມ່ນເລືອກເອົາ 3 ເມືອງໃນແຕ່ລະແຂວງເພື່ອຈັດຕັ້ງປະຕິບັດກ່ອນ ໃນຮອບວຽນທີ 3 ນີ້. ພະນັກງານທີ່ຖືກຄັດ ເລືອກມາເຮັດວຽກຢູ່ແຂວງໃໝ່ກໍ່ໄດ້ຮັບການຝຶກອົບຮົມເຊັ່ນດຽວກັນ ໂດຍແມ່ນທີມ ງານຈາກສູນກາງ ເປັນຜູ້ ຝຶກອົບຮົມໃຫ້. ຫລັງຈາກການຝຶກອົບຮົມ ເນື່ອງຈາກເວລາຂອງການ ຝຶກອົບຮົມ ສັ້ນຫລາຍ ດັ່ງນັ້ນບາງໜ້າວຽກ ທີ່ຈຳເປັນໃຫ້ແກ່ພະນັກງານແຕ່ລະຕຳແໜ່ງ, ພະນັກງານຂັ້ນສູນກາງ ກໍ່ໄດ້ວາງ ແຜນ ຄືນ ເພື່ອເອົາພະນັກງານ ເລົ່ານັ້ນຂຶ້ນມາຝຶກຢູ່ວຽງຈັນ ຫລື ບາງຄັ້ງກໍ່ຝຶກກັບແຂວງ, ແລະ ໃນນີ້ຍັງລວມ ທັງການ ຝຶກອົບຮົມແບບທັງຮຽນ ທັງເຮັດ (ໝາຍຄວາມວ່າເຮັດຕົວຈິງ). ຈາກບັນດາພະນັກງານ ທີ່ໄດ້ເຮັດ ວຽກຕົວ ຈິງໂດຍສະເພາະພະນັກງານ ຂັ້ນແຂວງທີ່ຖືກຄັດເລືອກເຂົ້າມາເຮັດວຽກຍັງປະກອບດ້ວຍ ຜູ້ປະສານ ງານແຂວງ ແລະ ພະນັກງານການເງິນ ຊຶ່ງຕ້ອງປະຈຳຢູ່ ຫ້ອງການແຂວງ ຊຽງຂວາງ ແລະ ສາລະວັນ

### 2.4. ການວາງເປົ້າໝາຍ, ການກຳນົດໄລຍະ ແລະ ການແບ່ງປັນແຫລ່ງທຶນ

2.4.1 ແຫລ່ງທຶນ ແລະ ການແບ່ງງົບປະມານ ຂອງ ທລຍ

ແຫ່ງທຶນທີ່ກອງທຶນຫລຸດຜ່ອນຄວາມທຸກຍາກນຳໃຊ້ໃນປະຈຸບັນແມ່ນເງິນກູ້ຢືມຈາກທະນາຄານໂລກ, ເຖິງແມ່ນ ວ່າ ທລຍ ອາດຈະໄດ້ຮັບທຶນມາຈາກຫລາຍແຫລ່ງທຶນລວມທັງເງິນເສຍພາສີໃຫ້ລັດຖະບານກໍຕາມ.

ສຳຫລັບເມືອງທີ່ ທລຍ ເຂົ້າໄປຈັດຕັ້ງປະຕິບັດ ຈະໄດ້ຮັບການແບ່ງປັນງົບປະມານໃນແຕ່ລະຮອບວຽນ (ຫລື ໃນແຕ່ລະປີ), ໃນການແບ່ງປັນງົບປະມານນີ້ ກອງທຶນຫລຸດຜ່ອນຄວາມທຸກຍາກແມ່ນໄດ້ນຳເອົາສູດຄິດໄລ່ ໂດຍອີງຕາມຈຳນວນຄົນທຸກຍາກຢູ່ໃນເມືອງນັ້ນ ມາຄູນໃຫ້ 5 ດອນລາສະຫະລັດ ແລະ ເຮັດຄືກັນໃນທຸກເມືອງ ຊຶ່ງເປັນຈຳນວນເງິນທີ່ຄິດໄລ່ກ່ອນລ່ວງໜ້າ, ງົບປະມານທີ່ແຕ່ລະເມືອງຈະຕ້ອງໄດ້ຄິດໄລ່ກ່ອນການຈັດຕັ້ງປະ ຕິບັດໃນແຕ່ລະຮອບວຽນ, ສ່ວນການຈັດສັນງົບປະມານໃສ່ແຕ່ລະໂຄງການນັ້ນ ແມ່ນຂຶ້ນກັບການຕັດສິນໃຈ ຂອງປະຊາຊົນຢູ່ໃນແຕ່ລະທ້ອງຖິ່ນ ເວລາຈັດກອງປະຊຸມຈັດລຽງບູລິມະສິດຄວາມຕ້ອງການຢູ່ຂັ້ນບ້ານ, ຂັ້ນ ເຂດ ແລະ ຂັ້ນເມືອງ ລວມໄປເຖິງກອງປະຊຸມຕັດສິນໂຄງການຍ່ອຍຄັ້ງສຸດທ້າຍ.

ໄລຍະການຈັດຕັ້ງປະຕິບັດ ແມ່ນໄດ້ຈັດຕັ້ງຂຶ້ນໃນລັກສະນະເມືອງຕໍ່ເມືອງ, ໂດຍຈະເລີ້ມຈາກເມືອງທຸກຍາກ ກ່ອນ, ໃນ 3 ແຂວງເປົ້າໝາຍໃນເບື້ອງຕົ້ນ, ງົບປະມານຂອງ ທລຍ ທັງໝົດ 75% ຈະໄດ້ຖືກລົງທຶນໃສ່ໂຄງ ການຍ່ອຍ ແລະ ອີກ 25% ຈະຖືກນຳໃຊ້ເປັນເງິນບໍລິຫານໂຄງການ, ໃນ 25% ນີ້ແມ່ນລວມທັງ ງົບປະມານໃນ ການຈັດຕັ້ງປະຕິບັດ, ງົບປະມານໃນການຕິດຕາມ ແລະ ງົບປະມານບໍລິຫານວຽກຂອງໂຄງການ.

ເພື່ອຄິດໄລ່ງົບປະມານຂອງຮອບວຽນທີ 2 ແລະ ທີ 3, ກອງທຶນ ຫລຍ ໄດ້ພິວພັນເອົາຂໍ້ມູນຄວາມທຸກຍາກຂອງປີລ່າສຸດ ຈາກສູນສະຖິຕິແຫ່ງຊາດ ເພື່ອເປັນຂໍ້ມູນອ້າງອີງໃນການຄິດໄລ່ງົບປະມານໃຫ້ແຕ່ລະເມືອງ ຂອງ ທຸກແຂວງ, ປະຈຸບັນ ຫລຍ ແມ່ນໄດ້ມີຂໍ້ມູນລ່າສຸດ ທີ່ໄດ້ຮັບຈາກສູນສະຖິຕິແຫ່ງຊາດ ເປັນຂໍ້ມູນຄວາມທຸກຍາກ ປີ 2002

ສໍາລັບເຂດເປົ້າໝາຍຂອງ ຫລຍ ແລ້ວ, ຂໍ້ມູນຕົວຊີ້ບອກຄວາມທຸກຍາກແມ່ນມີຢູ່ໃນຂັ້ນເມືອງບໍ່ສາມາດຕອບສະໜອງໄດ້ຢູ່ໃນຂັ້ນສູນກາງ, ເພື່ອໃຫ້ເມືອງເປັນຜູ້ຈັດສັນຂໍ້ມູນພື້ນຖານໃຫ້ເຊັ່ນ: ຂໍ້ມູນເຂດ, ພົນລະເມືອງ ແລະ ອື່ນໆ. ໃນນີ້ການກໍານົດບ້ານທຸກຍາກແມ່ນອີງໃສ່ຕົວຊີ້ບອກທີ່ໄດ້ກໍານົດໄວ້ຢູ່ໃນດໍາລັດຂອງ ທ່ານ ນາຍົກລັດຖະມົນຕີ ເລກທີ 010/ນຍ, ແລະ ມີຕົວຊີ້ວັດຄວາມທຸກຍາກ 5 ຕົວຊີ້ວັດ ດັ່ງມີລາຍລະອຽດດັ່ງລຸ່ມນີ້:

**ຕາຕະລາງ 2: ຕົວຊີ້ບອກຄວາມທຸກຍາກ**

| ຕົວຊີ້ບອກ | ຄ່າ ຖ້າຫາກບໍ່ມີ | ຄ່າ ຖ້າຫາກມີ |
|---|---|---|
| ຈໍານວນຄົວເຮືອນໃນບ້ານ ຫາກທຸກຍາກຫລຸດ 51% ຖືວ່າບໍ່ທຸກ | 0 | 1 |
| ມີໂຮງຮຽນໃນບ້ານ ຫລື ມີໂຮງຮຽນຢູ່ໃນບ້ານໃກ້ຄຽງ ແລະ ສາມາດເດີນ ທາງໄປຮຽນໄດ້ | 0 | 1 |
| ມີສຸກສາລາ ຫລື ຖົງຢາພາຍໃນບ້ານ, ຫລື ມີໂຮງໝໍຢູ່ໃນລັດສະໝີທີ່ສາ ມາດຍ່າງໄປຮອດພາຍໃນ 6 ຊົ່ວໂມງ | 0 | 1 |
| ບ້ານທີ່ມີນໍ້າສະອາດ ໄວ້ດື່ມ-ໄວ້ໃຊ້ | 0 | 1 |
| ບ້ານທີ່ມີເສັ້ນທາງເຂົ້າຮອດ (ຢ່າງນ້ອຍໃນລະດູແລ້ງລົດຕ້ອງສາມາດເຂົ້າ ເຖິງໄດ້) | 0 | 1 |

ຖ້າຫາກໜຶ່ງໃນຈໍານວນຕົວຊີ້ວັດເລົ່ານີ້ຫາກບໍ່ມີໃນບ້ານໃດໜຶ່ງ, ຕ້ອງຖືວ່າບ້ານເລົ່ານັ້ນເປັນບ້ານທີ່ທຸກ (ເພາະວ່າຫລັງຈາກບວກກັນແລ້ວຕົວຊີ້ບອກຄວາມທຸກຍາກ <5)

ອີກຢ່າງໜຶ່ງອາດເວົ້າໄດ້ວ່າ, ໃນບ້ານໃດນຶ່ງຖ້າຖືວ່າບໍ່ທຸກຕ້ອງ (1) ໃນບ້ານນັ້ນມີຄົວເຮືອນທຸກນ້ອຍກ່ວາ 51% ຖືວ່າເປັນບ້ານບໍ່ທຸກ ແລະ (2) ໃນບ້ານນັ້ນມີໂຮງຮຽນຕັ້ງຢູ່ ຫລື ມີໂຮງຮຽນຢູ່ໃນບ້ານທີ່ໃກ້ກັນສາມາດໄປເຖິງໄດ້ໂດຍງ່າຍ ແລະ (3) ມີສຸກສາລາ ຫລື ຖົງຢາປະຈໍາບ້ານ ຫລື ຮ້ານຂາຍຢາພາຍໃນບ້ານ ຫລື ມີໂຮງໝໍໃນ

ຂອບເຂດໃກ້ຄຽງສາມາດໄປເຖິງໄດ້ ໃນ 6 ຊົ່ວໂມງ (4) ມີນ້ຳສະອາດຢູ່ພາຍໃນບ້ານ ສາມາດເອົາໄປນຳໃຊ້ເພື່ອກິນ ແລະ ດື່ມ ແລະ (5) ມີທາງເຂົ້າໄປເຖິງບ້ານ (ຢ່າງນ້ອຍໃນລະດູແລ້ງລົດໃຫຍ່ສາມາດເຂົ້າເຖິງໄດ້)

ໂດຍອີງໃສ່ຕົວຊີ້ບອກທີ່ກ່າວມາຂ້າງເທິງນັ້ນ ແລະ ຂໍ້ມູນທີ່ເປັນທາງການທີ່ໄດ້ພົວພັນເອົາກັບສູນສະຖິຕິແຫ່ງຊາດ, ຂໍ້ມູນທີ່ໄດ້ມາຈາກສະຖິຕິແຂວງ, ທລຍ ຫວັງວ່າຈະໄດ້ນຳໃຊ້ຕົວຊີ້ບອກເລົ່ານີ້ ເພື່ອເປັນບ່ອນອີງໃຫ້ການການນິດຄວາມທຸກຍາກໃນຂອບເຂດທີ່ ທລຍ ຈະໄປຈັດຕັ້ງປະຕິບັດ, ດັ່ງນັ້ນ, ທລຍ ຈຶ່ງໄດ້ແບ່ງຄວາມທຸກຍາກທັງໝົດ ອອກເປັນ 6 ຂັ້ນຄື: ບໍ່ທຸກ, ຄວາມທຸກຍາກຕໍ່າຫລາຍ, ຄວາມທຸກຍາກຕໍ່າ, ຄວາມທຸກຍາກປານກາງ, ຄວາມທຸກຍາກສູງ, ຄວາມທຸກຍາກສູງຫລາຍ

2.4.2. ວິທີການ ແລະ ການຄັດເລືອກກຸ່ມ

ຂະບວນການຕັດສິນໃຈໃນການຄັດເລືອກຂອງເຂດໃນການຈັດຕັ້ງປະຕິບັດທັງໝົດແມ່ນຕ້ອງປະກອບດ້ວຍພື້ນທີ່ໆມີປະຊາກອນໜາແໜ້ນ, ມີເງື່ອນໄຂໃຂການພັດທະນາ ແລະ ອັດຕາສ່ວນຄວາມທຸກຍາກສູງ

<u>**ແຂວງເປົ້າໝາຍ**</u>

ສຳລັບການຄັດເລືອກເອົາແຂວງເປົ້າໝາຍ ຂໍ້ມູນທີ່ເອົາມານຳໃຊ້ໃນການອ້າງອີງແມ່ນ ການສຳຫລວດການຊົມໃຊ້ (LECs) ຂອງສູນສະຖິຕິແຫ່ງຊາດ ເພາະເປັນແຫ່ລງຂໍ້ມູນອັນດຽວທີ່ ມີຄວາມຊັດເຈນໃນການຊີ້ບອກວ່າອັດຕາສ່ວນຄວາມທຸກຍາກໃນລະດັບຊາດ, ລະດັບແຂວງ ແລະ ລະດັບເມືອງສູງເທົ່າໃດ, ໃນນີ້ຍັງລວມທັງ, ການສຳຫລວດໃໝ່ (ໂດຍອີງໃສ່ໂປຼກາມ "ປື້ມຂໍ້ມູນບ້ານ") ໃນປຶ້ມນີ້ແມ່ນຈະຖືກ ນຳໃຊ້ເພື່ອ ເກັບກຳຕົວເລກສະຖິຕິຂັ້ນບ້ານເພື່ອເກັບກຳຂໍ້ມູນໃນແຕ່ລະປີ, ຂໍ້ມູນເລົ່ານີ້ແມ່ນຈະຖືກນຳໃຊ້ເພື່ອກຳນົດເອົາຄວາມທຸກຍາກທີ່ມີຢູ່ໃນແຕ່ລະແຂວງເພື່ອຈັດລຽງຕາມອັນດັບຄວາມທຸກຍາກ, ນຳໃຊ້ຕົວຊີ້ບອກມາດຕະຖານເພື່ອກຳນົດຄວາມທຸກຍາກເຊັ່ນ: ການຊົມໃຊ້ຕໍ່ຫົວຄົນ ແລະ ການຂາດການບໍລິການ ພື້ນຖານ ດ້ານ ຕ່າງໆ, ສູນສະຖິຕິແຫ່ງຊາດຍັງໄດ້ພິມຈຳນ່າຍຂໍ້ມູນຄວາມທຸກຍາກໂດຍອີງໃສ່ຂໍ້ມູນຂອງການສຳຫລວດການຊົມໃຊ້ໃນທ້ອງຖິ່ນປີ 1997.

ໃນເບື້ອງຕົ້ນຜົນຂອງການສຳຫລວດພື້ນຖານເສດຖະກິດ ແລະ ການຊົມໃຊ້ ປີ 2003 (LECs III) ໄດ້ຜົນຂອງ ການສຳຫລວດອອກມາແລ້ວ (ເບິ່ງໃນເອກະສານຊ້ອນທ້າຍ ທີ 3), ທລຍ ໄດ້ນຳເອົາຂໍ້ມູນຈາກການສຳຫລວດ ດັ່ງກ່າວເພື່ອເປັນບອ່ນອ້າງອີງໃຫ້ແກ່ການຈັດລຽງເອົາເມືອງທີ່ທຸກຍາກຢູ່ແຕ່ລະເມືອງ, ໃນ ນີ້ແຂວງສາມາດຈັດ ລຽງໄດ້ໂດຍອີງຕາມຂໍ້ມູນດັ່ງລຸ່ມນີ້:

(1) ສະເລ່ຍອັດຕາຄວາມທຸກຍາກຕໍ່ຫົວຄົ (Total poverty per capita),

(2) ຄວາມແຕກຕ່າງຂອງຄວາມທຸກຍາກ (Poverty gap),

(3) ອັດຕາສ່ວນຂອງຄວາມທຸກຍາກ (Severity poverty),

(4) ຈຳນວນຄວາມທຸກຍາກຕໍ່ຄົວເຮືອນ (Total poverty per household)

ດັ່ງນັ້ນ, ໃນແຕ່ລະແຂວງຈິ່ງສາມາດໃຫ້ນ້ຳໜັກຂອງຄວາມທຸກຍາກ ໂດຍອີງໃສ່ການຈັດລຽງດັ່ງຕໍ່ໄປນີ້ (1) ສະ ເລ່ຍອັດຕາສ່ວນຄວາມທຸກຍາກຕໍ່ຫົວຄົນ (2) ຄວາມແຕກຕ່າງຂອງຄວາມທຸກຍາກ (3) ອັດຕາສ່ວນຂອງຄວາມທຸກຍາກ ແລະ (4) ຈຳນວນຄວາມທຸກຍາກຕໍ່ຄົວເຮືອນ

***ເມືອງເປົ້າໝາຍ***

ທລຍ ຈັດຕັ້ງປະຕິບັດກິດຈະກຳຂອງຕົນ ພາຍໃນເມືອງທຸກຍາກທີ່ສຸດໃນແຂວງເປົ້າໝາຍ, ເມືອງ ເປົ້າໝາຍທີ່ ນອນຢູ່ໃນເມືອງທີ່ຈະຈັດຕັ້ງປະຕິບັດຕ້ອງໄດ້ຮັບການເຫັນດີຈາກ ສະພາບໍລິຫານ ຂອງກອງ ທຶນຫລຸດຜ່ອນ ຄວາມທຸກຍາກໃນແຕ່ລະປີ, ໝາຍຄວາມວ່າຕ້ອງຜ່ານການເຫັນດີຂອງລັດຖະບານເສຍກ່ອນ ແລະ ໃນນີ້ແມ່ນ ລວມທັງຕ້ອງໄດ້ຮັບການເຫັນດີຈາກທະນາຄານໂລກນຳອີກ. ພິເສດໄປກ່ວານັ້ນ, ການທີ່ຈະຄັດ ເລືອກເອົາ ເມືອງໃດໜຶ່ງເພື່ອຈັດຕັ້ງປະຕິບັດ ເມືອງໃນແຂວງ ເຫລົ່ານັ້ນຕ້ອງ ນອນຢູ່ໃນ ເມືອງທຸກ ຍາກຂອງ ລັດ ຖະບານຊຶ່ງນອນຢູ່ໃນຢຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກຂອງລັດຖະບານ (NGPES) ໝາຍຄວາມວ່າຢ່າງນ້ອຍຕ້ອງນອນຢູ່ໃນລາຍຊື່ 72 ຫລື 47 ເມືອງທຸກຍາກຂອງລັດຖະບານຈິ່ງຈະຖືກພິຈາລະນາ.

ເມືອງເປົ້າໝາຍທີ່ຖືກຄັດເລືອກເຂົ້າມາຈັດຕັ້ງປະຕິບັດພາຍໃຕ້ກິດຈະກຳຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ຈະຖືກຈັດຕັ້ງໃນປີທີ 2 ຈົນເຖິງປີທທີ 5 ຂອງການຈັດຕັ້ງປະຕິບັດ

- ເມືອງໃນແຂວງເປົ້າໝາຍຕ້ອງໄດ້ຈັດລຽງຕາມອັດຕາສ່ວນຄວາມທຸກຍາກ, ໂດຍເລີ້ມແຕ່ເມືອງທີ່ທຸກຍາກທີ່ສຸດ ຈົນເຖິງເມືອງທີ່ຮັ່ງມີທີ່ສຸດ, ການຈັດລຽງດັ່ງກ່າວແມ່ນອີງໃສ່ຂໍ້ມູນທີ່ຖືກຕ້ອງທີ່ສຸດ ໂດຍການຈັດລຽງຂອງອຳນາດການປົກຄອງພາຍໃນແຂວງເອງ
- ສະເພາະເມືອງທີ່ທຸກຍາກທີ່ສຸດ ທີ່ໄດ້ຜ່ານການຮັບຮອງວ່າເປັນເມືອງທີ່ມີອັດຕາສ່ວນຄຍວາມທຸກຍາກສູງພາຍໃນແຂວງ ຈະຖືກພິຈາລະນາຮັບຮອງເອົາເພື່ອຈັດຕັ້ງປະຕິບັດພາຍໃຕ້ກອງທຶນ ທລຍ

***ການແບ່ງງົບປະມານໃຫ້ເມືອງ***

ວິທີການ ແລະ ການຄິດໄລ່ການແບ່ງງົບປະມານຂອງເມືອງສຳຫລັບຮອບວຽນທີ 2 ສົກປີ 2004-2005 ແມ່ນ ນຳໃຊ້ການຄິດໄລ່ ສຳລັບການແບ່ງປັນງົບປະມານໂດຍໃຫ້ເກີດຄວາມຍຸດຕິທຳ ແລະ ໂປ່ງໃສແກ່ຜູ້ໄດ້ຮັບຜົນ ປະໂຫຍດທຸກຝ່າຍ ແລະ ຍິ່ງໄປກວ່ານັ້ນ, ການແບ່ງປັນງົບປະມານໃຫ້ເມືອງໃນແຕ່ລະປີ ມີວິທີການ ແລະ ຂັ້ນ ຕອນຕ່າງໆດັ່ງຈະໄດ້ສະແດງໃຫ້ເບິ່ງດັ່ງລຸ່ມນີ້:

(1) ອີງໃສ່ຄວາມທຸກຍາກຢູ່ໃນເມືອງ ໂດຍປະຕິບັດຕາມດຳລັດເລກທີ 010/ນຍ

(2) ອີງໃສ່ຄວາມທຸກຍາກພາຍໃນແຂວງ ໄດ້ເອົາຕາມການສຳຫລວດການຊົມໃຊ້ໃນຄົວເຮືອນ

(3) ອີງໃສ່ເມືອງບູລິມະສິດຂອງລັດຖະບານ ເອົາຈາກ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES)

(4) ຈຳນວນເງິນທີ່ລົງທຶນໃສ່ບ້ານທຸກຍາກ

(5) ຄວາມສາມາດໃນການບໍລິຫານງົບປະມານໃນເມືອງ

(6) ຄວາມສາມາດໃນການບໍລິຫານພາຍໃນເມືອງ

ການຄິດໄລ່ດັ່ງກ່າວ ອາດເວົ້າໄດ້ອີກຢ່າງນຶ່ງວ່າ, ເມືອງທີ່ມີອັດຕາສ່ວນຂອງພົນລະເມືອງທີ່ທຸກຍາກສູງ ຕາມການຢັ້ງຢືນ ຂອງລັດຖະບານ ຈະໄດ້ຮັບງົບປະມານຫລາຍກວ່າເມືອງທີ່ມີອັດຕາສ່ວນ ຄວາມທຸກຍາກໜ້ອຍ ນອກຈາກການຄິດໄລ່ທີ່ແນໃສ່ຂໍ້ມູນທີ່ໄດ້ຮັບຈາກຢັ້ງຢືນຈານລັດຖະບານແລ້ວ, ການພິຈາລະນາ ແລະ ຄິດໄລ່ເພື່ອໃຫ້ບ້ານທີ່ທຸກຍາກກ່ວາໄດ້ຮັບງົບປະມານໃນເປີເຊັນທີ່ຫລາຍກ່ວາ, ໝາຍຄວາມວ່າຢູ່ໃນເມືອງໃດຫາກນຳໃຊ້ງົບປະມານໄປຫາ ບ້ານ/ຊຸມຊົນ ທີ່ມີອັດຕາຄວາມທຸກຍາກຕ່ຳ ຖືວ່າເປັນເມືອງທີ່ບໍ່ໄດ້ເອົາໃຈໃສ່ແກ່ບັນຫາຂອງຄົນທຸກ "ບໍ່ມີຄວາມເຫັນອົກເຫັນໃຈເຊິ່ງກັນ ແລະ ກັນ", ສະນັ້ນ, ເມືອງທີ່ດຶງເອົາງົບປະມານລົງໄປໃສ່ຜູ້ທີ່ທຸກຍາກ ຕ້ອງໄດ້ຮັບການສະໜັບສະໜູນ, ດັ່ງນັ້ນ, ສູດການຄິດໄລ່ງົບປະມານໃຫ້ແຕ່ລະເມືອງຈຶ່ງໄດ້ຄິດໄລ່ໃຫ້ເມືອງທີ່ດຶງເອົາງົບປະມານໄປຫາຊຸມຊົນທີ່ທຸກຍາກ ເປັນເປີເຊັນທີ່ສູງກ່ວາ ເພາະເມືອງໄດ້ດຶງເອົາໄປຫາບ່ອນທີ່ມີຄວາມຕ້ອງການແທ້ຈິງ. "ສາມາດແກ້ໄຂບັນຫາຄວາມທຸກຍາກຂອງເມືອງເຂົາເຈົ້າເອງ"

ໃນການຄິດໄລ່ການແບ່ງປັນງົບປະມານໃຫ້ແຕ່ລະເມືອງ ອີກດ້ານນຶ່ງກໍ່ແມ່ນອີງຕາມຂໍ້ມູນທີ່ໄດ້ຮັບໃນແຕ່ລະທ້າຍຮອບວຽນ ວ່າຄວາມສາມາດໃນການນຳໃຊ້ງົບປະມານຂອງເຂດ, ຂອງເມືອງເຮັດໄດ້ດີ ຫລື ບໍ່, ໃນນີ້ແມ່ນອີງໃສ່ງົບປະມານທີ່ນຳໃຊ້ໄດ້ທັງໝົດກ່ອນປິດຮອບວຽນ. ເຖິງຢ່າງໃດກໍ່ຕາມສາຍເຫດທີ່ແທ້ຈິງຂອງການນຳໃຊ້ງົບປະມານທີ່ຕ່ຳ ກໍ່ຕ້ອງໄດ້ຖືກສຳຫລວດຕີລາຄາຄືນ ເພື່ອຊອກຮູ້ວ່າ ການນຳໃຊ້ງົບປະມານທີ່ລ້າຊ້າ ຫລື ໄດ້ໜ້ອຍນັ້ນ ເກີດມາຈາກສາຍເຫດອັນໃດ ເຊັ່ນ: ຊັກຊ້າ ອາດຍ້ອນມາຈາກການເລີ້ມຕົ້ນຮອບວຽນໃນປີນັ້ນໆແມ່ນຊັກຊ້າ, ການເລີ້ມຕົ້ນຈັດຕັ້ງປະຕິບັດໂຄງການຍ່ອຍຢູ່ທ້າຍຮອບວຽນ, ໄພທຳມະຊາດ ແລະ ອື່ນໆ.

ສຸດທ້າຍ, ໃນຂະນະທີ່ການຄິດໄລ່ງົບປະມານຂອງ ທລຍ ແມ່ນເນັ້ນໜັກໃຫ້ງົບປະມານຕ້ອງໄປສູ່ (1) ຊຸມຊົນທີ່ ມີຄວາມທຸກຍາກສູງ, (2) ຕ້ອງລົງທຶນໃສ່ເມືອງທຸກຍາກ ທີ່ເປັນບູລິມະສິດຂອງລັດຖະບານ, (3) ການນຳໃຊ້ງົບ ປະມານເຂົ້າແກ້ໄຂບັນຫາຄວາມທຸກຍາກ ຂອງຊຸມຊົນທີ່ທຸກຍາກແທ້ຈິງ, (4) ເມືອງທີ່ສະ ແດງໃຫ້ເຫັນການນຳ ໃຊ້ງົບປະມານທີ່ເກີດປະໂຫຍດສູງສຸດໃຫ້ແກ່ຊຸມຊົນ, ແຕ່ວ່າພຽງເທົ່ານັ້ນກໍ່ຍັງຖືວ່າບໍ່ທັນພຽງພໍ ແລະ ກໍ່ໃຫ້ເກີດ ມີຄຳຖາມຕ່າງໆຕາມມາ ເຊັ່ນ: ການຈັດຕັ້ງປະຕິບັດ ແລະ ຜົນສຳເລັດ ທີ່ປາດສະຈາກການບໍລິຫານພາຍໃນຊຸມຊົນທີ່ບໍ່ມີຄຸນນະພາບເຊັ່ນ: ບໍ່ສາມາດເຮັດໄດ້ຕາມການຕົກລົງກັບຊຸມຊົນ ແລະ ບໍ່ສາມາດບັນລຸຈຸດປະສົງທີ່ຕັ້ງ ໄວ້, ບໍ່ສາມາດແກ້ໄຂບັນຫາ ແລະ ຂໍ້ຂັດແຍ່ງທີ່ເກີດຂື້ນໃນການຈັດຕັ້ງປະຕິບັດ, ນຳ

ໃຊ້ທຶນ ຮອນແບບຊະຊາຍ ບໍ່ສາມາດກວດສອບໄດ້, ມີການສໍ້ໂກງເກີດຂື້ນຢູ່ໃນຂັ້ນຕອນຈັດຕັ້ງປະຕິບັດ ຫລື ບັນຫາອື່ນໆທີ່ສໍ່ສະແດງເຖິງ ການຈັດຕັ້ງປະຕິບັດທີ່ບໍ່ສອດຄ່ອງກັບຫລັກການຂອງ ທລຍ ແລະ ກໍ່ຈະເອົາບັນຫາ ນັ້ນມາຖືເປັນມາດຖານວັດ ແທກອັນໜື່ງໃນການ ຈັດແບ່ງງົບປະມານໃຫ້ແຕ່ລະເມືອງໃນປີຕໍ່ໄປ.

**ຕາຕະລາງ 3: ການຈັດແບ່ງງົບປະມານໃຫ້ 14 ເມືອງ, ຮອບວຽນທີ 2, (ສົກປີ 2004-2005)**

| ແຂວງ / ເມືອງ | ຈຳນວນພົນລະເມືອງ | ງົບປະມານຄິດໄລ່ຂັ້ນພື້ນຖານ US$ | ຕົວຄູນ LECs 3 | ຕົວຄູນ NGPES | ຕົວຄູນສຳລັບເມືອງທີ່ນຳໃຊ້ງົບປະມານຫາບ້ານທຸກໄດ້ຫລາຍ | ຕົວຄູນ | ຕົວເລກເມິນ 1,000 | ເປີເຊັນການແບ່ງງົບປະມານໃຫ້ແຂວງ (%) | ເປີເຊັນການແບ່ງງົບປະມານໃຫ້ເມືອງ (%) |
|---|---|---|---|---|---|---|---|---|---|
| | | (A) | (B) | (C') | (D) | (A) X (B) X (C') X (D) | | | |
| **ແຂວງ ສະຫວັນນະເຂດ** | **132,618** | **$560,491.00** | **1.4** | | | **$1,054,897.37** | **$1,055,000** | **100 %** | **34%** |
| | | | | | | | | | |
| ເມືອງນອງ | 19,422 | $96,968.00 | 1.4 | 1.2 | 1.2 | $195,487.49 | $195,000 | 18% | 6% |
| ເມືອງເຊໂປນ | 39,400 | $184,588.00 | 1.4 | 1.2 | 1.2 | $372,129.41 | $372,000 | 35% | 12% |
| ເມືອງວິລະບູລີ | 27,103 | $111,129.00 | 1.4 | 1.2 | 1.1 | $205,366.39 | $205,000 | 19% | 7% |
| ເມືອງພີນ | 46,693 | $167,806.00 | 1.4 | 1.2 | 1.0 | $281,914.08 | $282,000 | 27% | 9% |
| **ແຂວງ ຈຳປາສັກ** | **204,063** | **$418,990.00** | **1** | | | **$455,087.71** | **$455,000** | **100 %** | **15%** |
| ເມືອງໂຂງ | 70,210 | $105,704.00 | 1 | 1.0 | 0.9 | $95,133.60 | $95,000 | 21% | 3% |
| ເມືອງມູນລະປະໂມກ | 37,442 | $141,676.00 | 1 | 1.1 | 1.1 | $171,427.96 | $171,000 | 38% | 6% |
| ເມືອງປະທຸມພອນ | 49,392 | $82,885.00 | 1 | 1.1 | 0.9 | $82,056.15 | $82,000 | 18% | 3% |
| ເມືອງສຸຂຸມາ | 47,019 | $88,725.00 | 1 | 1.2 | 1.0 | $106,470.00 | $106,000 | 23% | 3% |
| **ແຂວງ ຫົວພັນ** | **191,284** | **$924,332.00** | **1.4** | | | **$1,593,411** | **$1,593,00** | **100** | **51%** |

| | | | | | | | | | |
|---|---|---|---|---|---|---|---|---|---|
| | | | | | | .46 | 0 | % | |
| ເມືອງແອດ | 26,020 | $116,676.00 | 1.4 | 1.1 | 1.1 | $197,649.14 | $198,000 | 12% | 6% |
| ເມືອງຊຽງຄໍ້ | 25,570 | $111,680.00 | 1.4 | 1.2 | 1.1 | $206,384.64 | $206,000 | 13% | 7% |
| ເມືອງສົບເບົາ | 25,540 | $119,869.00 | 1.4 | 1.1 | 1.2 | $221,517.91 | $222,000 | 14% | 7% |
| ເມືອງຊຳໃຕ້ | 53,313 | $295,327.00 | 1.4 | 1.2 | 1.0 | $496,149.36 | $496,000 | 31% | 16% |
| ເມືອງວຽງໄຊ | 34,965 | $141,353.00 | 1.4 | 1.2 | 1.0 | $237,473.04 | $237,000 | 15% | 8% |
| ເມືອງຫົວເມືອງ | 25,876 | $139,427.00 | 1.4 | 1.2 | 1.0 | $234,237.36 | $234,000 | 15% | 8% |
| **ລວມທັງໝົດ** | **527,965** | **$1,903,813.00** | | | | **$3,103,396.53** | **$3,103,000** | | **100%** |

*ວິທີການ ແລະ ການຄິດໄລ່ງົບປະມານໃຫ້ແຕ່ລະເມືອງ ໃນຮອບວຽນທີ 2, ສົກປີ 2004-2005*

ໃນປີທີສອງຂອງການຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນວິທີການຄິດໄລ່ງົບປະມານມີລາຍລະອຽດດັ່ງນີ້:

(1) ອັດຕາສ່ວນຄວາມທຸກຍາກ ອີງຕາມດຳລັດເລກທີ 010/ນຍ

(2) ອັດຕາສ່ວນຄວາມທຸກຍາກຂອງແຂວງອີງໃສ່ການສຳຫລວດການຊົມໃຊ້ຄົວເຮືອນ LECS3

(3) ເມືອງທຸກຍາກທີ່ເປັນບູລິມະສິດຂອງລັດຖະບານ ອີງໃສ່ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES)

(4) ເມືອງທີ່ສາມາດນຳໃຊ້ອັດຕາສ່ວນງົບປະມານໄປຫາຄົນທຸກຍາກຫລາຍກ່ວາ

(5) ເມືອງທີ່ນຳໃຊ້ງົບປະມານໄດ້ຢ່າງມີຜະລິດທິພາບ ໂດຍອີງໃສ່ຂໍ້ມູນການໂອນເງິນ ແລະ ຄວາມຄືບໜ້າຂອງໜ້າວຽກ

(6) ການບໍລິການການຈັດຕັ້ງປະຕິບັດທີ່ໄດ້ຮັບຜົນດີ

(7) ໂຄງການທີ່ກະທົບໃສ່ສະພາບແວດລ້ອມນ້ອຍທີ່ສຸດ ແລະ ການຮັກສາສະພາບແວດລ້ອມ

<u>ການຄິດໄລ່ທັງໝົດແມ່ນມີຂັ້ນຕອນດັ່ງລຸ່ມນີ້:</u>

(1) **ເອົາການຄິດໄລ່ງົບປະມານໃນຂັ້ນພື້ນຖານ ເປັນໂດລາສະຫະລັດ**

(ອີງໃສ່ດຳລັດນາຍົກລັດຖະມົນຕີເລກທີ 010/ນຍ)

X *(ຄູນໃຫ້)*

(2) **ການສຳຫລວດການຊົມໃຊ້ພາຍໃນຄົວເຮືອນ LECS 3** (ອີງໃສ່ການສຳຫລວດການຊົມໃຊ້ພາຍ ໃນຄົວເຮືອນທົ່ວປະເທດຂອງສູນສະຖິຕິແຫ່ງຊາດ ປີ 2003)

X *(ຄູນໃຫ້)*

(3) **ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES)**
(ໃນນີ້ແມ່ນສະແດງເຖິງບູລິມະສິດຂອງລັດຖະບານທີ່ສຸມການລົງທືນໃສ່)

X *(ຄູນໃຫ້)*

(4) **ຂໍ້ມູນການລົງທືນໃສ່ບ້ານ/ຊຸມຊົນ ທີ່ທຸກຍາກ**
(ໃນຂໍ້ມູນນີ້ສະແດງໃຫ້ເຫັນການລົງທືນຂອງ ທລຍ ໃສ່ບ້ານທີ່ທຸກຍາກ ໂດຍບ້ານທີ່ທຸກຍາກໄດ້ຮັບຜົນປະໂຫຍດແທ້ຈິງ)

X *(ຄູນໃຫ້)*

(5) **ການນຳໃຊ້ງົບປະມານທີ່ມີຜະລິດທິຜົນທີ່ສຸດ (ງົບປະມານທີ່ຖືກໂອນ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ)**
(ໃນນີ້ແມ່ນສະແດງໃຫ້ເຫັນເຖິງຄວາມສາມາດຂອງຊຸມຊົນທີ່ສາມາດນຳໃຊ້ງົບປະມານຂອງເມືອງທັງໝົດໃນແຕ່ລະທ້າຍຮອບວຽນ)

X *(ຄູນໃຫ້)*

(6) **ການບໍລິຫານທີ່ເຮັດໄດ້ດີໃນເຂດ ແລະ ເມືອງ**
(ອີງໃສຂໍ້ມູນຂອງເຂດທີ່ສາມາດບໍລິຫານຊຸມຊົນໄດ້ດີ, ເຮັດຖືກລະບຽບການຈັດຊື້-ຈັດຈ້າງ ແລະສາມາດນຳໃຊ້ງົບປະມານຖືກຕ້ອງຕາມຫລັກການ)

X *(ຄູນໃຫ້)*

(7) **ການຮັກສາສະພາບແວດລ້ອມ**
(ສະແດງໃຫ້ເຫັນເຖິງການຄຸ້ມຄອງຊັບພະຍາກອນທຳມະຊາດ ເຊັ່ນ: ເຂດອານຸລັກ ປ່າສະຫງວນ ແລະວັງສະຫງວນ)

ເງື່ອນໄຂ (4), (5), (6) ແລະ (7) ຈະນຳເອົາມາເປັນຕົວຄິດໄລ່ງົບປະມານໃຫ້ແຕ່ລະເມືອງ ໃນສົກປີ 2005-2006, ແຕ່ຈະບໍ່ໄດ້ນຳໃຊ້ຄິດໄລ່ໃນເມືອງໃໝ່, ໃນ 4 ເງື່ອນໄຂດັ່ງກ່າວນີ້ ແມ່ນເປັນຕົວຄູນທີ່ສຳຄັນທີ່ສຸດຊຶ່ງ ເປັນຜົນທີ່ສະແດງເຖິງ ທຸກການມີສ່ວນຮ່ວມຂອງເມືອງ / ຊຸມຊົນ ຊຶ່ງສະແດງອອກໃນການຈັດຕັ້ງ ປະຕິບັດ ກິດຈະກຳຕົວຈິງຢູ່ໃນຮອບວຽນທີ 2 ສົກປີ 2004-2005

ຕາຕະລາງ 4: ການຈັດແບ່ງງົບປະມານໃຫ້ແຕ່ລະເມືອງໃນຮອບວຽນ 3 (ສົກປີ 2005-2006)

| ແຂວງ / ເມືອງ | ຈຳນວນພົນລະເມືອງ | ງົບປະມານຄິດໄລ່ຂັ້ນພື້ນຖານ US$ | ຕົວຄູນ LECs 3 | ຕົວຄູນ NG PES | Basic Allocation x LECS 3 x NGPES Factor | Championship of the poor factor value | Basic Allocation x LECS 3 x NGPES Factor x Championship of the poor factor |
|---|---|---|---|---|---|---|---|
| | (A) | (B) | (A) x (B) | (C') | (A) x (B) x (C) | (D) | (A) x (B) x (C) x (D) |
| **ສະຫວັນນະເຂດ** | **536,245** | **1.4** | **750,743** | | **900,892** | | **1,009,351** |
| ນອງ | 91,554 | 1.4 | 128,175.60 | 1.2 | 153,810.72 | 1.2 | 184,572.86 |
| ເຊໂປນ | 178,181 | 1.4 | 249,453.40 | 1.2 | 299,344.08 | 1.2 | 359,212.90 |
| ວິລະບູລີ | 106,123 | 1.4 | 148,572.20 | 1.2 | 178,286.64 | 1.1 | 196,115.30 |
| ພິນ | 160,387 | 1.4 | 224,541.80 | 1.2 | 269,450.16 | 1.0 | 269,450.16 |
| **ຈຳປາສັກ** | **390,167** | **1** | **390,167** | | **427,759** | | **429,220** |
| ໂຂງ | 96,782 | 1 | 96,782.00 | 1 | 96,782.00 | 0.8 | 77,425.60 |
| ມູນລະປະໂມກ | 133,365 | 1 | 133,365.00 | 1.1 | 146,701.50 | 1.2 | 176,041.80 |
| ປະທຸມພອນ | 77,485 | 1 | 77,485.00 | 1.1 | 85,233.50 | 0.9 | 76,710.15 |
| ສຸຂຸມາ | 82,535 | 1 | 82,535.00 | 1.2 | 99,042.00 | 1.0 | 99,042.00 |
| **ຫົວພັນ** | **803,956** | **1.4** | **1,125,538** | | **1,319,658** | | **1,549,503** |
| ແອດ | 108,252 | 1.4 | 151,552.80 | 1.1 | 166,708.08 | 1.1 | 183,378.89 |
| ຊຽງຄໍ້ | | 1.4 | | 1.2 | | 1.2 | |

| | | | | | | | |
|---|---|---|---|---|---|---|---|
| | 94,845 | | 132,783.00 | | 159,339.60 | | 191,207.52 |
| ສິບເບົາ | 113,091 | 1.4 | 158,327.40 | 1.1 | 174,160.14 | 1.1 | 191,576.15 |
| ຊຳໃຕ້ | 243,042 | 1.4 | 340,258.80 | 1.2 | 408,310.56 | 1.2 | 489,972.67 |
| ວຽງໄຊ | 126,891 | 1.4 | 177,647.40 | 1.2 | 213,176.88 | 1.2 | 255,812.26 |
| ຫົວເມືອງ | 117,835 | 1.4 | 164,969.00 | 1.2 | 197,962.80 | 1.2 | 237,555.36 |
| **ຊຽງຂວາງ** | **483,536** | **1.4** | **676,950** | | **794,555** | | **794,555** |
| ຄຳ | 127,042 | 1.4 | 177,858.80 | 1.1 | 195,644.68 | 1.0 | 195,644.68 |
| ຄູນ | 178,569 | 1.4 | 249,996.60 | 1.2 | 299,995.92 | 1.0 | 299,995.92 |
| ໜອງແຮດ | 177,925 | 1.4 | 249,095.00 | 1.2 | 298,914.00 | 1.0 | 298,914.00 |
| **ສາລະວັນ** | **316,134** | **1.4** | **442,588** | | **513,900** | | **513,900** |
| ຕະໂອ້ຍ | 128,181 | 1.4 | 179,453.40 | 1.2 | 215,344.08 | 1.0 | 215,344.08 |
| ຕຸ້ມລານ | 122,892 | 1.4 | 172,048.80 | 1.1 | 189,253.68 | 1.0 | 189,253.68 |
| ສະມ້ວຍ | 65,061 | 1.4 | 91,085.40 | 1.2 | 109,302.48 | 1.0 | 109,302.48 |
| | | | | | | | |
| **ລວມທັງໝົດ:** | **2,530,038** | | **3,385,986** | | **3,956,764** | | **4,296,528** |

## 2.4.3. ໄລຍະຂອງການຈັດຕັ້ງປະຕິບັດ

ໃນເບື້ອງຕົ້ນການຈັດຕັ້ງປະຕິບັດກິດຈະກຳແມ່ນເລືອກເອົາຢູ່ໃນສາມແຂວງເລີ້ມຕົ້ນກ່ອນຄື: ແຂວງຫົວພັນ, ສະຫວັນນະເຂດ ແລະ ຈຳປາສັກ, ປີທີໜຶ່ງຂອງການຈັດຕັ້ງປະຕິບັດມີທັງໝົດ 10 ເມືອງ, 3 ເມືອງຢູ່ ແຂວງສະຫວັນນະເຂດ ຄື: ເມືອງເຊໂປນ, ເມືອງນອງ ແລະ ເມືອງວິລະບູລີ, 4 ເມືອງຢູ່ແຂວງ ຈຳປາ ສັກ ຄື: ເມືອງປະທຸມພອນ, ສຸຂຸມາ, ມຸນລະປະໂມກ ແລະ ເມືອງໂຂງ, 3 ເມືອງຢູ່ແຂວງຫົວພັນ ຄື: ເມືອງຊຽງຄໍ້ ເມືອງ ແອດ

ແລະ ເມືອງສິບເບົາ ແລະ ໃນປີຕໍ່ໄປຂອງການຈັດຕັ້ງປະຕິບັດ ທລຍ ຈະຂະຫຍາຍອອກໄປ ຕື່ມອີກ 2 ແຂວງ ໂດຍຈະນໍາໃຊ້ວິທີການຄັດເລືອກຈາກປະສົບທີ່ໄດ້ຈາກສາມເມືອງເລີ່ມຕົ້ນ.

**ຕາຕະລາງ 5: ແຜນສັງລວມ ໄລຍະການຈັດຕັ້ງປະຕິບັດໂຄງການຂອງ ທລຍ**

| ແຂວງ | 2003 | 2004 | 2005 | 2006 | 2007 | ລວມ |
|---|---|---|---|---|---|---|
| ຫົວພັນ | 3 | 3 | 5 | 8 | 8 | 8 |
| ສະຫວັນນະເຂດ | 3 | 3 | 3 | 4 | 4 | 4 |
| ຈໍາປາສັກ | 4 | 4 | 4 | 4 | 4 | 4 |
| ແຂວງ ທີ4 | | 2 | 4 | 4 | 4 | 4 |
| ແຂວງ ທີ5 | | 2 | 4 | 4 | 4 | 4 |
| **ລວມເມືອງ** | 10 | 14 | 20 | 24 | 24 | 24 |
| ***ເຂດ*** | 98 | 140 | 200 | 240 | 240 | 240 |
| **ໂຄງການຍ່ອຍ** | 294 | 420 | 600 | 720 | 720 | 2754 |
| **ງົບປະມານ ($)** | 1,598,745 | 2,283,922 | 3,262,745 | 3,915,294 | 3,915,294 | 14,976,000 |

ໃນການຈັດຕັ້ງປະຕິບັດ ຕົວຈິງບາງຂໍ້ມູນ ແມ່ນ ຕ້ອງໄດ້ມີການປັບປຸງ ໂດຍອີງໃສ່ເງື່ອນໄຂຂອງການຂອງຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດ, ຊຶ່ງນອນຢູ່ໃນຄວາມຮັບຜິດຊອບລະຫວ່າງ ທລຍ ແລະ ຜູ້ອໍານວຍການບໍລິຫານວ່າຈະເຮັດການປະເມີນປະຈໍາປີຄືນ ແລະ ເຮັດການປັບປຸງແນວໃດ, ຊຶ່ງທັງໝົດນີ້ຜູ້ອໍານວຍການ ບໍລິຫານ ແລະ ທີມງານບໍລິຫານຂອງ ທລຍ ຕ້ອງໄດ້ ກະກຽມເອກະສານ, ແຜນການຈັດຕັ້ງປະຕິບັດ ແລະ ແຜນງົບປະມານປະຈໍາປີ ເພື່ອລາຍງານຕໍ່ສະພາບໍລິຫານເພື່ອອະນຸມັດໃນຂັ້ນຕໍ່ໄປ.

**ໂຄງການຕ່າງໆທີ່ໄດ້ຈັດຕັ້ງປະຕິບັດໃນຮອບວຽນທີ 2, ມີລາຍລະອຽດດັ່ງລຸ່ມນີ້:**

**ຕາຕະລາ 6: ສັງລວມການຈັດຕັ້ງປະຕິບັດໂຄງການຢູ່ແຕ່ລະເມືອງ, ເຂດ ໃນຮອບວຽນທີ 1 ເຖິງ 3**

| ແຂວງ | ຮອງວຽນ I (2003-04) | ຮອງວຽນ II (2004-05) | ແຜນສໍາລັບຮອບວຽນ III (2005-06) | ລວມທັງໝົດ |
|---|---|---|---|---|
| ຫົວພັນ | 3 | 6 | 6 | 6 |
| ສະຫວັນນະເຂດ | 3 | 4 | 4 | 4 |
| ຈໍາປາສັກ | 4 | 4 | 4 | 4 |

| | | | | |
|---|---|---|---|---|
| ຊຽງຂວາງ | | | 3 | 3 |
| ສາລະວັນ | | | 3 | 3 |
| **ລວມຈຳນວນເມືອງ** | 10 | 14 | 20 | 20 |
| ***ຈຳນວນເຂດ*** | 121 | 188 | 239 | 239 |
| **ຈຳນວນໂຄງການຍ່ອຍ** | 248 | 431 | 533 | 1212 |
| **ງົບປະມານທັງໝົດ (US$)** | 1,069,000 | 3,103,397 | 4,163,000 | 8,335,397 |

### 2.4.4. ມູນຄ່າຂອງໂຄງການຍ່ອຍໃນແຕ່ລະຮອບວຽນ

ອີງຕາມຄູ່ມືການຈັດຕັ້ງປະຕິບັດຂອງຫລຍ, ມູນຄ່າສະເລ່ຍຂອງແຕ່ລະບົດສະເໜີໂຄງການຍ່ອຍຈະຢູ່ລະຫວ່າງ US$5,400 ກ້ອນເງິນທີ່ສະເໜີໃນການຊຽນບົດສະເໜີໂຄງການຂອງແຕ່ລະໂຄງໃນເຂດນຶ່ງການຕ້ອງບໍ່ເກີນ US$25,000. ໃນກໍລະນີເປັນໂຄງການທີ່ລວມກັນເກີນໜຶ່ງເຂດຂຶ້ນໄປແມ່ນບໍ່ໃຫ້ເກີນ US$25,000 ຫາ US$50,000, ມູນຄ່າຂອງຕໍ່ໂຄງການຍ່ອຍໃນຮອບວຽນທີ 1 ປະມານ US$ 4,350 ຂອງຈຳນວນ ໂຄງ ການ ຍ່ອຍທັງໝົດ 248 ໂຄງການ, ແລະ ໃນຮອບວຽນທີ 2 ມູນຄ່າຕໍ່ໂຄງການກໍ່ເພີ້ມຂຶ້ນມາເປັນ US$7,200 ຂອງ ຈຳນວນໂຄງການຍ່ອຍທັງໝົດ 431 ໂຄງການ, ໃນຮອບວຽນທີ 2 ນີ້ ສັງເກດເຫັນວ່າ ຕົ້ນທືນຕໍ່ຫົວໜ່ວຍ ແມ່ນ ສູງກວ່າກ່ວາ ທັງນີ້ກໍເພື່ອຮັບປະກັນດ້ານຄຸນນະພາບຂອງໂຄງການ, ຄຸນນະພາບຂອງການ ກໍ່ສ້າງ ແລະ ຍັງ ລວມເຖິງບຳລຸງຮັກສາ-ການສ້ອມແປງ ເພື່ອໃຫ້ໂຄງການມີຄວາມຍືນຍົງຈຶ່ງເຮັດໃຫ້ມູນຄ່າຂອງການລົງທືນສູງ ກ່ວາທຽບໃສ່ຮອບວຽນທີ 1.

### *2. 5. ຜົນສຳເລັດ ແລະ ສິ່ງທ້າທາຍທັງໝົດໃນຮອບວຽທີ I ແລະ II*

ກອງທືນຫລຸດຜ່ອນຄວາມທຸກຍາກແມ່ນຄວາມພະຍາຍາມຂອງລັດຖະບານແຫ່ງ ສ ປ ປ ລາວ, ເພື່ອລຶບລ້າງ ຄວາມທຸກຍາກ ໂດຍການສະໜັບສະໜູນເງິນກູ້ຢືມຈາກທະນາຄານໂລກ, ໂດຍການກະຈາຍງົບປະມານລົງສູ່ ທ້ອງຖິ່ນເພື່ອພັດທະນາພື້ນຖານເສດຖະກິດສັງຄົມໃນທ້ອງຖິ່ນນັ້ນໆ, ໂດຍສະເພາະແມ່ນເຂດຫ່າງໄກສອກ ຫລີກທີ່ມີຊົນຊາດຊົນເຜົ່າຕ່າງໆອາໃສຢູ່, ດັ່ງນັ້ນ, ຜົນສຳເລັດຂອງການຈັດຕັງປະຕິບັດກິດຈະກຳໃນຮອບວຽນ ທີ I ແລະ ຮອບວຽນທີ II ຈຶ່ງມີລາຍລະອຽດດັ່ງລຸ່ມນີ້:

### 2. 5.1. ຜົນສຳເລັດຕົ້ນຕໍຂອງການຈັດຕັ້ງປະຕິບັດ

❖ ***<u>ຮອບວຽນທີ 1</u>***

ໃນທ້າຍປີ 2003, ໃນຮອບວຽນທີ 1 ໄດ້ສະແດງໃຫ້ເຫັນຜົນສຳເລັດທີ່ເປັນໜ້າສັງເກດ ແລະ ພະຍາ ຍາມທີ່ຈະ ບັນລຸຈຸດປະສົງການຈັດຕັ້ງປະຕິບັດໃນແຜນການຈັດຕັ້ງປະຕິບັດຂອງຮອບວຽນທີ 1, ໃນຮອບວຽນທີ

1, ກອງ ທຶນໄດ້ເຮັດວຽກຢູ່ 3 ແຂວງ, 10 ເມືອງ, 121 ເຂດ, ກວມເອົາ 913 ບ້ານ, ໃນການຈັດ ຕັ້ງປະຕິບັດຕົວຈິງ ທລຍ ສາມາດກວມເອົາໄດ້ 558 ບ້ານ, ໃນນັ້ນກວມເອົາຈຳນວນພົນ 238,123 ຄົນ, ປະມານ 64% ຂອງຈຳນວນ ພົນທັງໝົດ 372,068 ຄົນ ຂອງຈຳນວນພົນໃນບ້ານເປົ້າໝາຍ. ຈຳນວນງົບປະມານທີ່ໄດ້ແບ່ງ ປັນໃຫ້ໃນຮອບ ວຽນທີ 1 ເທົ່າກັບ US$1,069,934 ທີ່ໄດ້ຖືກນຳໃຊ້ເຂົ້າໃນການ ຈັດຕັ້ງປະຕິບັດໂຄງການທັງໝົດ 248 ໂຄງ ການ (ສະເລ່ຍແລ້ວນຶ່ງໂຄງການນຳໃຊ້ງົບປະມານເທົ່າກັບ US$4,350), ສ່ວນການຈັດຕັ້ງປະຕິບັດນັ້ນແມ່ນ ອີງໃສ່ປື້ມຄູ່ມືຈັດຕັ້ງປະຕິບັດຂອງ ທລຍ, ການຈັດສັມການຝຶກອົບ ຮົມຕ່າງໆໃຫ້ແກ່ຊາວບ້ານແມ່ນໄດ້ເລີ້ມຂື້ນ ເພື່ອໃຫ້ຊາວບ້ານສາມາດຈັດຕັ້ງປະຕິບັດ, ຄຸ້ມຄອງຮັກສາ ແລະ ຄວບຄຸມຄຸນນະພາບຂອງທຸກໂຄງການຍ່ອຍ ທີ່ໄດ້ຖືກຈັດຕັ້ງປະຕິບັດຢູ່ໃນແຕ່ລະບ້ານ, ໃນທ້າຍ ເດືອນທັນວາ ປີ 2003 ຫາ ເດືອນພະຈິກ ປີ 2004, ເງິນ ຈຳນວນ US$ 719,656.59 ຂອງງົບປະມານທັງໝົດ US$ 1,069,931 ຫລື 67% ໄດ້ຖືກໂອນຖ່າຍລົງໄປ ໃສ່ບັນຊີຂອງເຂດເພື່ອໃຫ້ແຕ່ລະເຂດໄດ້ຈັດຕັ້ງປະຕິບັດ ໂຄງການຢູ່ພາຍໃນເຂດຂອງຕົນ, ຈົນຮອດທ້າຍເດືອນ 6/2005 ເງິນທັງໝົດຂອງຮອບວຽນທີ 1 ຈຶ່ງໄດ້ຖືກ ໂອນລົງໄປ ໃສ່ບັນຊີ ຂອງເຂດເພື່ອຈັດຕັ້ງປະຕິບັດໂຄງການ ທັງໝົດ 248 ໂຄງການ ແລະ ມາຮອດປະຈຸບັນແມ່ນ ສຳເລັດ ຮຽບຮ້ອຍແລ້ວ.

ພະນັກງານທີ່ໄດ້ປະກອບໃສ່ໃນການຈັດຕັ້ງປະຕິບັດກິດຈະກຳແມ່ນປະມານ 100 ຄົນໃນເບື້ອງຕົ້ນ (ພະນັກງານໂຄງການ) ທີ່ໄດ້ວ່າຈ້າງເຂົ້າມາ, ໃນນີ້ປະມານ 21 ຄົນ ແມ່ນປະຈຳຢູ່ຫ້ອງການຂັ້ນສູນກາງ, ສ່ວນພະນັກງານຂັ້ນແຂວງແມ່ນປະມານ 8 ຫາ 10 ຄົນ, ພະນັກງານຂັ້ນເມືອງແມ່ນປະມານ 3-6 ຄົນ, ເພາະໃນບາງເມືອງເນື່ອງຈາກເປັນເມືອງທີ່ກ້ວາງໃຫຍ່ ແລະ ມີຈຳນວນເຂດຫລາຍດັ່ງນັ້ນ, ຈຳນວນພະນັກງານຈຶ່ງມີຈຳນວນຫລາຍກ່ວາ 3 ຄົນ, ໃນນັ້ນນອກຈາກພະນັກງານດັ່ງກ່າວມາຂ້າງເທິງແລ້ວ, ທລຍ ຍັງມີພະນັກງານອາສາສະມັກມາຈາກບ້ານ ແລະ ຈາກເຂດ ທີ່ເຮັດວຽກໃຫ້ ທລຍ ອີກ, ຊຶ່ງພວກເຮົາ ເອີ້ນກັນວ່າ “ຜູ້ປະສານງານເຂດ” ໃນຮອບວຽນດັ່ງກ່າວນີ້ ທລຍ ມີປະສານງານເຂດທັງໝົດປະມານ 560 ຄົນ (ເຂດນຶ່ງຈະມີຜູ້ປະສານງານເຂດນຶ່ງຄົນ), ປະສານງານເຂດທີ່ກ່າວມານີ້ ແມ່ນມີໜ້າທີ່ເຮັດວຽກກັບປະຊາຊົນ ແລະ ທລຍ ຫລື ທີ່ເອີ້ນກັນວ່າເປັນຂົວຕໍ່ລະຫວ່າງຊຸມຊົນ ແລະ ທລຍ, ໃນນີ້ຍັງມີຕົວແທນເຂດປະມ່ນ 750 ຄົນ (4 ຄົນຕໍ່ເຂດ, ໃນນີ້ຊາຍ 2 ຄົນ ແລະ ຍິງ 2 ຄົນ) ແລະ ໃນນີ້ຍັງມີ ຕົວແທນເຂດ ແລະ ຕົວແທນບ້ານ ທີ່ມາ ຮ່ວມເຮັດວຽກກັບ ທລຍ ເພື່ອເປັນຜູ້ນຳສະເໜີຕາງໜ້າ ໃຫ້ເຂດ ໃຫ້ບ້ານ ໃນຊຸມຊົນຂອງຕົນ.

### ສັງລວມສິ່ງທີ່ ທລຍ ຈັດຕັ້ງປະຕິບັດສຳເລັດຕົ້ນຕໍໃນຮອບວຽນທີ 1

- ກວມເອົາແຂວງເປົ້າໝາຍທັງໝົດ 3
- ກວມເອົາຈຳນວນເມືອງທັງໝົດ 10
- ຈຳນວນໂຄງການທີ່ຈັດຕັ້ງປະຕິບັດໃນຮອງວຽນ 248

- ຈຳນວນໂຄງການທີ່ຈັດຕັ້ງສຳເລັດທັງໝົດ(100%) 248
- ຈຳນວນງົບປະມານທີ່ອະນຸມັດ(US$) 1,069,000
- ປະຊາຊົນໃນ 121 ເຂດ, 913 ບ້ານ ມີປະສົບການ ແລະ ຮູ້ຈັກວິທີນຳໃຊ້ງົບປະມານ ແລະ ບໍລິຫານໃຫ້ແກ່ໂຄງການຂອງເຂົາເຈົ້າເອງ

ໝາຍເຫດ: ໃນຮອບວຽນນີ້ໂຄງການທີ່ໄດ້ສະເໜີໃນກອງປະຊຸມຈັດລຽງບູລິມະສິດສ່ວນຫລວງຫລາຍແມ່ນຂະແໜງຂອງນ້ຳສະອາດ ແລະ ສຸຂະອະນາໄມ ເປັນຕົ້ນແມ່ນ ໂຄງການ ນ້ຳບາດານ, ນ້ຳສ້າງໃສ່ທໍ່ ແລະ ນ້ຳລິນເປັນຕົ້ນ, ແລະ ໂຄງການທັງໝົດ ໃນ 248 ໂຄງການນີ້ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດໝົດທຸກໂຄງການ.

❖ ***<u>ຮອບວຽນທີ II</u>***

ຮອບວຽນທີ່ 2 ແມ່ນໄດ້ເລີ້ມຂື້ນໃນເດືອນ ກໍລະກົດ ປີ 2004, ໃນຮອບວຽນທີ 2 ຂອງການຈັດຕັ້ງປະຕິບັດ ທລຍ ກໍ່ຍັງຈັດຕັ້ງປະຕິບັດໃນ 3 ແຂວງເປົ້າໝາຍຄືກັນກັບໃນຮອບວຽນທີ 1, ແຕ່ໃນຮອບວຽນນີ້ ໄດ້ຂະຫຍາຍກິດຈະກຳໄປສູ່ອີກ 4 ເມືອງ, ເປັນທັງໝົດ ຈັດຕັ້ງຢູ່ 14 ເມືອງໃນຮອບວຽນທີ 2, ກວມເອົາ 188 ເຂດ, 1431 ບ້ານ, ແລະ ໄດ້ເພີ່ມມູນຄ່າການລົງທຶນຂື້ນໃນຮອບວຽນທີ 2 ເປັນ, ປະມານ US$3,103,000, ໃນງົບປະມານທັງໝົດນີ້ຈະໄດ້ແຈກຢາຍໄປຫາແຂວງຕ່າງໆດັ່ງຕໍ່ໄປນີ້:

- ແຂວງຫົວພັນ, ໄດ້ຮອບວຽນທີ 2 ການແບ່ງງົບປະມານໃຫ້ 6 ເມືອງພາຍໃນແຂວງທັງໝົດແມ່ນກວມເອົາ US$1,593,000, ເມືອງສົບເບົາ US$222,000; ເມືອງແອດ US$198,000; ເມືອງຊຽງຄໍ້ US$206,000; ເມືອງຊຳໃຕ້ US$496,000; ເມືອງວຽງໄຊ US$237,000 ແລະ ເມືອງຫົວເມືອງ US$ 234,000
- ແຂວງສະຫວັນນະເຂດ, ໄດ້ຮອບວຽນທີ 2 ການແບ່ງງົບປະມານໃຫ້ 4 ເມືອງພາຍໃນແຂວງທັງໝົດແມ່ນກວມເອົາ US$ 1,055,000, ເມືອງເຊໂປນ US$ 372,000; ເມືອງວິລະບູລີ US$ 205,000; ເມືອງນອງ US$ 195,000 ແລະ ເມືອງພີນ US$ 282,000
- ແຂວງຈຳປາສັກ, ໄດ້ຮອບວຽນທີ 2 ການແບ່ງງົບປະມານໃຫ້ 4 ເມືອງພາຍໃນແຂວງທັງໝົດແມ່ນກວມເອົາ US$ 455,000 ,ໃນນີ້ເມືອງມູນລະປະໂມກ US$ 171,000; ເມືອງປະທຸມພອນ US$ 82,000, ເມືອງໂຂງ US$ 95,000 ແລະ ເມືອງສຸຂຸມາ US$ 106,000

**ຕາຕະລາງທີ 7: ລາຍລະອຽດຜົນສຳເລັດຂອງການຈັດຕັ້ງປະຕິບັດໃນຮອບວຽນທີ II**

| | |
|---|---|
| ຈຸດເລີ້ມຕົ້ນ ແລະ ຈົບໃນຮອບວຽນທີ 2 | ກໍລະກົດ 2004 - ມິຖຸນາ 2005 |
| ກວມເອົາຈຳນວນເມືອງ | 14 ເມືອງ |

| | |
|---|---|
| ກວມເອົາຈຳນວນເຂດ ແລະ ບ້ານ | 188 ເຂດ ແລະ 1,412 ບ້ານ |
| ຈຳນວນບ້ານທີ່ໄດ້ຈັດຕັ້ງປະຕິບັດ | 496 ບ້ານ |
| ແຜນງົບປະມານ | ປະມານ US$3,101,000 / 32 ຕື້ກີບ |
| ຈຳນວນໂຄງການຂຶ້ນແຜນຈັດຕັ້ງປະຕິບັດ | 431 |
| ຈຳນວນໂຄງການທີ່ໄດ້ຈັດຕັ້ງປະຕິບັດ | 431 |
| ຈຳນວນໂຄງການທີ່ຈັດຕັ້ງປະຕິບັດສຳເລັດ | 382 (89 %) ມາຮອດ 10 ມັງກອນ ປີ 2006 |
| ຈຳນວນງົບປະມານໂອນໃຫ້ແຂວງ | 30.15 ຕື້ກີບ(95%) ທ້າຍປີ 2005 |
| ຈຳນວນເງິນທີ່ນຳໃຊ້ໃນຊຸມຊົນ/ໂອນເຂົ້າບັນຊີຂອງເຂດ | 29.4 ຕື້ກີບ(92 %) ທ້າຍປີ 2005 |
| ຂະແໜງການທີ່ປະຊາຊົນຕ້ອງການຫລາຍໃນຮອບວຽນທີ 2 | ຂະແໜງສຶກສາ (ໂດຍສະເພາະໂຮງຮຽນ) |

ໃນຕາຕະລາງທີ 7 ທີ່ສະແດງຢູ່ຂ້າງເທິງນີ້, ຂໍ້ມູນຄັ້ງສຸດທ້າຍກ່ຽວກັບຄວາມ ຄືບໜ້າຂອງການຈັດ ຕັ້ງປະຕິບັດ ໂຄງການຍ່ອຍໃນຮອບວຽນທີ 2 ແມ່ນ ນັບເອົາຮອດ ວັນທີ 10 ມັງກອນ 2006, ຊຶ່ງສະແດງ ໃຫ້ເຫັນຄວາມຄືບ ໜ້າຂອງການຈັດຕັ້ງປະຕິບັດທັງໝົດສຳເລັດແລ້ວ 382 ຫລື ເທົ່າກັບ 89% ຈາກທັງໝົດ 431 ໂຄງການໃນ ຮອບວຽນທີ 2, ສ່ວນອີກ 49 ໂຄງການທີ່ເຫລືອ ຄາດວ່າຈະສຳເລັດໃນເວລາອັນໃກ້ນີ້, ໃນຕາຕະລາງຂ້າງເທິງນີ້ ຍັງສະແດງໃຫ້ເຫັນງົບປະມານທີ່ໂອນໄປຫາບັນຊີເຂດທັງໝົດ 29.4 ຕື້ກີບ (ຫລືປະມານ 92%) ຂອງແຜນງົບ ປະມານທັງໝົດ 32 ຕື້ກີບ ແລະ ຢູ່ໃນຕາຕະລາງທີ 7 ຍັງໄດ້ສະແດງໃຫ້ເຫັນການສົມທຽບລະຫວ່າງຂໍ້ມູນເບື້ອງຕົ້ນ ແລະ ຂໍ້ມູນທີ່ໄດ້ຈັດ ຕັ້ງປະຕິບັດຕົວຈິງໃນ 14 ເມືອງ

<u>ຜົນສຳເລັດຕົ້ນຕໍໃນຮອບວຽນທີ</u> II

- ກວມເອົາແຂວງເປົ້າໝາຍທັງໝົດ 3
- ກວມເອົາເມືອງເປົ້າໝາຍທັງໝົດ 14
- ຈຳນວນໂຄງການທີ່ຖືກຈັດຕັ້ງປະຕິບັດທັງໝົດ 431
- ຈຳນວນໂຄງການທີ່ສຳເລັດຮ້ອຍສ່ວນຮ້ອຍ (100%) 382
- ແຜນງົບປະມານສຳລັບໂຄງການຍ່ອຍ ແລະ ການວຝຶກອົບຮົມ (US$) 3, 103,397

*ໝາຍເຫດ*: ໂຄງການທີ່ປະຊາຊົນມີຄວາມຕ້ອງການຫລາຍທີ່ສຸດໃນຮອບວຽນທີ 2 ນີ້ ແມ່ນໂຄງການກ່ຽວກັບຂະແໜງການສຶກສາ ເຊັ່ນ: ການກໍ່ສ້າງໂຮງຮຽນ, ການສ້ອມແປງໂຮງຮຽນ ແລະ ອຸປະກອນການຮຽນການສອນ, 382 ໂຄງການ ຫລື ປະມານ 90% ຂອງ ທັງໝົດ 431 ໂຄງການໃນຮອບວຽນທີ 2 ແມ່ນສຳເລັດຮຽບຮ້ອຍແລ້ວ

ສຳລັບລາຍລະອຽດຂອງຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ການນຳໃຊ້ງົບປະມານໃນຮອບວຽນ ທີ 1 ແລະ ທີ 2 ແມ່ນໃຫ້ເບິ່ງຢູ່ *ເອກະສານຊ້ອນທ້າຍ ທີ 1*

*ລວມຮອບວຽນທີ I ແລະ ຮອບວຽນທີ II*

**ສັງລວມຜົນສຳເລັດຕົ້ນຕໍໃນຮອບວຽນທີ 1 ແລະ ຮອບວຽນທີ 2**

- 211 ໂຄງການຍ່ອຍ ກ່ຽວກັບຂະແໜງສຶກສາ
- 128 ໂຄງການຍ່ອຍ ກ່ຽວກັບຂະແໜງ ຄຂປກ
- 234 ໂຄງການຍ່ອຍ ກ່ຽວກັບຂະແໜງ ສາທາລະນະສຸກ/ນ້ຳສະອາດ
- 106 ໂຄງການຍ່ອຍ ກ່ຽວກັບຂະແໜງ ກະສິກຳ ແລະ ກິດຈະກຳສ້າງລາຍຮັບ
- ລວມ: 679 ໂຄງການຍ່ອຍ

ປະຊາຊົນໃນ 188 ເຂດ ແລະ 1431 ບ້ານ ມີປະສົບການດ້ານການນຳໃຊ້ງົບປະມານ ແລະ ມີຄວາມຮູ້ຄວາມສາມາດໃນການບໍລິຫານໂຄງການຍ່ອຍໃນທ້ອງຖິ່ນຂອງເຂົາເຈົ້າເອງ

***ສົມທຽບເປີເຊັນຂອງໂຄງການ ແລະ ເປີເຊັນຂອງງົບປະມານ ໃນແຕ່ລະຂະແໜງການ ຂອງຮອບວຽນທີ1 ແລະ ຮອບວຽນທີ 2***

| | ໂຄງການ | ງົບປະມານ |
|---|---|---|
| • ຂະແໜງສຶກສາ | 32% | 29% |
| • ຂະແໜງ ຄຂປກ | 19% | 36% |
| • ຂະແໜງ ສາທາລະນະສຸກ | 35% | 25% |
| • ຂະແໜງກະສິກຳ ແລະ ກິດຈະກຳສ້າງລາຍຮັບ | 14% | 10% |

**ຕາຕະລາງທີ 8: ຕົວຊີ້ບອກສຳຄັນຂອງການຈັດຕັ້ງປະຕິບັດ**

| | ຮອບວຽນທີ I | ຮອບວຽນທີ II |
|---|---|---|
| **I. ປັບປຸງພື້ນຖານໂຄງລ່າງ ແລະ ການບໍລິການ** | | |

| | | |
|---|---|---|
| • ຈຳນວນໂຄງການຍ່ອຍທີ່ອະນຸມັດເພື່ອຈັດຕັ້ງປະຕິບັດ | 248 | 431 |
| • ເປີເຊັນງົບປະມານທີ່ ທລຍ ລົງທຶນໃສ່ບ້ານທຸກຍາກ | 76% | 84% |
| • ຈຳນວນ ແລະ ເປີເຊັນຂອງເຂດທີ່ໄດ້ຖືກຈັດຕັ້ງປະຕິບັດໂຄງການ | 121 Khets (100%) | 188 Khets (100%) |
| • ຈຳນວນ ແລະ ເປີເຊັນຂອງເມືອງທຸກທີ່ໄດ້ຖືກຄັດເລືອກຈັດຕັ້ງປະຕິບັດ | 10 Districts (12.5 %) | 14 Districts (19.4%) |
| • ເປີເຊັນຂອງຊຸມຊົນທີ່ມີແຜນການໃນການບຳລຸງຮັກສາໂຄງການຍ່ອຍ | 100% | 100% |
| • ມູນຄ່າໂຄງການສະເລ່ຍໃສ່ງົບປະມານຕໍ່ນຶ່ງໂຄງການ | US$ 4,297 | US$ 7200 |
| **II. ໃຫ້ສິດແກ່ເຂດ ຜ່ານຂະບວນການເສີມສ້າງຄວາມອາດສາມາດ** | | |
| • ເປີເຊັນຊຸມຊົນປະກອບສ່ວນ | 20% | 21.61% |
| • ຈຳນວນຈັດຊື້-ຈັດຈ້າງທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ | 153 | 311 |
| • ຈຳນວນຈັດຊື້-ຈັດຈ້າງ ໂດຍແມ່ນບໍລິສັດຮັບເໝົາເປັນຜູ້ປະຕິບັດ | 85 | 120 |
| • ເປີເຊັນຈັດຊື້-ຈັດຈ້າງທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ | 53% | 72% |
| **III. ເສີມສ້າງຄວາມອາດສາມາດການປົກຄອງທ້ອງຖິ່ນ, ສົ່ງເສີມຂະບວນການຕັດສິນໃຈແບບມີສ່ວນຮ່ວມ** | | |
| • ຈຳນວນບົດສະເໜີໂຄງການທີ່ນຳສະເໜີໂດຍກຸ່ມຍິງ | 53 (8.1%) | 371(9%) |
| • ຈຳນວນບົດສະເໜີໂຄງການທີ່ນຳສະເໜີໂດຍກຸ່ມຊາຍ | 75 (9.9%) | 512(11%) |
| • ຈຳນວນເມືອງທີ່ຈັດຕັ້ງປະຕິບັດຢູ່ໃນແຕ່ລະຮອບວຽນ | 10 | 14 |

**ຕາຕະລາງທີ 9: ສົມທຽບການແບ່ງປັນງົບປະມານຂອງຮອບວຽນທີ 1 ແລະ ຮອບວຽນທີ 2**

| ແຂວງ/ເມືອງ | ຮອບວຽນທີ1 2003-04 | ຮອບວຽນທີ 2, 2004-05 | |
|---|---|---|---|
| | | ແຜນງົບປະມານ($) | ງົບປະມານຕົວຈິງ |
| ແຂວງຫົວພັນ | | | |
| ເມືອງວຽງໄຊ | | 237,000 | $237,473 |
| ເມືອງຫົວເມືອງ | | 234,000 | $234,237 |
| ເມືອງຊຳໃຕ້ | | 496,000 | $496,149 |
| ເມືອງແອດ | $113,475 | 198,000 | $197,649 |
| ເມືອງຊຽງຄໍ້ | $110,850 | 206,000 | $206,385 |
| ເມືອງສົບເບົາ | $120,850 | 222,000 | $221,518 |

Notice: The detail of sub-project and budget allocation by sector is detailed in table 10.1

| | | | |
|---|---|---|---|
| *ລວມ/* | $345,175 | 1,593,000 | $1,593,411 |
| ແຂວງສະຫວັນນະເຂດ | | | |
| ເມືອງພີນ | | 282,000 | $281,914 |
| ເມືອງວິລະບູລີ | $108,808 | 205,000 | $205,366 |
| ເມືອງນອງ | $92,011 | 195,000 | $195,487 |
| ເມືອງ ເຊໂປນ | $179,010 | 372,000 | $372,129 |
| *ລວມ* | $379,829 | 1,054,000 | $1,054,897 |
| ແຂວງຈຳປາສັກ | | | |
| ເມືອງມູນລະປະໂມກ | $67,914 | 171,000 | $171,428 |
| ເມືອງໂຂງ | $102,200 | 95,000 | $95,134 |
| ເມືອງສຸຂຸມາ | $90,874 | 106,000 | $106,470 |
| ເມືອງປະທຸມພອນ | $83,939 | 82,000 | $82,056 |
| *ລວມ* | $344,927 | 454,000 | $455,088 |
| **ລວມທັງໝົດ** | $1,069,931 | 3,101,000 | $3,103,397 |

❖ **ຜົນໄດ້, ຜົນຮັບ ແລະ ຜົນກະທົບ ໃນສອງຮອບວຽນ**

ຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານ ທລຍ ກໍ່ແມ່ນການຈັດຕັ້ງປະຕິບັດໂຄງການຍ່ອຍ ຕາມແຜນການ, ນອກຈາກບາງໂຄງການກ່ຽວກັບ ການຂຸດເຈາະນ້ຳສະອາດ ແມ່ນຍັງລ້າຊ້າ ເປັນຕົ້ນ ແມ່ນ ໂຄງການກ່ຽວກັບນ້ຳສ້າງໃສ່ທໍ່ ເມື່ອເວລາຈັດຕັ້ງປະຕິບັດຕົວຈິງແມ່ນຂຸດຖືກຫີນດານ ແລະ ບໍ່ສາມາດຂຸດລົງ ຕໍ່ໄດ້ (ບາງບໍ່ກໍ່ຂຸດໄດ້ພຽງແຕ່ 5 ແມັດ) ແລະ ເມື່ອເປັນແນວ ນັ້ນໂຄງ ການດັ່ງ ກ່າວກໍ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ແລະ ຫລາຍໂຄງການກໍ່ໄດ້ປ່ຽນແປງໂຄງການໄປເປັນໂຄງການອື່ນ,ເຊັ່ນ: ຈາກນ້ຳສ້າງໃສ່ທໍ່ປ່ຽນມາເປັນໂຮງຮຽນແທນ.

ໂຄງການຍົກລະດັບທາງຊົນນະບົດບາງໂຄງການ/ສະຖານທີ່ຕັ້ງ ແມ່ນຖືກເພພັງ ບາງກໍລະນີທໍ່ລອດທາງ ກໍ່ຖືກນ້ຳເສາະເສຍຫາຍ (ຍ້ອນການອອກແບບທໍ່ລອດທາງທີ່ຍັງບໍ່ສອດຄ່ອງ) ນຳໃຊ້ແຮງງານທີ່ບໍ່ມີຄຸນນະພາບຈາກຊຸມຊົນ, ເຮັດໃຫ້ການລົງທຶນຢູ່ໃນບາງໂຄງການດັ່ງກ່າວຍັງບໍ່ໄດ້ຮັບຜົນສຳເລັດ

ຜົນໄດ້ຮັບຈາກການຝຶກອົບຮົມຊຶ່ງສະແດງໃຫ້ເຫັນຜົນທີ່ໄດ້ຮັບຕາມມາຢ່າງຈະແຈ້ງເຊັ່ນ: ການບຳລຸງຮັກສາໂຄງການຍ່ອຍທີ່ສຳເລັດແລ້ວ (ນອກຈາກໂຄງການຍົກລະດັບທາງຊົນນະບົດທີ່ໄດ້ ກ່າວມາ ກ່ອນ ໜ້ານີ້) ຜົນຂອງການຝຶກອົບຮົມມັນຍັງຊ່ວຍໃຫ້ຊາວບ້ານປັບປຸງໃນຫລາຍໆດ້ານ, ການລ້ຽງປາ, ການຂຸດ ໜອງ

ປາໃໝ່, ການປູກເຫັດ, ແລະ ບາງຄອບຄົວກໍ່ໄດ້ເລີ່ມຕົ້ນກິດຈະກໍາຕໍ່າແຜ່ນ ແລະ ໄດ້ປັບປຸງເລື່ອງຄຸນນະພາບຂອງຜະລິດ ຕະພັນແຜ່ນແພ ແລະ ອື່ນໆ.

ຜົນໄດ້ຮັບຈາກບາງໂຄງການແມ່ນເປັນຜົນປະໂຫຍດທີ່ສຸດຕໍ່ຊາວບ້ານ ເຊັ່ນ: ໃນໝູ່ບ້ານທີ່ໄດ້ຮັບໂຄງການກ່ຽວກັບນ້ຳສະອາດ ບໍ່ມີເຊື້ອພະຍາດ (ຊຶ່ງບໍ່ມີເຊື້ອພະຍາດເຈືອປົນຢູ່) ຊຶ່ງບໍ່ເຮັດໃຫ້ເກີດພະຍາດຖອກທ້ອງ, ທ້ອງຂີ້ຮາກ ແລະ ພະຍາດລຳໄສ້ອື່ນໆ, ປະຫຍັດເວລາ ແມ່ຍິງ ແລະ ເດັກນ້ອຍ ໃນການໄປຕັກນ້ຳຈາກສະຖານທີ່ຮ່າງໄກ ແລະ ມີເວລາໄດ້ເຮັດວຽກເພີ່ມ, ມີຊັບພະຍາກອນພຽງພໍ, ມີຊົນລະປະທານພຽງພໍຕໍ່ໄຮ່ນາ, ຕໍ່ການເຮັດການກະເສດຕ່າງໆ, ສ້າງລາຍຮັບເພີ່ມໃຫ້ແກ່ຊຸມຊົນ ແລະ ອື່ນໆ

ການກໍ່ສ້າງສຸກສາລາ ແລະ ການສະໜອງອຸປະກອນການແພດ, ການກໍ່ສ້າງເຮືອນພັກຄົນເຈັບ ແລະ ການໃຫ້ ຖົງຢາປະຈຳບ້ານແກ່ຊຸມຊົນ ສຳລັບການປະຖົມພະຍາບານເບື້ອງຕົ້ນ ຊຶ່ງເຮັດໃຫ້ມີການ ປັບປຸງທັງ ທາງດ້ານຊີ ວິດການເປັນຢູ່, ແບບແຜນການດຳລົງຊີວິດ, ຊຶ່ງຊ່ວຍແກ້ໄຂບັນຫາ ພື້ນຖານ ເສດຖະກິດໃຫ້ຊຸມຊົນໃນດ້ານຕ່າງ ໆ ດັ່ງຫົວຂໍ້ຕ່າງໆຕໍ່ໄປນີ້:

- ມີແຫລ່ງບໍລິການດ້ານການຢາ ແລະ ສຸຂະພາບພາຍໃນຊຸມຊົນຂອງເຂົາເຈົ້າ
- ຫລຸດຜ່ອນເວລາທີ່ໃຊ້ໃນການເດີນທາງເພື່ອໄປຫາໂຮງໝໍທີ່ຢູ່ຮ່າງໄກ;
- ບໍ່ໄດ້ແບກຫາບຄົນເຈັບໄປຫາບ່ອນບໍລິການທີ່ຢູ່ຮ່າງໄກ ຫລື ສະຖານທີ່ໃຫ້ການບໍລິການຕ່າງໆ
- ມີຢາທີ່ສາມາດໃຫ້ການບໍລິການໄດ້ໃນກໍລະນີມີເຫດການສຸກເສີນເກີດຂຶ້ນ ແລະ
- ມີເຮືອນພັກໄວ້ໃຫ້ຄົນເຈັບພັກເພື່ອຕິດຕາມອາການ ແລະ ອື່ນໆ.

### *ການວິເຄາະຜົນໄດ້ຮັບທີ່ຕາມມາ ແລະ ຜົນກະທົບ ຢູ່ໃນຂະແໜງການຕ່າງໆ*

ໃນຂະນະທີ່ການຈັດຕັ້ງປະຕິບັດກິດຈະກຳພາຍໃຕ້ກອງທຶນຫລຸດຜ່ອນຄວາມທຸກຍາກນັບມື້ນັບມີຫລາຍໂຄງການທີ່ເກີດຂຶ້ນ, ດັ່ງນັ້ນ, ມັນຮຽກຮ້ອງໃຫ້ມີການປະເມີນຄືນກ່ຽວກັບ ຜົນໄດ້ຮັບຕາມມາ ແລະ ຜົນກະທົບ ຫລັງຈາກຈັດຕັ້ງປະຕິບັດໂຄງການແຕ່ລະໂຄງການ, ດັ່ງນັ້ນ, ລະບົບຂອງການຕິດຕາມປະເມີນຜົນຕ້ອງໄດ້ອອກແບບເຄື່ອງມື ເພື່ອສາມາດ ເອົາບັນຫາດັ່ງກ່າວມາວິເຄາະ, ເພາະຂັ້ນຕອນນີ້ແມ່ນສຳຄັນຫລາຍ ເພາະມັນຈະສະແດງໃຫ້ວ່າ ການຈັດຕັ້ງປະຕິບັດຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ມີຄວາມສອດຄ່ອງ ແລະ ແກ້ໄຂຄວາມທຸກຍາກໄດ້ແທ້ຈິງຕາມນະໂຍບາຍຫລຸດຜ່ອນຄວາມທຸກຍາກຂອງລັດຖະບານ, ແລະ ໃນນີ້ ໜ່ວຍງານຕິດຕາມ ແລະ ປະເມີນຜົນແມ່ນກຳລັງອອກແບບ ແບບຟອມເພື່ອເກັບກຳຜົນໄດ້ຮັບທີ່ຕາມມາ, ຖານຂໍ້ມູນ ແລະ ວິທີການເກັບກຳ, ຄາດວ່າລະບົບທຸກຢ່າງຈະສຳເລັດໃນເດືອນ ກໍລະກົດ ປີ 2006 ນີ້

ຕາຕະລາງທີ10: ສະຫລຸບແຜນການຈັດຕັ້ງປະຕິບັດໂຄງການຍ່ອຍ, ງົບປະມານ ແລະ ການນຳໃຊ້ ມາຮອດທ້າຍເດືອນ ທັນວາ 2005

| | ຮອບວຽນທີ 1 | ຮອບວຽນທີ 2 | (ປະມານ) ຮອບວຽນ 3 | ລວມ |
|---|---|---|---|---|
| ຈຳນວນເມືອງ | 10 | 14 | 20 | |
| ຈຳນວນບ້ານທີ່ໄດ້ເຮັດກອງປະຊຸມຈັດລຽງບູລິມະສິດ | 913 | 1,431 | 1,913 | |
| ຈຳນວນບ້ານໄດ້ຮັບຜົນປະໂຫຍດໂດຍກົງ | ປະມານ 558 | ປະມານ 887 | ຈະໃສ່ໃນບົດລາຍງານໜ້າ | |
| ຈຳນວນບ້ານທີ່ໄດ້ຮັບຜົນປະໂຫຍດໂດຍທາງອ້ອມ | | Approx. 1,047 | ຈະໃສ່ໃນບົດລາຍງານໜ້າ | |
| ຈຳນວນໂຄງການທີ່ຖືກອະນຸມັດຈັດຕັ້ງປະຕິບັດ | 249 | 431 | ປະມານ 533 | |
| ຈຳນວນໂຄງການທີ່ຈັດຕັ້ງປະຕິບັດຕົວຈິງ | 248 | 431 | | 679 |
| ຈຳນວນໂຄງການທີ່ສຳເລັດ ຮ້ອຍສ່ວນຮ້ອຍ | 244 | 382 | | 625 |
| ແຜນນຳໃຊ້ງົບປະມານ | 11 ຕື້ກີບ | 32 ຕື້ກີບ | 44 ຕື້ກີບ | 87 ຕື້ກີບ |
| ງົບປະມານນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ຮອດປະຈຸບັນ | | ປະມານ 30 ຕື້ກີບ | | |
| ງົບປະມານທີ່ຍັງບໍ່ມີແຜນນຳໃຊ້ | | ປະມານ 1.3 ຕື້ກີບ | | |
| ງົບປະມານທີ່ໂອນເຂົ້າຫາບັນຊີຂອງເຂດຮອດປະຈຸບັນ | 10.14 ຕື້ກີບ | 29.4 ຕື້ກີບ | | 37.2 ຕື້ກີບ |
| ງົບປະມານຊຸມຊົນປະກອບສ່ວນ | 2.4 ຕື້ກີບ | 6.9 ຕື້ກີບ | | 9.3 ຕື້ກີບ |

ຕາຕະລາງທີ 10.1 ລາຍລະອຽດໂຄງການຍ່ອຍໃນແຕ່ລະຂະແໜງການ ແລະ ການແບ່ງປັນງົບປະມານໃຫ້ແຕ່ລະກຸ່ມໃນຮອບວຽນທີ 1 ແລະ ຮອບວຽນທີ 2

| | ໂຄງການຕາມຂະແໜງການໃນຮອບວຽນທີ 1 | | | | ໂຄງການຕາມຂະແໜງການໃນຮອບວຽນທີ 2 | | | |
|---|---|---|---|---|---|---|---|---|
| | ຈຳນວນ ໂຄງການ | % ຂອງໂຄງ ການທີ່ຖືກ ອະນຸມັດ | ທຶນ ທລຍ (ກີບ) | % ທຶນຂອງ ທລຍ | ຈຳນວນ ໂຄງການ | % ຂອງໂຄງ ການທີ່ຖືກ ອະນຸມັດ | ທຶນ ທລຍ (ກີບ) | % ທຶນຂອງ ທລຍ |
| **ສຶກສາ** | 72 | 29.0% | 2,923,386,449 | 27.0% | 139 | 32.3% | 9,383,119,909 | 29.5% |
| **ຄຂປກ** | 39 | 15.7% | 2,454,072,825 | 22.6% | 89 | 20.6% | 12,893,043,986 | 40.5% |
| **ສາທາລະນະສຸກ** | 108 | 43.5% | 4,579,252,806 | 42.2% | 126 | 29.2% | 5,946,889,150 | 18.7% |
| **ກະສິກຳ** | 29 | 11.7% | 887,010,234 | 8.2% | 26 | 6.0% | 1,679,381,002 | 5.3% |
| **IGA+ຝຶກອົບຮົມ** | 0 | 0.0% | 0 | 0.0% | 51 | 11.8% | 1,922,940,368 | 6.0% |
| **ລວມທັງໝົດ** | 248 | 100.0% | 10,843,722,314 | 100% | 431 | 100.0% | 31,825,374,415 | 100% |

ຕາຕະລາງທີ 11: ຄວາມຄືບໜ້າຂອງໂຄງການຍ່ອຍຂອງທຸກເມືອງ, ຮອບວຽນທີ II (2004-2005)

| Subproject progressed in 14 districts | | | | | | |
|---|---|---|---|---|---|---|
| ຊື່ເມືອງ | 0% | <50% | >50% | 100% | Total | SP |
| ເມືອງສິບເບົາ | 0 | 1 | 0 | 32 | 33 | 244 |
| ເມືອງແອດ | 0 | 3 | 0 | 32 | 35 | |
| ເມືອງຊຽງຄໍ້ | 0 | 3 | 2 | 33 | 38 | |
| ເມືອງວຽງໄຊ | 0 | 3 | 0 | 41 | 44 | |
| ເມືອງຫົວເມືອງ | 0 | 3 | 0 | 28 | 31 | |
| ເມືອງຊຳໃຕ້ | 0 | 3 | 0 | 60 | 63 | |
| ເມືອງເຊໂປນ | 2 | 7 | 4 | 28 | 41 | 104 |
| ເມືອງວິລະບູລີ | 1 | 2 | 3 | 17 | 23 | |
| ເມືອງນອງ | 0 | 1 | 0 | 11 | 12 | |
| ເມືອງພີນ | 0 | 1 | 4 | 23 | 28 | |
| ເມືອງມຸນລະປະໂມກ | 0 | 1 | 1 | 24 | 26 | 83 |
| ເມືອງໂຂງ | 0 | 1 | 1 | 23 | 25 | |
| ເມືອງ ສຸຂຸມາ | 0 | 1 | 0 | 14 | 15 | |
| ເມືອງປະທຸມພອນ | 0 | 1 | 0 | 16 | 17 | |
| **ລວມທັງໝົດ** | **3** | **31** | **15** | **382** | **431** | **431** |

(ຂໍ້ມູນນັບມາຮອດວັນທີ 10 ມັງກອນ, 2006)

**ໝາຍເຫດ**: 100% ຈຳນວນໂຄງການທີ່ຈັດຕັ້ງປະຕິບັດສຳເລັດຮ້ອຍສ່ວນຮ້ອຍ

>50% ຈຳນວນໂຄງການຍ່ອຍຈັດຕັ້ງປະຕິບັດສຳເລັດເກີນ 50%

<50% ຈຳນວນໂຄງການຈັດຕັ້ງປະຕິບັດສຳເລັດນ້ອຍກ່ວາ 50%

0% ຈຳນວນໂຄງການທີ່ຍັງບໍ່ທັນເລີ່ມຕົ້ນຈັດຕັ້ງປະຕິບັດ

ຂໍ້ມູນການນຳໃຊ້ງົບປະມານ ແລະ ໂຄງການທີ່ຈັດຕັ້ງປະຕິບັດສຳເລັດແລ້ວໃຫ້ເບິ່ງຢູ່ເອກະສານ ຊ້ອນທ້າຍ 1

### 2.6.2. ການປະກອບສ່ວນຂອງຊຸມຊົນ ແລະ ການຄິດໄລ່ໃນຮອບວຽນທີ 1 ແລະ ທີ 2

ການປະກອບສ່ວນຂອງຊຸມຊົນ ແລະ ການມີສ່ວນຮ່ວມອື່ນໆແມ່ນມີຄວາມສຳຄັນທີ່ສຸດ ເພາະທຸກການປະກອບຈະເປັນປັດໃຈເຮັດໃຫ້ໂຄງການສຳເລັດຕາມເວລາທີ່ຄາດໝາຍໄວ້, ຊຸມຊົນຈະເປັນຜູ້ຕັດສິນໃຈວ່າຈະແບ່ງປັນງົບປະມານແນວໃດ, ການບໍລິຫານ, ງົບປະມານ ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ. ການຂະຫຍາຍ ແລະ ສືບຕໍ່ໃຫ້ການຊ່ວຍເຫລືອ ແລະ ຝຶກອົບຮົມຜ່ານການຈັດຕັ້ງປະຕິບັດໂຄງການຍ່ອຍ ແມ່ນເພື່ອ

ເຮັດໃຫ້ຄົນທຸກຍາກລວມທັງເພດຍິງໄດ້ມີສ່ວນຮ່ວມໃນຂະບວນການຕັດສິນໃຈ ແລະ ໄດ້ຮັບຜົນປະໂຫຍດຈາກໂຄງການທີ່ໄດ້ຈັດຕັ້ງປະຕິບັດ, ການຈັດຕັ້ງປະຕິບັດໂຄງການຍ່ອຍຍັງຊ່ວຍໃຫ້ຊຸມຊົນເຂັ້ມແຂງໂດຍຜ່ານການຝຶກອົບຮົມໃຫ້ຊາວບ້ານຮູ້ຈັກເລື່ອງເຕັກນິກວິຊາການໃນແຕ່ລະປີ, ຊ່ວຍໃຫ້ຮູ້ຈັກໄກ່ເກ່ຍບັນຫາ ແລະ ສາມາດແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃນຊຸມຊົນ, ໃນນິຈຸດປະສົງຂອງໂຄງການຍັງຈະຊ່ວຍສ້າງຂອດການປະສານສົມທົບລະ ຫວ່າງລັດຖະບານ ແລະ ຊຸມຊົນ ແລະ ພະນັກງານ ທລຍ ຂັ້ນ ເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງໃຫ້ເຂັ້ມແຂງຂຶ້ນກ່ວາເກົ່າ ເພື່ອຮັບປະກັນການປະສານສົມທົບ ແລະ ເສີມສ້າງສາຍພົວພັນ

ການປະກອບສ່ວນຂອງຊຸມຊົນ (ອາດເປັນເງິນ ຫລື ແຮງງານ) ໃນທັງໝົດ 10 ເມືອງຂອງການຈັດຕັ້ງປະຕິບັດໃນຮອບວຽນທີ 1 ສະເລ່ຍແລ້ວປະມານ 20% (ຕາມຂໍ້ມູນທີ່ໄດ້ໃນທ້າຍປີ 2004) ໂດຍສະເລ່ຍໃສ່ຈຳນວນໂຄງການທັງໝົດ, ແຕ່ຕົວເລກທີ່ໄດ້ໃນຮອບວຽນທີ 1 ນີ້, ກໍ່ຍັງສູງຢູ່ຖ້າທຽບໃສ່ກັບແຜນການທີ່ໄດ້ກຳນົດໄວ້ໃນຂັ້ນຕອນການອອກແບບໂຄງການ, ໃນຮອບວຽນທີ 2, ຈັດຕັ້ງປະຕິບັດຢູ່ໃນ 14 ເມືອງ, ການປະກອບສ່ວນຂອງຊຸມຊົນເຫັນວ່າເພີ່ມຂຶ້ນເປັນ 21.6% ໂດຍຂໍ້ມູນສຸດທ້າຍແມ່ນຄິດໄລ່ຮອດ ເດືອນ ມິຖຸນາ 2005

**ຕາຕະລາງທີ 12: ມູນຄ່າການປະກອບສ່ວນຂອງຊຸມຊົນ**

| ແຂວງ / ເມືອງ | 2003 – 2004 ງົບປະມານຂອງ 10 ເມືອງ | | | 2004 – 2005 ງົບປະມານຂອງ 14 ເມືອງ | | |
|---|---|---|---|---|---|---|
| | ທຶນ ທລຍ (ກີບ) ຂໍ້ມູນທ້າຍປີ 2003 | ມູນຄ່າປະກອບສ່ວນຂອງຊຸມຊົນ (ກີບ) ຂໍ້ມູນທ້າຍປີ 2003 | % ຊຸມຊົນປະກອບ (ກີບ) | ແຜນງົບປະມານຂອງ ທລຍ (ກີບ) | ມູນຄ່າປະຊາຊົນປະກອບ (ກີຍ) | % ຊຸມຊົນປະກອບສ່ວນ (ກີບ) |
| **ແຂວງຫົວພັນ** | | | | | | |
| ສົບເບົາ | 1,208,461,935 | 595,144,386 | 49% | 2,328,980,851 | 1,369,906,598 | 58.8% |
| ແອດ | 1,178,575,061 | 477,725,550 | 41% | 2,072,637,317 | 517,764,700 | 25.0% |
| ຊຽງຄໍ້ | 1,162,731,642 | 262,954,550 | 23% | 2,148,983,361 | 511,986,500 | 23.8% |
| ວຽງໄຊ | | | | 2,389,890,859 | 981,927,722 | 41.1% |
| ຫົວເມືອງ | | | | 2,451,233,550 | 401,507,752 | 16.4% |
| ຊຳໃຕ້ | | | | 5,122,252,945 | 1,467,739,719 | 28.7% |
| ***ລວມແຂວງ*** | ***3,527,874,034*** | ***1,335,824,486*** | ***38%*** | ***16,513,978,883*** | ***5,250,832,991*** | ***31.8%*** |
| **ສະຫວັນນະເຂດ** | | | | | | |
| ສົບເບົາ | 1,817,823,348 | 184,255,662 | 10% | 3,906,000,000 | 272,832,672 | 7% |
| ນອງ | 989,915,975 | 61,014,000 | 6% | 2,047,500,000 | 41,548,000 | 2% |
| ວິລະບູລີ | 1,131,693,231 | 177,973,300 | 16% | 2,152,500,000 | 97,903,500 | 5% |
| ພີນ | | | | 2,961,000,000 | 300,524,986 | 10% |
| ***ລວມແຂວງ*** | ***3,939,432,554*** | ***423,242,962*** | ***11%*** | ***11,067,000,000*** | ***712,809,158*** | ***6%*** |
| **ແຂວງຈຳປາສັກ** | | | | | | |

| | | | | | | |
|---|---|---|---|---|---|---|
| ມຸນລະປະໂມກ | 708,687,751 | 76,222,500 | 11% | 1,780,724,999 | 328,314,360 | 18.4% |
| ໂຊງ | 1,141,389,739 | 98,416,676 | 9% | **901,306,147** | 264,706,626 | 29.3% |
| ສຸຂຸມາ | 1,347,516,472 | 216,142,002 | 16% | **701,432,377** | 118,925,445 | 16.9% |
| ປະທຸມພອນ | *858,786,828* | *206,518,000* | *24%* | 860,950,000 | 203,242,103 | 23.6% |
| ***ລວມແຂວງ*** | ***4,056,380,790*** | ***597,299,178*** | ***15%*** | ***4,244,413,523*** | ***915,188,534*** | ***21.5%*** |
| ***ລວມທັງໝົດ*** | **11,523,687,378** | **2,356,366,626** | **20%** | **31,825,392,406** | ***6,878,830,683*** | ***21.61%*** |

ການປະກອບສ່ວນຢູ່ແຂວງສະຫວັນນະເຂດ ແມ່ນຕ່ຳກ່ວາແຂວງຫົວພັນ ແລະ ຈຳປາສັກ, ເຫດຜົນ ນີ້ງອາດ ເນື່ອງມາຈາກ ແຂວງສະຫວັນນະເຂດເນື້ອທີ່ສ່ວນຫລາຍປົກຄຸມໄປດ້ວຍລະເບີດທີ່ບໍ່ທັນແຕກ, ເຮັດໃຫ້ປະຊາຊົນຫຍຸ້ງຍາກໃນການຮວບຮວມວັດຖຸດິບທີ່ຈະເອົາມາປະກອບສ່ວນຫລືອາດເປັນຍ້ອນຊັບພະຍາກອນຢູ່ແຂວງສະຫວັນນະເຂດອາດບໍ່ອຸດົມສົມບູນຄືຢູ່ແຂວງຫົວພັນ ແລະ ຈຳປາກສັກເຊັ່ນ: ຊາຍ, ໄມ້, ແລະ ຫີນ ຊຶ່ງສາມາດເອົາມາປະກອບສ່ວນໄດ້ ແລະ ສາມາດຫາໄດ້ໂດຍງ່າຍຢູ່ໃນ 2 ແຂວງ, ທລຍ ຈະໄດ້ສຶກສາຕື່ມກ່ງວກັບຫົວຂໍ້ນີ້ໃນຂັ້ນຕໍ່ໄປ.

<u>**ການຄິດໄລ່ການປະກອບສ່ວນຈາກຊຸມຊົນ**</u>



ອີງໃສ່ 7 ຫລັກການຂອງ ທລຍ, ຫລັກການທີ່ວ່າມີສ່ວນຮ່ວມຍັງເປັນສິ່ງທີ່ຕ້ອງໄດ້ລະມັດລະວັງ ແລະ ຕ້ອງໄດ້ເອົາໃຈໃສ່ໃນການພັດທະນາເຂດຊົນນະບົດ, ການປະກອບສ່ວນຈາກຊຸມແມ່ນເຄື່ອງມືທີ່ສຳຄັນທີ່ສຸດຊຶ່ງຈະຊ່ວຍໃຫ້ໂຄງການມີຄວາມຍືນຍົງ ແລະ ໃຫ້ປະຊາຊົນຮູ້ສຶກເປັນເຈົ້າຂອງ. ໃນໄລຍະການສຳຫລວດໂຄງການຍ່ອຍໄດ້ຍົກເອົາບັນຫາການປະກອບສ່ວນຂຶ້ນມາສົນທະນາເຊັ່ນ: ບ້ານທີ່ຢູ່ໄກ້ແມ່ນ້ຳຕ້ອງໄດ້ປະກອບສ່ວນເປັນແຮ່ຊາຍຊຶ່ງຫາໄດ້ງ່າຍກ່ວາຢ່າງອື່ນ, ບ້ານທີ່ມີປ່າໄມ້ອຸດົມສົມບູນກໍ່ປະກອບສ່ວນເປັນໄມ້ ແລະ ກໍ່ຍັງມີຫລາຍບ້ານທີ່ປະກອບສ່ວນເປັນເງິນສົດ

ໃນການປະກອບສ່ວນເປັນໄມ້, ຊຸມຊົນຕ້ອງໄດ້ກຽມໜັງສືອະນຸຍາດຫາອຳນາດການປົກຄອງຂັ້ນເມືອງເພື່ອ ຂໍອະນຸຍາດນຳໃຊ້ໄມ້ ແລະ ໃນຄະນະທີ່ຊຸມຊົນຕັດໄມ້ ອຳນາດການປົກຄອງຂັ້ນເມືອງກໍ່ຕ້ອງໄດ້ມີຜູ້ຕິດຕາມ ນຳອີກ, ເພື່ອປ້ອງກັນການສວຍໂອກາດນຳໃຊ້ໄປໃນດ້ານທີ່ຜິດ.

ການຄິດໄລ່ງົບປະມານການປະກອບສ່ວນຂອງຊຸມຊົນ ແມ່ນອີງໃສ່ການຕໍ່ລອງ ແລະ ປຶກສາຫາລືກັບຊຸມຊົນໃນເວລາຊຽນບົດສະເໜີໂຄງການຍ່ອຍ, ລາຄານັ້ນແມ່ນຕີໃສ່ກັບສິ່ງທີ່ປະຊາຊົນປະກອບ ໂດຍອີງໃສ່ລາຄາຫົວໜ່ວຍທີ່ ມີຢູ່ໃນຖານຂໍ້ມູນຂອງ ທລຍ ທີ່ໄດ້ປັບປຸງເລື່ອງຫົວໜ່ວຍລາຄາໃນທຸກ 6 ເດືອນ

1/ ການຄິດໄລ່ງົບປະມານເປັນແຮງງານນັ້ນມີການຄິດໄລ່ຢູ່ 2 ປະເພດຄື: ແຮງງານທີ່ມີຝີມື ແລະ ແຮງງານທີ່ເອີ້ນກັນວ່າ ກຳມະກອນ, ຄ່າແຮງງານຢູ່ໃນແຂວງ ສະຫວັນນະເຂດ ແລະ ຊຽງຂວາງຂ້ອນຂ້າງແພງກ່ວາແຂວງອື່ນໆ, ເພາະວ່າ ການຄົມມະນາຄົມລະຫວ່າງເມືອງ ແລະ ເຂດ ແມ່ນຫ່າງໄກຈາກເທດສະບານແຂວງ, ຖ້າທຽບໃສ່ ແຂວງຫົວພັນ ແຮງງານທີ່ມີຝີມືກໍ່ແມ່ນມີປະສົບການມາຈາກການຈັດຕັ້ງປະຕິບັດໂຄງການຍ່ອຍຮ່ວມກັບ ທລຍ ນີ້ເອງ ແລະ ກໍ່ແມ່ນປະຊາຊົນຜູ້ທຸກຍາກໃນບ້ານນັ້ນເອງ.

2/ ອຸປະກອນ / ວັດຖຸດິບ ຕ່າງໆ

ໃນເວລາສຳຫລວດໂຄງການຍ່ອຍ ທລຍ ໄດ້ອອກແບບ ແລະ ປຶກສາຫາລືຮ່ວມກັບຊຸມຊົນ, ວິຊາການຈະຕີລາ ຄາຄຸນນະພາບຂອງວັດສະດຸຢູ່ໃນພາກສະໜາມເລີຍ, ຖ້າຫາກປະຊາຊົນປະກອບຊາຍ 20 ແມັດກ້ອນ, ກໍ່ຈະ ເອົາ 20 x 70.000 = 1.400.000 ກີບ ແລະ ຖືວ່າທຽບເທົ່າເປັນເງິນສົດໃນມູນຄ່ານັ້ນໆ. ແລະຈຳນວນເງິນ ທີ່ໄດ້ຄິດໄລ່ອອກມານີ້ກໍ່ຈະໄດ້ເອົາເຂົ້າໃນບົດລາຍງານ ແລະ ຢູ່ໃນບົດສະເໜີໂຄງການຍ່ອຍ, ແລະ ຢູ່ໃນຕາຕະລາງທີ 13 ລຸ່ມນີ້ ແມ່ນໄດ້ສະແດງໃຫ້ເຫັນມູນຄ່າຕົວຈິງທີ່ເກັບກຳໄວ້ຢູ່ໃນຖານຂໍ້ມູນຂອງ ທລຍ ທັງໄດ້ ມີການກວດຄືນ ແລະ ເກັບກຳຂໍ້ມູນໃໝ່ທຸກໆ 6 ເດືອນ.

**ຕາຕະລາງທີ13: ການຄິດໄລ່ການປະກອບສ່ວນຂອງຊຸມຊົນຂອງທຸກແຂວງ**

| ລາຍການ | ຫົວພັນ | ສະຫວັນນະເຂດ | ຈຳປາສັກ | ຊຽງຂວາງ | ສາລະວັນ |
|---|---|---|---|---|---|
| ແຮງງານຝີມື (ກີບ/ມື້) | 40.000 | 70.000 | 50.000 | 120.000 | 100.000 |
| ກຳມະກອນ (ກີບ/ມື້) | 20.000 | 30.000 | 25.000 | 25.000 | 25.000 |
| ຊາຍ ( ກີບ/m3) | 50.000 | 120.000 | 70.000 | 65.000 | 300.000 |
| ບານປະຕູໄມ້ (ກີບ/m3) (ໄມ້ເນື້ອອ່ອນ) | 1.500.000 | 1.200.000 | 1.400.000 | 1.200.000 | 1.800.000 |
| ໄມ້ຄ້ຳແບບ (ກີບ/m3) (ໄມ້ເນື້ອແຂງ) | 2.500.000 | 2.800.000 | 1.750.000 | 2.700.000 | 2.400.000 |
| ຫີນແຮ່ (ກີບ/m3) ສຳຫລັບປົນຊີເມັນ | 80.000 | 170.000 | 95.000 | 110.000 | 2.400.000 |
| ຫີນແມັດກ້ອນ | 50.000 | 135.000 | 90.000 | 120.000 | 2.000.000 |

ມູນຄ່າຊຸມຊົນປະກອບສ່ວນ ໂດຍສະເພາະການຄິດໄລ່ເອົາການປະກອບເປັນວັດຖຸ ແລ້ວຕີລາຄາເປັນເງິນ, ທລຍ ໄດ້ເຮັດການຄິດໄລ່ເປັນແຕ່ລະເມືອງ, ແຕ່ມູນຄ່າທີ່ສະແດງໃຫ້ທ່ານເຫັນຢູ່ແຕ່ລະແຂວງໃນຕາຕະລາງ ຂ້າງເທິງນັ້ນ ເປັນມູນຄ່າສະເລ່ຍຂອງທຸກໆແຂວງ

**2.6.3. ພາບລວມ ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ຈາກຮອບວຽນ I ແລະ II**

ໃນໄລຍະເວລາ 2 ປີກ່ວາຂອງການຈັດຕັ້ງປະຕິບັດກິດຈະກຳພາຍໃຕ້ ທລຍ ຢູ່ໃນແຂວງ ແລະ ເມືອງເປົ້າໝາຍ, ເຄື່ອງມື ແລະ ວິທີການຕ່າງໄດ້ຖືກຈັດຕັ້ງ, ທົດສອບ ແລະ ປັບປຸງໄປພ້ອມກັບການຈັດຕັ້ງປະຕິບັດຕົວຈິງ ແລະ ເປັນສິ່ງຈຳເປັນທີ່ພະນັກງານທຸກຄົນຕ້ອງໄດ້ສຸມທຸກກຳລັງແຮງເພື່ອໃຫ້ຜ່ານຊ່ວງເວລາທີ່ສັບສົນໄປໃຫ້ໄດ້. ການຈັດຕັ້ງປະຕິບັດແມ່ນເລັງໃສ່ເພື່ອໃຫ້ບັນລຸເປົ້າໝາຍ ແລະ ຈຸດປະສົງຂອງ ທລຍ ທີ່ຕັ້ງໄວ້ເພື່ອຊ່ວຍຜັນຂະຫຍາຍນະໂຍບາຍຂອງລັດຖະບານແຫ່ງ ສ ປ ປ ລາວ ເພື່ອຫລຸດຜ່ອນຄວາມທຸກຍາກໃຫ້ປະຊາຊົນຢູ່ຂັ້ນທ້ອງຖິ່ນ ໂດຍຜ່ານຂະບວນການນຳສະເໜີ ສິ່ງທີ່ເປັນບັນຫາຕົ້ນຕໍໃຫ້ແກ່ຊຸມຊົນຂອງເຂົາເຈົ້າ ແລ້ວຜັນຂະຫຍາຍມາເປັນການລົງທຶນໃສ່ສິ່ງທີ່ຊຸມຊົນ ຍັ້ງຢືນວ່າ ເປັນບັນຫາ, ເພື່ອພັດທະນາພື້ນຖານໂຄງລ່າງ, ລົງທຶນໃສ່ການອະນຸລັກ ແລະ ການສ້ອມແປງພື້ນຖານເສດຖະກິດ-ສັງຄົມຢູ່ໃນຂັ້ນທ້ອງຖິ່ນ, ນອກນັ້ນຍັງລວມທັງກິດຈະກຳທີ່ສົ່ງຜົນປະໂຫຍດໃຫ້ຊຸມຊົນອື່ນໆອີກເຊັ່ນ: ການຝຶກອົບຮົມ ແລະ ການສະໜັບສະໜູນດ້ານອື່ນໆ, ນອກນັ້ນ, ທລຍ ຍັງໄດ້ພົບພໍ້ສິ່ງທ້າທາຍຫລາຍໆດ້ານຢູ່ໃນແຕ່ລະເມືອງ ເຊັ່ນ: ຄວາມແຕກຕ່າງທາງດ້ານພື້ນຖານວັດຖະນະທຳ, ປະເພນີ, ພາສາ, ພູມສັນຖານຂອງທ້ອງຖິ່ນ (ສະຖານທີ່ຕັ້ງຂອງບາງເຂດ, ບາງບ້ານ), ເພາະວ່າບາງເຂດ, ບາງບ້ານ ພະນັກງານ ທລຍ ກໍ່ບໍ່ສາມາເຂົ້າເຖິງໄດ້ໂດຍທາງລົດ, ແລະ ໃນຫລາຍເຂດ ແລະ ຫລາຍບ້ານການເຂົ້າເຖິງມີພຽງວິທີດຽວຄືການຍ່າງ, ບາງບ່ອນໃຊ້ເວລາ 2-3 ຊົ່ວໂມງ, ແຕ່ບາງບ່ອນໃຊ້ເວລາຍ່າງປະມານ 3-4 ມື້, ໂດຍສະເພາະແມ່ນເມືອງໃໝ່ທີ່ ທລຍ ໄດ້ຂະຫຍາຍໜ້າວຽກອອກໄປຕື່ມ. **ຕົວຢ່າງ**: ໃນ 4 ເມືອງທີ່ຂະຫຍາຍອອກໃໝ່ ໃນການເລີ້ມຕົ້ນກິດຈະກຳຂອງ ທລຍ ໃນຮອບວຽນທີ 2, ໂດຍສະ ເພາະແມ່ນເມືອງຊຳໃຕ້ຈາກການລາຍງານເຫັນວ່າ ຢູ່ໃນເມືອງນີ້ບັນຫາຫຍຸ້ງຍາກທີ່ສຸດແມ່ນການເຂົ້າເຖິງບ້ານ ຕ່າງໆ, ມີພຽງແຕ່ 46 ບ້ານເທົ່ານັ້ນໃນ ເມືອງຊຳໃຕ້ທີ່ລົດສາມາດ ໄປເຖິງ ໃນຈຳ ນວນບ້ານທັງໝົດ 176 ບ້ານ, ຖ້າຄິດເປັນເປີເຊັນກໍ່ເຫັນວ່າ ກວມເອົາແຕ່ 23% ເທົ່ານັ້ນທີ່ເຂົ້າເຖິງໄດ້ສະເພາະ ລະດູແລ້ງ, ຍິ່ງໄປກ່ວານັ້ນ, ທາງທີ່ມີຢູ່ໃນເຂດກັນດານນີ້ສ່ວນຫລາຍແລ້ວ ກໍ່ແມ່ນທາງທີ່ເຕັມ ໄປດ້ວຍ ຫີນພູເປັນກ້ອນໃຫຍ່ ປູໄປຕາມທາງ, ສະນັ້ນການເດີນທາງເວົ້າລວມຖ້າຫາກ ນຳໃຊ້ການຍ່າງຈະງ່າຍກ່ວາການນຳໃຊ້ລົດຈັກ ຫລື ລົດກະບະ, ຫລາຍ ບ້ານຕ້ອງໄດ້ຍ່າງ 2-3 ມື້ຈຶ່ງຈະເຂົ້າເຖິງ ແລະ ເມືອງຊຳໃຕ້ແມ່ນເມືອງທີ່ມີຂອບເຂດກ້ວາງໃຫຍ່ທີ່ສຸດກ່ວາ ທຸກເມືອງໃນຮອບວຽນທີ 2, ໂດຍມີຈຳນວນເຂດທັງໝົດ 22 ເຂດ, ແລະ ມີໄລຍະທາງທີ່ຮ່າງໄກຈາກກັນ, ດັ່ງນັ້ນຜົນກໍ່ຄືທຸກກິດຈະກຳທີ່ຕ້ອງໃຫ້ແຕ່ລະເຂດມາເຮັດ



ຮ່ວມກັນຈະເປັນການຍາກທີ່ສຸດໃນເວລາຈັດຕັ້ງປະຕິບັດຕົວຈິງບໍ່ສະເພາະແຕ່ການໄປມາຫາສູ່ເທົ່ານັ້ນທີ່ຫຍຸ້ງຍາກ, ແຕ່ການເດີນທາງເຂົ້າມາຖອນເງິນ ກໍ່ພົບ ຄວາມຫຍຸ້ງຍາກເຊັ່ນດຽວກັນ, ເພາະໃນເມືອງຫົວເມືອງ ແລະ ເມືອງຊຳໃຕ້ ບໍ່ມີສາຂາຂອງທະນາຄານສົ່ງເສີມກະສິກຳ ຕັ້ງຢູ່ໃນ ເມືອງ, ດັ່ງນັ້ນ, ການເປີດບັນຊີຂອງສອງເມືອງນີ້ຈຶ່ງມີຄວາມແຕກ ຕ່າງຈາກເມືອງກ່ອນໆທີ່ ທລຍ ໄດ້ຈັດຕັ້ງປະຕິບັດ ຜ່ານມາໃນຮອບ ວຽນທີ 1,



ແຕ່ໃນທາງປະຕິບັດໃນຮອບວຽນຜ່ານມາ, ເມືອງທີ່ບໍ່ມີສາຂາທະນາຄານສົ່ງເສີມກະສິກຳຕັ້ງຢູ່ໃນເມືອງຂອງຕົນກໍ່ສາມາດນຳໃຊ້ບໍລິການໃນເມືອງຂ້າງຄຽງກໍ່ໄດ້, ແຕ່ໃນຮອບວຽນທີ 3 ຂອງການຈັດຕັ້ງປະຕິບັດ ກິດຈະກຳ ເຫັນວ່າ: 3 ເມືອງໃໝ່ຢູ່ແຂວງສາລະວັນ ລ້ວນແລ້ວແຕ່ບໍ່ມີສາຂາ ຂອງທະນາ ຄານສົ່ງເສີມກະສິກຳຕັ້ງຢູ່, ສະນັ້ນ, ບັນດາຕົວແທນເຂດ ຈຳຕ້ອງໄດ້ຍ່າງເຂົ້າມາຕົວເມືອງ ແລະ ຂຶ້ນລົດໂດຍສານຕໍ່ຫາເທດສະບານແຂວງເພື່ອເປີດບັນຊີ, ເພື່ອຖອນເງິນ ແລະໃນກໍລະນີມາຖອນເງິນໃນເວລາກັບສູ່ເຂດ ກໍ່ເກີດຄວາມສ່ຽງເຊັ່ນດຽວກັນ, ເພາະວ່າເຂດໄດ້ມາຖອນເງິນເປັນຈຳນວນຫລວງຫລາຍທີ່ຈະຕ້ອງນຳກັບໄປຢູ່ ເຂດຮ່າງໄກສອກຫລີກ.

ດັ່ງນັ້ນ, ຜົນຂອງການຈັດຕັ້ງປະຕິບັດໃນຮອບວຽນທີ 1 ແລະ ທີ 2 ຜ່ານມາ, ຄວາມຕ້ອງ ການທີ່ ເປັນພື້ນຖານທີ່ ສຸດຂອງຊຸມຊົນໃນແຂວງສະຫວັນນະເຂດ ແລະ ຈຳປາສັກ ແມ່ນເລື່ອງນ້ຳສະອາດ, ແຕ່ໃນບົດຮຽນຜ່ານມາ ທລຍ ໄດ້ພົບພໍ້ບັນຫາໃນການຂຸດເຈາະນ້ຳສ້າງ, ນ້ຳບາດານ ເພາະສ່ວນ ຫລາຍຢູ່ໃນ ເຂດດັ່ງກ່າວ ມາແມ່ນເຕັມ ໄປດ້ວຍຫີນດານ, ຊຶ່ງເປັນການຍາກທີ່ຈະຫາຜູ້ຮັບເໝົາມາເຮັດໄດ້, ແຕ່ບາງຄັ້ງເມື່ອ ໄດ້ຜູ້ຮັບເໝົາແລ້ວເຈາະລົງໄດ້ແຕ່ຊ້ຳພັດບໍ່ໄດ້ນ້ຳອັນເນື່ອງມາຈາກອັນນີ້ງກໍ່ຍ້ອນວ່າຍັງຂາດຂໍ້ມູນກ່ຽວກັບນ້ຳໃຕ້ດິນ, ຊຶ່ງຍັງເປັນບັນ ຫາທີ່ຍັງບໍ່ກະຈ່າງແຈ້ງຕໍ່ຄຸນນະພາບຂອງນ້ຳ, ອີກອັນນື່ງເມື່ອສາມາຂຸດເຈາະ ນ້ຳບາ ດານໄດ້ແລ້ວ, ການສັ່ງປ້ຳ ທາລາ ແລະ ອາໄລ່ສຳລັບສ້ອມແປງກໍ່ຍັງພົບຄວາມຫຍຸ້ງຍາກ. ທລຍ ໄດ້ນຳ ສະເໜີຕໍ່ທະນາຄານໂລກແລ້ວ ວ່າໃນຮອບວຽນທີ 3 ແລະ ຮອບວຽນຕໍ່ໄປ ຈະຫລີກລ່ຽງການ ສະໜອງ ນ້ຳບາ ດານ, ຫລືປ້ຳມືສຳຫລັບນ້ຳສ້າງ ໃສ່ທໍ່, ແຕ່ເຖິງຢ່າງໃດກໍ່ຕາມ, ທລຍ ຈະສືບຕໍ່ໃຫ້ການຊ່ວຍ ເຫລືອ ດ້າ ນ້ຳສະ ອາດ ແລະ ຈະໄດ້ນຳສະວິທີການ ໃໝ່ ດັ່ງທີ່ໄດ້ກ່າວມາຂ້າງເທິງ.

***<u>ສິ່ງທ້າທາຍຕົ້ນຕໍທີ່ ທລຍ ໄດ້ພົບພໍ້ ໃນໄລຍະຜ່ານມາມີດັ່ງລຸ່ມນີ້:</u>***

- ການຄວບຄຸມຄຸນນະພາບຂອງການກໍ່ສ້າງ: ເປັນສິ່ງທີ່ທ້າທາຍທີ່ສຸດສຳລັບການຄວບຄຸມຄຸນນະພາບຂອງໂຄງການຍ່ອຍ ຂອງ ທລຍ ແມ່ນ:
    - ບໍ່ມີວິຊາການມາປະຈຳພາກສະໜາມພຽງພໍໃນພື້ນທີ່ຈັດຕັ້ງໂຄງການ

Some activities familiar with IGA were added to IGA+Training group such as market renovation or construction, cropping training, village revolving fund….

- ຫລາຍໂຄງການ ໄດ້ຈັດການສຳຫລວດຂື້ນໃນລະດູຝົນ, ເພາະອີງໃສ່ລະບຽບການຂອງ ທລຍ ໃນແຕ່ລະຮອບວຽນຕ້ອງສຳຫລວດ ແລະ ຈັດຕັ້ງກ່ອນລະດູຝົນ, ແຕ່ບາງຄັ້ງການສຳຫລວດກໍ່ບໍ່ສາມາດເຂົ້າເຖິງພື້ນທີ່ຕົວຈິງໄດ້ ດັ່ງນັ້ນເຮັດໃຫ້ການສຳຫລວດເປັນການຄາດຄະເນເຮັດໃຫ້ຄຸນນະພາບຂອງການກໍ່ສ້າງຕ່ຳ
- ບໍ່ມີບໍລິສັດທີ່ມີເອກະສານຖືກຕ້ອງມາຈັດຕັ້ງປະຕິບັດ ຫລື ຮັບເໝົາຢູ່ໃນເຂດຊົນນະບົດ.
- ງົບປະມານຕ່ຳໃນການຈ້າງວິຊາການຊຸມຊົນປະຈຳຢູ່ພາກສະໜາມ, ສະເລ່ຍແລ້ວປະມານ 200 ໂດລາສະຫະລັດ, ໃນຂະນະທີ່ໂຄງການອື່ນໆ ທົ່ວໄປແລ້ວລາຄາໃນການຕິດຕາມພາກສະໜາມໃນລັກສະນະນີ້ຈະແມ່ນປະມານ 500-1000 ໂດລາສະຫະລັດ ຕໍ່ເດືອນ
- ຂະບວນການຕ່າງໆໄດ້ຖືກສ້າງຂື້ນເພື່ອໃຫ້ສາມາດກວດສອບ ໃຫ້ຢູ່ໃນມາດຕະຖານຂອງ ທລຍ ທີ່ໄດ້ຕັ້ງໄວ້, ຕົວຢ່າງ: ງົບປະມານທີ່ຍັງເຫລືອການການຈັດຕັ້ງໂຄງການ (ໃຊ້ບໍ່ໝົດ ຫລື ໄດ້ມາຈາກການຕໍ່ລອງ) ສາມາດນຳໃຊ້ເຂົ້າໃນການປັບປຸງຄຸນນະພາບ, ຂະໜາດ, ຂອງໂຄງການນັ້ນໆ, ສ່ວນເງິນທີ່ຍັງເຫລືອ ຈະຖືວ່າເປັນເງິນລ່ວງໜ້າໃນຮອບວຽນຕໍ່ໄປ.
- ພະນັກງານ ວິຊາການຂອງ ທລຍ ຍັງຂາດຄວາມຮູ້ຄວາມສາມາດໃນການກໍ່ສ້າງພື້ນຖານໂຄງລ່າງໃນເຂດຊົນນະບົດ ແລະ ຍັງຂາດຄວາມອາດສາມາດໃນການຄຸ້ມຄອງບໍລິຫານ
- ຫລາຍໂຄງການແມ່ນຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງເຮັດໃຫ້ຄຸນນະພາບຂອງການກໍ່ສ້າງຕ່ຳ

• ເພື່ອໃຫ້ໃຫ້ການມີສ່ວນຮ່ວມມີຄວາມໝາຍຄວາມສຳຄັນ

ຂັ້ນຕອນ, ຂະບວນການ ແລະ ປະເພດຂອງການປະກອບສ່ວນຂອງຊຸມຊົນ, ຜູ້ທີ່ປະກອບສ່ວນຢູ່ໃນຊຸມຊົນ (ເປັນເງິນ ຫລື ເປັນວັດຖຸ, ແຮງງານ) ແຕ່ວ່າບາງຄັ້ງສິ່ງທີ່ນຳມາປະກອບສ່ວນ ນັ້ນຄຸນນະພາບກໍ່ຍັງຕ່ຳ, ແຮງງານທີ່ມາປະກອບກໍ່ຍັງບໍ່ທັນມີຄຸນນະພາບ, ຍັງບໍ່ມີປະສົບການທີ່ຈະເອົາມາຊ່ວຍໃນການຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນ, ນັ້ນແມ່ນບັນຫາຂັດແຍ່ງທີ່ເກີດຂື້ນໃນເບື້ອງວິຊາການຕໍ່ ການຈັດຕັ້ງກິດ ຈະກຳໃຫ້ຊຸມຊົນ.

• ສິ່ງທີ່ທ້າທາຍຂອງການຕິດຕາມດ້ານວິຊການ:
  - ຈຳນວນຈຳກັດຂອງພະນັກງານວິຊາການ ຂອງ ທລຍ ຢູ່ໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ
  - ທີມງານຈັດຕັ້ງປະຕິບັດຂັ້ນເຂດຍັງຕ້ອງການຝຶກອົບຮົມຕື່ມອີກ ໄປຄຽງຄູ່ກັນການປະຕິບັດຕົວຈິງ
  - ໂຄງການຍ່ອຍທີ່ຈັດຕັ້ງປະຕິບັດໂດຍຊຸມຊົນເອງ, ທລຍ ບໍ່ສາມາດເຂົ້າໄປຊີ້ນຳໄດ້ທັງຂັ້ນຕອນ ແລະເປັນປະຈຳຢູ່ພາກສະໜາມ ດັ່ງນັ້ນ, ຈິ່ງເຮັດໃຫ້ຄຸນນະພາບຂອງການກໍ່ສ້າງຕ່ຳ ອັນເນື່ອງມາຈາກຄວາມຮູ້ຄວາມສາມາດ ແລະ ການຄຸ້ມຄອງບໍລິຫານຂອງຊຸມຊົນຍັງຕ່ຳ.

• ການຄຸ້ມຄອງບໍລິຫານງົບປະມານຂອງຊາວບ້ານ

ເນື່ອງຈາກການສຶກສາຂອງຕົວແທນເຂດຕ່ຳ ເຮັດໃຫ້ການບໍລິການດ້ານການເງິນບໍ່ໄດ້ດີ, ເຊັ່ນດຽວກັນກັບການຈັດຕັ້ງປະຕິບັດໂຄງການ ແລະ ການຄຸ້ມຄອງທາງດ້ານການເງິນກໍ່ຍັງເຮັດບໍ່ໄດ້ດີ ແລະກໍ່ໃຫ້ເກີດມີຄວາມສ່ຽງສູງ

- ວຽກງານ ຈັດຊື້-ຈັດຈ້າງ ຂອງຊຸມຊົນ

ທີມງານຈັດຕັ້ງປະຕິບັດ ແມ່ນເປັນຜູ້ຮັບຜິດຊອບວຽກງານ ຈັດຊື້-ຈັດຈ້າງ ແລະ ການໃຊ້ ຈ່າຍ ຕ່າງໆທີ່ກ່ຽວຂ້ອງ, ສິ່ງທີ່ທ້າທາຍໃນວຽກງານຈັດຊື້-ຈັດຈ້າງນີ້ ແມ່ນຄຸນນະພາບຂອງ ວັດຖຸ/ສິນຄ້າ ທີ່ຈັດຊື້ຕ່ຳ, ແລະ ເວລາມີນ້ອຍໃນການຄັດເລືອກລາຄາທີ່ຖືກຕ້ອງກັບ ເງື່ອນໄຂຕ່າງໆ ຂອງການຈັດຊື້, ອັນເປັນ ສາເຫດໃຫ້ອາຍຸຂອງການນຳໃຊ້ນ້ອຍລົງ ແລະ ການນຳໃຊ້ງົບປະມານເທົ່າເດີມ ຫລື ຫລາຍກ່ວາ, ເນື່ອງ ຈາກສິນຄ້າທີ່ມີຄຸນນະພາບບໍ່ມີວາງຂາຍຢູ່ໃນທ້ອງຕະຫລາດທີ່ຊຸມຊົນຕັ້ງຢູ່, ດັ່ງນັ້ນ, ການນຳເອົາໃບເສຍ ພັນທະອາກອນມາແຈ້ງຈິ່ງມີຄວາມຊັກຊ້າເຮັດໃຫ້ເກີດຫລາຍບັນຫາຕາມມາ, ບາງຮ້ານຈຳໜ່າຍສິນຄ້າຫລືບໍລິສັດຮັບເໝົາກໍ່ສ້າງຢູ່ໃນທ້ອງຖິ່ນບາງຄັ້ງບໍ່ມີໃບປະຕັງ ຫລື ໜັງສືອະນຸຍາດ ດຳເນີນທຸ ລະກິດ, ຄວາມຮູ້ຄວາມສາມາດຂອງທີມງານເຂດແມ່ນມີຈຳກັດທີ່ຈະບໍລິຫານຄຸ້ມຄອງ ແລະ ຊີ້ນຳຜູ້ຮັບ ເໝົາ ກໍ່ສ້າງຈາກພາຍນອກ, ດັ່ງນັ້ນ, ຂະບວນການ ຈັດຊື້-ຈັດຈ້າງ ຕ້ອງໄດ້ອະທິບາຍ ອີກເພື່ອໃຫ້ທີມງານ ເຂດເຂົ້າໃຈຕໍ່ຫລັກການ, ໂດຍສະເພາະແມ່ນເຂດທີ່ຢູ່ໃນເຂດຮ່າງໄກ ແລະ ສອກຫລີກ, ເພາະຢູ່ເຂດຫ່າງໄກສອກຫລີກສ່ວນຫລາຍເວລາເຮັດການປະມູນຈະມີບໍລິສັດທີ່ເຂົ້າມາຊື້ຊອງທາບທາມລາຄາພຽງແຕ່ 2 ຫລື 3 ບໍລິສັດ ເທົ່ານັ້ນ, ບາງບ່ອນມີພຽງບໍລິສັດດຽວກໍ່ມີ.

- ການບຳລຸງຮັກສາໂຄງການຍ່ອຍຢູ່ໃນແຕ່ລະທ້ອງຖິ່ນ

ການຝຶກອົບຮົມກ່ຽວກັບການບຳລຸງຮັກສາໂຄງການຍ່ອຍຂອງ ທລຍ ຕ້ອງໄດ້ຖືກຈັດຕັ້ງປະຕິບັດໂດຍອີງ ການຈັດຕັ້ງ ຂອງລັດຖະບານພາກສ່ວນທີ່ກ່ຽວຂ້ອງ (ເຊັ່ນ: ການບຳລຸງຮັກສາເສັ້ນທາງ, ການບຳລຸງຮັກສາ ປ້ານ້ຳ, ແລະ ອື່ນໆ), ແຕ່ເນື່ອງຈາກວ່າຂາດບຸກຂະລາກອນ ແລະ ມີງົບປະມານທີ່ຈຳກັດ ທີ່ຈະຕ້ອງໄດ້ ຈັດການຝຶກອົບຮົມໃນລັກສະນະນີ້.

- ການກໍ່ຕັ້ງກຸ່ມທ້ອນເງິນ, ສິນເຊື່ອ ແລະ ກິດຈະກຳສ້າງລາຍຮັບ

ເນືອງຈາກຂາດຄວາມຮູ້ຄວາມສາມາດໃນການລາຍງານດ້ານການເງິນ, ໂດຍສະເພາະແມ່ນກຸ່ມທ້ອນ ເງິນ ລາຍຊື່ຜູ້ຂໍຢືມເງິນ ແລະ ຂໍ້ມູນຕ່າງໆກ່ຽວກັບກິດຈະກຳສ້າງລາຍຮັບຂອງຕົວແທນເຂດ ແລະ ຜູ້ປະສານ ງານເຂດ ແມ່ນສິ່ງທ້າທາຍນຶ່ງທີ່ ທລຍ ໄດ້ພົບພໍ້, ຍ້ອນເຫດຜົນວ່າຕົວແທນເຂດ ແລະ ຜູ້ປະສານ ງານເຂດ ຂາດຄວາມຮູ້ ແລະ ປະສົບການດ້ານການເງິນ ແລະ ເຊັ່ນດຽວກັນກັບ ຄວາມຮູ້ຄວາມສາມາດໃນການ ຂຽນ ແລະ ອ່ານ, ແລະ ອັນນີ້ເອງເປັນຜົນສະທ້ອນຕໍ່ບົດລາຍງານດ້ານການເງິນສັກຊ້າ ໂດຍສະເພາະຢູ່ໃນ ເຂດຮ່າງໄກສອກຫລີກ.

- ຄວາມເປັນເຈົ້າການຂອງຊຸມຊົນ

ການປະກອບສ່ວນ / ການມີສ່ວນຮ່ວມ ຂອງຊາວບ້ານໃນຊຸມຊົນທີ່ໄດ້ປະກອບສ່ວນ ແມ່ນຜົນທີ່ສະແດງໃຫ້ເຫັນຄວາມເປັນເຈົ້າຂອງຂອງຊຸມຊົນ ຕໍ່ກັບໂຄງການຍ່ອຍ, ຊຶ່ງສາມາດພົບເຫັນໄດ້ຢູ່ໃນທຸກໂຄງການຍ່ອຍທີ່ຈັດຕັ້ງປະຕິບັດ, ທລຍ ເຮັດໃຫ້ຊາວບ້ານຕື່ນໂຕໃນການຈັດຕັ້ງປະຕິບັດໂຄງການຍ່ອຍ, ແລະ ເຊັ່ນດຽວກັນ ຕ້ອງແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າທີ່ຈະເຮັດໃຫ້ໂຄງການຍືນຍົງ, ຈະເຮັດໃຫ້ໂຄງການຍືນຍົງ ປະຊາຊົນຕ້ອງຕື່ນຕົວ ຈັດຕັ້ງປະຕິບັດ ແລະ ຫວງແຫນສິ່ງທີ່ເປັນຂອງເຂົາເຈົ້າ ໝາຍຄວາມວ່າຕ້ອງເຮັດໃຫ້ປະຊາຊົນຮູ້ສຶກເປັນເຈົ້າຂອງໂຄງການ ແລະ ນີ້ເອງກໍ່ເປັນສິ່ງທີ່ທ້າທາຍ ທລຍ ອີກອັນນຶ່ງ, ເພາະວ່າຈະເຮັດໃຫ້ປະຊາຊົນທົ່ວໄປ ໂດຍສະເພາະປະຊາຊົນຢູ່ໃນເຂດຮ່າງໄກສອກຫລີກເຂົ້າໃຈເປັນສິ່ງທີ່ຍາກ ແລະ ບໍ່ສາມາດເຮັດໄດ້ໃນມື້ນີ້ງຍາມດຽວ

- ຄວາມຍືນຍົງຂອງໂຄງການ

  ທລຍ ໝັ້ນໃຈວ່າເຖິງແມ່ນໂຄງການຈັດຕັ້ງປະຕິບັດສຳເລັດ ແລະ ສິ້ນສຸດອາຍຸການຂອງ ທລຍ ແລ້ວ, ແຕ່ ຊຸມຊົນຍັງຈະສາມາດດຳເນີນການບຳລຸງສ້ອງແປງໂຄງການຂອງເຂົາເຈົ້າເອງໄດ້, ເພາະໃນການຈັດຕັ້ງປະຕິບັດ ທລຍ ໄດ້ຈັດການຝຶກອົບຮົມໃຫ້ແກ່ທີມງານດູແລຮັກສາຂອງເຂດ ເພື່ອດູແລສ້ອມແປງຫລັງຈາກໂຄງການສຳເລັດ, ຄວາມຍືນຍົງທີ່ໄດ້ມາຈາກການອອກແບບທີ່ຖືກຕ້ອງຕາມມາດຕະຖານ, ການ ຕິດຕາມ ຊີ້ນຳ ຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ, ເຮັດໃຫ້ໂຄງການຍ່ອຍແຕ່ລະ ໂຄງການກະທົບໃສ່ເລື່ອງສະພາບແວດລ້ອມໃຫ້ນ້ອຍທີ່ສຸດ, ລວມທັງມີເຂດວັງສະຫງວນ ແລະ ປ່າສະຫງວນ, ເຊັ່ນດຽວກັນ, ສິ່ງທີ່ທ້າທາຍຕໍ່ກັບຄວາມຍືນຍົງຂອງໂຄງການ ກໍ່ຍັງແມ່ນ ບໍ່ມີງົບປະມານທີ່ຈະ ສືບຕໍ່ ສ້ອມແປງ ແລະ ຄວາມອາດສາມາດ ຂອງຊຸມຊົນທີ່ຈະສ້ອມແປງໂຄງການຍ່ອຍທີ່ສຳເລັດນັ້ນໆ.

## *ບົດຮຽນທີ່ຖອດຖອນໄດ້ຈາກສອງຮອບວຽນຜ່ານມາ*

ສຳລັບການຈັດຕັ້ງປະຕິບັດໃນສອງຮອບວຽນຜ່ານມາ, ທລຍ ໄດ້ພົບພໍ້ສິ່ງທີ່ທ້າທາຍຫລາຍອັນ, ແລະ ຈາກສິ່ງ ທີ່ໄດ້ພົບພໍ້ນັ້ນ ທລຍ ກໍ່ໄດ້ຖອດຖອນເປັນບົດຮຽນໄປພ້ອມໆກັນ, ດັ່ງນັ້ນ ບົດຮຽນທີ່ຖອດຖອນໄດ້ໃນຮອບ ວຽນທີ 1 ແລະ ທີ 2 ມີລາຍລະອຽດດັ່ງຕໍ່ໄປນີ້:

– *ການຫລຸດຜ່ອນຄວາມທຸກຍາກຢູ່ໃນ ສປປລາວ ແລະ ທລຍ ແມ່ນຂະບວນການຮຽນຮູ້*

  ຈຸດປະສົງຂອງ ທລຍ ແມ່ນເພື່ອສ້າງຂີດຄວາມສາມາດ ແລະ ກະຈາຍໃຫ້ອຳນາດແກ່ຊຸມຊົນເປັນຜູ້ຂຶ້ນແຜນ, ບໍລິຫານ ແລະ ຈັດຕັ້ງປະຕິບັດ ລົງທຶນໃສ່ການພັດທະນາເສດຖະກິດ ສັງຄົມຢູ່ໃນທ້ອງຖິ່ນຂອງເຂົາເຈົ້າເອງ, ເພື່ອພັດທະນາພື້ນຖານໂຄງລ່າງຢູ່ໃນຊຸມຊົນ ແລະ ປັບປຸງການເຂົ້າເຖິງການບໍລິການດ້ານຕ່າງໆເພື່ອເສີມສ້າງຄວາມເຂັ້ມແຂວງໃຫ້ສະຖາບັນປົກຄອງທ້ອງຖິ່ນ ແລະ ເພື່ອສະໜັບສະໜູນຂະບວນການມີສ່ວນຮ່ວມ ແລະ ຕັດສິນໃຈຮ່ວມກັນ, ແລະ ລວມທັງຂະບວນການໄກ່ເກ່ຍບັນຫາ ແລະ ແກ້ໄຂຂໍ້ຂັດແຍ່ງ.

  ສິ່ງເສີມຄວາມຮູ້ ແລະ ຄວາມສາມາດໃຫ້ພະນັກງານ ທີ່ຈັດຕັ້ງປະຕິບັດກິດຈະກຳຢູ່ພາຍໃຕ້ ທລຍ ຢູ່ໃນທຸກຂັ້ນ ຕັ້ງແຕ່ມື້ເລີ່ມຕົ້ນໂຄງການຈົນມາຮອດປະຈຸບັນ ໂດຍຜ່ານຂະບວນການຝຶກອົບຮົມ ສອດຄ່ອງກັບ

ການກະກຽມໂຄງການ, ການຈັດຕັ້ງປະຕິບັດໂຄງການ ໂດຍແມ່ນທັງພະນັກງານ ທລຍ ເອງ ແລະ ທັງທີມງານເຂດ ທັງເຮັດທັງຮຽນຮູ້ໄປພ້ອມໆກັນ, ໂດຍສະເພາະທີມງານເຂດມີຄວາມສາມາດໃນການບໍລິຫານ ແລະ ຄຸ້ມຄອງຊຸມຊົນຂອງເຂົາເຈົ້າເອງໄດ້

– *ທີມງານ ທລຍ ທຸກຄົນໃນທຸກຂັ້ນລ້ວນແລ້ວແຕ່ຮຽນຮູ້ຢູ່ຕະຫລອດເວລາ*

ການຝຶກອົບຮົມໂດຍ ທລຍ ແມ່ນອັນສະແດງໃຫ້ເຫັນເຖິງໂອກາດອັນສຳຄັນ, ເພາະວ່າ ຊາວບ້ານສາມາດຮຽນຮູ້ຈາກ ທລຍ ວ່າວິທີການປະສານສົມທົບ ແລະ ເຮັດວຽກຮ່ວມກັນເປັນແນວໃດ, ການ ບໍລິຫານ ແມ່ນ ແນວໃດ, ລວມໄປເຖິງວິທີການຈັດຊື້-ຈັດຈ້າງ ເຮັດສະຖາບັນການພັດທະນາພາຍ ໃນທ້ອງຖິ່ນມີຄວາມ ເຊື່ອໝັ້ນ ແລະ ຈະຜັນຂະຫຍາຍຮູບແບບວິທີການເຮັດວຽກແບບນີ້ອີກໃນຂັ້ນຕໍ່ໄປ

– ການຝຶກອົບຮົມໃຫ້ແຕ່ພະນັກງານ ແຂວງ, ເມືອງ, ທີມງານເຂດ ແລະ ຊາວບ້ານ.

ການຝຶກອົບຮົມແມ່ນໄດ້ກວມເອົາຫລາຍຫົວຂໍ້ທີ່ມີຄວາມຈຳເປັນ ແລະ ສຳຄັນ, ການຝຶກອົບ ຮົມແມ່ນ ມີ ຄວາມສຳຄັນຫລາຍ ເພາະມັນຈະຊ່ວຍໃຫ້ການຈັດຕັ້ງປະ ຕິບັດເປັນໄປຕາມ ຈຸດປະສົງ ທີ່ຕັ້ງໄວ້, ການຝຶກ ອົບຮົມສ່ວນຫລາຍແມ່ນເຮັດ ກ່ອນການເລີ່ມຕົ້ນກິດຈະກຳຢູ່ໃນທຸກຮອບວຽນ, ໃນນີ້ການຝຶກອົບຮົມຍັງໄດ້ຈັດໃນຂະນະທີ່ຈັດຕັ້ງປະຕິບັດໂຄງການອີກ, ສ່ວນການຝຶກອົບຮົມການບູລະນະໂຄງການ ແມ່ນຈັດຂື້ນຫລັງຈາກການຈັດຕັ້ງປະຕິບັດໂຄງການສຳເລັດເພື່ອໃຫ້ໂຄງການທີ່ຊຸມຊົນໄດ້ຮັບມີຄວາມຍືນຍົງ

– *ການຮຽນຮູ້ຈາກການເຮັດວຽກ (ທັງຮຽນທັງເຮັດ).*

ການມີສ່ວນຮ່ວມໃນການຕັດສິນໃຈໃນຂັ້ນທີ່ສູງ ແລະ ເປັນຮູບປະທຳອັນເຮັດໃຫ້ສາມາດວັດແທກໄດ້ສຳ ລັບການບໍລິຫານທີ່ດີຢູ່ໃນຂັ້ນຊຸມຊົນ, ການປະກອບສ່ວນໂດຍຄວາມພຶງພໍໃຈ ເພື່ອປະກອບສ່ວນໃຫ້ການ ພັດທະນາຊຸມຊົນຂອງເຂົາເຈົ້າ ອັນມັນສະແດງເຖິງຄວາມ ເປັນເຈົ້າຂອງຂອງທຸກ ໂຄງການຂອງຊຸມຊົນ.

– ການກໍ່ສ້າງພື້ນຖານໂຄງລ່າງແມ່ນສະໜັບສະໜູນໃຫ້ຊຸມຊົນຜູ້ໄດ້ຮັບຜົນປະໂຫຍດໂດຍກົງ, ໂດຍສະເພາະແມ່ນການປັບປຸງທັກສະໃນການດຳລົງຊີວິດ, ປັບປຸງກິດຈະກຳສ້າງລາຍຮັບ ເພື່ອສົ່ງເສີມໃຫ້ຊີວິດການເປັນຢູ່ພາຍໃນຊຸມຊົນໃຫ້ດີຂື້ນ ແລະ ເພື່ອຕອບສະໜອງຄວາມຕ້ອງການຢູ່ໃນຕະຫລາດໃຫ້ພຽງພໍ.

– ການສ້າງຄວາມອາດສາມາດໃຫ້ຊຸມຊົນ ໂດຍຕິດພັນກັບການຝຶກອົບຮົມ ແລະ ການຈັດຕັ້ງປະຕິບັດຕົວຈິງແມ່ນປັດໃຈພື້ນຖານຂອງຄວາມຍືນຍົງຂອງໂຄງການ

## 3. ຜົນສຳເລັດ ແລະ ສິ່ງທີ່ເປັນບັນຫາຂອງແຕ່ລະໜ່ວຍງານ

### *3.1. ໜ່ວຍງານ ບໍລິຫານ ແລະ ການເງິນ*

ກອງທຶນຫລຸດຜ່ອນຄວາມທຸກຍາກ ໂດຍໄດ້ຮັບການຊ່ວຍເຫລືອດ້ານເງິນກູ້ຢືມຈາກທະນາຄານໂລກ, ໂດຍມີບັນຊີພິເສດຂອງ ທລຍ ທີ່ໄດ້ຮັບການອະນຸມັດໃນການນຳໃຊ້ທຸກງົບປະມານ ແລະ

ສາມາດ ຖອນໄດ້ໃນວົງເງິນປະມານ 0.9 ລ້ານ ດອນລາສະຫະລັດຈາກບັນຊີພິເສດດັ່ງກ່າວ, ເມື່ອເພດານເງິນ ທີ່ຖອນທັງໝົດຮອດເພດານ 3 ລ້ານດອນລາສະຫະລັດ, ເພດານເງິນທີ່ອະນຸມັດຢູ່ໃນເບື້ອງຕົ້ນຈະເພີ້ມ ຂື້ນ ແຕ່ຕ້ອງໄດ້ຮັບການອະນຸມັດເພື່ອເພີ່ມງົບປະມານ

ຢູ່ໃນທຸກແຂວງທີ່ ທລຍ ໄດ້ຈັດຕັ້ງປະຕິບັດກິດຈະກຳຢູ່, ຜູ້ປະສານງານແຂວງ ຕ້ອງໄດ້ເປີດບັນຊີເງິນກີບຢູ່ທະນາຄານສົ່ງເສີມກະສິກຳ ໃຫ້ແຕ່ລະເຂດເພື່ອທີ່ຈະໄດ້ຄຸ້ມເງິນເຂົ້າຫາບັນຊີຂອງເຂດເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍຕາມກຳນົດການເບີກຈ່າຍແຕ່ລະງວດທີ່ໄດ້ຕົກລົງກັນໄວ້ໃນບົດສະເໜີ ໂຄງການຍ່ອຍຊຶ່ງໄດ້ຕົກລົງກັນໄວ້ລ່ວງໜ້າແລ້ວ

### 3.1.1. ພາບລວມຄວາມຄືບໜ້າຂອງການບໍລິຫານການເງິນ:

#### 1. ການຄວບຄຸມພາຍໃນ ແລະ ສິດໃນການເບີກຈ່າຍງົບປະມານ

ທລຍ ໄດ້ພັດທະນາ ນະໂຍບາຍຄຸ້ມຄອງບໍລິຫານດ້ານການເງິນ ແລະ ລະບຽບການນຳໃຊ້ຕ່າງໆ ເພື່ອສະແດງໃຫ້ເຫັນລະບົບຄວບຄຸມເຮັດວຽກໄປຕາມລະບົບຈິ່ງໄດ້ສັງລວມໄວ້ດັ່ງລຸ່ມນີ້:

- ໄດ້ແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບຢ່າງຈະແຈ້ງ
- ມີນະໂຍບາຍໃນການອະນຸມັດການນຳໃຊ້ງົບປະມານ
- ມີລະບົບຄຸ້ມຄອງດ້ານການເງິນ
- ມີການຄວບຄຸມດ້ານບັນຊີການເງິນ
- ມີການຄວບຄຸມເຄື່ອງມື/ອຸປະກອນຮັບໃຊ້ຕ່າງໆ
- ມີການຄວບຄຸມດ້ານວຽກງານຈັດຊື້-ຈັດຈ້າງ
- ມີງົບປະມານສຳລັບທີ່ປຶກສາ
- ມີການອະນຸມັດໃນການນຳໃຊ້ດ້ານການເງິນ
- ມີລະບົບເພື່ອຈຳກັດການນຳໃຊ້ເງິນສົດ ແລະ ນຳໃຊ້ລະບົບຜ່ານທະນາຄານ

#### 2. ລະບົບບັນຊີ

ລະບົບບັນຊີຢູ່ໃນໜ່ວຍງານບໍລິຫານການເງິນ: ໜ້າທີ່ຕົ້ນຕໍຂອງລະບົບບັນຊີການເງິນ ແມ່ນເພື່ອຮັບປະກັນ ໃຫ້ລະບົບການບໍລິຫານການເງິນ ແລະ ການບັນຊີຖືກຕ້ອງ, ໂດຍສະເພາະແມ່ນຕົວ ເລກ ການເງິນ ແລະ ບົດລາຍງານການເງິນຕ່າງໆ ທີ່ຕ້ອງສົ່ງໃຫ້ທາງທະນາຄານໂລກ, ໃນນີ້ຍັງລວມທັງ ທີມງານ ບໍລິຫານຂັ້ນສູນກາງເພື່ອໃຫ້ຖືກຕ້ອງທັງທາງດ້ານຂໍ້ມູນ, ໂດຍອີງໃສ່ເຄື່ອງມືຮັບໃຊ້ຕ່າງໆຂອງກອງທຶນ ແລະ ການໃຊ້ ຈ່າຍຕ່າງໆ.

ລະບົບບັນຊີໃນ ທລຍ ແມ່ນໄດ້ເຮັດການຈົດກ່າຍເປັນ 2 ເທື່ອ, ຢູ່ໃນຫ້ອງການ ທລຍ ຂັ້ນສູນກາງ, ລະບົບ ການເງິນແມ່ນນຳໃຊ້ ໂປກຣາມມາດຕະຖານ “ແອັກແພັກ” ເພື່ອປ້ອນຂໍ້ມູນເຂົ້າລະບົບຄອມພິວເຕີ້, ສ່ວນ ຢູ່ຫ້ອງການ ທລຍ ຂັ້ນແຂວງ, ແມ່ນນຳໃຊ້ການຈົດການເຂົ້າປຶ້ມ ຫລື ຄອມພິວເຕີ້ທົ່ວໄປຕາມແຕ່ລະໄລຍະຂອງການງົບໃຊ້ງົບປະມານຕົວຈິງ

**3. ການຂຶ້ນແຜນເຮັດວຽກ ແລະ ແຜນນຳໃຊ້ງົບປະມານ**

ອີງໃສ່ສັນຍາຂອງການກູ້ຢືມ ແລະ ແຜນວຽກປະຈຳປີ, ທລຍ ໄດ້ຄາດຄະເນ ແຜນການ ນຳໃຊ້ງົບປະມານ ຈາກຮ່ວງກູ້ຢືມ ແລະ ຮ່ວງປະກອບສ່ວນຈາກລັດຖະບານ ໂດຍສອດຄ່ອງກັບຄຳສັ່ງ ແນະນຳຈາກ ພາກລັດ ຖະບານ ແລະ ຕາມກຳນົດການທີ່ວາງອອກໄວ້, ການຕິດຕາມດ້ານການເງິນ ແມ່ນອີງໃສ່ແຜນງົບປະມານປະຈຳປີ ທີ່ໄດ້ຮັບການອະນຸມັດຈາກສະພາບໍລິຫານ ຂອງ ທລຍ, ກະຊວງການເງິນ ແລະ ທະນາຄານໂລກ

ນັບແຕ່ເດືອນ ກໍລະກົດ ປີ 2005, ໄດ້ມີການດັດແປງດ້ານການນຳໃຊ້ງົບປະມານຮ່ວງກູ້ຢືມຄື: ທຸກໆຮ່ວງ ຂອງການນຳໃຊ້ງົບປະມານ ແມ່ນຈະນຳໃຊ້ຮ່ວງກູ້ຢືມໄດ້ 100 ເປີເຊັນ, ແລະ ນັບແຕ່ນັ້ນ ທລຍ ໄດ້ຢຸດ ການປະກອບສ່ວນຂອງລັດຖະບານໄວ້, ໝາຍຄວາມວ່າ ລັດຖະບານ ບໍ່ຕ້ອງເອົາເງິນ ມາກອບສ່ວນໃຫ້ ທລຍ ອີກ

**4. ການຂຸ່ງນເງິນ**

ຢູ່ໃນຫ້ອງການ ທລຍ ຂັ້ນສູນກາງ ຈະເປີດບັນຊີເງິນຝາກອອກເປັນ 2 ບັນຊີ, ນຶ່ງບັນ ຊີເປັນ ເງິນຝາກຕະກູນ ດອນລາສະຫະລັດ ເພື່ອຮັບເງິນທີ່ ທະນາຄານໂລກໂອນເຂົ້າມາ ແລະ ອີກ ນຶ່ງ ບັນຊີ ເປັນບັນຊີເງິນກີບ ເພື່ອຮັບເງິນຈາກຮ່ວງລັດຖະບານສົມທົບ (ກ່ອນມີການປັບປຸ່ງນະໂຍບາຍ)

ຢູ່ໃນຂັ້ນແຂວງ ກໍ່ໄດ້ເປີດບັນຊີອອກເປັນ 2 ບັນຊີເຊັ່ນດຽວກັນເປັນເງິນກີບໝົດ, 1 ບັນຊີສຳລັຍຮັບເງິນສຳລັບການຈັດຕັ້ງປະຕິບັດພາຍໃນແຂວງ ແລະ ເງິນສຳລັບຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ໃນນີ້ເພື່ອໃຫ້ ມີຂໍ້ມູນສາມາດເອົາໄວ້ປຽບທຽບກັບບັນຊີພິເສດ ຂອງຫ້ອງການຂັ້ນສູນກາງຕາມພາຍຫລັງ ແລະ ບັບຊີທີ2 ແມ່ນເອົາໄວ້ເພື່ອຮັບເງິນຈາກຫ່ວງສົມທົບຂອງລັດຖະບານ ທີ່ໂອນຈາກບັນຊີສູນກາງ

ແຕ່ວ່າໃນການຕິດຕາມຂອງພະນັກງານບໍລິຫານການເງິນແລ້ວພັດພົບຄວາມຫຍຸ້ງຍາກ, ເພາະ ມີເງິນ ສອງ ຮ່ວງໃນບັນຊີດຽວ ຄືຮ່ວງຄ່າໃຊ້ຈ່າຍບໍລິຫານພາຍໃນແຂວງ ແລະ ຮ່ວງນຳໃຊ້ເຂົ້າ ໃນການຈັດຕັ້ງ ປະຕິບັດ ໂຄງການຍ່ອຍ, ພາຍຫລັງ ທລຍ ໄດ້ສະເໜີຫາທະນາຄານ ໂລກເພື່ອອະນຸມັດ ເປີດບັນຊີສະເພາະໃຫ້ຮ່ວງເງິນສຳລັບຈັດຕັ້ງປະຕິບັດໂຄງການຍ່ອຍໂດຍສະເພາະຢູ່ໃນຂັ້ນແຂວງ ແລະ ທະນາຄານໂລກກໍ່ໄດ້ອະນຸ ມັດແລ້ວ

**5. ການກວດສອບບັນຊີ**

ການກວດສອບບັນຊີປະຈຳປີຂອງ ທລຍ ແມ່ນໄດ້ຈັດຂຶ້ນໃນທຸກໆປີ ໂດຍບໍລິສັດກວດສອບບັນຊີຈາກ ພາຍນອກ, ໂດຍມີການກຳນົດໜ້າວຽກທີ່ໄດ້ຜ່ານການອະນຸມັດເຫັນດີຈາກທະນາຄານໂລກ

ການກວດສອບບັນຊີຢູ່ໃນປີທີນຶ່ງ ແລະ ທີ່ສອງ ແມ່ນໄດ້ຈັດຂຶ້ນໃນລະຫວ່າງວັນທີ 18 ກໍລະກົດ 2002 ຫາວັນທີ 30 ຕຸລາ 2003 ໃນຮອບວຽນທີນຶ່ງ, ແລະ ວັນທີ 1 ຕຸລາ 2003 ຫາ 31 ກັນຍາ 2004 ໃນຮອບວຽນທີ 2, ໂດຍແມ່ນບໍລິສັດ ພຣາຍ ວອລເທີ ເຮົາສ໌ ຄູເປີ້ ທັງສອງປີ

**6. ການລາຍງານ**

ທລຍ ແມ່ນໄດ້ສົ່ງບົດລາຍງານທາງດ້ານການເງິນເປັນປົກກະຕິ, ທັງບົດລາຍງານການຕິດຕາມ ງົບປະມານ ປະຈຳໄຕມາດ ແລະ ບົດລາຍງານການເງິນປະຈຳປີໃຫ້ແກ່ທະນາຄານໂລກ

ໂດຍອີງໃສ່ບົດລາຍງານທາງດ້ານການກວດສອບບັນຊີ-ການເງິນ (FMRs) ຢູ່ໃນບົດລາຍງານດັ່ງກ່າວແມ່ນມີຂໍ້ມູນຄົບຖ້ວນ ສຳລັບງົບປະມານຕ່າງໆທີ່ໄດ້ນຳໃຊ້ເຂົ້າໃນການຕິດຕາມໂຄງການ, ການຈັດຕັ້ງປະຕິບັດແມ່ນໄປຕາມແຜນການທີ່ໄດ້ວາງໄວ້ ແລະ ງົບປະມານກໍ່ຖືກໃຊ້ຈ່າຍຖືກຕ້ອງ.

***<u>ການໂອນເງິນເຂົ້າຫາບັນຊີຂອງແຂວງ ແລະ ບັນຊີຂອງເຂດ</u>***

ຂະບວນການໂອນເງິນຫາບັນຊີຂອງແຂວງ ແລະ ເຂດ ແມ່ນໄດ້ເຮັດຕາມວິທີການທີ່ໄດ້ລະບຸໄວ້ຢູ່ໃນຄູ່ມື ຈັດຕັ້ງປະຕິບັດໂຄງການ ແລະ ຄູ່ມືດ້ານການບໍລິຫານ ແລະ ການເງິນ ຢ່າງຖືກຕ້ອງ ແລະ ສອດຄ່ອງຫລັງຈາກທີ່ໄດ້ຮັບການອະນຸມັດທາງດ້ານງົບປະມານ ແລະ ຈັດແບ່ງງົບປະມານໃຫ້ແຕ່ລະແຂວງແລ້ວ, ໂດຍອີງຕາມການສະເໜີຂອງຜູ້ປະສານງານແຂວງ, ງົບປະມານຈຶ່ງໄດ້ຖືກຄ່ຽນໂອນລົງໄປໃສ່ບັນຊີຂອງ ແຂວງ ເພື່ອການນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປລວມທັງການໂອນໄປ ຫາບັນ ຊີເຂດ ແລະ ຕົວແທນບ້ານ ດັ່ງມີລາຍລະອຽດດັ່ງຕໍ່ໄປນີ້:

- ການໂອນເງິນຈາກບັນຊີສູນກາງ ຫາ ບັນຊີຂອງແຂວງ
- ພະນັກງານບໍລິຫານ-ການເງິນແຂວງ ຂຽນໃບສະເໜີເພື່ອຂໍການຄ່ຽນເງິນເຂົ້າບັນຊີ ຕິດຄັດກັບເອກະສານອ້າງອີງ, ມີຄຳເຫັນດີຈາກຜູ້ປະສານງານແຂວງ ແລະ ສົ່ງຕໍ່ໃຫ້ທີມງານບໍລິຫານຂັ້ນສູນກາງເພື່ອອະນຸມັດໃນຂັ້ນຕໍ່ໄປ
- ຫັລງຈາກຜ່ານການເຫັນດີຈາກທີມງານບໍລິຫານຂັ້ນສູນກາງ, ເອກະສານຈຶ່ງໄດ້ຖືກສົ່ງຕໍ່ຫາໜ່ວຍງານການເງິນ ເພື່ອເຮັດການອະນຸມັດການເບີກຈ່າຍໃນຂັ້ນຕໍ່ໄປ.
- ຫລັງຈາກຜ່ານການອະນຸມັດໃນທຸກຂັ້ນຕອນແລ້ວ ພະນັກງານການເງິນຈະໄດ້ກະກຽມ ເຊັກເງິນເພື່ອເອົາເຂົ້າຫາຜູ້ເອົານວຍການເງິນ ແລະ ອະນຸມັດຕື່ມອີກເປັນຂັ້ນສຸດທ້າຍ

  ຫລັງຈາກນັ້ນງົບປະມານຈະຖືກໂອນຖ່າຍຈາກບັນຊີພິເສດຂອງ ທລຍ ຢູ່ທະນາຄານກາງ ຫາ ບັນຊີ ຂອງແຂວງ (ທະນາຄານສົ່ງເສີມກະສິກຳ) ເພື່ອນຳໃຊ້ໃນການບໍລິຫານ ແລະ ງົບປະມານ ສຳລັບໂຄງການຍ່ອຍ, ສຳລັບສ່ວງຂອງໂຄງການຍ່ອຍຈະໂອນເຂົ້າບັນຊີແຂວງກ່ອນ ຫລັງຈາກນັ້ນຈຶ່ງຈະໂອນຕໍ່ຫາບັນຊີຂອງເຂດ, ບັນຊີດັ່ງກ່າວຈະເປີດເປັນບັນຊີເງິນກີບ.

- ການໂອນເງິນຈາກບັນຊີຂອງແຂວງ ຫາ ບັນຊີຂອງເຂດ ຢູ່ໃນແຕ່ລະເມືອງ ເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ.

- ການຂໍຄ່ຽນເງິນຈາກບັນຊີແຂວງ ຫາ ເຂດ ຕ້ອງມີລາຍເຊັນຂອງຕົວແທນເຂດ 4 ຄົນ (4 ລາຍເຊັນ) ພ້ອມດ້ວຍແບບຟອມຂໍເບີກຈ່າຍ 2 ໃບ ໂດຍຄັດຕິດກັບເອກະສານຕ່າງໆທີ່ກ່ຽວຂ້ອງ ຫາພະນັກງານເມືອງເພື່ອກວດກາ ແລ້ວສົ່ງຫາ ພະນັກງານບໍລິຫານການເງິນອີກໃນຂັ້ນຕໍ່ໄປ.

ເອກະສານຕ່າງດັ່ງຕໍ່ໄປນີ້ຕ້ອງໄດ້ຄັດຕິດກັບແບບຟອມຂໍເບີກຈ່າຍ (K_PRF):

1. ເອກະສານຢັ້ງຢືນການຈັດກອງປະຊຸມສະຫລຸບງວດ
2. ວັນທີຈັດກອງປະຊຸມ
3. ຈຳນວນຜູ້ເຂົ້າຮ່ວມກອງປະຊຸມ ແລະ ຈຳນວນເພດຍິງທີ່ເຂົ້າຮ່ວມກອງປະຊຸມ.
4. ບັນທຶກການປຶກສາຫາລືຢູ່ໃນກອງປະຊຸມ

- ທຸກບົດສະເໜີໂຄງການຕ້ອງປະກອບດ້ວຍເປີເຊັນຢັ້ງຢືນຄວາມຄືບໜ້າຂອງໂຄງການ ແລະ ແຜນນຳໃຊ້ງົບປະມານ, ແລະ ງົບປະມານໃນການເບີກຈ່າຍໃນງວຍດທີ 1 ກໍ່ຖືກບັນທຶກເຂົ້າແຜນການເບີກຈ່າຍ ແຕ່ໃນນີ້ຕ້ອງບໍ່ໃຫ້ເກີນ 40% ຂອງງົບປະມານຂອງໂຄງການທັງໝົດ, ໂດຍຈະຖືເອົາຕາມການເຊັນສັນຍາ ລະຫວ່າງ ທລຍ ແລະຊຸມຊົນ
- ຫລັງຈາກໄດ້ຮັບທຸກເອກະສານພ້ອມດ້ວຍລາຍເຊັນ, ແບບຟອມຂໍເບີກຈ່າຍ 3 ແບບຟອມຈະໄດ້ຈັດສົ່ງໃຫ້ ຫ້ອງການ ທລຍ ແຂວງ ເພື່ອໃຫ້ພະນັກງານ ບໍລິຫານ ແລະ ການເງິນກວດສອບ ແລະ ຢັ້ງຢືນ ແລະ ຕ້ອງໄດ້ຮັບການອະນຸມັດເຫັນດີຈາກຜູ້ປະສານງານແຂວງ, ຫລັງຈາກນັ້ນກໍ່ຈະໄດ້ໂອນເງິນເຂົ້າຫາບັນຊີເຂດ, ເຂດຈະຖືກແຈ້ງຕົວເລກການໂອນເງິນ ແລະ ສາມາດຖອນເພື່ອນຳໃຊ້ໄດ້
- ພະນັກງານ ທລຍ ແມ່ນບໍ່ມີສິດຈະຖອນເງິນອອກຈາກບັນຊີຂອງເຂດ, ແຕ່ບາງໂຄງການຊຳພັດແມ່ນ ທລຍ ສູນກາງເປັນຜູ້ຈ່າຍໃຫ້ຜູ້ຮັບເໝົາ ຫລື ບໍລິສັດໂດຍກົງ ເຊັ່ນ: ອຸປະກອນການແພດ, ປ້ຳນ້ຳ ແລະ ເຄື່ອງມືທາງດ້ານເຕັກນິກອື່ນໆ, ເພາະການໃຊ້ຈ່າຍແບບນີ້ ຕ້ອງໄດ້ຈ່າຍໂດຍກົງຈາກສູນກາງ, ແຕ່ເຖິງຢ່າງໃດກໍ່ຕາມ, ຕົວແທນເຂດ ຕ້ອງໄດ້ເຮັດໃບມອບສິດໃຫ້ ທລຍ ເພື່ອສາມາດດຳເນີນການຈັດຊື້ ແທນພວກເຂົາເຈົ້າ

### 3.1.2. ຜົນສຳເລັດ ແລະ ສິ່ງທີ່ເປັນບັນຫາ

***<u>ຜົນສຳເລັດຕົ້ນຕໍ:</u>***

1. **ຢູ່ພາຍໃນໜ່ວຍງານ ບໍລິຫານ-ການເງິນ ແມ່ນໄດ້ສ້າງລະບົບຄວບຄຸມການບໍລິຫານດ້ານການເງິນເປັນຂອງໜ່ວຍງານເອງດັ່ງມີລາຍລະອຽດດັ່ງນີ້:**

- ຕ້ອງມີເອກະສານການໃຊ້ຈ່າຍສົ່ງໃຫ້ໜ່ວຍງານບໍລິຫານ-ການເງິນ ຫັລງຈາກນັ້ນພະນັກງານການເງິນໃນໜ່ວຍງານກໍ່ຈະກວດກາ ແລະ ສົ່ງໃຫ້ຫົວໜ້າໜ່ວຍ ງານອະນຸມັດ ໃນຂັ້ນຕໍ່ໄປ. ເອກະສານທີ່ສົ່ງໃຫ້ຫອ້ງການສູນກາງ ທັງໝົດແຂວງຕ້ອງໄດ້ເຮັດສຳເນົາໄວ້ຢູ່ແຂວງທຸກສະບັບ (ເຊັ່ນ: ໃບສະເໜີລາຄາ, ໃບຮັບເງິນ, ເອກະສານອ້າງ ອີງການຈ່າຍອື່ນໆ) ເພາະໃນການກວດສອບບັນຊີປະຈຳປີ ຕ້ອງໄດ້ນຳໃຊ້ ເອກະສານເລົ່ານັ້ນມາອ້າງອີງ.
- ໜ່ວຍງານບໍລິຫານ ແລະ ການເງິນໄດ້ຂື້ນແຜນການລົງຕິດຕາມພາກສະໜາມຢູ່ເປັນປະຈຳ (ລົງເຮັດວຽກຢູ່ ຫ້ອງການ ແຂວງ ຫລື ເມືອງ) ເພື່ອເຮັດການກວດສອບບັນຊີພາຍໃນ ເປັນປະຈຳແຕ່ລະ ໄລຍະ, ຫລືຕາມຄວາມຮຽກຮ້ອງຕ້ອງການຂອງແຕ່ລະແຂວງ.

- ການຈ່າຍທັງໝົດຈະຖືກອະນຸມັດໄດ້ ກໍ່ຕໍ່ເມື່ອຖືກຕາມລະບຽບການເບີກຈ່າຍຕ່າງໆ, ລະບຽບດັ່ງກ່າວນີ້ແມ່ນໄດ້ ກຳນົດ ແລະ ສະແດງໄວ້ຢູ່ໃນຕາຕະລາງອະນຸມັດການເບີກຈ່າຍ ຢູ່ໃນຂັ້ນສູນກາງ ແລະ ຂັ້ນແຂວງ.
- ທຸກບົດລາຍງານດ້ານການເງິນ ຕ້ອງໄດ້ຖືກກວດສອບທົບທວນຄືນ ແລະ ອະນຸມັດໂດຍຫົວໜ້າໜ່ວຍງານທີ່ກ່ຽວ ຂ້ອງ ແລະ ຜູ້ອຳນວຍການບໍລິຫານ ຕາມລຳດັບ.

ຈາກຂໍ້ມູນທີ່ກ່າວມາຂ້າງເທິງນີ້ແມ່ນໄດ້ມາຈາກບົດລາຍງານດ້ານການການສອບບັນຊີຂອງ ທລຍ, ໃນນີ້ແມ່ນ ການກອດສອບບັນຊີປະຈຳປີ ໃນຮອບວຽນທີ 1 ແລະ ຮອບວຽນທີ 2

2. ໜ່ວຍງານບໍລິຫານການເງິນ ມີບົດລາຍງານການຕິດຕາມທາງດ້ານການເງິນໃນທຸກໄຕມາດ ແລະ ໄດ້ນຳສົ່ງບົດລາຍງານດັ່ງກ່າວ ໃຫ້ພາກສ່ວນທີ່ກ່ຽວຂ້ອງຕາມເວລາທີ່ກຳນົດໄວ້ (ໂດຍປົກກະຕິແລ້ວແມ່ນບໍ່ໃຫ້ເກີນ 45 ມື້ ຫລັງຈາກໝົດທຸກໄຕມາດ)

ບົດລາຍງານການກວດສອບບັນຊີ ໃນຮອບວຽນທີ 1 ແລະ ຮອບວຽນທີ 2, ແມ່ນໄດ້ນຳສົ່ງ ໃຫ້ທະນາຄານໂລກໂດຍປົກກະຕິແລ້ວຜ່ານມາແມ່ນໃນວັນທີ 31 ມີນາ ຂອງທຸກປີ, ໂດຍອີງໃສ່ເອ ກະສານປະເມີນການຈັດຕັ້ງປະ ຕິບັດໂຄງການ

3. ລະບຽບການຈ່າຍຂອງຊຸມຊົນ ແມ່ນໄດ້ຈັດຕັ້ງປະຕິບັດຕາມຄູ່ມືຈັດຕັ້ງປະຕິບັດຂອງ ທລຍ ທຸກຂັ້ນຕອນ ແລະ ຍັງບໍ່ທັນມີບັນຫາຫຍຸ້ງຍາກຫຍັງເກີດຂຶ້ນຮອດປະຈຸບັນ.

ໄດ້ມີການສ້າງລະບຽບການໃນການບໍລິຫານການເງິນຢູ່ໃນຂັ້ນເຂດ ເຊັ່ນ: ລະບຽບການໃນການຖອນເງິນຂອງ ເຂດ, ການໃຊ້ຈ່າຍເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳ, ລະບຽບການໃນການນຳໃຊ້ງົບປະມານບໍລິຫານ ຂອງທີມງານ ຈັດຕັ້ງປະຕິບັດຂັ້ນເຂດ ແລະ ມີລະບົບຕິດຕາມ ແລະ ເກັບກຳທຸກການໃຊ້ຈ່າຍພະນັກງານບໍລິຫານການເງິນຂັ້ນແຂວງສາມາດຄຸ້ມຄອງບໍລິຫານດ້ານການນຳ ໃຊ້ງົບປະມານເຂົ້າໃສ່ໂຄງ ການ ຍ່ອຍໄດ້ດີ, ທຸກການນຳໃຊ້ງົບປະມານທີ່ເຂດໃຊ້ຈ່າຍແມ່ນໄດ້ເອົາເຂົ້າບົດລາຍງານດ້ານການໃຊ້ຈ່າຍ, ເອກະສານຢັ້ງຢືນການຈ່າຍຕ່າງໆແມ່ນເກັບໄວ້ຢ່າງດີຢູ່ໃນຂັ້ນເຂດເພື່ອຮັບປະກັບການນຳໃຊ້ງົບປະມານ ແລະ ເປັນສິ່ງຢັ້ງຢືນການຈ່າຍ. ພະນັກງານບໍລິຫານ-ການເງິນ ໄດ້ກວດສອບບັນຊີ ແລະ ບັນທຶກການໃຊ້ຈ່າຍດ້ານການເງິນເປັນແຕ່ລະໄລຍະ ແລະ ເຂົ້າມາກວດສອບເມື່ອມີບັນຫາເກີດຂຶ້ນ

***ຄວາມຫຍຸ້ງຍາກຕົ້ນຕໍ***

1. ທລຍ ສືບຕໍ່ພົບກັບບັນຫາທີ່ບໍ່ສາມາດດຶງດູດ ແລະ ຮັກສາພະນັກງານໃນຕຳແໜ່ງສຳຄັນຕ່າງໆ ຫລື/ ແລະພະນັກງານທີ່ມີຄຸນພະພາບ ອັນເນື່ອງມາຈາກເພດານເງິນເດືອນທີ່ຕ່ຳ, ເຊັ່ນດຽວກັນກັບຕຳແໜ່ງການເງິນ ທີ່ຕ້ອງໄດ້ມີພະນັກງານເຂົ້າອອກເລື້ອຍ, ການຝຶກອົບຮົມໃຫ້ພະນັກງານການເງິນຕ້ອງໄດ້ເຮັດເປັນປະຈຳທຸກ ຄັ້ງທີ່ມີພະນັກງານການເງິນຜູ້ໃໝ່ເຂົ້າມາເຮັດວຽກ, ດັ່ງນັ້ນ, ວຽກງານການເງິນໃນໄລຍະດັ່ງກ່າວຈິ່ງບໍ່ຕໍ່ເນື່ອງ,

ແລະ ໃນນັ້ນຕຳແໜ່ງຫົວໜ້າໜ່ວຍງານ ຕິດຕາມ ແລະ ປະເມີນຜົນກໍ່ໄດ້ວ່າງລົງເຊັ່ນດຽວກັນ ຄືນັບແຕ່ເດືອນ ກັນຍາ ປີ 2005.

ເພື່ອຊອກຫາທາງແກ້ໄຂຕໍ່ກັບບັນຫາທີ່ເກີດຂຶ້ນຕໍ່ເນື່ອງນີ້ ທລຍ ຄາດວ່າຈະສະເໜີ ຕໍ່ກັບສະພາບໍລິຫານ ແລະ ທະນາຄານໂລກ ເພື່ອດັດແກ້ອັດຕາເງິນເດືອນຂອງພະນັກງານຄືນ ໃຫ້ແກ່ພະນັກງານ ທລຍ ຂັ້ນສູນກາງ ດັ່ງມີລາຍລະອຽດຢູ່ໃນຄູ່ມື ບໍລິຫານ ແລະ ການເງິນໜ້າທີ 8 ຫົວຂໍ້ທີ 1.7 "ເພດານເງິນ ເດືອນທີ່ກຳນົດໃວ້ ໃນປື້ມຄູ່ມື ຢ່າງນ້ອຍຕ້ອງໄດ້ຮັກສາເພດານໄປ 1 ປີ ຂອງການຈັດຕັ້ງປະຕິບັດ"

*2. ທລຍ (ເງິນກູ້ຢືມເລກທີ. 3675 –LA) ການດັດແປງໄດ້ຖືກແກ້ໄຂ ແລະມີຜົນນັບແຕ່ເດືອນກໍລະກົດ 2005.* ກອງທຶນ ທລຍ ໂດຍພື້ນຖານການເຫັນດີລະຫວ່າງລັດຖະບານ ແລະ ກະຊວງການເງິນ ໄດ້ເຫັນດີໃຫ້ດັດແກ້ ງົບປະມານໃນການນຳໃຊ້ເຂົ້າໃນວຽກກໍ່ສ້າງ, ສິນຄ້າໃນຊຸມຊົນ, ການບໍລິຫານຈາກບໍລິສັດທີ່ປຶກສາຈາກພາຍ ນອກ ແລະ ການເພີ້ມງົບຈັດຕັ້ງປະຕິບັດຂື້ນຕື່ມ ໃນນີ້ແມ່ນທັງໝົດຈ່າຍຈາກຮ່ວງເງິນກູ້ຢືມ 100%, ໃນນີ້ຍັງ ເຫລືອອີກບັນຫານຶ່ງຄື: "ການເພີ່ມເພດານເງິນໃນການຈັດຕັ້ງປະຕິບັດ" ໂດຍບໍ່ໄດ້ລວມການເກັບດອກເບ້ຍ ຈາກທະນາຄານ ຫລັງຈາກມີການປ່ຽນແປງດ້ານການນຳໃຊ້ງົບປະມານ ລັດຖະບານກໍ່ບໍ່ຈຳເປັນຕ້ອງໄດ້ປະ ກອບສ່ວນຮ່ວງເງິນສົມທົບຂອງລັດຖະບານອີກ, ການບົບການຄຸ້ມເງິນຂອງ ທລຍ ຜ່ານມາຍັງມີບັນຫາເນື່ອງ ຈາກເວລາທີ່ຫ້ອງການ ທລຍ ສູນກາງໂອນເງິນຫາແຂວງ ແລະ ແຂວງໂອນເງິນຫາບັນຊີເຂດ ຍັງຕ້ອງໄດ້ເສຍ ຄ່າໂອນເງິນໃຫ້ແກ່ທະນາຄານ, ເພາະໃນການໂອນເງິນແຕ່ລະຄັ້ງທະນາຄານສົ່ງເສີມກະສິກຳ ຈະໄດ້ຄິດໄລ່ ຄ່າໂອນແຕ່ລະຄັ້ງປະມານ 0.05% ຂອງງົບປະມານທີ່ໂອນໃນແຕ່ລະຄັ້ງ.

ດັ່ງນັ້ນ, ທາງອອກທີ່ ທລຍ ຈະເຮັດໄດ້ຄື ນຳສະເໜີບັນຫາດັ່ງກ່າວຕໍ່ພາກສ່ວນ ທີ່ກ່ຽວຂ້ອງເພື່ອ ເຮັດການປັບປຸງ ສັນຍາໃນການເພີ້ມງົບປະມານ ໃນນັ້ນຄວນລວມທັງການເພີ່ມເງິນຮ່ວງຈັດຕັ້ງປະຕິບັດ ແລະ ໃຫ້ມີຄ່າເສຍ ພັນທະໃຫ້ກັບທະນາຄານພ້ອມ

**3**. ໃນການຈັດຕັ້ງປະຕິບັດໃນຮອບວຽນທີ 3, ແຂວງສາລະວັນເຊິ່ງເປັນແຂວງໃໝ່, ແຕ່ໃນ 3 ເມືອງຂອງແຂວງ ດັ່ງກ່າວຊ້ຳພັດບໍ່ມີໜ່ວຍງານທະນາຄານໃດຕັ້ງຢູ່, ທີມງານເຂດ ຕ້ອງໄດ້ຍ່າງເຂົ້າຫາຕົວເມືອງ ແລ້ວຕໍ່ລົດເມ



ໄປຫາເທດສະບານແຂວງເພື່ອເປີດບັນຊີ ແລະ ຖອນເງິນ. ດັ່ງນັ້ນ, ອີກດ້ານນຶ່ງກໍ່ແມ່ນຄວາມສ່ຽງຂອງຜູ້ປະສານງານເຂດ ທີ່ຕ້ອງໄດ້ເດີນທາງກັບເຂດຂອງຕົນ, ບາງເທື່ອເວລາມາຖອນ ເງິນເປັນຈຳນວນຫລາຍ ອາດຈະບໍ່ປອດໄພເວລາເດີນທາງ ກັບ ບ້ານ, ໂດຍສະເພາະແມ່ນ ເຂດທີ່ຢູ່ຮ່າງໄກສອກຫລີກ

ດັ່ງນັ້ນ, ສະເພາະເມືອງຢູ່ແຂວງສະລະວັນ ທລຍ ໄດ້ສະເໜີໃຫ້ ມີການເພີ່ມງົບປະມານໃນການບໍລິຫານໂຄງການຂຶ້ນເປັນ 3% - 5% (ຕາມຄວາມເໝາະສົມຂອງເຂດໄກ

ແລະ ໄກ້) ແທນທີ່ຈະຈຳກັດຕາຍຕົວຢູ່ທີ່ 2%, ແລະ ໃນນີ້ ແຂວງສະລະວັນຈະເປັນແຂວງທຳອິດທີ່ເປີດບັນຊີໃຫ້ເຂດຢູ່ຂັ້ນແຂວງ, ແລະ ຫລັງຈາກການຈັດຕັ້ງປະຕິບັດໄປໃນໄລຍະໃດນຶ່ງ ທລຍ ຕ້ອງໄດ້ເຮັດການປະເມີນຄືນ ວ່າລະບົບທີ່ນຳໃຊ້ຈັດຕັ້ງປະຕິບັດແມ່ນມີຜົນດີຜົນຮ້າຍຄືແນວໃດ, ລະບົບແບບວິທີການຈັດຕັ້ງໃນລັກສະນະນີ້ໄດ້ຮັບຜົນດີບໍ່.

4. ລະບົບການຕິດຕາມ ການຈັດຕັ້ງປະຕິບັດ ຂອງໂຄງການຍ່ອຍຜ່ານມາຍັງມີບັນຫາຢູ່ ເພາະຍັງຕ້ອງໄດ້ນຳໃຊ້ການຄິດໄລ່ໂດຍພະນັກງານພາຍໃນຫ້ອງການເຮັດເອງ, ໝາຍຄວາມວ່າຍັງບໍ່ທັນມີລະບົບທີ່ເຮັດແບບໂອໂຕເມຕິກເທື່ອ, ບາງຄັ້ງເນື່ອງຈາກນຳໃຊ້ການຈົດກ່າຍໂດຍມີ ຂໍ້ມູນອັນດຽວກັນ ແຕ່ຂອງ ໜ່ວຍງານຕິດຕາມ ແລະ ປະເມີນຜົນ ຊຳພັດແຕກຕ່າງກັບໜ່ວຍງານ ບໍລິຫານ ແລະ ການເງິນ, ແຕ່ເຖິງຢ່າງໃດກໍ່ຕາມ, ປະຈັນໜ່ວຍງານຕິດຕາມ ແລະ ປະເມີນຜົນ, ກໍ່ຄື ຫ້ອງການ ທລຍ ຂັ້ນສູນກາງ ໄດ້ວ່າຈ້າງບໍລິສັດທີ່ປຶກສາຈາກພາຍນອກເພື່ອມາປັບປຸງລະບົບດັ່ງກ່າວ, ປະຈຸບັນແມ່ນພວມດຳເນີນການປັບປຸງຢູ່.

5. ພະນັກງານເຂດ (ທີມງານເຂດ) ບາງຄົນບໍ່ສາມາດເຮັດບົດລາຍງານທາງດ້ານການເງິນ ແລະ ການຈັດເກັບເອກະສານ, ເນື່ອງຈາກທີມງານເຂດບາງທ່ານ ກໍ່ຍັງບໍ່ທັນມີປະສົບການ ແລະ ຄວາມຮູ້ດ້ານການເງິນກໍ່ບໍ່ມີໃນນີ້ແມ່ນລວມທັງບໍ່ມີຄວາມຮູ້ດ້ານການອ່ານ-ຂຽນ, ແຕ່ເຖິງຢ່າງໃດກໍ່ຕາມ ມັນຈະເປັນຄວາມທ້າທາຍໃຫ້ແກ່ ພະນັກງານ ທລຍ ທີ່ໄດ້ທຸ່ມເທໃຫ້ວຽກງານພັດທະນາຊຸມຊົນເປັນໄປດ້ວຍດີ, ພະນັກງານບໍລິຫານ-ການເງິນຂັ້ນແຂວງ ແລະ ພະນັກງານຂັ້ນເມືອງຂອງ ທລຍ ຕ້ອງໄດ້ເຮັດວຽກໜັກຂຶ້ນ ແລະ ຕ້ອງໄດ້ໃກ້ຊິດກັບຊຸມຊົນໃຫ້ຫລາຍທີ່ສຸດ ເພື່ອສົ່ງເສີມ ແລະ ສະໜັບສະໜູນໃຫ້ທີມງານຈັດຕັ້ງປະຕິບັດຂັ້ນເຂດ ບັນລຸຈຸດປະສົງທີ່ກຳນົດໄວ້ ເພື່ອລຶບລ້າງຄວາມທຸກຍາກ.

<u>**ບົດຮຽນທີ່ຖອດຖອນໄດ້**</u>:

1. ມີຫລາຍວິທີການທີ່ແຕກຕ່າງກັນ ເພື່ອເຮັດໃຫ້ການແບ່ງງົບປະມານບໍລິຫານ 2% ຂອງຊຸມຊົນມີຄວາມຍຸດຕິທຳ ແລະ ຖືກຕ້ອງ ເປັນລະບົບທີ່ສຸດ ບົນພື້ນຖານຄວາມເຂົ້າໃຈ ແລະ ເຫັນດີຈາກທຸກຝ່າຍ, ການແບ່ງງົບປະມານບໍລິຫານຂອງເຂດ ແມ່ນແບ່ງຕາມເງື່ອນໄຂຂອງແຕ່ລະເຂດ ເຊັ່ນ: ຄວາມສະດວກ ການໄປມາສາສູ່ໄລຍະໄກຈາກຕົວເມືອງ, ໄກຈາກທະນາຄານ, ປະເພດຂອງໂຄງການ, ເວລາໃນການຈັດຕັ້ງປະຕິບັດ, ວິທີການຈັດຊື້ຈັດຈ້າງ, ຈຳນວນບ້ານ ແລະ ໂຄງການຢູ່ພາຍໃນເຂດ, ການຄິດໄລ່ເລົ່ານີ້ແມ່ນເພື່ອໃຫ້ທຸກຝ່າຍມີຄວາມພຶງພໍໃຈຕໍ່ການແບ່ງປັນ ແລະ ໄດ້ນຳໃຊ້ວິທີການນີ້ໃນຮອບວຽນທີ 2 ຜ່ານມາ.
2. ໃນການຈັດຕັ້ງປະຕິບັດກິດຈະກຳ ພະນັກງານການເງິນ ຂອງ ທລຍ ຍັງບໍ່ທັນມີຄວາມຊຳນິຊຳນານໃນການນຳໃຊ້ໂປຼແກຼມບັນຊີ ແລະ ລວມທັງເລກລະຫັດຕ່າງໆ, ບາງຄັ້ງການກຽມບົດລາຍງານທາງດ້ານການເງິນກໍ່ຊັກຊ້າເນື່ອງຈາກຍັງບໍ່ທັນຊຳນານ, ຜ່ານການຈັດຕັ້ງປະຕິບັດມາ 3 ຮອບວຽນບັນຫາດັ່ງກ່າວກໍ່ຄ່ອຍໆໝົດໄປ, ພະນັກງານການເງິນກໍ່ຄູ້ນເຄີຍກັບລະບົບບັນຊີ ແລະ ໂປຼແກຼມແອັກແພັກ ກໍ່ເຮັດວຽກໄດ້ດີ ອັນເຮັດໃຫ້ການເຮັດບົດລາຍງານໄດ້ຕາມເວລາ ແລະ ບໍ່ມີຫຍັງຕ້ອງໄດ້ດັດແປງຕື່ມໃນລະບົບການເງິນ, ຕົວເລກງົບປະມານໄດ້ຖືກຕີເຂົ້າໃສ່ໃນລະບົບ ເພື່ອເຮັດການວິເຄາະ ຫາຕົວເລກຜິດດ່ຽງງົບປະມານ ແລະ ກໍ່ເຊັ່ນດຽວກັນ

ກັບຈຳນວນໂຄງການຍ່ອຍຢູ່ໃນທັງໝົດ 5 ແຂວງ, ລວມທັງຕົວເລກບັນທຶກການຈ່າຍ ເປັນເງິນສະກຸນໂດລາ ສະຫະລັດກໍ່ມີຢູ່ໃນລະບົບ

**<u>ວຽກທີ່ກຳລັງຈັດຕັ້ງປະຕິບັດ</u>**

1. ທລຍ ປະຈຳຈຸບັນແມ່ນພວກຢູ່ໃນຂັ້ນຕອນການຈັດຈ້າງບໍລິສັດກວດສອບບັນຊີ ຊຶ່ງແມ່ນບໍລິສັດ ພາຍ ວອດເຕີ້ ເຮົ້າ (ບົດຜູ້ເຮັດການກວດສອບ) ໃນຮອບວຽນທີ 3 ປີ 2004-2005. ແລະ ຄາດວ່າບໍລິສັດ. ດັ່ງ ກ່າວຈະໄດ້ເລີ້ມຕົ້ນໃນຕົ້ນເດືອນ ກຸມພາ ປີ 2006
2. ການນຳໃຊ້ງົບປະມານຂອງຊຸມຊົນ ແມ່ນໄດ້ວາງແຜນການໄວ້ ໃນທັງໝົດ 5 ແຂວງ ແມ່ນໃນທ້າຍປີ 2005

**<u>ບົດລາຍງານທາງດ້ານການເງິນ ແລະ ງົບປະມານ</u>**

ຂໍ້ມູນຢູ່ໃນຕາຕະລາງທີ 14 ຂ້າງລຸ່ມນີ້ໄດ້ສະແດງເຖິງການນຳໃຊ້ງົບປະມານເຂົ້າໃນການຈັດຕັ້ງປະຕິບັດ ໂຄງ ການຍ່ອຍໃນແຕ່ລະຮອບວຽນຂອງ ທລຍ ຂໍ້ມູນເດືອນ ກໍລະກົດ 2002 ຫາ 31 ກັນຍາ 2005

**ຕາຕະລາງທີ 14: ຈຳນວນງົບປະມານໃຊ້ຈ່າຍທັງໝົດ ລວມທັງງົບປະມານຂອງໂຄງການ ນັບແຕ່ກໍລະກົດ 2002 ຫາ 31 ກັນຍາ 2005**

| | | ປີທີ I | ປີທີ II | ປີທີ III | ຈຳນວນງົບປະມານທີ່ໃຊ້ |
|---|---|---|---|---|---|
| ລ/ດ | ລາຍການ | July 02-Sept 05 | Oct 03 - Sept 05 | Oct 04 - Sept 05 | July 02-Sept 05 |
| 1 | ງົບປະມານ | 0.00 | 688,754.88 | 3,067,701.36 | 3,756,456.24 |
| 2 | ງົບປະມານຂອງທີ່ປຶກສາ | 239,770.30 | 405,957.00 | 416,115.19 | 1,061,842.49 |
| 3 | ສິນຄ້າ | 78,554.18 | 7,644.06 | 103,349.48 | 189,547.72 |
| 4 | ວຽກ | 39,912.36 | 14,699.54 | 2,043.05 | 56,654.95 |
| 5 | ການເພີ່ມງົບປະມານບໍລິຫານ | 86,072.49 | 178,363.87 | 308,745.10 | 573,181.46 |
| 6 | ການນຳໃຊ້ງົບປະມານຂອງ ທລຍ | 290,870.87 | 0.00 | 0.00 | 290,870.87 |
| 7 | ຝຶກອົບຮົມ | 0.00 | 17,926.11 | 106,568.70 | 124,494.81 |
| | **ລວມ** | **735,180.20** | **1,313,345.46** | **4,004,522.88** | **6,053,048.54** |

**ຕາຕະລາງທີ 15: ສົມທຽບເປີເຊັນຂອງການໃຊ້ຈ່າຍ ແລະ ງົບປະມານ ຂອງ ເງິນກູ້ຢືມ ແລະ ການຈັດຕັ້ງປະຕິບັດ ນັບແຕ່ກໍລະກົດ 2002 ຫາ 31 ກັນຍາ 2005**

| ລ/ດ | ພາກສ່ວນຂອງໂຄງການ | ຈຳນວນໃຊ້ຈ່າຍທັງໝົດ July 02Sept 05 | ເປີເຊັນຂອງການໃຊ້ຈ່າຍ ທັງໝົດ | ເປີເຊັນຂອງ ງົບປະມານ | ຜິດດ່ຽງ |
|---|---|---|---|---|---|
| 1 | ງົບປະມານ ( ກຸ່ມ 1) | 3,756,456.24 | 62.06% | 75% | 12.94% |
| 2 | ການຈັດຕັ້ງປະຕິບັດ ( ກຸ່ມ 2,3,4,5,6,7) | 2,296,592.30 | 37.94% | 25% | 12.94% |
| | **ລວມ** | **6,053,048.54** | **100.00%** | **100%** | 0.00% |

ແຜນການການໃຊ້ເງິນຂອງໂຄງການ, ໃນການນຳໃຊ້ງົບປະມານເພື່ອຈັດຕັ້ງປະຕິບັດ ເພດານຂອງງົບປະມານຕ້ອງຕັ້ງຢູ່ 75% ຂອງງົບປະມານທັງໝົດຕ້ອງແມ່ນຮ່ວງລົງທືນ ( ກຸ່ມທີ່ 1) ແລະ 25% ແມ່ນງົບປະມານໃຊ້ບໍລິຫານທັງໝົດ, ລວມ ທັງ ຄ່ານ້ຳ, ຄ່າໄຟ, ເງິນເດືອນ, ພາຫະນະຮັບໃຊ້, ສ້ອມແປງຫ້ອງການ, ການໄປມາຕ່າງໆ (ໃນກຸ່ມທີ 2, 3, 4, 5, 6, 7).

***ຄວາມແຕກຕ່າງຂອງງົບປະມານ 12.94% ໝາຍຄວາມວ່າງົບປະມານສຳລັບການຈັດຕັ້ງປະຕິບັດແມ່ນສູງກ່ວາງົບປະມານທີ່ຄາດໄວ້ໃນເບື້ອງຕົ້ນ ໂດຍອາດເກີດມາຈາກ 3 ສາຍເຫດຕົ້ນຕໍດັ່ງລຸ່ມນີ້:***

1. ຜູ້ປະສານງານເມືອງ ແລະ ກິນໄກເງິນເດືອນແມ່ນສູງກ່ວາງົບປະມານ ເພາະວ່າ ຄວາມຕ້ອງການ ແລະ ງົບປະ ມານມີຄວາມແຕກຕ່າງກັນ
2. ທລຍ ຕ້ອງໄດ້ວ່າຈ່າງຕຳແໜ່ງດັ່ງກ່າວຕາມລາຄາໃນທ້ອງຕະຫລາດ, ເພາະວ່າ ງົບປະມານຕົວຈິງທີ່ຕັ້ງໄວ້ຍັງບໍ່ສາມາດດຶງດູດໃຈຂອງຜູ້ມາຮັບຜິດຊອບໜ້າວຽກ ແລະ ບໍ່ມີຜູ້ມາສະມັກ, ມູນຄ່າສະເລ່ຍອັດຕາວ່າຈ້າງພະນັກງານຖືກຢູ່ 194 ດອນລ່າສະຫະລັດ/ຄືນ ແລະ ສູງກ່ວາເພດານທີ່ໄດ້ກຳນົດໄວ້ຄື: 154 ດອນລ່າສະຫະລັດຕໍ່ພະນັກງານຜູ້ນຶ່ງ
3. ທຸກກອງປະຊຸມ ແລະ ການຝຶກອົບຮົມ ຢູ່ໃນຂັ້ນເຂດ ແລະ ຂັ້ນເມືອງ ສຳລັບວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ອຳນາດການປົກຄອງທ້ອງຖິ່ນ ແມ່ນນອນຢູ່ໃນງົບປະມານບໍລິຫານຂອງໂຄງການ

**ຕາຕະລາງທີ 16: ງົບປະມານທີ່ຍັງເຫລືອ**

| | | ລວມງົບປະມານ | ລວມຈ່າຍ | ງົບປະມານທີເຫລືອ |
|---|---|---|---|---|
| ລ/ດ | ລາຍການ | ຈຳນວນເງິນກູ້ຢືມ | July02Sep05 | As of Sep05 |
| 1 | | 14,776,771.24 | 3,756,456.24 | 11,020,315.00 |
| 2 | | 2,250,013.07 | 1,061,842.49 | 1,188,170.58 |
| 3 | ສິນຄ້າ | 420,929.41 | 189,547.72 | 231,381.69 |
| 4 | ວຽກ | 91,011.76 | 56,654.95 | 34,356.81 |
| 5 | ການເພີ້ມງົບປະມານບໍລິຫານ | 1,156,607.84 | 573,181.46 | 583,426.38 |
| 6 | ການຈ່າຍຂອງ ທລຍ | 247,002.14 | 290,870.87 | 43,868.73 |
| 7 | ຝຶກອົບຮົມ | 397,664.53 | 124,494.81 | 273,169.72 |
| | **ລວມ** | **19,340,000.00** | **6,053,048.54** | **13,286,951.46** |

***ຕາຕະລາງທີ 17: ຄາດຄະເນງົບປະມານທີ່ຕ້ອງຈ່າຍແຕ່ ເດືອນ 10/2005 - 9/2008***

| | | ຈຳນວນເງິນເຫລືອ | ງົບປະມານ (31%) | ງົບປະມານ (36%) | ງົບປະມານ (33%) |
|---|---|---|---|---|---|
| ລ/ດ | ລາຍການ | As of Sep05 (100%) | Oct05-Sep06 | Oct06-Sep07 | Oct07-Sep08 |
| 1 | ງົບປະມານລົງທືນ | 10,984,049.62 | 3,405,055.38 | 3,954,257.86 | 3,624,736.38 |
| 2 | ຄ່າບໍລິການ/ທີ່ປຶກສາ | 1,184,260.58 | 367,120.78 | 426,333.81 | 390,805.99 |
| 3 | ສິນຄ້າ | 230,620.27 | 71,492.28 | 83,023.30 | 76,104.69 |
| 4 | ໜ້າວຽກ | 34,243.75 | 10,615.56 | 12,327.75 | 11,300.44 |

| | | | | | |
|---|---|---|---|---|---|
| 5 | ການເພີ້ມງົບປະມານບໍລິ ຫານ | 581,506.46 | 180,267.00 | 209,342.32 | 191,897.13 |
| 6 | ການໃຊ້ຈ່າຍຂອງ ທລຍ | 0.00 | 0.00 | 0.00 | 0.00 |
| 7 | ການຝຶກອົບຮົມ | 272,270.78 | 84,403.94 | 98,017.48 | 89,849.36 |
| | **ລວມທັງໝົດ** | **13,286,951.46** | **4,118,954.95** | **4,783,302.53** | **4,384,693.98** |

ງົບປະມານທີ່ຈະນຳໃຊ້ທັງໝົດໃນ 3 ປີຂ້າງໜ້າ ຄາດຄະເນວາຈະນຳໃຊ້ມາດຕະຖານຂອງການນຳໃຊ້ ຄື: ນຳໃຊ້ຮ່ວງກູ້ ຢືມຈາກທະນາຄານໂລກ 100%

ງົບປະມານທີ່ຍັງເຫລືອ ຄາດວ່າຈະສາມາດນຳໃຊ້ໃນການຈັດຕັ້ງປະຕິບັດ ຈົນຮອດທ້າຍເດືອນ ກັນຍາ 2008, ສຳລັບງົບປະມານທີ່ຈະຈຳເອົາໄປໃຊ້ແຕ່ລະປີຄື: (31%, 36% ແລະ 33%) ແມ່ນອີງໃສແຜນງົບປະມານທີ່ ໄດ້ຂື້ນແຜນໄວ້ໃນ ເບື້ອງຕົ້ນ.

- **ແຜນການໃນຕໍ່ໜ້າທີ່ໜ່ວຍງານ ບໍລິຫານ ແລະ ການເງິນຕ້ອງໄດ້ເອົາໃຈໃສ່:**

1. ຕ້ອງໄດ້ເພີ້ມການສ້າງຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານການເງິນຂອງ ທລຍ ,ເພື່ອປັບປຸງ ຄຸນນະພາບຂອງບຸກຄົນ ແລະ ວຽກ ເພື່ອໃຫ້ວຽກງານການເງິນດຳເນີນໄປໄດ້ສະດວກ.
2. ຕ້ອງໄດ້ເອົາໃຈໃສ່ປັບປຸງການເຮັດການກວດສອບບັນຊີພາຍໃນໃຫ້ເຂັ້ມແຂງກ່ວາເກົ່າໂດຍສະເພາະແມ່ນການກວດສອບຢູ່ໃນຂັ້ນແຂວງ
3. ຕ້ອງໄດ້ປັບປຸງທົບທວນຄືນລະບຽບການໃນການຈ່າຍຕ່າງໆ ເຊັ່ນ:ອັດຕາເບ້ຍລ້ຽງສຳລັບທີມງານ ເຂດ ແລະ ຜູ້ປະສານງານເຂດ, ປັບປຸງເປີເຊັນງົບປະມານຂອງ ເງິນບໍລິຫານແຕ່ລະໂຄງການ ຈາກ 2% ຂື້ນຕື່ມອີກຕາມຄວາມເໝາະສົມຂອງແຕ່ລະທ້ອງຖິ່ນ ແລະ ອື່ນໆ.

(ໝາຍເຫດ: ແຜນການຈັດຕັ້ງປະຕິບັດຂອງໜ່ວຍງານ ບໍລິຫານ ແລະ ການເງິນ ປີ 2005-06 ແມ່ນໃຫ້ເບິ່ງຕາມເອກະສານຊ້ອນທ້າຍທີ 9)

## 3.2. ໜ່ວຍງານຕິດຕາມ ແລະ ປະເມີນຜົນ

### 3.2.1. ພາບລວມຂອງໜ່ວຍຕິດຕາມ ແລະ ປະເມີນຜົນ

ລະບົບການຕິດຕາມ ແລະ ປະເມີນຜົນຢູ່ໃນກອງທຶນຫລຸດຜ່ອນຄວາມທຸກຍາກແມ່ນໄດ້ມີການຈັດລຳດັບ ຮູບແບບຂອງການຕິດຕາມ ແລະ ເກັບກຳຂໍ້ມູນຢ່າງເປັນລະບົບເຊິ່ງປະກອບດ້ວຍ 1) ລະບົບຄຸ້ມຄອງຂໍ້ມູນ, 2) ການສຳຫລວດພື້ນຖານຂໍ້ມູນ, 3) ການປະເມີນຜູ້ໄດ້ຮັບຜົນປະໂຫຍດ, 4) ການໄປຖອດບົດຮຽນ ຢູ່ເຂດອື່ນຂອງທີມງານເຂດ, 5) ຖານເກັບກຳຂໍ້ມູນການແກ້ໄຂບັນຫາ ແລະ ຂໍ້ຄັດແຍ່ງ, 6) ການກວດສອບປະຈຳປີ ແລະ 7) ກໍລະນີສຶກສາ.

ກອງທຶນຫລຸດຜ່ອນຄວາມທຸກຍາກໄດ້ອອກແບບລະບົບຕິດຕາມ-ປະເມີນຜົນ ເພື່ອຕິດຕາມຂະບວນການເຮັດວຽກຂອງ ທລຍ ທັງນີ້ກໍ່ເພື່ອ ປັບປຸງລະບົບການເຮັດວຽກຂອງ ທລຍ ໃຫ້ດີຂື້ນໄປຄຽງຄູ່ກັບທັງຮຽນ ແລະ ປະຕິບັດຕົວຈິງໄປພ້ອມໆກັນ, ທັງມີຄວາມຮັບຜິດຊອບ ແລະ ໂປ່ງໃສເປັນຕົ້ນວ່າ:ບັນຫາ ແລະ ຂໍ້ສະ

ເໜີຕ່າງໆ ທີ່ສາມາດຊ່ວຍໃນການຈັດຕັ້ງປະຕິບັດຂອງວຽກງານ ທລຍ ແມ່ນໄດ້ອະທິບາຍ ແລະ ໃຫ້ຄວາມກະຈ່າງແຈ້ງ ໃນບົດລາຍງານຕ່າງໆ,ພ້ອມນັ້ນກໍ່ຈະເປັນການຕິດຕາມລະບົບຂອງການເຮັດວຽກພາຍໃນ ທລຍ ທີ່ໄດ້ພົວພັນໄປເຖິງການຈຸດປະສົງຂອງການພັດທະນາ ແລະ ສາມາດໃຫ້ອົງກອນທາງນອກເຂົ້າມາກວດສອບໄດ້.

ບໍ່ພຽງແຕ່ການຕິດຕາມ ແລະ ປະເມີນຜົນ ພາຍໃນໜ່ວຍງານເທົ່ານັ້ນ, ທາງດ້ານສະມາຊິກສະພາບໍລິຫານຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ກໍ່ໄດ້ມີການລົງຕິດຕາມໃນການຈັດຕັ້ງປະຕິບັດໂຄງການ ໃນຂົງເຂດຕ່າງໆພ້ອມນັ້ນກໍ່ຕ້ອງຈັດກອງປະຊຸມ ແລະ ໃຫ້ຄໍາແນະນໍາເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານຂອງກອງທຶນຫລຸດຜ່ອນຄວາມທຸກຍາກະສົບຜົນສໍາເລັດ,ມີປະສິດທິຜົນກວ່າເກົ່າ,ພ້ອມນັ້ນກໍ່ມີການລົງມາຕິດຕາມ ແລະ ໃຫ້ການແນະນໍາກ່ຽວກັບການຈັດຕັ້ງປະຕິບັດຂອງ ທລຍ ທັງເປັນການປະເມີນຜົນເບິ່ງຜົນຂອງການເຮັດວຽກຂອງ ທລຍ ເປັນແຕ່ລະໄລຍະ.

- **ລະບົບຄຸ້ມຄອງຂໍ້ມູນ**

ລະບົບການຄຸ້ມຄອງຂໍ້ມູນປຽບສະເໝືອນ ກະດູກສັນຫລັງຂອງການຕິດຕາມ ແລະ ປະເມີນຜົນໂຄງການ, ຕອບສະໜອງ ທຸກຂໍ້ມູນ ເພື່ອເປັນການຕີລາຄາຂະບວນການດໍາເນີນງານ, ການວາງແຜນ ແລະ ລວມໄປເຖິງການຈັດຕັ້ງປະຕິບັດໂຄງການ ພ້ອມນັ້ນລະບົບບໍລິຫານຖານຂໍ້ມູນ ຍັງໄດ້ຕິດຕາມເບິ່ງການຈັດຕັ້ງ ຫລື ດໍາເນີນໂຄງການວ່າໄປຕາມລະບົບທີ່ໄດ້ກໍານົດໄວ້ ຫລື ບໍ່ ເປັນແຕ່ລະຊ່ວງໄລຍະຂອງແຕ່ລະຮອບວຽນ, ເພື່ອເປັນການປັບປຸງການຈັດຕັ້ງປະຕິບັດໃນໄລຍະຕໍ່ໄປ.

- **ການສໍາຫລວດພື້ນຖານຂໍ້ມູນ**

ຜົນຂອງການສໍາຫລວດແມ່ນຈະຖືກນໍາໃຊ້ເຂົ້າໃນການປະເມີນ ຫລື ຊັ່ງຊາເບິ່ງຜົນຂອງການຈັດຕັ້ງປະຕິດໂຄງການວ່າປະສົບຜົນສໍາເລັດແນວໃດໂດຍການປຽບທຽບໃສ່ກ່ອນ ແລະ ຫລັງການຈັດຕັ້ງປະຕິບັດວ່າຊີວິດການເປັນຢູ່ຂອງປະຊາຊົນທຸກຍາກໃນບ້ານທີ່ໂຄງການໄດ້ເຂົ້າໄປຈັດຕັ້ງຢູ່ນັ້ນແມ່ນດີຂຶ້ນ ແລະ ຈະໄດ້ມີການເຮັດບົດລາຍງານລະອຽດ ກ່ຽວກັບຜົນຂອງການສໍາຫລວດ ທີ່ໄປພົວພັນເຖິງບັນດາຕົວຊີ້ວັດຕ່າງໆ ທີ່ໄດ້ກໍານົດໄວ້

ເປົ້າໝາຍຂອງການຄົ້ນຄວ້າ ຈະຕອບສະໜອງຂໍ້ມູນ ທີ່ຈໍາເປັນ ທີ່ເປັນຕົວຊີ້ວັດວ່າຜົນຂອງໂຄງການ ສາມາດຕອບສະໜອງ ຫລື ບັນລຸຕາມຈຸດປະສົງທີ່ກໍານົດໄວ້ ຄື

1. ເພື່ອສ້າງຂີດຄວາມສາມາດເພື່ອມອບສິດໃຫ້ຊາວບ້ານທຸກຍາກເປັນຜູ້ວາງແຜນ,ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທຶນຢູ່ໃນໝູ່ບ້ານດ້ວຍຕົນເອງຕາມຮູບແບບການແບ່ງຂັ້ນຄຸມຄອງ ແລະ ຄວາມໂປ່ງໃສເປັນຫລັກ.
2. ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ, ສະໜັບສະໜູນຂະບວນການຕັດສິນໃຈ ແລະ ການແກ້ໄຂຂໍ້ຂັດ ແຍ່ງ ແບບມີສ່ວນຮ່ວມຕັ້ງແຕ່ຂັ້ນບ້ານ, ເຂດ, ເມືອງ ໂດຍໃຫ້ມີສ່ວນກ່ຽວຂ້ອງຢ່າງກວ້າງຂວາງ ຂອງຊາວບ້ານ, ເພດຍິງ ແລະ ຊົນເຜົ່າສ່ວນນ້ອຍ

3. ເພື່ອຊ່ວຍເລຫືອຊາວບ້ານໃນການພັດທະນາໂຄງລ່າງຂະໜາດນ້ອຍ ແລະ ໃຫ້ເຂົາເຈົ້າໄດ້ຮັບການບໍລິການດ້ານຕ່າງໆຕາມຄວາມເໝາະສົມ.

- **ການປະເມີນຜູ້ໄດ້ຮັບຜົນປະໂຫຍດ**

ການປະເມີນຜູ້ໄດ້ຜົນປະໂຫຍດ ແມ່ນຈະຖືກຈັດຕັ້ງປະຕິບັດໃນທຸກປີ ໂດຍການວ່າຈ້າງບໍລິສັດທີ່ປຶກສາອິດສະຫລະຈາກທາງນອກມາເຮັດການປະເມີນ, ການປະເມີນດັ່ງກ່າວຈະມີຜົນປະໂຫຍດຫລາຍ ເພາະມັນສາມາດລວບລວມເອົາຜົນຂອງການລົງສຳຫລວດຈາກຊຸມຊົນ ທີ່ໄດ້ມີການຈັດຕັ້ງປະຕິບັດໂຄງການຢູ່ກ່ຽວກັບຜົນກະທົບທາງກົງ ແລະ ທາງອ້ອມຂອງໂຄງການພ້ອມນັ້ນມັນກໍ່ສະແດງໃຫ້ເຫັນເຖິງຜົນສຳເລັດຂອງການຈັດຕັ້ງປະຕິບັດແມ່ນໄດ້ເປັນໄປຕາມຈຸດປະສົງຂອງໂຄງການທີ່ກຳນົດໄດ້ກຳນົດໄວ້ແນວໃດ ແລະ ບັນດາຂໍ້ມູນຕ່າງໆທີ່ລວບລວມມານັ້ນ ຈະສາມາດນຳໃຊ້ເຂົ້າໃນການປັບປຸງ ຫລື ເປັນບົດຮຽນໃຫ້ແກ່ການຈັດຕັ້ງປະຕິບັດໂຄງການໃນຕໍ່ໜ້າ.

- ຖານເກັບກຳຂໍ້ມູນການແກ້ໄຂບັນຫາ ແລະ ຂໍ້ຄັດແຍ່ງ

ສຳລັບຖານຂໍ້ມູນດັ່ງກ່າວແມ່ນອາດຈະໄດ້ເລີ້ມຕົ້ນຈາການລວມລວບຂໍ້ມູນ ທີ່ເປັນລາຍລັກອັກສອນກ່ຽວກັບບັນຫາທີ່ພົບພໍ້ ແລະ ວິທີໃນການແກ້ໄຂຕ່າງໆຈາກຂ້າງນອກອາດຈະແມ່ນຈາກຊາວບ້ານ, ອົງການຕ່າງໆທີ່ບໍ່ຂື້ນກັບລັດທະບານ ຫລື ເປັນບົດລາຍງານຈາກພະນັກງານ ທລຍ ຫລື ປະສາງານເຂດຕ່າງໆເຊິ່ງບັນຫາທັງໝົດຈະຖືກລວບລວມ ແລະ ຈັດລຽງລຳດັບລະອຽດກ່ອນຈະຖືກປ້ອນເຂົ້າໃນລະບົບຖານຂໍ້ມູນໃນລະດັບແຂວງທັນທີທັນໃດນັ້ນເອກະສານດັ່ງກ່າວຈະຖືກນຳເອົາອອກມາພິຈາລະນາໂດຍໜ່ວຍງານທີ່ກ່ຽວຂ້ອງຕາມຄວາມເໝາະສົມຂອງບັນຫາ ໃນນັ້ນກໍຍັງມີຫລາຍໆກໍລະນີແມ່ນອາດຈະມີຄວາມສຳຄັນຫລາຍໃນການກຳນົດແນວທາງເພື່ອປ້ອງກັນບໍ່ໃຫ້ເກີດບັນຫາດັ່ງກ່າວອີກ,

ພ້ອມດຽວກັນນັ້ນການກຳນົດມາດຕະຖານເພື່ອທົດສອບກ່ຽວກັບບັນຫາຕ່າງໆຕ້ອງມີຄວາມໜັກ ແໜ້ນແລ້ວຈະມີການເຮັດລາຍງານພ້ອມທັງມີການປ້ອນຂໍ້ມູນເຂົ້າຖານຂໍ້ມູນ ຂອງໜ່ວຍງານຕິດຕາມ ແລະ ປະເມີນຜົນລວມວິທີການເພື່ອແກ້ໄຂຕ່າງໆກໍ່ຈະຖືກຮັກສາໄວ້ໃນຖານຂໍ້ມູນເຊັ່ນກັນ. ຖານຂໍ້ມູນ ຈະຖືກສ້າງຂຶ້ນໂດຍສະແດງໃຫ້ເຫັນເຖິງບັນຫາຕ່າງໆ ທີ່ຍັງບໍ່ທັນໄດ້ແກ້ໄຂທີ່ໄດ້ຈັລຽງໄວ້ຕາມລຳດັບ ຂອງແຕ່ລະເຂດໃນທຸກໆເດືອນຢ່າງອັດຕະໂນມັດ, ໃນທຸກໆເດືອນຈຳນວນຂອງບັນຫາທີ່ໄດ້ຈັດເປັນ ລຳດັບນັ້ນຈະຖືກແຈກຢາຍໄປໃຫ້ພະແນກ ຫລື ບຸກຄົນທີ່ກ່ຽວຂ້ອງ ເພື່ອທຳການປຶກສາຫາລື ແລະ ແກ້ໄຂບັນຫາເຫລົ່ານັ້ນ, ສະນັ້ນ, ຈະເຮັດໃຫ້ການຕິດຕາມໃນແຕ່ລະໄລຍະຂອງການຈັດຕັ້ງປະຕິບັດ ມີປະສິດທິ ພາບ,ຂໍ້ມູນຕ່າງໆທີ່ໄດ້ໃນແຕ່ລະເດືອນຈະຖືກສົ່ງໄປຫາສູນກາງໂດຍຜ່ານພະແນກບຸກ ຄົນ.ຊາວບ້ານຈະ ຖືກແນະນຳເປັນແຕ່ລະຂັ້ນຕອນກ່ຽວກັບບັນຫາທີ່ໄດ້ແນະນຳມາ,ລະບົບຖານຂໍ້ມູນ ທີ່ສ້າງຂຶ້ນນັ້ນແມ່ນ ຕ້ອງການໃຫ້ຕິດຕາມບັນຫາຕ່າງໆເປັນຕົ້ນແມ່ນການສໍ້ໂກງ ຫລື ຄວາມໂປ່ງໃສ ໃນການ ເບີກຖອນເງິນ, ການສົມຮູ້ຮ່ວມຄິດກັນ, ຄວາມບໍ່ຍຸດຕິທຳໃນການຈັດຕັ້ງປະຕິບັດ, ການລະເມີດລະບຽບການຕ່າງໆ ທີ່ກຳນົດໄວ້ແລ້ວ.

ຕ້ອງເລີ້ມຕົ້ນຈາກການບໍລິຫານຂັ້ນສູນກາງເຊິ່ງຖືວ່າຂໍ້ມູນທັງໝົດທີ່ມີນັ້ນຈະໃຊ້ມາຊ່ວຍໃນການອອກ ແບບກໍ່ຄືການຈັດຕັ້ງປະຕິບັດໂຄງການ, ເຊິ່ງຂໍ້ມູນເຫລົ່ານັ້ນແມ່ນມີຄວາມຈຳເປັນທີ່ຈະຕ້ອງການລາຍງານກ່ຽວ ກັບບັນຫາ ແລະ ວິທີການແກ້ໄຂຢ່າງລະອຽດ,ເຊື່ອຖືໄດ້ ແລະ ທັນກັບເວລາ ແລະ ຈະໃຫ້ທີ່ປຶກສາ ແລະ ຜູ້ປະ ສານງານເປັນຜູ້ກວດສອບເພາະການລາຍງານກ່ຽວບັນຫາມີການຜິດພາດອາດຈະມີຜົນກະທົບໄປເຖິງການໄລ່ ພະນັກງານອອກວຽກ.

ທລຍ ຈະສະໜັບສະໜູນໃຫ້ມີການຄວາມໂປ່ງໃສ ແລະ ຄວາມເປັນເຈົ້າຂອງຊຸມຊົນ,ມັນບໍ່ສາ ມາດ ຫລີກ ລ້ຽງໄດ້ວ່າການຈັດຕັ້ງປະຕິບັດໂຄງການນັ້ນຈະປາສະຈາກບັນຫາບາງຄັ້ງອາດຈະເປັນບັນຫາທຳມະດາ ຫລື ເປັນພຽງຂ່າວລື ຫລື ເປັນຂໍ່ມູນທີ່ບໍ່ມີນ້ຳໜັກພໍ ຜູ້ທີ່ຮັບຜິດຊອບກ່ຽວກັບບັນຫາເຫລົ່ານັ້ນຈະຕ້ອງ ຕິດ ຕາມໃຫ້ທັນເວລາ ເພາະມັນມີຄວາມສຳຄັນຫລາຍຕໍ່ຜູ້ທີ່ມີສ່ວນກ່ຽວຂ້ອງ ຫລື ຕ້ອງມີການແຈ້ງລ່ວງໜ້າ ກ່ອນ ທີ່ບັນຫາທັງໝົດຈະໄດ້ຮັບການແກ້ໄຂ,ສະນັ້ນ ທລຍ ຕ້ອງສ້າງຖານຂໍ້ມູນຂື້ນມາ ລວບລວມຂໍ້ມູນ ກ່ຽວ ກັບ ບັນ ຫາ ຕ່າງໆ ແລະ ວິທີແກ້ໄຂເພື່ອຮັກສາຂໍ້ມູນເຫລົ່ານັ້ນຕັ້ງແຕ່ຕົ້ນຈົນຈົບເຖິງຈົບໂຄງການ. ບັນຫາເຫລົ່ານີ້ ແມ່ນມີຄວາມສຳຄັນຫລາຍຕໍ່ການຕິດຕາມຄວາມໜ້າເຊື່ອຖືລະຫວ່າງການຈັດຕັ້ງປະຕິບັດໂຄງການ

- **ການກວດສອບປະຈຳປີ**

ການກວດສອບທາງດ້ານວິຊາການປະຈຳປີ ແມ່ນມີຈຸດປະສົງເພື່ອ ກວດສອບທາງດ້ານຄຸນນະພາບ ຂອງການລົງທຶນ ຫລື ສິ່ງກໍ່ສ້າງຕ່າງໆ ການກວດສອບນີ້ແມ່ນເປັນທີ່ຍອມຮັບເນື່ອງຈາກວ່າ ທລຍ ແມ່ນໄດ້ຈ້າງ ທີ່ປຶກສາອິດສະ ຫລະຈາກພາຍນອກມາທຳການປະເມີນ ແລະ ກວດສອບ

ການກວດສອບທາງດ້ານການເງິນກໍ່ເຊັ່ນດຽວກັນຄື:ມີການວ່າຈ້າງທີ່ປຶກສາອິດສະຫລະຈາກທາງນອກ ມາທຳການກວດສອບ ເຊິ່ງການກວດສອບໄດ້ເນັ້ນໃສ່ 2 ບັນຫາໃຫຍ່ຄື:

- ບັນຊີທາງການເງິນທີ່ໄດ້ມີກາໃຊ້ຈ່າຍແຕ່ຂັ້ນສູນກາງໄປຫາຂັ້ນແຂວງ,ການກວດສອບເຫລົ່າ ນີ້ເປັນພື້ນຖານສະເໜີຕໍ່ສະພາບໍລິຫານກອງທຶນຫລຸດຜ່ອນຄວາມທຸກຍາກ(ສຳລັບລາຍລະອຽດ ແມ່ນ ສາມາດອ່ານໃນປື້ມຄູ່ມື ປະຕິບັດທາງດ້ານການເງິນ)
- ການກວດສອບທາງດ້ານບັນຊີໃນລະດັບທີ່ຫລຸດລົງໄປຈາກຂັ້ນແຂວງ,ເຊິ່ງການກວດສອບນັ້ນ ຈະມີຊຸມເອົາຕົວແທນຂອງກຳລະນີຈາກແຂວງ ແລະ ກວດສອບເບິ່ງວ່າງົບປະມານ ຖືກໃຊ້ຈ່າຍ ແນວໃດ, ແລະ ມີການລາຍງານລະອຽດແລ້ວບໍ່ຢູ່ຂັ້ນບ້ານ ຫລື ກຸ່ມບ້ານຜູ້ກວດສອບຈະບໍ່ ທົດ ສອບ ພຽງແຕ່ດ້ານການບັນຊີ ຫລື ການລາຍງານເທົ່ານັ້ນແຕ່ຈະກວດສອບໄປເຖິງລະ ດັບຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ໃນຂັ້ນບ້ານ.ອີງຕາມລະບົບຂອງໂຄງການ ການກວດສອບຖືກລາຍງານ ແລະ ຂໍສະເໜີຕ່າງໆຈະຕ້ອງສະເໜີໃນສະພາບໍລິຫານ ແລະ ການຈັດຕັ້ງຂອງ ທລຍ ເພື່ອຮັບຊາບ.

- **ກໍລະນີສຶກສາ**

ໃນຊ່ວງໄລຍະຂອງການຈັດຕັ້ງປະຕິບັດໂຄງການ,ທີມງານຂັ້ນສູນກາງຈະໄດ້ມີການວາງແຜນເພື່ອທຳການສຶກສາເບິ່ງຜົນກະທົບຂອງການຈັດຕັ້ງໂຄງການຕໍ່ກັບຊຸມຊົນ,ບົດລາຍງານຂອງການປຽບທຽບແຕ່ກ່ອນ ແລະ ຫລັງໂຄງການວ່າຫລັງໂຄງການວ່າໄປຕາມເປົ້າໝາຍທີ່ກຳນົດໄວ້ ຫລືບໍ່ການປັບປຸງຄູ່ມື,ຝຶກອົບຮົມ,ການຕິດຕາມ ແລະ ຄວບຄຸມນະພາບຂອງໂຄງການ,ກໍລະນີສຶກສາເຫລົ່ານີ້ ບາງຄັ້ງອາດຈະໃຊ້ທີມງານພາຍໃນເພື່ອອອກແບບສອບຖາມກ່ຽວກັບສິ່ງທີ່ຈະຕ້ອງສຳຫລວດໂດຍຜ່ານຜູ້ປະສານງານ ຫລື ທີມງານໃນຂັ້ນຕ່າງໆ ຫລື ອາດຈະວ່າຈ້າງໜ່ວຍງານ ຫລື ທີ່ປຶກສາອິດສະຫລະຈາກພາຍນອກຊ່ວຍໃນການສຶກສາເພື່ອໃຫ້ມີຄວາມກະຈ່າງແຈ້ງ ແລະ ໜ້າເຊື່ອຖືໄດ້ເພາະມັນນອນຢູ່ໃນຄ່າຈ້າງທີ່ມີຂໍ້ບັງຄັບໃນກິດຈະກຳຕ່າງໆ.

- **ການໄປຖອດຖອນບົດຮຽນຢູ່ເຂດອື່ນຂອງທີມງານເຂດ**

ຂໍ້ມູນທີ່ພົວພັນເຖິງການຈັດຕັ້ງປະຕິບັດໂຄງການ ແລະ ມີຜົນກະທົບໂດຍກົງຈາກເຂດ ແລະ ການຕິດຕາມການເຂົ້າໄປທົດສອບຂັ້ນບ້ານ, ເຊິ່ງຈະຕ້ອງແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ເພື່ອສາມາດນຳເອົາປະສົບການເຫລົ່ານັ້ນເຂົ້າໄປໃນການຈັດຕັ້ງປະຕິບັດວຽກຕົວຈິງເຊິ່ງໄດ້ໃຊ້ສອງກໍລະນີຄື:

ກອງປະຊຸມເປັນທາງການ: ປະສານງານເຂດຈະເປັນຜູ້ຈັດຕຽມກອງປະຊຸມຂັ້ນເຂດຂຶ້ນເພື່ອເປັນການປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດ ແລະ ບັນຫາທີ່ພົບພໍ້ທັງໝົດ,ກ່ອນຈະມີການສະເໜີຂໍເບີກ ຖອນເງິນທີ່ສາມາດເຮັດເອກະສານ ຫລື ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດໂຄງການເພື່ອສະເໜີໃຫ້ທີ່ປະຊຸມຊາບເອກະສານກ່ຽວກັບການໃຊ້ຈ່າຍງົບປະມານຂອງແຕ່ລະໂຄງການໃນແຕ່ລະໄລຍະລວມໄປເຖິງການໃຫ້ເຫດຜົນ,ການຕັດສິນໃຈໂດຍປຽບທຽບໃສ່ກອງປະຊຸມໃນຄັ້ງທີ່ຜ່ານມາ ແລະ ອະທິບາຍແບບແຜນຂອງການຈັດຕັ້ງປະຕິບັດໃນອານາຄົດນຳບັນຫານີ້ແມ່ນເປັນບັນ ຫາສຳຄັນຫລາຍໂດຍສະເພາະແມ່ນໃນເຂດທີ່ມີລະດັບການກຶກໜັງສືສູງ.

ຜ່ານກະດານຂ່າວ:ໃນແຕ່ລະທີ່ຕັ້ງຂອງໂຄງການ,ການດານຂ່າວແມ່ນຈະຕ້ອງມີການ ກະກຽມເພື່ອລາຍງານລະອຽດກ່ຽວກັບການຈັດປະຕິບັດ ຫລື ຂໍ້ມູນຂອງໂຄງການນັ້ນໆ,ນອກຈາກນັ້ນຍັງມີກະດານຂ່າວກ່ຽວກັບການກໍ່ສ້າງຢູ່ຂັ້ນເຂດ ເຊິ່ງຈະຢູ່ໃນສະຖານທີ່ ທີ່ສາມາເຂົ້າເຖິງໄດ້ງ່າຍ (ເຊັ່ນ: ຢູ່ໂຮງຮຽນ,ຢູ່ໃນວັດ,ຕະຫລາດ) ແລະ ຂໍ້ມູນທີ່ຈະຕິດຢູ່ໃນກະດານຂ່າວນັ້ນຈະໄດ້ມີການສັບປ່ຽນ ຫລື ປັບປຸງເປັນປະຈຳຢ່າງໜ້ອຍບໍ່ໃຫ້ຫລຸດເດືອນລະຄັ້ງ,ການບຳລຸງຮັກສາກະດານຂ່າວແມ່ນປ່ອຍໃຫ້ເປັນຄວາມຮັບຜິດຊອບຂອງປະສານງານເຂດ ຫລື ຊຸມຊົນໃນທ້ອງຖິ່ນເຫລົ່ານັ້ນ.ກະດານຂ່າວແມ່ນເປັນພື້ນຖານຂອງຄວາມຕ້ອງການທີ່ຕ້ອງໄດ້ໃຊ້ເຖິງແມ່ນວ່າບາງ ທ້ອງຖິ່ນມີພຽງບໍ່ພໍເທົ່າໃດຄົນທີ່ສາມາດອ່ານໜັງສືໄດ້.ການຕິດຂໍ້ມູນຕ່າງໆໃສ່ໃນກະດານຂ່າວແມ່ນມີຄວາມສຳຄັນຫລາຍເພື່ອສະກັດກັ້ນການສໍ້ໂກງດ້ານການເງິນ,ຄວາມບໍ່ຍຸດຕິທຳ ແລະ ການສົມຮູ້ຮ່ວມຄິດຕ່າງໆ,ຜູ້ປະສານງານເຂດຈະຕ້ອງສຳຫລວດກ່ຽວກັບຂໍ້ມູນຂອງການຈັດຕັ້ງໂຄງການເປັນຕົ້ນແມ່ນຄວາມຄືບໜ້າຂອງໂຄງການ ຫລື ບັນຫາທີ່ພົບພໍ້ໃນການຈັດຕັ້ງປະຕິບັດເພື່ອເປັນຂໍ້ມູນຕິດໄວ້ໃນກະດານຂ່າວຢ່າງເປັນປະຈຳທັງນີ້ກໍ່ເພື່ອຮັບປະກັນຄວາມໂປ່ງໃສທີ່ຈະຕ້ອງກວດ

ສອບໂດຍທີມງານ ທລຍ ການເບີກຖອນເງິນຈະຕ້ອງຖືກອານຸຍາດໃນເຂດທີ່ບໍ່ມີຄວາມໂປ່ງໃສ ດ້ວຍເຫດນັ້ນທີມງານເຂດຕ້ອງຊ່ວຍໃນການຕິດຕາມ ແລະ ການລາຍງານກ່ຽວກັບບັນຫາ ຫລື ຂໍ້ບົກຜ່ອງເຫລົ່ານັ້ນໃຫ້ແຂວງ ຫລື ຖ້າຈຳເປັນຕ້ອງລາຍໃຫ້ສູນກາງຮັບຊາບ.

ໜ່ວຍງານໂຄສະນາອົບຮົມໃນສູນກາງຈະຊ່ວຍໃນການພັດທະນາທາງດ້ານອຸປະກອນ ແລະ ຂໍ້ມູນຕ່າງໆທີ່ເປັນໜ້າຍອມຮັບເພື່ອສະໜັບສະໜູນ ແລະ ສ້າງຄວາມໂປ່ງໃສໃຫ້ເປັນທີ່ໜ້າເຊື່ອຖືຂອງຊຸມຊົນບາງອຸປະກອນ ຫລື ເຄື່ອງມືອາດຈະຕ້ອງການໃຫ້ແປເປັນພາສາທ້ອງຖິ່ນໂດຍຜູ້ປະສານງານທ້ອງຖິ່ນ ກ່ອນຈະຖືກນຳໄປໃຊ້ໃຫ້ມີປະສິດທິຜົນໃນເຂດເຫລົ່ານັ້ນ.

**ຕາຕະລາງ 18: ສັງລວມການຈັດຕັ້ງປະຕິບັດຂອງໜ່ວຍງານ ຕິດຕາມ ແລະ ປະເມີນຜົນ**

| ລ/ດ | ເຄື່ອງມື | ແຫລ່ງຂໍ້ມູນ | ຜູ້ປະຕິບັດ |
|---|---|---|---|
| 1 | ການບໍລິຫານການຕິດຕາມ ແລະ ລາຍງານ | ລະບົບຄຸ້ມຄອງຂໍ້ມູນ | ທີມງານ ທລຍ |
| 2 | ຕິດຕາມການສຳຫລວດຂໍ້ມູນພື້ນຖານຂັ້ນບ້ານ | ອອກແບບສອບຖາມໃຫ້ຊຸມຊົນ, ກຳນົດ ກຸ່ມເປົ້າໝາຍ, ກຳນົດ ວິທີການສຳຫລວດ ( ຂຸ່ມຕົວຢ່າງ ການສຳນົດຂະໜາດຕົວແທນທີ່ເໝາະສົມ) | ຕົວແທນທີມງານ ທລຍ ຮ່ວມກັບສູນສະຖິຕິແຫ່ງຊາດ |
| 3 | ການປະເມີນຜູ້ໄດ້ຮັບຜົນປະໂຫຍດ ປະຈຳປີ | ຄຸນນະພາບຂອງການປະເມີນຜູ້ໄດ້ຮັບຜົນປະໂຫຍດຈາກ ທລຍ | ບໍລິສັດຫລື ທີ່ປຶກສາຈາກພາຍນອກ |
| 4 | ການຕິດຕາມມຂັ້ນບ້ານ ແລະ ຂັ້ນເຂດ | ຄຸນນະພາບ ຂອງການປະເມີນຜູ້ໄດ້ຮັບ ຜົນປະໂຫຍດ ຈາກ ທລຍ | ສາມາຊິກ ໃນຊຸມຊົນ ແລ ະ ທີມງານ ທລຍ |
| 5 | ລະບົບ ການປ້ອງກັນບັນຫາ ແລະ ວິທີແກ້ໄຂ | ຂັ້ນມູນຈາກເຂດ ແລະ ລວບລວມ ສົ່ງໃຫ້ແຂວງ | ໜ່ວຍງານຕິດຕາມ ແລະ ປະເມີນຜົນ |

### 3.2.2. ຜົນໄດ້ຮັບ ແລະ ບັນຫາທີ່ພົບພໍ້

ຕາມປົກກະຕິແລ້ວລະບົບຄຸ້ມຄອງຂໍ້ມູນ (MIS) ຖືກສ້າງຂຶ້ນໃນຕອນເລີ່ມຕົ້ນຂອງໂຄງການເຊິ່ງໃນໄລຍະຕົ້ນລະບົບດັ່ງກ່າວແມ່ນສາມາດນຳໃຊ້ໄດ້ເປັນຢ່າງດີກ່ຽວກັບການກຳນົດຮູບແບບ,ການສ້າງລະບົບຖານຂໍ້ມູນທີ່ໄດ້ກຳນົດຕົວຊີ້ວັດຕ່າງໆ,ການເກັບກຳຂໍ້ມູນຕ່າງໆ,ການພັດທະນາລະບົບຂໍ້ມູນ ການປະເມີນຄືນກ່ຽວກັບເງື່ອນໄຂການເຮັດວຽກຂອງຖານຂໍ້ມູນ. ເຖິງຢ່າງໃດກໍຕາມລະບົບດັ່ງກ່າວກໍຍັງມີຂໍ້ຜິດພາດບາງຢ່າງຕໍ່ການ

ລາຍງານທີ່ສົມບູນເພາະວ່າຂໍ້ມູນທີ່ຮັກສາໄວ້ໃນຖານຂໍ້ມູນແມ່ນຍັງມີຂໍ້ຜິດພາດຫລາຍຢ່າງ, ພ້ອມດຽວກັນນັ້ນ ລະບົບຖານຂໍ້ມູນຍັງພົບພໍ້ບັນຫາເວລາປ້ອນຂໍ້ມູນ ແລະ ພົບຄວາມຫຍຸ້ງຍາກຕໍ່ການດັດແກ້ຕ່າງໆ,ເຮັດໃຫ້ການນຳເອົາຂໍ້ມູນມາວິເຄາະຍາກ ແລະ ກໍ່ໃຫ້ເກີດຄວາມຊັກຊ້າໃນບາງຄັ້ງຄາວ,ບາງຄັ້ງກໍ່ຕ້ອງໄດ້ທຳການປ້ອນຂໍ້ມູນ ແລະ ມີການກວດສອບຂໍ້ມູນຄືນໃໝ່ເມື່ອພົບພໍ້ບັນຫາປະຈຸບັນນີ້ລະບົບດັ່ງກ່າວບໍ່ສາມາດນຳໃຊ້ໄດ້ອີກ, ຂໍ້ມູນັບມື້ນັບເພີ້ມຂື້ນ.

ຕໍ່ບັນຫາດັ່ງກ່າວຄືຂ້າງເທິງນັ້ນໜ່ວຍງານຕິດຕາມປະເມີນຜົນ ໄດ້ເຮັດຂໍ້ສະເໜີເຖິງ ທີມງານບໍລິຫານຂັ້ນສູນກາງ ແລະ ທະນາຄານໂລກ ເພື່ອຈັດຫາທີ່ປຶກສາຈາກຂ້າງນອກມາຊ່ວຍກ່ຽວກັບ ລະບົບຖານ ຂໍ້ມູນຂອງໜ່ວຍງານ ຕົກມາຮອດເດືອນກັນຍາ ປີ 2005 ບໍລິສັດທີ່ປຶກສາ APIS ໄດ້ເລີ່ມຕົ້ນອອກແບບ ແລະ ສ້າງລະບົບຖານຂໍ້ມູນໃໝ່ ໃຫ້ໜ່ວຍງານ ຕິດຕາມ ແລະ ປະເມີນຜົນ ແລະ ຄາດວ່າຈະສຳເລັດໃນທ້າຍເດືອນທັນວາ ປີ 2005 ແລະ ຈະເລີ່ມທຳການຝຶກອົບຮົມໃຫ້ທີມງານຂັ້ນແຂວງ ຜູ້ທີ່ຮັບຜິດຊອບໃນການປ້ອນຂໍ້ມູນໃນແຕ່ລະແຂວງໃນເດືອນມັງກອນ 2006.

## <u>ຜົນໄດ້ຮັບຈາກຖານຂໍ້ມູນ</u>

1. **ລະບົບຄຸ້ມຄອງ ແລະ ບໍລິຫານຂໍ້ມູນ**

ໜ່ວຍງານຕິດຕາມ ແລະ ປະເມີນຜົນໄດ້ສ້າງເຄື່ອງມືຕ່າງໆ ສຳລັບການເກັບກຳຂໍ້ມູນເປັນຕົ້ນແມ່ນຖານຂໍ້ມູນ ແລະ ລະບົບການຕິດຕາມເຊັ່ນວ່າ: ແບບຟອມຕ່າງໆ ໃຕ່ລະຂັ້ນເຊັ່ນ: ຖານຂໍ້ມູນຄວາມຕ້ອງການທີ່ເປັນບູລິມະສິດຂັ້ນບ້ານ (VNPA) ຖານຂັ້ນມູນກ່ຽວກັບການຕິດຕາມການຈັດຕັ້ງປະຕິບັດໂຄງການ (SPIM) ແລະ ອື່ນໆ ໜ່ວຍງານຕິດຕາມ ແລະ ປະເມີນຜົນແມ່ນໄດ້ມີການຈັດລຽງລະບົບ

ການຕິດຕາມຂໍ້ມູນຂອງແຕ່ລະໄລຍະຂອງການຈັດຕັ້ງປະຕິບັດຢ່າງເປັນລະບົບ

ລະບົບຄຸ້ມຄອງ ແລະ ບໍລິຫານຂໍ້ມູນ ແມ່ນບ່ອນທີ່ສຳລບເກັບຂໍ້ມູນກ່ຽວກັບແບບຟອມຕ່າງໆຈາກເຂດ ແລະ ທີມງານຂັ້ນເມືອງຜູ້ທີ່ກຳນົດຕົວຊີ້ວັດຂອງປັດໃຈ ແລະ ຜົນໄດ້ຮັບຂອງໂຄງການ**ແບບຟອມເກັບກຳຂໍ້ມູນ** ແບບຟອມຕ່າງໆ ຈະຖືກນຳໃຊ້ສຳລັບການເກັບກຳຂໍ້ມູນຈາກຫລາຍໆ ກິດຈະກຳທ ີ່ແຕກຕ່າງກັນ ໃນ ຂັ້ນຕ່າງໆ ຫລາຍແບບຟອມແມ່ນຖືກພັດທະນາຈາກໜ່ວຍງານຕິດຕາມ ແລະ ປະເມີນຜົນຂັ້ນສູນ ກາງໂດຍອີງໃສ່ຄູ່ມືການຈັດຕັ້ງປະຕິບັດຂອງ ທລຍ ລະບົບການຝຶກ ອົບຮົມ ແມ່ນຖືກຮັບຮອງ ແລະ ເຫັນດີຈາກຜູ້ທີ່ຮັບຜິດຊອບທີ່ຈະນຳໃຊ້ແບບຟອມເລົ່ານັ້ນໄປນຳໃຊ້ເຖິງແນວ ໃດກໍ່ຕາມທຸກໆຟອມຈະຕ້ອງມີການທົດສອບຈາກທີມງານຂັ້ນສູນກາງກ່ອນຈິນເປັນທີ່ຍອມຮັບແລ້ວ ແບບຟອມເຫລົ່ານັ້ນຈິ່ງຈະອະນຸຍາດໃຫ້ນຳໃຊ້ໄດ້.

**ຕາຕະລາງທີ 19: ລາຍຊື່ ແບບຟອມຕ່າງໆ ຂອງໜ່ວຍງານຕິດຕາມ ແລະ ປະເມີນຜົນ ນຳໃຊ້ສຳລັບການເກັບກຳຂໍ້ມູນ**

| ຕົວຫຍໍ້ | ຊື່ຟອມ | ຜູ້ຮັບຜິດຊອບ |
|---|---|---|
| VNPA | ແບບຟອມບຸລິມະສິດຂັ້ນບ້ານ | ຂັ້ນບ້ານ |
| K_SPPO | ແບບບູລິມະສິດຂັ້ນເຂດ | ຂັ້ນເຂດ |
| PDKV_MT | ແບບຟອມກອງປະຊຸມ | ຂັ້ນແຂວງ, ເມືອງ ແລະ ເຂດ |
| K_KRKT | ແບບຟອມເກັບກຳປະຫວັດຂອງຜູ້ປະ ສານງານເຂດ | ຂັ້ນເຂດ |
| K_PRF | ແບບຟອມສຳລັບການເບີກຈ່າຍ | ຂັ້ນເຂດ |
| SPIM | ແບບຟອມສຳລັບການຕິດຕາມ ຄວາມຄືບໜ້າໂຄງການຍ່ອຍ | ຂັ້ນເຂດ |
| CKM | ການຕິດຕາມຂັ້ນເຂດ | ຂັ້ນເຂດ |
| K_KSPPF | ແບບຟອມຂອງບົດສະເໜີໂຄງການຍ່ອຍ | ຂັ້ນເຂດ |
| K_SVR | ແບບຟອມສຳລັບລາຍງານ ການຢ້ຽມຢາມໂຄງການ | ຂັ້ນບ້ານ |

**ການເຂົ້າຖານຂໍ້ມູນ**

1. ປະເມີນ ຄວາມຕ້ອງການ ແລະ ບູລິມະສິດຂັ້ນບ້ານ**(VNPA)**
2. ຈັດລຽງບູລິມະສິດຂັ້ນເຂດ, ຂັ້ນເມືອງ ແລະ ການຕັດສິນຂັ້ນເມືອງ**ຄັ້ງສຸດທ້າຍ** (**K_SPPO**)
3. ຖານຂໍ້ມູນເກັບກຳການຝຶກອົບຮົມ ແລະ ກອງປະຊຸມ **(MTD)**
4. ຖານຂໍ້ມູນສຳຫລວດຂໍ້ມູນພື້ນຖານບ້ານ **(VPD)**
5. ຖານຂໍ້ມູນການສຳຫລວດຄົວເຮືອນ **(HHD)**
6. ການໄປຖອດຖອນບົດຮຽນຢູ່ເຂດອື່ນ **(CKMD)**
7. ການຕິດຕາມຄວາມຄືບໜ້າຂອງໂຄງການຍ່ອຍ **(SPIM)**

ໄປຄຽງຄູ່ກັບແບບຟອມຕ່າງໆ ເຮັດໃຫ້ມີຫລາຍຖານຂໍ້ມູນທີ່ແຕກຕ່າງກັນອອກໄປສຳລັບການຈັດຕັ້ງປະຕິບັດດ້ານຂໍ້ມູນ ແລະ ການລາຍງານໄດ້ຖືກພັດທະນາຢ່າງເປັນລະບົບ, ບັນດາຖານຂໍ້ມູນເຫລົ່ານີ້ແມ່ນສາມາດໃຊ້ໄດ້ທາງ ສອງພາສາ ຄຽງຄູ່ກັນຄື:ພາສາລາວ ແລະ ພາສາອັງກິດ.ໃນກໍລະນີນີ້ຖານຂໍ້ມູນໄດ້ທຳການທົດສອບ ແລະ ຜ່ານຂະບວນການປັບປຸງໃຫ້ໄດ້ມາດຕະຖານເຖິງຢ່າງໃດກໍ່ດີ, ຖານຂໍ້ມູນດັ່ງກ່າວແມ່ນຈະຖືກປັບປຸງຢ່າງເປັນປະຈຳເພື່ອຮັບປະກັນການຕິດຕາມ ແລະ ລາຍງານໃຫ້ທັນກັບເວລາທີ່ກຳນົດໄວ

**<u>ການປັບປຸງຖານຂໍ້ມູນ:</u>**

ນັບຕັ້ງແຕ່ປີ 2003 ທີ່ຜ່ານມາລະບົບຖານຂໍ້ມູນແມ່ນໄດ້ຖືກສ້າງຂຶ້ນໂດຍໜ່ວຍງານຕິດຕາມ ແລະ ປະເມີນຜົນ, ເຊິ່ງໜ່ວຍງານດັ່ງກ່າວໄດ້ອອກແບບ ແລະ ຂຽນໂປຼແກມເອງໂດຍໃຊ້ Microsoft Access ເພາະວ່າມັນງ່າຍຕໍ່ການນຳໃຊ້, ຕົກມາຮອດປີ 2005 ທາງທີມງານ ທລຍ ໄດ້ພົບເຫັນວ່າຂໍ້ມູນທີ່ໄດ້ມາຈາກຖານຂໍ້ມູນນັ້ນຍັງມີອັນຜິດພາດຫລາຍຢ່າງເຊັ່ນ: ຂໍ້ມູນບໍ່ບູນ,ບາງຂໍ້ມູນຍັງຂາດ,ບາງຕົວຊີ້ວັດຍັງຕ້ອງການໃຫ້ມີການປັບປຸງ ແລະ ວິເຄາະຕື່ມອີກ.

ຮອດເດືອນ ມິຖຸນາ 2006 ໜ່ວຍງານຕິດຕາມປະເມີນຜົນ ໄດ້ປຶກສາຫາລືກັບຜູ້ອຳນວຍການ ທລຍ ແລະ ທະນາຄານໂລກກ່ຽວກັບຄວາມຈຳເປັນທີ່ຕ້ອງປັບປຸງຖານຂໍ້ມູນຂອງລະບົບ ຕິດຕາມ ແລະ ປະເມີນຜົນ ດ້ວຍການອອກແບບ ຖານຂໍ້ມູນໃໝ່ ເພື່ອຮັບປະກັນໃຫ້ການຕິດຕາມ ການຈັດຕັ້ງປະຕິບັດໂຄງການ ຢ່າງເປັນລະບົບ ແລະ ໃຫ້ລວມເອົາຖານຂໍ້ມູນ VNPA ແລະ SPIM ນັ້ນ ເຂົ້ານຳກັນ.




ຮອດທ້າຍເດືອນ ກັນຍາ 2005 ທລຍ ໄດ້ ເຮັດສັນຍາກັບ ບໍລິສັດ APIS ເພື່ອ ປັບປຸງຖານຂໍ້ມູນຂອງ ລະບົບຕິດຕາມ ແລະ ປະເມີນຜົນ ເຊິ່ງໄດ້ມີການອອກ ແບບກ່ຽວກັບລະບົບ ຖານຂໍ້ມູນໃໝ່ທີ່ສາມາດນຳໃຊ້ໄດ້ ຫລາຍກວ່າເກົ່າເຊັ່ນວ່າ: Microsoft SQL Server and Visual Basic FoxPro

ຮອດກາງເດືອນທັນວາ 2005 ທີມງານຂອງທະນາຄານໂລກ ແມ່ນໄດ້ພົບປະ ກັບບໍລິສັດ APIS ແລະ ທີມງານດັ່ງກ່າວໄດ້ແນະນຳໃຫ້ ບໍລິສັດ APIS ອອກແບບການກຳນົດແບບການລາຍງານທີ່ມີຄວາມຫລາກຫລາຍເພື່ອທີ່ຈະເຮັດໃຫ້ຜູ້ຊົມໃຊ້ສາມາດເລືອກເອົາຂໍ້ມູນຕ່າງໆ ໃນຖານຂໍ້ມູນ, ມີຄວາມສະດວກ ແລະ ໄວຂຶ້ນຕື່ມ, ພ້ອມນັ້ນທີມງານກໍແນະນຳໃຫ້ບໍລິສັດ APIS ກຳນົດປຶ້ມ ຄູ່ມືສຳລັບການນຳໃຊ້ຖານຂໍ້ມູນໃຫ້ສຳເລັດກ່ອນການໄປຝຶກອົບຮົມໃຫ້ແຕ່ລະແຂວງ, ບໍລິສັດ APIS ແມ່ນຕົກລົງເຫັນດີທີ່ຈະພັດທະນາ ຫລື ປະຕິບັດຕາມຂໍ້ສະເໜີຂອງ ທະນາຄານໂລກ ໃຫ້ສຳເລັດໃນທ້າຍເດືອນທັນວາ 2005 ນີ້

## 2. ການສຳຫລວດພື້ນຖານຂໍ້ມູນ

ການສຳຫລວດພື້ນຖານຂໍ້ມູນຄັ້ງທຳອິດແມ່ນກວມເອົາ 150 ບ້ານໃນ 19 ເມືອງ ຂອງ 4 ແຂວງ, 3000 ຄົວເຮືອນ, ໃນນີ້ 75 ບ້ານ ແລະ 1500 ຄົວເຮືອນແມ່ນເຂດທີ່ ທລຍ ຈັດຕັ້ງປະຕິບັດກິດຈະກຳຢູ່ ແລະ ອີກ 75 ບ້ານ ແລະ 1500 ຄົວເຮືອນ ແມ່ນຢູ່ນອກເຂດທີ່ ທລຍ ຈັດຕັ້ງປະຕິບັດຢູ່

ການສຳຫລວດພື້ນຖານຂໍ້ມູນດັ່ງກ່າວ ໄດ້ຈັດຕັ້ງປະຕິບັດສຳເລັດໃນທ້າຍປີ 2003, ໂດຍການວ່າຈ້າງສູນສະຖິຕິແຫ່ງຊາດ ຊຶ່ງເປັນອົງການຈັດຕັ້ງປະຕິບັດໜຶ່ງດຽວທີ່ສາມາດຈັດຕັ້ງປະຕິບັດການສຳຫລວດໃນຮູບການນີ້ໃນປະຈຸບັນ, ໃນນີ້ການສຳຫລວດດັ່ງກ່າວຍັງມີການຈັດຕັ້ງ ທັງຈາກພາກສ່ວນຂອງ ທລຍ ແລະ ທະນາຄານໂລກໄດ້ປະກອບຄຳຄິດເຫັນໃສ່ການສຳຫລວດດັ່ງກ່າວຢ່າງເຕັມສ່ວນ

ຈາກຂໍ້ມູນທັງໝົດທີ່ເກັບມາໄດ້ນັ້ນໄດ້ມີການແບ່ງໜ້າວຽກກໍ່ຄືການປ້ອນຂໍ້ມູນຕ່າງໆ ເຂົ້າໃນຄອມພີວເຕີເພື່ອທຳການວິໃຈ ແລະ ເຮັດບົດລາຍງານລະຫວ່າງທີມງານ ທລຍ ແລະ ນັງານຂອງສູນສະຖິຕິແຫ່ງຊາດ,

ບໍ່ໃຫ້ກາຍ ເດືອນ ພຶດສະພາ ປີ 2005 ແລະ ພາກສ່ວນທີ່ ທລຍ ຮັບຜິດຊອບແມ່ນຕ້ອງສຳເລັດໃນທ້າຍປີ 2004 ບົດສະຫລຸບຂອງການສຳຫລວດສາມາດສະຫລຸບໄດ້ດັ່ງນີ້

- ກອງທຶນຫລຸດຜ່ອນຄວາມທຸກຍາກໄດ້ເລືອກສູນສະຖິຕິແຫ່ງຊາດເພື່ອຊ່ວຍໃນການສຳຫລວດຂໍ້ມູນພື້ນຖານຂັ້ນບ້ານໃນປີ 2003
- ຂໍ້ມູນທີ່ສຳຫລວດສຳລັບ ປີ 2003 ຈະຖືກໃຊ້ເປັນຮູບແບບຂອງລະບົບຕິດຕາມ ແລະ ປະເມີນຜົນເພື່ອຮັບປະກັນການປະເມີນ ຫລື ຜົນກະທົບຂອງວຽກງານ ທລຍ ຕໍ່ການຫລຸດຜ່ອນຄວາມທຸກຍາກ ແລະ ສະຫວັດດີການຕ່າງໆທີ່ພົວພັນເຖິງຍຸດທະສາດກໍ່ຄືແຜນພັດທະນາຂອງລັດຖະບານ
- ໄລຍະການສຳຫລວດ ແລະ ລວບລວມຂໍ້ມູນຈົບສຳເລັດເລີ່ມແຕ່ເດືອນພະຈິກ 2003 ຫາເດືອນ ມັງກອນ ປີ 2004.
- ລາຍຈ່າຍທັງໝົດທີ່ ທລຍ ຕ້ອງຈ່າຍໃຫ້ສູນສະຖິຕິແຫ່ງຊາດ (NSC) US 45,673 ທັງໝົດ 3000 ຄົວເຮືອນທີ່ຕ້ອງການສຳຫລວດໃນນັ້ນ 1500 ບ້ານແມ່ນບ້ານທີ່ ທລຍ ຈະຈັດຕັ້ງກິດຈະກຳຢູ່ ແລະ ອີກທີ່ເຫລືອແມ່ນບໍ່ນອກຢູ່ໃນຂົງເຂດ ທລຍ ແຕ່ໄດ້ຮັບປະໂຫຍດຈາກ ທລຍ ເຊັ່ນກັນ,ໃນ 19 ເມືອງຂອງ 4 ແຂວງມີຄື:ແຂວງຈຳປາສັກ, ແຂວງສະຫວັນນະເຂດ, ແຂວງຫົວພັນ, ແລະ ຜົ້ງສາລີ
- ສູນສະຖິຕິແຫ່ງຊາດໄດ້ນຳໃຊ້ແບບຟອມ ແລະ ເຄື່ອງມືຕ່າງໆ ທີ່ເຄີຍໃຊ້ສຳຫລວດການໃຊ້ຈ່າຍການສົມທຽບຢູ່ໃນ (LECS) ເຊິ່ງລວມມີ: ກ).ໄດ້ຮັບການບໍລິການດ້ານສຸພາບ ຂ).ໄດ້ຮັບການບໍລິການດ້ານການສຶກສາ, ຄ). ຮູ້ຈັກການນຳໃຊ້ທີ່ດິນເພື່ອທຳການຜະລິດ ແລະ ງ).ເສດຖະກິດຂອງຄົວເຮືອນ

**ຜົນໄດ້ຮັບຈາກການສຳຫລວດພື້ນຖານຂໍ້ມູນ**

- ເປັນການປະມານການສຳຫລວດແບບມະຫາພາກທັງສອງຮູບແບບຂອງການບໍລິໂພກ ແລະ ການລົງທຶນຂອງສ່ວນບຸກຄົນ ແລະ ລາຍຮັບຈາກການເຮັດທຸລະກິດດ້ານກະສິກຳ
- ໂຄງຮ່າງການຊົມໃຊ້ຫລືການບໍລໂພກສຳລັບດັດສະນີລາຄາ (CPI)
- ສະຖິຕິດ້ານການເຂົ້າເຖິງການບໍລິການ
- ສະຖິຕິດ້ານຄວາມທຸກຍາກ ແລະ ການກະຈາຍລາຍຮັບ
- ສະຖິຕິດ້ານໂພສະນາການ (ອາຫານທີ່ໄດ້ຮັບແຕ່ລະວັນ)

ຕາມປົກກະຕິແລ້ວການສຳຫລວດຂໍ້ມູນພື້ນຖານສຳລັບຄົວເຮືອນແມ່ນຕ້ອງສຳຫລວດສາມດ້ານໄລຍະໂຄງການ ທລຍ ຄືໄລຍະເລີ້ມຕົ້ນ,ໄລຍະກາງ ແລະ ໄລຍະທ້າຍຂອງໂຄງການ,ແຕ່ອີງໃສ່ສະພາບຄວາມເປັນຈິງຂອງການຈັດຕັ້ງປະຕິບັດກໍ່ຄືໄລຍະປະຈຸບັນແມ່ນຢູ່ໃນຊ່ວງການປັບປຸງລະບົບຂໍ້ມູນ,ສະນັ້ນຈຶ່ງບໍ່ໄດ້ເຮັດການສຳຫລວດໃນໄລຍະເຄິ່ງໂຄງການແຕ່ຈະສຳຫລວດໄລຍະທ້າຍໂຄງການອີກເທື່ອນຶ່ງເຊິ່ງຄາດວ່າຈະຢູ່ໃນຊ່ວງທ້າຍປີ 2007 ເຖິງຕົ້ນປີ 2008.

**3. ການປະເມີນຜູ້ໄດ້ຮັບຜົນປະໂຫຍດ**

ໃນເດືອນກັນຍາ 2005 ທລຍ ໄດ້ມີການເຮັດສັນຍາກັບ ບໍລິສັດທີ່ປຶກສາອິດສະຫລະຈາກຂ້າງນອກ ເພື່ອທຳການສຳຫລວດກໍ່ຄື:ປະເມີນຜົນດ້ານສັງຄົມ ແລະ ດ້ານວິຊາການຂອງ ກອງທຶນຫລຸດຜ່ອນຄວາມທຸກຍາກໃນສອງຮອບວຽນຜ່ານມາ (ຮອບວຽນ I, II) ໃນສາມແຂວງຄື: ແຂວງຫົວພັນ, ແຂວງສະຫວັນນະເຂດ ແລະ ຈຳປາສັກ, ເຊິ່ງໄດ້ມີການຊຸ່ມເອົາຕົວຢ່າງໂຄງການຍ່ອຍທີ່ຈະລົງໄປສຳຫລວດໃນແຕ່ລະແຂວງຕາມແຕ່ລະກຸ່ມຂອງໂຄງການ ການລົງເກັບກຳຂໍ້ມູນ ແລະ ນຳຂໍ້ມູນມາວິເຄາະຂອງທີມງານດັ່ງກ່າວ ແລະ ສຳເລັດໃນທ້າຍເດືອນ ຕຸລາ 2005 ແລະ ສຳເລັດບົດລາຍງານໃນທ້າຍເດືອນພະຈິກ 2005 ແຕ່ຫລັງຈາກທີມງານຂອງທະນາຄານໂລກລົງມາຕິດຕາມປະກົດວ່າບົດລາຍງານດັ່ງກ່າວຕ້ອງໄດ້ປັບປຸງບາງບັນຫາ,ສະນັ້ນທີມງານປະເມີນຜົນດັ່ງກ່າວໄດ້ສືບຕໍ່ປັບປຸງຕາມຄຳແນະນຳຂອງທະນາຄານໂລກ ແລະ ໄດ້ສຳເລັດບົດລາຍງານສົມບູນໃນທ້າຍເດືອນທັນວາ 2005

**4. ການກວດສອບປະຈຳປີ**

ການກວດສອບທາງດ້ານວິຊາການກໍເພື່ອຕີລາຄາຄືນດ້ານຄຸນະພາບກໍ່ຄືການອອກແບບຂອງໂຄງການ ແລະ ຕິດຕາມຄຸນນະພາບໂຄງການຂອງທີມງານເຂດ.ການກວດສອບດັ່ງກ່າວນີ້ແມ່ນມີການວ່າຈ້າງທີມງານທີມງານທີ່ປຶກສາຈາກທາງນອກເພື່ອທຳການກວດສອບເຊິ່ງທີມງານ ທລຍ ແຕ່ລະຂັ້ນຈະໄດ້ສະໜອງບັນດາຂໍ້ມູນທີ່ຈຳເປັນໃຫ້ບໍລິສັດ ຫລື ຜູ້ກວດສອບເພື່ອໃຫ້ເຫັນຄວາມໂປ່ງໃສ ແລະ ມີຄຳຄິດເຫັນ, ເພື່ອຈະເຮັດໃຫ້ ທລຍ ສາມາດນຳເອົາໄປປັບປຸງເພື່ອໃຫ້ການຈັດປະຕິບັດວຽກງານສຳເລັດຜົນດີກວ່າເກົ່າ ແລະ ການກວດສອບດັ່ງກ່າວຈະໄດ້ຈັດຕັ້ງປະຕິບັດປີລະຄັ້ງ

**5. ກໍລະນີສຶກສາ**

ຜ່ານການຈັດຕັ້ງປະຕິບັດຂອງວຽກງານ ທລຍ ໃນເຄິ່ງໄລຍະທຳອິດຂອງໂຄງການຫລຸດຜ່ອນຄວາມທຸກຍາກ, ຊ່ວງໄລຍະດັ່ງກ່າວແມ່ນໄດ້ມີການຄົ້ນຄວ້າສຶກສາໃນຫລາຍກໍລະນີເຊັ່ນວ່າ ການສຶກສາທາງດ້ານວິຊາການ ແລະ ຜົນກະທົບຕໍ່ສັງຄົມສາມາດກວດສອບເບິ່ງລາຍງານລະອຽດຂອງບົດລາຍງານຂອງໜ່ວຍງານຕິດຕາມ ແລະ ປະເມີນຜົນວິຊາການ (TA) ແລະ ດ້ານຜູ້ໄດ້ຮັບຜົນປະໂຫຍດ (BA) ທີ່ຈະເຮັດສຳເລັດໃນທ້າຍເດືອນທັນວາ ປີ 2005

**6. ການລາຍງານ**

ຕັ້ງແຕ່ເລີ່ມຕົ້ນໂຄງການຈົນເຖິງປະຈຸບັນລະບົບການລາຍງານແມ່ນສາມາດສະໜອງບົດລາຍງານຫລາຍຮູບແບບທີ່ເປັນທັງພາສາລາວ, ພາສາອັງກິດ, ເຊິ່ງແມ່ນໝາກຜົນທີ່ໜ່ວຍງານຕິດຕາມປະເມີນຜົນເປັນຜູ້ລິເລີ່ມຂຶ້ນເປັນຕົ້ນວ່າ:

1. ລາຍງານປະຈຳອາທິດ
2. ລາຍງານປະຈຳເດືອນ
3. ບົດລາຍງານປະຈຳໄຕມາດ

4. ບົດລາຍງານ ປະຈຳ 6 ເດືອນ
5. ບົດລາຍງານປະຈຳປີ
6. ວາລະສານ ສະບັບ ພາສາອັງກິດ
7. ການສະໜອງຂໍ້ມູນເຂົ້າເວັບໄຊ
8. ບົດລາຍເຄິ່ງໄລຍະຂອງໂຄງການ
9. ບົດງານອື່ນໆ (ທັງພາສາ ອັງກິດ ແລະ ພາສາລາວ ເພື່ອສົ່ງໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ.ນອກຈາກນັ້ນຍັງມີອົງການຈັດຕັ້ງສັງຄົມ, ການຈັດຕັ້ງສາກົນອື່ນໆ, ນັກສຶກສາ ທີ່ມີຄວາມສົນໃຈກ່ຽວກັບວຽກງານ ທລຍ...)

## <u>ບັນຫາ ແລະ ວິທີແກ້ໄຂ</u>

- ລະເບົາບໍລິຫານ ຖານຂໍ້ມູນ (MIS Database)

ເນື່ອງຈາກວ່າລະບົບຖານຂໍ້ມູນທີ່ໄດ້ນຳໃຊ້ແຕ່ປີ 2003 ເຖິງກາງປີ 2005 ຍັງມີບັນຫາໃນບາງຂໍ້ມູນທີ່ມາຈາກຖານຂໍ້ມູນແມ່ນບໍ່ສົມບູນບາງຂໍ້ມູນທີ່ຈຳເປັນຍັງບໍ່ມີ,ບາງຕົວຊີ້ວັດຫລືຕົວປ່ຽນແມ່ນຕ້ອງໄດ້ຂະ ຫຍາຍຕື່ມ ແລະ ວິເຄາະຕື່ມ ນອກຈາກນັ້ນກໍຍັງມີຫລາຍໆ ບັນຫາທີ່ເກີດຂຶ້ນເນື່ອງຈາກວ່າການປັບປຸງ, ການສ້າງ,ການນຳໃຊ້ແມ່ນເປັນໄລຍະດຽວກັນເຮັດໃຫ້ເກີດບັນຫາຄືທີ່ໄດ້ກ່າວມານັ້ນຈິ່ງຈຳເປັນຈະຕ້ອງມີການປັບປຸງລະບົບຖານຂໍ້ມູນເພື່ອຮັບປະກັນໃນການຊົມໃຊ້ສຳລັບຮອບວຽນທີ່ຍັງຫລືອດ້ວຍເຫດນັ້ນໃນຕອນເລີ່ມຕົ້ນຂອງຮອບວຽນທີ III ທລຍ ໄດ້ເຮັດສັນຍາກັບບໍລິສັດທີ່ປຶກສາ APIS ເພື່ອປັງປຸງຖານຂໍ້ມູນ ແລະ ອີກອັນນຶ່ງແມ່ນຖານຂໍ້ມູນດັ່ງກ່າວແມ່ນຄາດວ່າຈະສຳເລັດໃນທ້າຍເດືອນ ທັນວາ 2005.

- ການໄປຖອດຖອນບົດຮຽນຢູ່ເຂດອື່ນຂອງທີມງານເຂດ:

ໃນຮອບວຽນທີ I, ການຕິດຕາມຂັ້ນເຂດແມ່ນຖືກອອກແບບໃຊ້ສຳລັບ 10 ເມືອງ, ແຕ່ບໍ່ປະ ສົບຜົນ ສຳເລັດ ແລະ ກໍ່ໄດ້ສືບຕໍ່ ແຕ່ຈະໄດ້ເລີ່ມເຮັດຄືນພາຍຫລັງທີ່ຖານຂໍ້ມູນສຳເລັດ

ການໄປຖອດຖອນຢູ່ເຂດອື່ນໄດ້ຈັດຕັ້ງຂຶ້ນອີກໃນຮອບວຽນທີ II ໂດຍໃຫ້ປະສານງານເຂດເປັນຜູ້ເກັບຂໍ້ມູນ, ຈົນເຖິງປະຈຸບັນ ບັນດາຂໍ້ມູນທີ່ເກັບໄດ້ໃນຂັ້ນຮາກຖານບໍ່ທັນຖືກປ້ອນເຂົ້າເທື່ອເນື່ອງຈາກວ່າບໍ່ທັນມີຖານຂໍ້ມູນ

- ລະບົບຂໍ້ມູນກ່ຽວກັບ ການປ້ອງບັນຫາ ແລະ ວິທີແກ້ໄຂ

ຕໍ່ກັບການຈັດຕັ້ງປະຕິບັດວຽກ ກໍ່ຄືການຈັດຕັ້ງປະຕິບັດໂຄງການຍ່ອຍຕ່າງໆ ເນື່ອງຈາກວ່າ ທລຍ ໄດ້ພົບເຫັນ ວ່າເປັນສ່ວນໃຫຍ່ບໍ່ໄດ້ເກີດຂຶ້ນຢູ່ຂັ້ນສູນກາງ ແຕ່ພັດເກີດຂຶ້ນໃນຂັ້ນທ້ອງ ຖິ່ນທີ່ມີການຈັດ ຕັ້ງປະຕິບັດໂຄງການຍ່ອຍ, ສະນັ້ນການປຶກສາຫາລືຂອງທີມງານ ທລຍ ໄດ້ເຫັນດີໃຫ້ອຳນາດ ການປົກຄອງ ທ້ອງຖິ່ນເປັນຜູ້ ຮັບຜິດ ຊອບໂດຍກົງ ດັ່ງນັ້ນປະຈຸບັນນີ້ບໍ່ມີຕຳແໜ່ງງານທີ່ເຮັດວຽກດັ່ງກ່າວໃນຂັ້ນສູນກາງ.

• ກ່ຽວກັບພະນັກງານ: ໃນໄລຍະແຕ່ເດືອນຕຸລາ 2005 ເປັນຕົ້ນມາໜ່ວຍງານຕິດຕາມ ແລະ ປະເມີນຜົນຍັງບໍ່ມີຫົວໜ້າ ໜ່ວຍງານ, ແລະ ຍັງເຫັນວ່າເປັນບັນຫາທີ່ຫຍຸ້ງຍາກສົມຄວນເພື່ອຊອກຫາຜູ້ທີ່ມີຄວາມເໝາະສົມເພື່ອດໍາລົງຕໍາແໜ່ງດັ່ງກ່າວເນື່ອງຈາການຮຽກຄ່າຕອບແທນສູງເກີນໄປ.

**<u>ສິ່ງທີ່ທ້າທາຍ ສໍາລັບໜ່ວຍງານຕິດຕາມປະເມີນຜົນ</u>**

1.ໜ່ວຍງານຕິດຕາມ ແລະ ປະເມີນຜົນ ຂັ້ນສູນກາງມີທີມງານທີ່ເຮັດວຽກນຈໍາກັນທັງໝົດ 5 ທ່ານຄື:1 ຫົວໜ້າໜ່ວຍງານ, 2 ຜູ້ຄຸ້ມຄອງ ແລະ ບໍລິຫານຂໍ້ມູນ, 3. ຜູ້ຊ່ວຍຄຸ້ມຄອງ ແລະ ບລິຫານຂໍ້ມູນ, 4.ຜູ້ຮັບຜິດຊອບການລາຍ ງານ, ແລະ 5.ແມ່ນຜູ້ຮັບຜິດຊອບຂໍ້ມູນຂ່າວສານເຕັກໂນໂລຢີ (IT) ຢູ່ຂັ້ນແຂວງມີພະນັກງານຕິດຕາມ ແລະ ປະເມີນຜົນພຽງຜູ້ດຽວໃນແຕ່ລະແຂວງທີ່ຈັດຕັ້ງປະຕິບັດບໍ່ເກີນ 4 ເມືອງ, ແລະ ມີ 2 ຄົນສໍາລັບແຂວງທີ່ມີການຈັດຕັ້ງປະຕິບັດວຽກງານ ທລຍ ຫລາຍກວ່າ 4ເມືອງຂື້ນໄປ (ປະຈຸບັນຢູ່ ແຂວງຫົວພັນ)

ໃນສອງຮອບວຽນຜ່ານມາ ທລຍ ໄດ້ເຮັດວຽກຢູ່ 3 ແຂວງ 14 ຕົວເມືອງ ແລະ ກວມເອົາ 1431 ບ້ານມີໂຄງການທັງໝົດ 679 ໂຄງການ ທີ່ຕ້ອງໄດ້ຕິດຕາມຢ່າງໃກ້ສິດ, ທຸກໆໂຄງການຈໍາເປັນຕ້ອງໄດ້ຕິດຕາມເບິ່ງຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແລະ ການໂອນເງິນຕ່າງໆຢ່າງລະອຽດເພື່ອເຮັດໃຫ້ການຕິດຕາມແຕ່ລະໂຄງການໃນແຕ່ລະບ້ານແຕ່ລະເມືອງຂອງທີມງານ ທລຍ ບໍ່ພຽງແຕ່ເທົ່າໃດຄົນຄືຈະເປັນໄປບໍ່ໄດ້ດັ່ງນັ້ນທາງອອກທີ່ເໝາະສົມເພື່ອແກ້ໄຂບັນຫາດັ່ງກ່າວແມ່ນໃຫ້ປະສານງານເຂດເປັນຜູ້ຕິດຕາມມໃນແຕ່ລະເດືອນ ເນື່ອງຈາກທີມງານ ທລຍ ມີບໍ່ພຽງພໍ ແລະ ງົບປະມານມີຈໍາກັດສໍາລັບການຕິດຕາມ.

2. ການຈັດຕັ້ງປະຕິບັດງານ ທລຍ ແຕ່ຂັ້ນແຂວງ, ເມືອງ ຈົນເຖິງຂັ້ນເຂດ ແລະ ຂັ້ນບ້ານ, ແຕ່ການເກັບກໍາຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດ ແລະ ຄວາມຄືບໜ້າແມ່ນຕ້ອງໄດ້ເກັບກໍາຢ່າງລະອຽດ ແລະ ໃນແຕ່ລະໂຄງການເຊິ່ງໄດ້ມີການນໍາໃຊ້ເຄື່ອງມື, ແບບຟອມ, ແລະ ຖານຂໍ້ມູນເຊິ່ງມີອົງການຈັດຕັ້ງໃດ ຫລື ອົງການຈັດຕັ້ງໃດເຄີຍດໍາເນີນ ກິດຈະກໍາແບບນີ້ມາກ່ອນ.

ໃນສອງຮອບຜ່ານມາ ໜ່ວຍງານຕິດຕາມ ແລະ ປະເມີນຜົນບໍ່ພຽງແຕ່ພັດທະນາທາງດ້ານເຄື່ອງມືແລະ ລະບົບຂອງການປະຕິບັດວຽກງານຕ່າງໆ ໃນເວລາອັນຈໍາກັດທັງເຮັດປະຕິບັດຕົວຈິງແຕ່ຕ້ອງການ ຫລືຄາດຫວັງໃຫ້ໄດ້ປະສິດທິຜົນທີ່ສູງໂດຍສະເພາະແມ່ນການຕິດຕາມຂໍ້ມູນຂອງແຕ່ລະໂຄງການຍ່ອຍ.

3. ໜ່ວຍຕິດຕາມ ແລະ ປະເມີນຜົນ ຕ້ອງການຄວາມຮ່ວມມື ຈາກທຸກໜ່ວຍງານ ການປະສານສົມທົບຕ່າງໆຈາກແຕ່ ລະໜ່ວຍງານ

ໜ່ວຍຕິດຕາມ ແລະ ປະເມີນຜົນ ຕ້ອງເກັບຂໍ້ມູນໃນທຸກຂັ້ນ, ເປັນໄລຍະ ເປັນເດືອນ, ແຕ່ຢູ່ໃນຂັ້ນທ້ອງຖິ່ນເຊັ່ນວ່າຂັ້ນບ້ານ, ຂັ້ນເຂດ ແລະ ຂັ້ນເມືອງເຊິ່ງບໍ່ມີທີມງານຂອງໜ່ວຍຕິດຕາມ ແລະ ປະເມີນຜົນຢູ່ໃນຂັ້ນຕ່າງໆນັ້ນ ສະນັ້ນ, ໜ່ວຍງານຕິດຕາມ ແລະ ປະເມີນຜົນ ຕ້ອງຮ່ວມມືກັບທີມງານຂັ້ນແຂວງໃນ

ແຕ່ລະແຂວງໂດຍທີມງານ ທລຍ ຂັ້ນເມືອງ ແລະ ປະສານງານເຂດຈະເປັນຜູ້ຊ່ວຍໃນການເກັບກຳຂໍ້ມູນເພື່ອລາຍງານໃຫ້ໜ່ວຍງານຕິດຕາມ ແລະ ປະເມີນຜົນ

### 3.2.3. ວຽກທີ່ກຳລັງຈັດຕັ້ງປະຕິບັດ ແລະ ແຜນວຽກຂອງໜ່ວຍງານ

- ການປັບປຸງລະບົບຖານຂໍ້ມູນ

ລະບົບຖານຂໍ້ມູນແມ່ນໜຶ່ງໃນເຄື່ອງທີ່ສຳຄັນຂອງໜ່ວຍງານຕິດຕາມ ແລະ ປະເມີນຜົນ ເພື່ອຕິດຕາມບັນດາບັນດາຕົວຊີ້ວັດທີ່ສຳຄັນຂອງໂຄງການ ທລຍ ແລະ ລະບົບດັ່ງກ່າວແມ່ນໄດ້ຖືກອອກແບບໃນທ້າຍປີ 2005 ເພື່ອຮັບປະກັນໃຫ້ການນຳໃຊ້ທີ່ມີປະສິດທິຜົນ, ສະນັ້ນການປັບປຸງລະບົບຖານຂໍ້ມູນແມ່ນຢູ່ໃນຂັ້ນກຳລັງພິຈາລະນາໜ້າທີ່ຂອງບັນດາບໍລິສັດທີ່ຈະມາປັບປຸງລະບົບດັ່ງກ່າວ ແລະ ໃນທ້າຍເດືອນ ສິງຫາ 2005 ໄດ້ມີການເຮັດສຳມະນາຂອງບັນດາບໍລິສັດທີ່ຈະສ້າງໃໝ່ຂຶ້ນສະນັ້ນ, ໃນເດືອນກັນຍາ 2005 ທລຍ ໄດ້ເຊັນສັນຍາກັບທີ່ປຶກສາ APIS ເພື່ອປັບປຸງຖານ ຂໍ້ມູນ ແລະ ຄາດວ່າຈະສຳເລັດໃນທ້າຍເດືອນທັນວາ ປີ 2005.

- ແຜນຝຶກອົບຮົມການຈຳໃຊ້ຖານຂໍ້ມູນ:

ການຝຶກອົບຖານຂໍ້ມູນຂັ້ນສູງກາງແມ່ນໄດ້ຈັດຂຶ້ນໃນລະຫວ່າງວັນທີ 20-23 ທັນວາ 2005, ໃນແຕ່ລະແຂວງແມ່ນຈະຈັດຂຶ້ນໃນເດືອນມັງກອນ ປີ 2006 ໂດຍການຮ່ວມມື ລະຫວ່າງທີມງານຂອງ ທລຍ ກໍຄືໜ່ວຍຕິດຕາມປະເມີນຜົນ ແລະ ທີມງານຂອງ ບໍລິສັດທີ່ປຶກສາ APIS

ຫລັງຈາກທີມງານຂັ້ນແຂວງປ້ອນຂໍ້ມູນທັງໝົດແລ້ວທັງປະຈຸບັນ ແລະ ທີ່ຜ່ານມາໃຫ້ສຳເລັດ ແລະ ຕ້ອງສົ່ງລາຍງານໃຫ້ທີມງານ ທລຍ ຂັ້ນສູງກາງຢ່າງຊ້າສຸດບໍ່ໃຫ້ກາຍວັນທີ 25 ຂອງແຕ່ລະເດືອນເລີ່ມແຕ່ເດືອນກຸມພາ 2006 ເປັນຕົ້ນ ໄປ

- ປື້ມຄູ່ມືຂອງໜ່ວຍງານຕິດຕາມ ແລະ ປະເມີນຜົນ

ຄູ່ມືດັ່ງກ່າວແມ່ນຢູ່ຊ່ວງປັບປຸງ ແລະ ຂຽນເປັນພາສາລາວ ໂດຍທີມງານຂອງໜ່ວຍງານຕິດຕາມ ແລະ ປະເມີນຜົນຄາດວ່າຈະສຳເລັດໃນທ້າຍ ເດືອນທັນວາ 2005 ເຊິ່ງຄູ່ມືດັ່ງກ່າວຈະຊ່ວຍໃນການຕິດຕາມການເຮັດວຽກຂອງທີມງານ ທລຍ ຂັ້ນເມືອງ ແລະ ແຂວງ

- ການວິເຄາະຕົວຊີ້ວັດ:

ທີມງານຕິດຕາມໄດ້ພັດທະນາບັນດາຕົວຊີ້ວັດຕ່າງໆ ເພື່ອສຳຫລວດຜົນໄດ້ຮັບ ແລະ ຜົນກະທົບຂອງໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ ຕໍ່ວຽກງານຫລຸດຜ່ອນຄວາມທຸກຍາກ ແລະ ທີມງານໜ່ວຍງານຕິດຕາມ ແລະ ປະເມີນຜົນກຳລັງເຮັດແບບສອບຖາມເພື່ອສຳຫລວດຂໍ້ມູນຕ່າງໆ ໃນແຕ່ລະກຸ່ມໂຄງການຫລັງຈາກນັ້ນຈະມີການສ້າງລະບົບຖານຂໍ້ມູນເພື່ອເກັບກຳຂໍ້ມູນດັ່ງກ່າວ, ປະສານງານເຂດຈະເປັນຜູ້ຊ່ວຍໃນການສຳຫລວດຂໍ້ມູນຕາມແບບສອບຖາມທີ່ໄດ້ສ້າງຂຶ້ນ ແລະ ຂໍ້ມູນທັງໝົດຈະຖືກປ້ອນເຂົ້າຖານຂໍ້ມູນໂດຍໜ່ວຍງານຕິດຕາມ ແລະ ປະເມີນຜົນໃນຂັ້ນແຂວງ.

- ແຜນວຽກທີ່ໜ່ວຍງານຈະສຸມໃສ່ໃນອານາຄົດຫລັງຈາກສຳເລັດການຝຶກອົບຮົມກ່ຽວກັບການນຳໃຊ້ລະບົບຖານຂໍ້ມູນມີຄື:

  – ຕິດຕາມການນຳໃຊ້ລະບົບຖານຂໍ້ມູນຂອງທີມງານຂັ້ນແຂວງ
  – ອອກແບບລະບົບຂໍ້ມູນເພື່ອຕິດຕາມຜົນໄດ້ຮັບ ແລະ ຜົນກະທົບຂອງໂຄງານ (ເຊິ່ງບໍລິສັດທີ່ປຶກສາຈະເປັນຜູ້ສ້າງ) ແລະ ຈາກນັ້ນ ຈະມີການຈັດຝຶກອົບຮົມໃຫ້ທີມງານຂັ້ນແຂວງ ກ່ຽວກັບການນຳໃຊ້ຖານຂໍ້ມູນດັ່ງກ່າວ.
  – ການເກັບກຳຂໍ້ມູນກ່ຽວກັບຜົນໄດ້ຮັບ ແລະ ຜົນກະທົບຈາກໂຄງການ ທລຍ ລວມເຖິງບົດບາດຂອງ ທລຍ ຕໍ່ວຽກງານຫລຸດຜ່ອນຄວາທຸກຍາກ 14 ເມືອງເກົ່າ.
  – ເລັ່ງໃສ່ການຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ
  – ເກັບກຳຂໍ້ມູນໄປຄຽງຄູ່ກັບການລາຍງານຕ່າງໆ ເພື່ອສົ່ງໜ່ວຍງານທີ່ກ່ຽວຂ້ອງ ແລະ ທະນາຄານໂລກໃຫ້ທັນເວລາ.
  – ການສະໜອງຂໍ້ມູນໃຫ້ອົງການຈັດຕທີ່ກ່ຽວຂ້ອງ ແລະ ປັບປຸງຂໍ້ມູນເປັນແຕ່ລະໄລຍະໃຫ້ທັນກັບເຫດການຕົວຈິງ.
  – ເກັບກຳຂໍ້ມູນທັງໝົດຈາກແຂວງ ແລະ ສູນສະຖິຕິແຫງຊາດກ່ຽວກັບຂໍ້ມູນຂອງເມືອງໃໝ່ທີ່ຈະມີການຈັດຕັ້ງປະຕິບັດວຽກງານ ທລຍ ໃນຮອບວຽນທີ IV (ເມືອງວຽງທອງ, ແຂວງຫົວພັນ).
  – ຕິດຕາມຂໍ້ມູນກ່ຽວກັບຄວາມຄືບໜ້າ ແລະ ການໂອນເງິນໄປນຳໃຊ້ໃນແຕ່ລະໂຄງການຍ່ອຍ
  – ຄິດໄລ່ງົບປະມານຂັ້ນເມືອງ ສຳລັບຮອບວຽນທີ IV (2006-07)
  – ການໄປຖອດຖອນບົດຮຽນຢູ່ເຂດອື່ນຂອງທີມງານເຂດ.
  – ແຜນວຽກທີ່ຕ້ອງເຮັດລະອຽດສຳລັບໜ່ວຍງານຕິດຕາມ ແລະ ປະເມີນຜົນສາມາດເບິ່ງໃນເອກະສານຊ້ອນທ້າຍ ***10***

## 3.3. ໜ່ວຍງານພັດທະນາຊຸມຊົນ

### 3.3.1. ພາບລວມຂອງການຈັດຕັ້ງປະຕິບັດວຽກງານດ້ານພັດທະນາຊຸມຊົນ

ພາບລວມແມ່ນເພື່ອ:

- ຮັບປະກັນໃຫ້ວຽກງານຂອງໂຄງການຖືກຈັດຕັ້ງປະຕິບັດໂດຍສອດຄ່ອງກັບນະໂຍບາຍຂອງໂຄງການ ເຊັ່ນ: ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດໃຫ້ພະນັກງານ ທລຍ ຢູ່ທຸກຂັ້ນ.
- ປະສານສົມທົບກັບທຸກທີມງານ ທັງຢູ່ໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ມອບໝາຍວຽກງານ ແລະ ແນະນຳການຈັດຕັ້ງໜ້າວຽກຢູ່ໃນກອບຂອງວຽກພັດທະນາຊຸມຊົນຢູ່ທຸກຂັ້ນ.
- ຈັດການຝຶກອົບຮົມດ້ານຕ່າງໆໃຫ້ແກ່, ສູນກາງ, ແຂວງ, ເມືອງ ແລະ ເຂດ ເພື່ອຮັບປະກັນໃຫ້ວຽກງານພັດທະນາຊຸມຊົນ ໃຫ້ຈັດຕັ້ງເປັນເອກະພາບ ແລະ ມີຜະສິດທິພາບ;

- ວິເຄາະ ແລະ ຕີລາຄາລວມການຈັດຕັ້ງປະຕິບັດບັດກິດຈະກຳຂອງບັນດາ ແຂວງ ແລະ ເມືອງເປົ້າໝາຍ, ມີການເຮັດການລາຍງານເພື່ອຖອດຖອນບົດຮຽນ ນຳເອົາອັນດີໄປຜັນຂະຫຍາຍ ແລະ ເອົາອັນອ່ອນ ຂຶ້ນມາແກ້ໄຂ;
- ສ້າງເຄື່ອງມື ແລະ ອຸປະກອນປະຈັກຕາຕ່າງໆ ເພື່ອນຳໃຊ້ເຂົ້າໃນການໂຄສະນາອົບຮົມ ແລະ ດຶງເອົາການມີສ່ວນຮ່ວມ ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນ;
- ຊ່ວຍສ້າງເຄື່ອງມືມາດຕະຖານສຳລັບການເກັບກຳຂໍ້ມູນຂອງເມືອງທີ່ຕັ້ງພູມສາດ ແລະ ອາກາດຂອງໂຄງປະກອບຂອງເມືອງ, ຂໍ້ຈຳກັດຕົ້ນຕໍ ແລະ ການພັດທະນາລາຍງານໃຫ້ຜູ້ອຳນວຍການບໍລິຫານ.
- ສ້າງຈຸດທົດລອງກິດຈະກຳສ້າງລາຍຮັບ ເພື່ອເຮັດເປັນຕົວແບບໃຫ້ການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວໃຫ້ແຜ່ຫລາຍ ແລະ ມີຜະລິດທີຜົນ;
- ຊ່ວຍແນະນຳທີມງານແຂວງ ແລະ ເມືອງ ເພື່ອກະຈາຍຂໍ້ມູນຂ່າວສານສູ່ຊຸມຊົນທີ່ຢູ່ໃກ້, ໄກ ແລະ ຮ່າງໄກສອກຫລີກຮູ້ການເຄື່ອນໄຫວ ແລະ ຈຸດປະສົງຂອງ ທລຍ;
- ວາງແຜນໃນການຮ່ວມມືກັບອົງການຈັດຕັ້ງສັງຄົມຕ່າງໆ ເພື່ອໃຫ້ມີສ່ວນຮ່ວມໃນທຸກຂັ້ນຂອງ ການຈັດຕັ້ງປະຕິບັດ;
- ສົ່ງເສີມແນວຄິດຂອງຊຸມຊົນໃຫ້ມີສ່ວນຮ່ວມ ແລະ ສະແດງຄວາມເປັນເຈົ້າຂອງໃຫ້ຫລາຍຂຶ້ນ

### 3.3.2. . ວຽກງານຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ (IEC)

ໄດ້ຈັດຝຶກອົບຮົມໃຫ້ພະນັກງານ ທລຍ ແຕ່ລະເມືອງ ໃນການກະຈາຍຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ ເພື່ອໃຫ້ພວກເຂົາເຈົ້າມີຄວາມເຂົ້າໃນເລິກເຊິ່ງກ່ຽວຈັດຈຸດປະສົງ ແລະ ວິທີການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ

<u>**ຕົວຢ່າງ:**</u> ການຂະຫຍາຍກິດຈະກຳໄປສູ່ອີກ 4 ເມືອງໃໝ່ໃນຮອບວຽນ 2 ສົກປີ 2004-2005, ໃນນັ້ນຢູ່ 3 ເມືອງໃໝ່ຂອງແຂວງຫົວພັນ ຄື: ເມືອງຫົວເມືອງ, ເມືອງວຽງໄຊ ແລະ ເມືອງຊຳໃຕ້ ໄດ້ມີການຈັດຝຶກອົບຮົມດ້ານດັ່ງກ່າວຂຶ້ນຢູ່ເມືອງວຽງໄຊ, ແຂວງຫົວພັນ ໃນຊວງວັນທີ 25-29 ສິງຫາ 2004 ແລະ ຢູ່ເມືອງພີນ ແຂວງສະຫວັນນະເຂດ ໃນວັນທີ 30 ກັນຍາ 2004. ການຝຶກອົບຮົມແມ່ນການປະສານສົມທົບລະຫວ່າງ ທລຍ ຂັ້ນສູນກາງກັບທີມງານ ທລຍ ຂັ້ນແຂວງເພື່ອສະເໜີ ແລະ ແນະນຳກ່ຽວກັບປະຫວັດຄວາມເປັນມາ, ຈຸດປະສົງ, ໂຄງສ້າງຂອງ ທລຍ, ການປະສານງານຕ່າງໆ ເຊັ່ງເຄື່ອງມື ທີ່ໃຊ້ສຳລັບ ການຝຶກອົບຮົມ ລວມມີປິດສະເຕີ ຫລືຮູບສະແດງກ່ຽວກັບກິດຈະກຳ ທລຍ, ແບບຟອມຕິດຕາມຂໍ້ມູນ, ແລະ ໄດ້ປະຊາສຳພັນກ່ຽວກັບເຫດການອື່ນທີ່ກ່ຽວເນື່ອງກັບວຽກງານ ທລຍ ຕື່ມເພື່ອໃຫ້ເຂົາເຈົ້າມີຄວາມເຂົ້າໃຈຈະແຈ້ງ

ການຂະຫຍາຍກິດຈະກຳໃນຮອບວຽນ ທີ 3 ( 2005-2006) ເຊິ່ງ ທລຍ ໄດ້ວາງແຜນທີ່ຈະຂະຫຍາຍກິດຈະກຳໄປສອງແຂວງໃໝ່ຄື: ແຂວງຊຽງຂວາງ ແລະ ແຂວງສາລະວັນເຊິ່ງແຕ່ລະແຂວງປະກອບດ້ວຍສາມຕົວເມືອງ, ເຊິ່ງທີມງານໃໝ່ມີຄວາມຈຳເປັນຫລາຍທີ່ຕ້ອງການຝຶກອົບຮົມ ແລະ ໄດ້ຈັດຂຶ້ນໃນເດືອນເມສາ, 2005 ພາຍໄຕ້ການຊີ້ນຳໂດຍທີມງານ ທລຍ ສູນກາງໂດຍສະເພາະແມ່ນໜ່ວຍງານທີ່ຮັບຜິດຊອບການ ກະຈາຍຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ ເຊິ່ງແມ່ນກະບອກສຽງຂອງ ທລຍ ເຊິ່ງຫົວຂໍ້ຂອງ ການ

ຝຶກອົບຮົມແມ່ນຈະກວມເອົາຂະບວນການເຮັດວຽກຂອງ ທລຍ, ຫລັກການຕ່າງໆ , ການຈັດ ຊື້-ຈັດຈ້າງ ແລະ ຫົວຂໍ້ ຕ່າງໆ ທີ່ພົວພັນເຖິງແຕ່ລະໜ່ວຍງານຂອງ ທລຍ.

**# ເຄື່ອງມືສັບສຳລັບການກະຈາຍຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ (IEC material)**

ບັນດາເຄື່ອງມືຂອງການກະຈາຍຂໍ້ມູນຂ່າວສ່ານ, ການສຶກສາ ແລະ ປະຊາສຳພັນແມ່ນລວມມີບັນດາ ຂໍ້ມູນກ່ຽວກັບ ທລຍ ເຊິ່ງຕ້ອງແຈກຢາຍໃຫ້ຊຸມຊົນຮັບຮູ້ ໂດຍສະເພາະທີມງານເຂດ ແລະ ປະສານງານເມືອງ ເພື່ອໂຄສະນາໃຫ້ຊຸມຊົນຮູ້ ແລະ ເຂົ້າໃຈກ່ຽວກັບຈຸດປະສົງ ແລະ ຫລັກການຂອງ ທລຍ ເພື່ອເພີ່ມຄວາມເຂົ້າ ໃຈ ແລະ ຄວາມຮັບຮູ້ຂອງຊຸມຊົນໃນບັນຫາຂອງການຫລຸດຜ່ອນຄວາມທຸກຍາກໃນ ສປປ ລາວ ບັນດາເຄື່ອງມື ທີ່ໄດ້ກ່າວມານັ້ນແມ່ນໄດ້ນຳໃຊ້ເຂົ້າໃນກິດຈະກຳທາງສັງຄົມຕ່າງໆໃນຂັ້ນເມືອງ, ຂັ້ນເຂດ ແລະ ບ້ານ, ການ ນຳໃຊ້ເຄື່ອງມືເຂົ້າຊ່ວຍເພື່ອສະແດງໃຫ້ເຫັນຄວາມໂປ່ງໃສຂອງການຈັດຕັ້ງປະຕິບັດວຽກ ທລຍ ແລະ ສະແດງ ເຖິງການມີສ່ວນຮ່ວມແຕ່ເລີ່ມຕົ້ນ, ເຄື່ອງມືສຳລັບການໂຄສະນາອົບຮົມ ແມ່ນໄດ້ຜະລິດ ແລະ ຖືກໃຊ້ຈົນເຖິງ ປະຈຸບັນ.

ໃນລະຫວ່າງປີ 2003, ເຄື່ອງມືຂອງການໂຄສະນາສຶກສາອົບຮົມທີ່ຖືກຜະລິດ ແລະ ນຳໃຊ້ໃນຮອບ ວຽນທີ I ສຳລັບ 10 ເມືອງ, ເຊິ່ງມີລາຍລະອຽດໃນຕາຕະລາງລຸ່ມນີ້:

**ຕາຕະລາງ 20: ອຸປະກອນ ແລະ ເຄື່ອງມືທີ່ໄດ້ຜະລິດ ແລະ ແຈກຢາຍໃນຮອບວຽນທີ 1 ສົກປີ 2003-2004**

| ອຸປະກອນ | ແຈກຢາຍໃຫ້ພາກສ່ວນ | ຈຳນວນ |
|---|---|---|
| ແມ່ນພັບ 1 ແບບ | ພະນັກງານທລຍ ປະສານງານເຂດນຳໃຊ້ໃນກອງປະຊຸມ | 170 ຊຸດ |
| ບົດເພັງເປັນຊີດີ (10 ເພັງ) | ໃຫ້ອົງການລັດ, ອົງການຈັດຕັ້ງພາຍໃນ/ອົງການຈັດຕັ້ງ ສາກົນ, ຊາວບ້ານ | 150 ແຜ່ນ (ຊີດີ) |
| ບົດແນະນຳ ທລຍ | ໃຫ້ອົງການລັດ, ອົງການຈັດຕັ້ງພາຍໃນ/ອົງການຈັດຕັ້ງ ສາກົນ, ຊາວບ້ານ | 9.000 ສະບັບ |
| ຟິດສະເຕີ (5 ຢ່າງ) | ອົງການຈັດຕັ້ງຂັ້ນແຂວງ, ເມືອງ, ເຂດ ແລະ ບ້ານ | 1302 ຊຸດ |
| ເສື້ອຍືດ ແລະ ໝວກ | ອົງການຈັດຕັ້ງລັດ, ອົງການຈັດຕັ້ງທີ່ກ່ຽວຂ້ອງ, ພະນັກງານ ທລຍ ແລະ ທີມງານເຂດ | 450 ແລະ 150 / ແຕ່ລະຢ່າງ |
| ກະດານຂ່າວ | ສຳ ຫລັບ ການໂຄສະນາ ແລະ ປະຊາສຳພັນ ຂັ້ນເຂດ | 37 ແຜ່ນ |
| ໜັງສື ຖະແຫລງການ (2 ແບບ) | ຫ້ອງການລັດ, ພະນັກງານ ທລຍ ເພື່ອໃຊ້ກັບຊາວບ້ານ | 5000 ຊຸດ |
| ວິທະຍຸກະຈາຍສຽງ | ທຸກອົງການຈັດຕັ້ງ, ທຸກຂັ້ນ | 2 ສະຖານີ |
| ບົດສະຫລຸບ ຄູ່ມື ລະບຽບການຈັດ ຕັ້ງປະ ຕິບັດ | ຫ້ອງການລັດ, ພະນັກງານ ທລຍ ເພື່ອໃຊ້ກັບຊາວບ້ານ | 200 ເຫລັ້ມ |
| ເວັບໄຊ (Web site) | ທຸກອົງການຈັດຕັ້ງ, ທຸກຂັ້ນ | 1 ເວັບໄຊ |

ໃນລະຫວ່າງ ປີ 2004-2005, ບາງອຸປະກອນກໍ່ຄືເຄື່ອງມືຂອງການໂຄສະນາສຶກສາອົບຮົມແມ່ນຕ້ອງໄດ້ມີ ການຜະລິດເພີ່ມເຕີມໃນບາງຢ່າງເພື່ອນຳໃຊ້ເຂົ້າໃນການຝຶກອົບຮົມໃນ 4 ເມືອງໃໝ່ (2004-2005)

**ຕາຕະລາງ 21 ອຸປະກອນ ແລະ ເຄື່ອງມືທີ່ຜະລິດສຳລັບ ສຳລັບຮອບວຽນ2 ສົກປີ 2004-2005**

| ອຸປະກອນ | ແຈກຢາຍໃຫ້ພາກສ່ວນ | ຈຳນວນ |
|---|---|---|
| ແຜ່ນພັບ | ພະນັກງານທລຍ ປະສານງານເຂດນຳໃຊ້ໃນກອງປະຊຸມ | ໃຊ້ຕົວເກົ່າ (ສອງຮອບ ວຽນ) |
| ບົດແນະນຳ ທລຍ | ຫ້ອງການລັດ, ອົງການຈັດຕັ້ງພາຍໃນ ແລະ ອົງການຈັດຕັ້ງສາກົນ, ຊາວບ້ານ | 2.021 ຊຸດ |
| ບົດສເຕີ ( ພິມແບບເກົ່າ) | ອົງການຈັດຕັ້ງແຂວງ, ເມືອງ , ເຂດ ແລະ ບ້ານ | 1.663 ຊຸດ |
| ເສື້ອຍືດ ແລະ ໝວກ | ຫ້ອງການລັດ, ອົງການຈັດຕັ້ງພາຍໃນ ແລະ ອົງການຈັດຕັ້ງສາກົນ, ຊາວບ້ານ | 1.030 ແລະ 997/ ແຕ່ລະຢ່າງ |
| ເສື້ອແຈກເກັດ | ຫ້ອງການລັດ, ອົງການຈັດຕັ້ງພາຍໃນ ແລະ ອົງການຈັດຕັ້ງສາກົນ, ຊາວບ້ານ | 101 ຜືນ |
| ປະຕິທິນ | ຫ້ອງການລັດ, ອົງການຈັດຕັ້ງພາຍໃນ ສູນກາງ, ແຂວງ ແລະ ເມືອງ | 193 ຊຸດ |
| ວາລະສານ | ຫ້ອງການລັດ, ອົງການຈັດຕັ້ງ ພາຍໃນ, ແຂວງ, ເມືອງ | 607 ຊຸດ |
| ແຟ້ມໃສ່ເອກະສານ | ອົງການລັດ, ອົງການຈັດຕັ້ງພາຍໃນ, ແຂວງ ແລະ ເມືອງ | 4.316 ອັນ |
| ປຶ້ມບັນທຶກ ແລະ ບິກ | ອົງການລັດ, ອົງການຈັດຕັ້ງພາຍໃນ, ແຂວງ ແລະ ເມືອງ | 4,200 & 4,200 ແຕ່ລະຢ່າງ |
| ບົດເພັງເປັນຊີດີ (10 ເພັງ) | ໃຫ້ອົງການລັດ, ອົງການຈັດຕັ້ງພາຍໃນ/ອົງການຈັດຕັ້ງສາກົນ, ຊາວບ້ານ | 32 |
| ວິທະຍຸ | ອົງການລັດ, ພະນັກງານ, ອົງການຈັດຕັ້ງທຸກຂັ້ນ... | 1 ສະຖານນີ |
| ບິກ, ສໍ | ອົງການລັດ, ພະນັກງານ ທລຍ ແຂວງ ແລະ ເມືອງ ໃຊ້ກັບ ຊາວບ້ານ | 850 ກ້ານ |
| ປຶ້ມສະຫລຸບຫຍໍ້ –ເປັນພາສາລາວ | ອົງການລັດ, ພະນັກງານ ປະສານງານເຂດ, ທີມງານເຂດ | 1,600 |
| ກະແສດເພັງ ທລຍ | ໃຫ້ອົງການລັດ, ອົງການຈັດຕັ້ງພາຍໃນ/ອົງການຈັດຕັ້ງສາກົນ, ຊາວບ້ານ | 12 |

ລາຍລະອຽດຂອງການນຳໃຊ້ເຄື່ອງແຕ່ລະຢ່າງມີດັ່ງນີ້:

- **ບົດເພັງ**

ບົດເພັງ ທລຍ ທັງໝົດມີ 10 ເພັງ (ມີໜຶ່ງເພັງເປັນບົດເພັງຂັບເຜົ່າ) ເຊິ່ງຖືກແຕ່ງດ້ວຍ ພະນັກງານຂອງ ທລຍ ແລະ ການຊ່ວຍເຫລືອຈາກຜູ້ແຕ່ງເພັງຈາກຂ້າງນອກ.ຮູບແບບແນວຄິດຂອງເພັງ

ແມ່ນຖືກຮັບຮອງເອົາຈາກສະພາບໍລິຫານ ຂອງ ກອງທຶນຫລຸດຜ່ອນຄວາມທຸຍາກເຊິ່ງ ທລຍ ໄດ້ນຳໃຊ້ປຶດເພັງ ດັ່ງກ່າວເພື່ອເປັນການໂຄງສະນາກ່ຽວກັບຈຸດປະສົງ ແລະ ຫລັກການຂອງ ທລຍ, ເຊິ່ງຊີດີເພັງໄດ້ຖືກແຈກຢາຍໄປໃຫ້ອົງການຈັດຕັ້ງລັດໃນສູນກາງ ແລະ ຂັ້ນແຂວງ, ຕົກມາຮອດປະຈຸບັນ ປະກົດວ່າປຶດເພັງດັ່ງກ່າວແມ່ນໄດ້ຮັບຄວາມນິຍົມຊົມຊອບຈາກຊຸມຊົນກໍ່ຄືຊາວບ້ານຢ່າງບໍ່ກ້ວາງຂວາງ.

.

- **ແຜ່ນພິກ**

ແຜ່ນພິກຂອງ ທລຍ ໄດ້ຖືກຜະລິດເພື່ອໃຊ້ສຳລັບກອງປະຊຸມພົບປະສະມາຄົມຂັ້ນແຂວງ, ຂັ້ນເມືອງ, ຂັ້ນເຂດ, ຂັ້ນບ້ານ ແລະ ແຈກຢາຍໃຫ້ພາກສ່ວນຕ່າງໆ ທີ່ມີຄວາມສົນໃຈຕໍ່ການຈັດຕັ້ງປະຕິບັດໂຄງການຂອງ ທລຍ, ເຊິ່ງແຜ່ນພັບດັ່ງກ່າວໄດ້ປະກອບດ້ວຍຮູບພາບປະກອບ ແລະ ມີປຶດຄວາມກ່ຽວກັບຈຸດປະສົງ, ຫລັກການ ແລະ ຂັ້ນຕອນຂອງ ທລຍ ທີ່ສາມາດເຮັດໃຫ້ທຸກຄົນເຂົ້າໃຈ.

- **ປຶດສະເຕີ, ແຜ່ນພັບ, ຄູ່ມື**

ຫລາຍໆປຶດສະເຕີໄດ້ຖືກສ້າງຂຶ້ນ ເຊິ່ງເນື້ອໃນແມ່ນປະກອບມີແບບແຜນວິທີການຈັດຕັ້ງປະຕິບັດ, ຫລັກການ, ຂັ້ນຕອນ ແລະ ວົງຈອນກິດຈະກຳ ຂອງ ທລຍ, ໃນນີ້ລວມທັງປຶດສະເຕີ້ທີ່ສະແດງເຖິງກິດຈະກຳ ທີ່ບໍ່ໄດ້ຮັບການສະໜັບສະໜູນຈາກ ທລຍ, ໂດຍປຶດສະເຕີ້ຕ່າງໆທີ່ກ່າວມານີ້ແມ່ນໄດ້ນຳໃຊ້ຄຽງຄູ່ກັບ ແຜ່ນພັບເວລາຈັດກອງປະຊຸມພົບປະສະມາຄົມຢູ່ຂັ້ນຕ່າງໆ, ເພື່ອອະທິບາຍ ແລະເປັນສິ່ງປະຈັກຕາ ໃຫ້ແກ່ທຸກຄົນທີ່ໃຫ້ຄວາມສົນໃຈຕໍ່ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ໃນທຸກຂັ້ນຕອນ.

.

- **ແຜ່ນພັບ**

ແຜ່ນພັບຂອງ ທລຍ ໄດ້ເຮັດອອກເປັນ 2 ພາສາ ຄື: ພາສາລາວ ແລະ ພາສາອັງກິດ, ແລະເຊັ່ນດຽວກັນກັບ ປຶດສະຫລຸບຄູ່ມືຈັດຕັ້ງປະຕິບັດຂອງ ທລຍ ໂດຍຫຍໍ້ (ປະມານ 10 ໜ້າ) ຊຶ່ງເຊັ່ນດຽວແມ່ນເຮັດເປັນ 2 ພາສາ ຄື: ພາສາລາວ ແລະ ພາສາອັງກິດ, ໃນນີ້ຈະຊ່ວຍໃຫ້ຜູ້ທີ່ມີຄວາມສົນໃຈຕໍ່ການຈັດຕັ້ງກິດຈະກຳຂອງ ທລຍ ເຊັ່ນ: ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ເຂົ້າໃຈແຈ້ງວິທີການຈັດຕັ້ງປະຕິບັດຂອງ ທລຍ ຢ່າງເລິກເຊິ່ງ.

- **ກະດານຂ່າວ**

ກະດານຂ່າວໄດ້ສ້າງຂຶ້ນ ແລະ ຕັ້ງຢູ່ໃນຈຸດໃຈກາງເຂດຂອງທຸກເຂດທີ່ ທລຍ ຈັດຕັ້ງປະຕິບັດກິດຈະກຳຢູ່, ມີຈຸດປະສົງເພື່ອໃຫ້ຂະບວນການຕ່າງໆທີ່ຈັດຕັ້ງປະຕິບັດຮ່ວມກັບ ທລຍ ໃຫ້ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້, ຊຶ່ງມາຮອດໃນຮອບວຽນທີ 3 ນີ້ ມີຈຳນວນປະມານ 239 ແຫ່ງ, ໃນນີ້ເຂດຕ້ອງໄດ້ເອົາຂໍ້ມູນທຸກຢ່າງຂອງການຈັດຕັ້ງປະຕິບັດມາຕິດໄວ້ໃນກະດານຂ່າວນີ້ ເຊັ່ນ: ປະກາດແຈ້ງການ, ການໂອນງົບປະມານ, ການເຊັນສັນຍາ, ການຕັດສິນໃຈຮັບເອົາ ຫລື ປ່ຽນແປງໃດນຶ່ງ ແລະ ອື່ນໆ

ຢູ່ໃນການດ້ານຂ່າວຍັງປະກອບມີ ຕູ້ຮັບຄຳຮ້ອງທຸກ, ໃນນີ້ໝາຍຄວາມວ່າ ເມື່ອຊາວບ້ານ ຫລື ຜູ້ທີ່ໄດ້ຮັບຜົນປະໂຫຍດເຫັນວ່າເກີດຄວາມບໍ່ໂປ່ງໃສໃນຂັ້ນຕອນຂອງການຈັດຕັ້ງປະຕິບັດ ຫລື ການນຳໃຊ້ງົບປະມານຕ່າງໆ ກໍ່ສາມາດເອົາຄຳຄິດເຫັນຂອງຕົນມາປ່ອນໃນຕູ້ນີ້ໄດ້ ແລະ ມີໜ່ວຍງານຮັບຜິດຊອບໃນການໄກ່ເກ່ຍບັນຫາ ຄືປະຈຸບັນ ແມ່ນມອບໃຫ້ອຳນາດການປົກຄອງທ້ອງຖິ່ນ ຂັ້ນບ້ານ, ຂັ້ນເຂດ, ຂັ້ນເມືອງ ແລະ ຂັ້ນແຂວງ ເປັນຜູ້ຮັບຜິດຊອບ.

- ວາລະສານ

ວາລະສານຂອງ ທລຍ ໄດ້ພິມອອກເປັນ 2 ພາສາ ຄື: ພາສາລາວ ແລະ ພາອັງກິດ ເພື່ອແຈກຢາຍໃຫ້ພາກສ່ວນຕ່າງໆທີ່ມີຄວາມສົນໃຈ ແລະ ເປັນການກະຈາຍຂໍ້ມູນຂ່າວສານການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ໃຫ້ພາກສ່ວນທີ່ມີຄວາມສົນໃຈຈາກຂ້າງນອກຮັບຊາບ ແລະ ອີກດ້ານນຶ່ງຍັງເປັນການລະດົມເອົາການຊ່ວຍເຫລືອ ແລະ ງົບປະມານ ຈາກຂ້າງນອກຕື່ມອີກ.

- **ເວັບໄຊ**

ເວັບໄຊຂອງ ທລຍ (www.prflaos.org ) ແມ່ນຖືກພັດທະນາ ແລະ ອອກແບບດ້ວຍການປະສານສົມທົບຂອງຜູ້ຮັບຜິດຊອບດ້ານເຕັກໂນໂລຢີພາຍໃນ ທລຍ ແລະ ທີ່ປຶກສາຈາກຂ້າງນອກ, ຂໍ້ມູນຕ່າງໆໄດ້ສົ່ງເຂົ້າໃນເວັບໄຊແມ່ນກ່ຽວກັບຂໍ້ມູນໂຄງການ, ຮູບພາບສະແດງກິດຈະກຳ ທລຍ ໃນແຕ່ລະແຂວງເຊິ່ງເວັບໄຊນັ້ນໄດ້ເລີ່ມໃຊ້ໃນຕົ້ນປີ 2004 ຂໍ້ມູນຕ່າງໆ ຈະໄດ້ປ້ອນເຂົ້າໃນເວັບໄຊທຸກໆ 3 ເດືອນ.

.

- **ວິທະຍຸກະຈາຍສຽງ**

ວິທະຍຸກະຈາຍສຽງແມ່ນເຄື່ອງມືອັນນຶ່ງຂອງ ການກະຈາຍຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ, ຊຶ່ງການກະຈາຍສຽງດັ່ງກ່າວແມ່ນໄດ້ເຮັດທົດລອງໃນ ເດືອນ ມີນາ ປີ 2003 ແລະ ໄດ້ກະຈາຍສຽງຢ່າງເປັນທາງການໃນເດືອນ ເມສາ ປີ 2003 ເປັນຕົ້ນໄປ, ໂດຍນຳໃຊ້ວິທະຍຸກະຈາຍສຽງແຫ່ງຊາດ ເປັນບ່ອນໃຫ້ການບໍລິການ, ໃນນີ້ປະເພດການໃຫ້ການກະຈາຍຂໍ້ມູນຂ່າວສານແມ່ນມີ 3 ປະເພດຄືດັ່ງລຸ່ມນີ້:

- ເພື່ອເພີ່ມຄວາມຮັບຮູ້ໃຫ້ປະຊາຊົນໃນຮູບແບບການຈັດຕັ້ງປະຕິບັດຂອງ ທລຍ ແມ່ນຕ້ອງການການມີສ່ວນຮ່ວມຈາກປະຊາຊົນໃຫ້ຫລາຍທີ່ສຸດ
- ຮູບແບບທີສອງ ແມ່ນເພີ່ມຄວາມຮັບຮູ້ໃຫ້ປະຊາຊົນ ກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ປະຊາຊົນຜູ້ທີ່ເປັນເຈົ້າຂອງໂຄງການ ຕ້ອງເປັນເຈົ້າໃນການຈັດຕັ້ງປະຕິບັດ ແລະ ເປັນເຈົ້າຂອງໂຄງການ, ຕ້ອງເປັນຜູ້ຈັດຕັ້ງເພື່ອສະແດງໃຫ້ເຫັນເຖິງຄວາມໂປ່ງໃສ ແລະ ສາມາດກວດສອບໄດ້
- ເພື່ອໃຫ້ການຈັດຕັ້ງກິດຈະກຳຂອງຊຸມຊຸມໃນທ້ອງຖິ່ນເປັນໃບໜ້າໃໝ່, ບໍ່ຈັດຕັ້ງປະຕິບັດໃນແບບຄອງເດີມ ແຕ່ຈະຈັດຕັ້ງແບບມີຫົວຄິດປະດິດສ້າງ, ປະຊາຊົນເປັນຜູ້ຄິດ, ເປັນຜູ້ວາງແຜນ ໂດຍອີງໃສ່ພື້ນຖານການປຶກສາຫາລື ແລະ ໃຊ້ຄວາມຄິດຮ່ວມກັນ.

ການກະຈາຍສຽງດັ່ງກ່າວເປັນການສ້າງໂສມໜ້າໃຫ້ ທລຍ ເຮັດໃຫ້ປະຊາຊົນກໍ່ຄືການຈັດຕັ້ງທັງຫລາຍຮັບຮູ້ ແລະ ເຂົ້າໃຈລະອຽດກ່ຽວກັບວິທີການເຮັດວຽກ ແລະ ນະໂຍບາຍຕ່າງໆຂອງ ທລຍ , ຫລາຍອົງການຈັດຕັ້ງໄດ້ເຊື້ອເຊີນເອົາທີມງານ ທລຍ ເຂົ້າມາຮ່ວມໃນກອງປະຊຸມເພື່ອແລກປ່ຽນ ແລະ ສະແດງຄວາມຄິດເຫັນຕ່າງໆກ່ຽວກັບການເຮັດວຽກຫລຸດຜ່ອນຄວາມທຸກຍາກ.

**ເຄື່ອງມືກະຈາຍຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ ເຊັ່ນ**: ອຸບປະກອນ ແລະ ເຄື່ອງມືຕ່າງໆຂອງ ທລຍ ເຊັ່ນວ່າ ເສື້ອຢືດ, ປະຕິທິນແມ່ນຖືກໃຊ້ເພື່ອເພີ່ມຄວາມເຂົ້າໃຈໃນການຈັດຕັ້ງປະຕິບັດກິດຈະກຳ ໃຫ້ແກ່ຊຸມຊົນ, ຜູ້ທີ່ໃຫ້ຄວາມສົນໃຈ ແລະ ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ

### 3.3.3. ການຝຶກອົບຮົມ

ໃນທ້າຍປີ 2002 ເຖິງເດືອນມີນາ ປີ 2003, ແມ່ນໄດ້ຜະລິດອຸປະກອນ ແລະ ເຄື່ອງມືຂອງການຝຶກອົບຮົມໄດ້ສຳເລັດ,ສາມາດນຳ ໃຊ້ເຂົ້າໃນການຝຶກອົບຮົມເພື່ອກະກຽມເຂົ້າຝຶກອົບຮົມ ແລະ ຈັດກອງປະຊຸມກັບທີມງານ ທລຍ ທຸກຂັ້ນໃນ 3 ແຂວງ, 10 ເມືອງ (ໃນຮອບວຽນທີ I) ແລະ ສຳເລັດການຝຶກອົບຮົມເພື່ອເປັນຄູຝຶກ ສຳລັບທີມງານທຸກຄົນ ແລະ ການຝຶກອົບຮົມທັງໝົດແມ່ນໄດ້ປະຕິບັດຕາມລາຍລະອຽດທີ່ມີຢູ່ໃນປື້ມຄູ່ມື.



ໃນທ້າຍປີ 2004, ທລຍ ໄດ້ວາງແຜນທີ່ຈະຂະຫຍາຍກິດຈະກຳໄປອີກ 4 ເມືອງໃໝ່ (1 ເມືອງ ຢູ່ ແຂວງສະ ຫວັນນະເຂດ ແລະ 3 ແຂວງຢູ່ ແຂວງຫົວພັນ) ສະນັ້ນ, ອຸປະກອນ ແລະ ເຄື່ອງມືພ້ອມມທັງການລາຍງານຕ່າງໆ ຂອງການຝຶກອົບຮົມໃນການກະກຽມການຈັດຕັ້ງປະຕິບັດໂຄງການເປັນຕົ້ນວ່າ:ກິດຈະກຳທາງດ້ານສັງຄົມ, ການຝຶກອົບຮົມ, ການສ້າງຄວາມເຂັ້ມແຂງ ແລະ ອື່ນໆ ຈາກນັ້ນ, ໄດ້ມີການຈັດຝຶກອົບຮົມໃຫ້ທີມງານໃໝ່ໃນ 4 ເມືອງດັ່ງກ່າວເພື່ອໃຫ້ເຂົາເຈົ້າເຂົ້າໃຈກ່ຽວກັບຮູບແບບ ແລະ ຂັ້ນຕອນໃນການເຮັດວຽກຂອງ ທລຍ ເຊິ່ງເອກະສານສຳລັບການຝຶກອົບຮົມມີດັ່ງນີ້:

**ຕາຕະລາງ 22**: ການຈັດຝຶກອົບຮົມ ໃນຮອບວຽນ **I - II, 2003-05**

| ປະເພດຝຶກອົບຮົມ | ຜູ້ເຂົ້າຮ່ວມ | ຜູ້ຍິງເຂົ້າຮ່ວມ | ຂັ້ນຕອນຝຶກ | ບັນຫາ | ວິທີແກ້ໄຂ |
|---|---|---|---|---|---|
| ຕຳແຜ່ນ | 8 | 8 | ສືບຕໍ່ຕຳແຜ່ນ ເປັນກຸ່ມ ເພື່ອຂະຫຍາຍ ໃຫ້ ທົ່ວ ເມືອງ | ຂາດທຶນ | ຄວນເພີ່ມທຶນເພື່ອຍົກຄຸນນະພາບຂອງການຕຳແຜ່ນ |
| ຝຶກອົບຮົມລ້ຽງສັດ | 18 | 1 | ສຳລັບສັດລ້ຽງ ແລະ ສັດທີ່ສະຫງວດໄວ້ | ມັນເປັນສິ່ງທ້າຍຫລາຍ, ຊຸມຊົນຕ້ອງການຫ | ທລຍ ຄວນສ້າງຈຸດທົດລອງເສຍກ່ອນ |

| | | | | | |
|---|---|---|---|---|---|
| | | | | ລາຍ | |
| 3.ກຸ່ມທ້ອນເງິນ ຂັ້ນບ້ານ | 95 | 24 | ມີຫລາຍບ້ານແມ່ນໄດ້ຈັດຕັ້ງ ປະຕິບັດ ແລະ ປະຊາຊົນ ແມ່ນໄດ້ເລີ່ມຕົ້ນເອົາເງິນມາ ຝາກ ແລະ ກູ້ຢືມແລ້ວ | | |
| 4.ອຸປະກອນການ ແພດ | 16 | 4 | ຍົກລະດັບຄຸນນະພາບ ຂອງ ການບໍລິການ | | |
| 5. ການປູກຝັງ ແລະ ລ້ຽງສັດ | 217 | 32 | ເພີ່ມລາຍຮັບໃຫ້ຊຸມຊົນ ແລະ ຍົກຄຸນນະພາບຂອງ ຜົນຜະລດິ, ການຝາກ ແລະ ຢືມ ເພື່ອສ້າງຕັ້ງກຸ່ມ | ທຶນໜ້ອຍ ແລະ ບໍ່ ມີທຶນ ໃນການຕິດ ຕາມ | ຄວນເພີ່ມທຶນ ໃນການ ຕິດຕາມຫລັງຈາກຝຶກ ອົບຮົມ |
| 6. ການປ້ອງກັນ ແລະ ແກ້ໄຂຂໍ້ຂັດ ແຍ່ງ | | | ສຳເລັດໃນ ສາມແຂວງ ຊຸມຊົນເຂົ້າໃຈ ແລະ ສາມາດ ແກ້ໄຂບັນຫາຂອງເຂົາເອງ | ຍັງ 2 ແຂວງໃໝ່ບໍ່ ທັນໄດ້ຝຶກອົບຮົມ | ຕ້ອງຈັດຝຶກອົບຮົມໃຫ້ 2 ແຂວງໃໝ່ |
| 7. ຝຶກອົບຮົມໃຫ້ ທລຍ ທັງໝົດ | | | ພະນັກງານ , ທລຍ ທັງໝົດ ໄດ້ຝຶກອົບຮົມ ດ້ວຍທີມງານ ທລຍ ໃນ ພາຍໃນ ແລະ ນອກ ຫລາຍວິຊາ | ທຶນຍັງບໍ່ທັນ ພຽງພໍສຳລັບຝຶກ ອົບຮົມເລື່ອງເຕັກ ໂນໂລຊີ, ຂາດທຶນ ສຳລັບການຄົ້ນ ຄວ້າ, ບາງ ພະນັກງານ ຂາດ ປະສົບດ້ານການ ພັດທະນາຊຸມຊົນ | ຈັດຝຶກອົບຮົມ ໃຫ້ທີ ມງານພັດທະນາຊຸມຊົນ –ແລະ ໃຫ້ມການແລກ ປ່ຽນປະສົບການ ລະຫວ່າງທີມງ ທລຍ ແລະ ຂັ້ນ |
| 8. ການປົກປັກ ຮັກສາສິ່ງແວດ ລ້ອມ | 500 | 200 | 3 ແຂວງເກົ່າ | ທຶນໜ້ອຍ | ຄວນເພີ່ມທຶນຕື່ມ |
| 9. ຝຶກອົບຮົມການ ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງຮັກສາ | | | 3 ແຂວງເກົ່າ | ທຶນໜ້ອຍ | ຄວນເພີ່ມທຶນຕື່ມ |

**ຕາຕະລາງ 23**: ປະເພດຂອງເຄື່ອງມືສຳລັບການຝຶກອົບຮົມໃນຮອບວຽນ **I - II, 200305**

| **ປະເພດເອກະສານ** | **ແຈກຢາຍ** |
|---|---|
| ຄູ່ມືຈັດກອງປະຊຸມຂັ້ນຕ່າງໆ | ພະນັກງານ ທລຍ ແລະ ປະສານເຂດ ໃນກອງປະຊຸມ |

| | |
|---|---|
| ຄູ່ມືສຳລັບຄູຝຶກ | ພະນັກງານ ທລຍ ແລະ ປະສານງານເຂດ ນຳໃຊ້ໃນການກອງປະຊຸມ |
| ຄູ່ມືໃນການສ້າງ ແລະ ບົວລະບັດຮັກສາ ເສັ້ນທາງ, ຄອງລະບາຍນ້ຳ ແລະ ຂົວ | ຫ້ອງການລັດ, ອົງການຈັດຕັ້ງພາຍໃນ ແລະຊາວບ້ານ |
| ຄູ່ມືໃນການກໍ່ສ້າງ ແລະ ບົວລະບັດຮັກສາ ລະບົບຊົນລະປະທານ | ຫ້ອງການລັດ, ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນ ພະນັກງານ ທລຍ ທີມງານເຂດ ແລະ ຊາວບ້ານ |
| ຄູ່ມືຈັດຕັ້ງປະຕິບັດ ແລະ ບົວລະບັດຮັກສາລະບົບນ້ຳປະປາຊຸມຊົນ | ຫ້ອງການລັດ, ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນ ພະນັກງານ ທລຍ ທີມງານເຂດ ແລະ ຊາວບ້ານ |
| ຄູ່ມືໃນການກໍ່ສ້າງ ແລະ ບົວລະບັດຮັກສາ ໂຮງຮຽນ ແລະ ສິ່ງກໍ່ສ້າງຕ່າງໆ | ຫ້ອງການລັດ, ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນ ພະນັກງານ ທລຍ ທີມງານເຂດ ແລະ ຊາວບ້ານ |
| ຄູ່ຝຶກອົບຮົມ ລ້ຽງສັດ ແລະ ວິທີປ້ອງກັນ ພະຍາດຕ່າງໆ | ຫ້ອງການລັດ, ຜູ້ປະກອບທຸລະກິດ, ຊາວກະສິກອນ ຄູສອນ ນັກຮຽນ, ກຳມະກອນ ແລະ ຊາວບ້ານ |
| ການລ້ຽງໝູ ແລະ ປ້ອງກັນພະຍາດ ແລະ ທຳໜັນໃຫ້ສັດ | ຫ້ອງການລັດ, ຜູ້ປະກອບທຸລະກິດ, ຊາວກະສິກອນ ຄູສອນ ນັກຮຽນ, ກຳມະກອນ ແລະ ຊາວບ້ານ |
| ຄູ່ມືການລ້ຽງສັດປີກ, ປ້ອງກັນພະຍາດສັດ | ຫ້ອງການລັດ, ຜູ້ປະກອບທຸລະກິດ, ຊາວກະສິກອນ ຄູສອນ ນັກຮຽນ, ກຳມະກອນ ແລະ ຊາວບ້ານ |
| ຄູ່ມື ຂອງການບໍລິຫານ ແລະ ການເປັນຜູ້ນຳ | ຫ້ອງການລັດ, ພະນັກງານ ທລຍ ໃຊ້ກັບຊາວບ້ານ ແລະ ທີມ ງານເຂດ ... |
| ຄູ່ມືເລື່ອງບົດບາດຍິງຊາຍ ແລະ ການເຂົ້າເຖິງຊົນເຜົ່າ | ຫ້ອງການລັດ, ຜູ້ປະກອບທຸລະກິດ, ຊາວນາ, ຄູສອນ,ນັກຮຽນ, ກຳມະກອນ, ກຸ່ມຜູ້ອອກແຮງງານ, ຊາວບ້ານ... |
| ຄູ່ມື ໃນການປົກປັກຮັກສາ ແລະ ບໍລິຫານປ່າສະຫງວນ | ຫ້ອງການລັດ, ຜູ້ປະກອບທຸລະກິດ, ຊາວນາ, ຄູສອນ,ນັກຮຽນ, ກຳມະກອນ, ກຸ່ມຜູ້ອອກແຮງງານ, ຊາວບ້ານ... |
| ຄູ່ມື ຂອງການສົ່ງເສີມບົດບາດຍິງຊາຍ ແລະ ຊົນຊາດຊົນເຜົ່າ | ຫ້ອງການລັດ, ພະນັກງານ ທລຍ ເພື່ອໃຊ້ກັບຊາວບ້ານ –ແລະ ທີມງານເຂດ ... |
| ຄູ່ມື ສຳລັບການປ້ອງກັນ ບັນຫາພ້ອມວິທີແກ້ໄຂບັນຫາ | ຫ້ອງການລັດ, ພະນັກງານ ທລຍ ເພື່ອໃຊ້ກັບຊາວບ້ານ –ແລະ ທີມງານເຂດ ... |
| ຄູ່ມື ການເງິນ ແລະ ການບໍລິຫານ | ພະນັກງານ ທລຍ ໃຊ້ກັບຊາວບ້ານ ແລະ ທີມງານເຂດ |
| ກົດລະບຽບການບໍລິຫານ ແລະ ການເງິນ | ພະນັກງານ ທລຍ ໃຊ້ກັບຊາວບ້ານ ແລະ ທີມງານເຂດ |
| ແບບຟອມການເງິນ ແລະການບໍລິຫານ | ພະນັກງານ ທລຍ ໃຊ້ກັບຊາວບ້ານ ແລະ ທີມງານເຂດ |
| ລະບຽບການໂອນເງິນໄປສູ່ຊຸມຊົນ | ພະນັກງານ ທລຍ ໃຊ້ກັບຊາວບ້ານ ແລະ ທີມງານເຂດ |
| ກຸ່ມທ້ອນເງິນຂັ້ນບ້ານ | ພະນັກງານ ທລຍ ໃຊ້ກັບຊາວບ້ານ ແລະ ທີມງານເຂດ |

**ຈຸດດີຂອງການຝຶກອົບຮົມ**

- ການຝຶກອົບຮົມ ຖືວ່າມີການກະກຽມສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍເປັນຢ່າງດີ, ເພາະວ່າ ທີມງານງານ ທລຍ ຂັ້ນແຂວງ ແລະ ຂັ້ນເມືອງ, ປະສານງານເຂດ, ຕົວແທນເຂດ, ທີມງານເຂດໃນທຸກ ເຂດແມ່ນໄດ້ຝຶກອົບຮົມຮູບແບບຂອງການຝຶກອົບຮົມແມ່ນຖືກອອກແບບ ແລະ ກະກຽມໂດຍທີມງານ ທລຍ ຂັ້ນສູນກາງບໍ່ພຽງແຕ່ເປັນທິດສະດີເທົ່ານັ້ນ, ແຕ່ໄປຄຽງຄູ່ກັນລະຫວ່າງທິດສະດີ ແລະ ການ

ປະຕິບັດຕົວຈິງ, ຫລັງຈາກການຝຶກອົບຮົມຜູ້ເຂົ້າຮ່ວມສາມາດນຳເອົາຄວາມຮູ້ຕ່າງໆໄປນຳໃຊ້ໃນທ້ອງຖິ່ນເຂົາເຈົ້າ ແລະ ເພື່ອຊ່ວຍທີມງານ ທລຍ ຂັ້ນແຂວງ ແລະ ຂັ້ນເມືອງ

- ທີມງານ ທລຍ ຂັ້ນເມືອງໄດ້ຊ່ວຍພະນັກງານແຂວງໃນການຂະຫຍາຍການຝຶກອົບຮົມໃນຫລາຍຮູບແບບເປັນຕົ້ນແມ່ນການເປັນອາສາສະໝັກຂັ້ນເມືອງ, ເຂດ ແລະ ບ້ານການກວດສອບຄວາມໂປ່ງໃສ, ການຈັດຊື້-ຈັດຈ້າງການກໍ່ສ້າງ, ການດຳເນີນງານ ແລະ ບຳລຸງ,ດ້ານກະສິກຳ,ຈິດຈະກຳສ້າງລາຍຮັບ ການປ້ອງກັນບັນຫາ ແລະ ວິທີແກ້ໄຂບັນຫາ ແລະ ວິທີແກ້ໄຂ, ການຕິດຕາມ ແລະ ປະເມີນຜົນບົດບາດຍິງຊາຍ ແລະ ຊົນຊາດຊົນເຜົ່າຕ່າງໆ
- ການກະກຽມການຝຶກອົບຮົມແມ່ນຖືກຈັດກຽມຢ່າງດີ ແລະ ເປັນໜ້າເພິ່ງພໍໃຈຫລາຍ, ເນື່ອງຈາກວ່າຜູ້ເຂົ້າຝຶກອົບຮົມສາມາດເຂົ້າໃຈດີກ່ຽວກັບນະໂຍບາຍຂອງ ທລຍ, ຍຸດທະສາດ ແລະ ເຄື່ອງມືການນຳໃຊ້ຕັ້ງແຕ່ເລີ່ມຕົ້ນໂຄງການຈົນເຖິງປະຈຸບັນ.
- ຜົນຂອງການຝຶກອົບຮົມດ້ານກິດຈະກຳສ້າງລາຍວຮັບແມ່ນມີປະສິດທິພາບສູງເພາະຜູ້ຖືກຝຶກອົບຮົມສາມາດນຳໃຊ້ຄວາມຮູ້ທີ່ໄດ້ຮັບໄປໝູນໃຊ້ໃນການຜູ້ນຳຂອງເຂົາເຈົ້າ.
- ເຄື່ອງມື, ອຸປະກອນ, ຂໍ້ມູນຕ່າງໆສາມາດນຳໃຊ້ເຂົ້າໃນການຝຶກອົບຮົມໄດ້ຫລາຍກິດຈະກຳຢ່າງມີປະສິດຕິຜົນ.

**ບັນຫາ:**

- ທຶນນຳໃຊ້ເຂົ້າການຝຶກອົບຮົມພໍ່ພຽງພໍ
- ຍັງຂາດການປະເມີນຫລັງຈາກການຝຶກອົບຮົມສຳເລັດ.
- ສ່ວນໃຫຍ່ຊຸມຊົນສະເໜີການຝຶກອົບຮົມກ່ຽວກັບທັກສະໃນການບໍລິຫານທຶນເພື່ອຍົກລະດັບລາຍຮັບຂອງຄົວເຮືອນ, ແຕ່ວ່າທີມງານ ທລຍ ຍັງຂາດປະສົບການໃນດ້ານດັ່ງກ່າວ;
- ຫລັງຈາກການຝຶກອົບຮົມແລ້ວເຂົາເຈົ້າບໍ່ມີທຶນທີ່ຈະສືບຕໍ່ໃນການປະຕິບັດຕົວຈິງກ່ຽວກັບບົດຮຽນທີ່ໄດ້ມາ.
- ຈຳນວນຜູ້ຊາຍໄດ້ມີການຝຶກອົບຮົມຫລາຍກວ່າຜູ້ຍິງ, ແລະ ການຝຶກອົບຮົມໃນບາງດ້ານທີ່ສຳຄັນແມ່ຍິງບໍ່ໄດ້ເຂົ້າຮ່ວມເນື່ອງຈາກວ່າແມ່ຍິງສ່ວນໃຫຍ່ແມ່ນການສຶກສາຕ່ຳ ແລະ ຊຸມຊົນຂອງພວກເຂົາບໍ່ມີຄວາມຮູ້ພຽງພໍ;ສຳລັບການກະຕຸ້ນໃຫ້ເກີດມີກິດຈະກຳສ້າງລາຍຮັບ ແລະ ສິ່ງເສີມບົດບາດຍິງ-ຊາຍ;
- ບາງຊຸມຊົນແມ່ຍັງບໍ່ມີບູລິມະສິດໃນການຕັດສິນໃຈກ່ຽວກັບກິດຈະກຳຕ່າງໆ ຍ້ອນວ່າເຂົາເຈົ້າຍັງຂາດທັກສະໃນຄວາມເປັນຜູ້ນຳ ແລະ ຄວາມເທົ່າທຽມກັນລະຫວ່າງ ຍິງ-ຊາຍ;
- ການແລກປ່ຽນປະສົບການຍັງບໍ່ທັນຖືກຈັດຂຶ້ນໃນຂັ້ນຊຸມຊົນ ແລະ ພະນັກງານ ທລຍ ຍັງຂາດປະສົບການໃນການພັດທະນາຊຸມຊົນ;
- ພະນັກງານ ທລຍ ຍັງຂາດປະສົບການ;
- ຍັງມີບັນຫາໃນການຈັດຊື້-ຈັດຈ້າງໂດຍສະເພາະແມ່ນ ການເຮັດສັນຍາໃນການບໍລິການໃນການຝຶກອົບຮົມດ້ານຊົນລະປະທານ, ຫັດຖະກຳ ແລະ ກິຈະກຳສ້າງລາຍຮັບໃນເຂດທີ່ຢູ່ຫ່າງໄກຊອກຫລີກ;

**ວິທີການແກ້ໄຂ ແລະ ຂໍ້ແນະນຳຕ່າງໆ**

1. ຄວນຍົກງົບປະມານ ແລະ ການຝຶກອົບຮົມໄປເປັນໂຄງການຍ່ອຍໜຶ່ງຕ່າງຫາກເພາະວ່າການຝຶກອົບຮົມແມ່ນພົວພັນໄປເຖິງການພັດທະນາຊັບພະຍາກອນມະນຸດ, ເຊິ່ງມັນປະກອບມີຫລາຍໆກິດຈະກຳທີ່ຈັດຕັ້ງປະຕິບັດ ແລະ ກໍເປັນການຈ່າຍສຳລັບການບໍລິຫານ ແລະ ກະກຽມການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ແລະໃຫ້ປະສິດທິພາບກໍຄື ຜົນຂອງການຝຶກອົບຮົມແມ່ນຍັງບໍ່ໄດ້ດີ .
2. ຫລັງຈາກຝຶກອົບຮົມແລ້ວ ທີມງານ ທລຍ ຂັ້ນແຂວງ ແລະ ເມືອງຄວນຕິດຕາມ ແລະ ນຳໃຊ້ທັກສະຄວາມຮູ້ທີ່ໄດ້ຮັບສຳລັບການຝຶກອົບຮົມໄປພັດທະນາຊຸມຊົນ.
3. ຄວນແຍກການຝຶກອົບຮົມກ່ຽວກັບກອງທຶນຂັ້ນບ້ານ, ການປົກປັກຮັກວາສິ່ງແວດລ້ອມທີ່ພົວພັນເຖິງການ ສ້າງລາຍຮັບໄປຄຽງຄູ່ກັບການກະຈາຍຂໍ້ມູນຂ່າວສານເຊິ່ງມີຄວາມສຳພັນ .
4. ຄວນສະໜອງທຶນໃຫ້ຊຸມຊົນໄປທຳການຈັດຕັ້ງປະຕິບັດກິດຈະກຳທີ່ເຂົາເຈົ້າໄດ້ທຳການຝຶກອົບຮົມມາຢ່າງເໝາະສົມສຳລັບການພັດທະນາຊຸມຊົນຂອງເຂົາເຈົ້າ, ທີມງານຂັ້ນແຂວງ ແລະ ເມືອງຄວນຈະເປັນທີມງານທີ່ສະໜັບສະໜູນ ແລະ ຕິດຕາມການຈັດຕັ້ງປະຕິບັດຂອງຊຸມຊົນໃນຂັ້ນຕົ້ນ,ຊ່ວຍທີມງານໃນການຊອກຫາການຕະຫລາດ, ວິທີການບໍລິຫານ ແລະ ຜົນຜະລິດຂອງເຂົາເຈົ້າສາມາດແກ້ໄຂບັນຫາທີ່ຕ້ອງປະເຊີນໃນກາງຈັດຕັ້ງປະຕິບັດວຽກງານເມື່ອຊຸມຊົນສາມາເຂົ້າໃຈ ແລະ ບໍລິຫານເຂົາເຈົ້າເອງແລ້ວຈິ່ງປ່ອຍໃຫ້ເຂົາເຈົ້າດຳເນີນການເອງຕໍ່ໄປ.
5. ການກະຈາຍຂໍ້ມູນ ເພື່ອສົ່ງເສີມບົດບາດຍິງ-ຊາຍ ໃຫ້ຫລາຍຂຶ້ນຕື່ມເປັນຕົ້ນແມ່ນຊຸມຊົນໃນເຂດຊົນນະບົດເພື່ອປຸກລະດົມແນວຄິດຂອງເຂົາເຈົ້າໃຫ້ເຂົ້າໃຈກ່ຽວກັບບົດບາດເຫລົ່ານັ້ນ ແລະ ເພື່ອໃຫ້ຜູ້ຍິງມີບຸລິມະສິດໃນການເຂົ້າຮ່ວມປະຊຸມ.
6. ຄວນຈັດໃຫ້ມີການແລກປ່ຽນປະສົບການຂັ້ນຊຸມຊົນ ແລະ ມີງານ ທລຍ ທັງພາຍນອກ ແລະ ພາຍໃນເພື່ອຮຽນຮູ້ກ່ຽວກັບການບໍລິຫານໂຄງການ ແລະ ຍົກລະດັບຄຸນນະພາບຂອງຜົນຜະລິດ ແລະ ການຕະຫລາດເພາະພື້ນຖານຄວາມຮູ້ເຂົ້າໃນດ້ານ ດັ່ງກ່າວແມ່ນໄດ້ຜ່ານການຝຶກອົບຮົມມາແລ້ວ.
7. ທລຍ ຄວນຮ່ວມມື ແລະ ປະສານສົມທົບກັບກະຊວງ ຫລື ຕົວແທນອື່ນເພື່ອສະໜອງການຝຶກອົບຮົມ ແລະ ໃຫ້ແຂວງ ແລະ ເມືອງ ຄືກັບຜູ້ຝຶກອົບຮົມ ໃນກໍລະນີ ທີ່ ທລຍ ບໍ່ສາມາດຫາຜູ້ບໍລິການຝຶກອົບຮົມໃນຂັ້ນເຂດ ແລະ ສູນກາງ

**3.3.4. ກິດຈະກຳສ້າງລາຍຮັບ**

**3.3.4.1. ການຝຶກອົບຮົມກິດຈະກຳສ້າງລາຍຮັບ**

ການຝຶກອົບຮົມກິດຈະກຳສ້າງລາຍຮັບແມ່ນໄດ້ພິຈາລະນາໃນກຸ່ມເປົ້າໝາຍໃນຂັ້ນບ້ານ ແລະ ຂັ້ນເຂດກັບຜູ້ທີ່ເຮັດວຽກໃນຊ່ວງເວລາກະທັດລັດກ່ຽວກັບກິດຈະກຳດັ່ງກ່າວໂດຍສະເພາະໃນກຸ່ມທີ່ໄດ້ກະກຽມຮຽບຮ້ອຍແລ້ວເຊັ່ນວ່າ:ສຳລັບການທ້ອນເງິນ ຫລື ກິດຈະກຳການຜະລິດ, ແລະ ຖ້າຫາກກຸ່ມເຫລົ່ານີ້ແມ່ນມີຄວາມເຂັ້ມແຂງພໍ (ການຈັດຕັ້ງ, ການເງິນ, ແລະ ການບໍລິຫານລວມ) ທລຍ ສາມາດສະໜັບສະໜູນທີ່ ເໝາະ ສົມລວມທັງການຊ່ວຍໃນສິ່ງທີ່ເປັນໄປໄດ້ເຊັ່ນ: ການຝຶກອົບຮົມ, ເຄື່ອງມື ຫລື ປັດໃຈຕ່າງໆ ການກະ ກຽມ ແລະ

ນຳສະເໜີຜົນຜະລິດ ແລະ ກ່ຽວພັນກັບການຕະຫລາດການຝຶກອົບຮົມດ້ານກິດຈະກຳສ້າງລາຍຮັບຕ້ອງມີຄວາມກະຈ່າງແຈ້ງ, ປະເມີນຄວາມຕ້ອງການ ແລະ ທ່າແຮງປົ່ມຊ້ອນທີ່ແທ້ຈິງ. ທລຍ ແມ່ນໄດ້ ນຳໃຊ້ການໂຄສະນາສຶກສາອົບຮົມໄປຕິດພັນກັບກິດຈະກຳຂອງສັງຄົມ ແລະ ນະໂຍບາຍການຝຶກອົບຮົມເຊິ່ງຈະເປັນການກະຈາຍການພົວພັນລະຫວ່າງຊາວບ້ານ/ເຂດ ແລະ ການກໍ່ສ້າງ, ການຈັດການຝຶກອົບຮົມ ແລະ ກຸ່ມການຕະຫລາດ/ອີງກາຈັດຕັ້ງທີ່ໜ້າຈະເປັນໄປໄດ້ອາດຈະເປັນການພົວພັນກັບສະພາການຄ້າເພື່ອຊອກ
ລາຍລະອຽດຕື່ມ.

### 3.3.4.2.ການຝຶກອົບຮົມ ການປົກປັກຮັກສາສິ່ງແວດລ້ອມ (NRC)

ການຝຶກອົບຮົມດັ່ງກ່າວໄດ້ຖືກຈັດຂື້ນໂດຍ ບໍລິສັດ ທີ່ປຶກສາ NCC, ທີ່ໄດ້ເຮັດສັນຍາກັບ ທລຍ ເຊິ່ງບໍລິສັດ NCC ໄດ້ເຮັດວຽກຕິດພັນກັບພະນັກງານ ທລຍ ເພື່ອເຮັດປື້ມຄູ່ມືສຳລັບການປົກປັກຮັກສາສິ່ງແລດລ້ອມ ແຕ່ເດືອນ ມິຖຸນາ-ກັນຍາ 2005, ເຊິ່ງປື້ມດັ່ງກ່າວແມ່ນຖືກໃຊ້ເພື່ອຝຶກອົບຮົມໃຫ້ພະນັກງານ ທລຍ ໃນການບໍລິຫານ ແລະ ນຳໃຊ້ຊັບພະຍາກອນທີ່ມີຢ່າງມີປະສິດທິຜົນ ແລະ ຍືນຍົງ. ການຝຶກອົບຮົມໄດ້ຈັດໂດຍ ທີມງານຂອງບໍລິສັດ NCC ເຊິ່ງໄດ້ຈັດຢູ່ໃນແຂວງລະໜຶ່ງເມືອງຈາກນັ້ນຜູ້ທີ່ໄດ້ຮັບການຝຶກອົບຮົມໃນແຕ່ລະເມືອງຈະນຳໃຄວາມຮູ້ທີ່ໄດ້ຈາກ ການຝຶກອົບຮົມ ຕໍ່ໃຫ້ທີມງານໃນຂັ້ນເຂດ ແລະ ບ້ານ ແລະ ການຝຶກອົບຮົມ ດ້ານການອະນຸລັກສິ່ງແວດລ້ອມ ໃນທຸກ ແຂວງທີ່ຍັງເລຫືອ ຈະຖືກຈັດຂື້ນໃນຮອບວຽນທີ III

ຫລັງຈາກການຝຶກອົບຮົມ ຊຸມຊົນສາມາດນຳໃຊ້ສິ່ງທີ່ຮຽນມານັ້ນໄປນຳໃຊ້ເຂົ້າໃນການບໍລິຫານ ແລະ ປົກປັກ ຮັກສາສິ່ງແລດລ້ອມດ້ວຍຕົວເຂົາເອງ, ຮອບປະຈຸບັນທັງວັງ ແລະ ປ່າສະຫງວນມັງໝົດໃນຮອດວຽທີສອງມີປະມານ 84 ເຂດ ຍົກເວັ້ນໂຊງເຂດທີ່ມີລະບົບ ການສະໜອງນຳ້ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດປະມານ 500 ຄົນ, ເປັນຍິງ 200 ຄົນ ໃນສາມແຂວງເກົ່າ ແລະ ຄາດວ່າຈຳນວນ ວັງສະຫງວນຈະເພີ່ມຂຶ້ນ ໃນຮອບວຽນຕໍ່ໄປທຽບໃສ່ໃນໄລຍະຜ່ານມາ

<u>**ຜົນທີ່ໄດ້ຮັບຈາກການຝຶກອົບຮົມ**</u>

ຜົນໄດ້ຮັບຂອງການຝຶກອົບຮົມດ້ານການອະນຸລັກສິ່ງແວດລ້ອມແມ່ນລ້ວນແຕ່ເປັນດ້ານດີ ເນື່ອງຈາກວ່າກ່ອນການຝຶກອົບຮົມໃນໂຊງເຂດດັ່ງກ່າວແມ່ນຖືກຄຸກຄາມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ຢ່າງຫລວງຫລາຍ ເຮັດໃຫ້ທຳມະຊາດຂາດຄວາມສົມບູນ, ແຕ່ອີງຕາມການລາຍງານຈາກເມືອງຫລັງຈາກ 6 ເດືອນຂອງການຝຶກອົບຮົມ ເຫັນວ່າໄດ້ເຂດວັງ ແລະ ປ່າສະຫງວດເຫລົ່ານັ້ນແມ່ນອຸດົມສົມບູນໄປດ້ວຍ ສັດສາວາສິ່ງ ແລະ ພືດພັນຍາຫານ ທີ່ສົມບູນຂຶ້ນຫລາຍ ທຽບໃສ່ຜ່ານມາ.

### 3.3.4.3. ກຸ່ມທ້ອນເງິນຂັ້ນບ້ານ ຫລື ກອງທຶນໝູນວຽນຂັ້ນບ້ານ

ກຸ່ມທ້ອນເງິນຂັ້ນບ້ານແມ່ນກິດຈະກຳໃໝ່ທີ່ລວມ ຢູ່ໃນກິດຈະກຳສ້າງລາຍຮັບ, ກິດຈະກຳນີ້ໄດ້ຈັດຂຶ້ນຢູ່ໃນຮອບວຽນສອງເຊິ່ງເປັນໂຄງການທົດລອງໃນສາມແຂວງເກົ່າ; ເຊິ່ງ ໄດ້ຈັດຕັ້ງເມືອງ ລະ ໜຶ່ງກຸ່ມເທົ່ານັ້ນ, ສຳລັບລາຍລະອຽດຈະໄດ້ລາຍງານໃນບົດລາຍງານຕໍ່ໄປ.

### 3.3.5. ສະຫລຸບລວມວຽກຂອງໜ່ວຍງານ

**ຈຸດດີ:**

- ຂັ້ນຕອນຂອງການຈັດຕັ້ງປະຕິບັດແມ່ນມີການກະກຽມເປັນຢ່າງດີ ມີຄວາມໂປ່ງໃສ ແລະ ສາມດກວດສອບໄດ້ ແລະ ຊຸມຊົນປະກອບສ່ວນສູງ
- ການຈັດກອງປະຊຸມແມ່ນໄດ້ດຳເນີນໄປຕາມຂັ້ນຕອນຂອງ ທລຍ

**ດ້ານອ່ອນ:**

- ຂັ້ນຕອນຂອງການກະກຽມຍັງໃຊ້ເວລາ ແລະ ງົບປະມານຫລາຍໂພດ ມີບາງຫົວຂໍ້ແມ່ນມີຜົນກະທົບດ້ານລົບ ຕໍ່ກິດຈະກຳຂອງຊຸມຊົນ ແລະ ທີມງານ ທລຍ ຂັ້ນເມືອງຍັງມີຈຳນວນຈຳກັດ.
- ໃນການສະໜັບສະໜູນຂອງ ທລຍ ໃນສອງຮອບວຽນທີ່ຜ່ານມາ ບາງໂຄງການ ທີ່ຊາວບ້ານມີຄວາມຕ້ອງການຫລາຍແຕ່ພັດບໍ່ໄດ້ຮັບການສະໜັບສະໜູນເນື່ອງຈາກວ່າເຂດດັ່ງອາດຈະຂາດປັດໃຈຫລາຍດ້ານ ຫລື ອາດຈະຄັດກັບຫລັກການຂອງທລຍ, ບາງເຂດບໍ່ສາມາດເລືອກກິດຈະກຳອື່ນໄດ້ອີກ.
- ພະນັກງານ ພັດທະນາຊຸມຊົນຍັງມີຄວາມຮູ້ຈຳກັດ ແລະ ຂາດປະສົບການ.
- ພະນັການພະນັກງານຊຸມຊົນໃນຂັ້ນເມືອງຍັງໃຊ້ເວລາສ່ວນໃຫຍ່ຊ່ວຍຕົວແທນເຂດທາງດ້ານບັນຊີ ແລະ ການເງິນເພາະວ່າທີມງານເຂດບໍ່ມີປະສົບການໃນວຽກດັ່ງກ່າວ ໂດຍສະເພາະ ແມ່ນຜູ້ຍິງ ແລະ ຊົນເຜົ່າສ່ວນ ນ້ອຍ.

***ຂໍ້ສະເໜີ ແລະ ແນະນຳ***

- ບາງຂັ້ນຕອນຂອງກອງປະຊຸມຄວນຈະຮ່ວມເຂົ້າກັນໄດ້ ເປັນຕອນດຽວເຊັ່ນ: 1.ກອງປະຊຸມຄວາມໂປ່ງໃສ ຂັ້ນເຂດ ກອງປະຊຸມໂຄງການຍ່ອຍ 2. ກອງປະຊຸມການປະເມີນຂັ້ນເຂດ ***ບວກ*** ກອງປະຊຸມຕັດສິນຄັ້ງສຸດທ້າຍ ***ບວກ*** ກອງປະຊຸມຢັ້ງຢືນຂອງເຂດ ທັງນີ້ກໍ່ເພື່ອການປະຢັດ ທັງເວລາ ແລະ ງົບປະມານ ທີ່ຮັບໃຊ້ໃນກອງປະຊຸມ ແລະ ຄວນຈະຮວມ 2-3 ເຂດ ເຮັດໃນເວລາດຽວກັນ.
- ໃນກອງປະຊຸມ
  ຈັດລຽງບຸລິມະສິດຂັ້ນເຂດຄວນຈະລຽງປະເພດຂອງກິດຈະກຳທີ່ເຫັນວ່າມີຄວາມຈຳເປັນ ແລະ ເຫັນດີກັບຊຸມຊົນ, ຖ້າວ່າຫາກມີ ທຶນ ພຽງພໍສຳລັບ ຫລາຍກວ່າໂຄງການທີ່ໃຫ້ຈາກອັນດັບທີ 1,2,3,4 ແລະ ແບບຟອມ K-SPPO ຄວນໄດ້ປັງ ປຸງ
- ພະນັກງານພັດທະນາຊຸມຊົນຄວນເພີ່ມພະນັກງານໃນກິດຈະກຳທີ່ ພົວພັນໄປເຖິງກິດຈະກຳ ທີ່ຈະກຳເປັນຕົ້ນ ເຊັ່ນ ພະນັກງານ ທີ່ຮັບຜິດຊອບ ກິດຈະກຳສ້າງລາຍຮັບ ແລະ ຝຶກອົບຮົມ ການລຽງສັດ ແລະ ປູກຝັງ
- ກິດຈະກຳຂອງ ທລຍ ຄວນຈະເພີ່ມການຮ່ວມມື ກຳຫລາຍໆ ອົງການ, ສະຖານບັນ ແລະ ອົງການຈັດຕັ້ງຂອງສັງຄົມ ໃນ ສປປລາວ ເປັນຕົ້ນ ສະຫະພັນແມ່ຍິງ, ອົງການຈັດຕັ້ງຊາວໜຸ່ມ, ກະຊວງປ້ອງກັນປະເທດ.

## 3.4. ໜ່ວຍງານຈັດຕັ້ງປະຕິບັດ ວຽກງານວິຊາການ ແລະ ການຈັດຊື້-ຈັດຈ້າງ

### 3.4.1. ພາບລວມຂອງໜ່ວຍງານ

**ກ. <u>ລະບົບຖານຂໍ້ມູນທົ່ວໜ່ວຍລາຄາ</u>**

ຂໍ້ມູນທາງດ້ານທົ່ວໜ່ວຍລາຄາສິນຄ້າ ແມ່ນຖືກເກັບກຳໃນທຸກໆທຶກເດືອນ ໃນຮອບວຽນໜຶ່ງຜ່ານມາ, ຂໍ້ມູນ ດັ່ງກ່າວແມ່ນຖືກເກັບ ກຳດ້ວຍທີມງານຂັ້ນເມືອງໂດຍປະສານສົມທົບກັບສະພາບການຄ້າເມືອງ, ເຊິ່ງຂໍ້ມູນ ທັງໝົດຈະຖືກສົ່ງ ມາໃຫ້ໜ່ວຍງານວິຊາການ ແລະ ຈັດຊື້-ຈັດຈ້າງຢູ່ ທລຍ ສູນກາງເພື່ອປ້ອນ ເຂົ້າລະບົບ ຖານຂໍ້ມູນ ນອກນັ້ນ, ທີ່ປຶກສາດ້ານວິຊາການຂັ້ນສູນກາງຈະກວດສອບ ແລະ ສຳເນົາສົ່ງໃຫ້ທີມງານຂັ້ນ ເມືອງ ເພື່ອຕິດຕາມໃນຊ່ວງການ ກະກຽມໂຄງການ, ເພື່ອຕີລາຄາ ແລະ ປຽບທຽບກັບລາ ຄາທີ່ຜູ້ສະໜອງ ຫລື ຜູ້ຮັບເໝາະສະເໜີມາ.

ໃນບາງແຂວງມີໜ່ວຍງານຂອງລັດຖະບານ ເພື່ອທຳການປະເມີນລາຄາທົ່ວໜ່ວຍເຊິ່ງມັນ ແຕກຕ່າງ ຈາກຂໍ້ມູນ ລາຄາທີ່ມີຢູ່ໃນຖານຂໍ້ມູນຂອງ ທລຍ, ສະນັ້ນ ລະບົບ UCD ຈຶ່ງມີຄວາມຈຳເປັນຕ້ອງ ມີການດັດປັບບາງຢ່າງເພື່ອ ເຮັດໃຫ້ໜ່ວຍງານວິຊາການສາມາດ ບໍລິຫານ ແລະ ຄຸ້ມຄອງຂໍ້ມູນໃຫ້ເໝາະສົມກັບ ລະບົບຖານຂໍ້ມູນຂອງ ທລຍ.

**ຂ. <u>ການຍົກລະດັບມາດຖານການອອກແບບໂຄງການຍ່ອຍ</u>**

ການອອກແບບໂຄງການຍ່ອຍທັງໝົດຂອງ ທລຍ ແມ່ນອີງຕາມມາດຕະຖານຂອງບັນດາກະຊວງຕ່າງໆ ທີ່ກ່ຽວຂ້ອງຄື: ກະຊວງຄົມມະນາຄົມຂົນສົ່ງ ແລະ ໄປສະນີ, ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ກະຊວງສຶກສາ, ກະຊວງກະສິກຳປ່າໄມ້ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ, ໃນຊ່ວງກອງປະຊຸມທົບທວນຄືນ ແລະ ສ້າງຄວາມເຂັ້ມແຂງໃຫ້ທີມງານ ທລຍ ປະຈຳປີ 2005 ທັງໝົດທີມງານທີ່ປຶກສາ ດ້ານວິຊາການ ຂັ້ນສູນກາງໄດ້ມີການປຶກສາຫາລືຮ່ວມກັບທຸກຂະແໜງການທີ່ກ່ຽວຂ້ອງໂດຍສະເພາະແມ່ນກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ກ່ຽວກັບ ການອອກແບບສິ່ງກໍ່ສ້າງຕ່າງໆ ເຊິ່ງຜົນຂອງການປຶກສາຫາລືໄດ້ມີຂໍ້ຕົກລົງກ່ຽວກັບມາດຕະຖານການກໍ່ສ້າງໂຄງການຍ່ອຍໃນແຕ່ລະດ້ານ ເຊັ່ນການສ້າງປຶ້ມ: "Standard Drawing of Small-scale Infrastructure, 1st Edition, and September 2005" ເຊິ່ງມີຮູບແບບຂອງສິ່ງກໍ່ສ້າງຕ່າງໆ

ຮູບແບບຂອງສິ່ງກໍ່ສ້າງຕ່າງໆ

1. ເຮືອນສຳລັບຄົນເຈັບ
2. ສຸກສາລາ ຖາວອນ
3. ສຸກສາລາເຄິ່ງຖາວອນ
4. ຕະຫລາດຊຸມຊົນ
5. ໂຮງຮຽນປະຖົມຖາວອນ
6. ໂຮງຮຽນປະຖົມ ເຄິ່ງຖາວອນ
7. ນ້ຳສ້າງ

11. ລະບົບນ້ຳລິນ
12. ວິດຖ່າຍ
13. ຝາຍນ້ຳລົ້ນ
14. ຂົວຈົມ
15. ຂົວເຫລັກ
16. ຂົວໄມ້
17. ຂົວອູ່

8. ນ້ຳສ້າງໃຊ້ແຮງປ້ຳ
9. ການອັດຮູນ້ຳບາດານ
10. ການປິດ-ເປີດຮູນ້ຳບາດານ
18. ຍົກລະດັບທາງຊົນນະບົດ
19. ທໍ່ສົ່ງນ້ຳ (ແບບມົນ)
20. ທໍ່ສົ່ງນ້ຳ (ແບບຫລ່ຽມ)

ນີ້ແມ່ນຄັ້ງທຳອິດສຳລັບ ການເລືອກປື້ມ ທີ່ໄດ້ແຕ້ມການອອກແບບລະອຽດຊຶ່ງຈະຖືກນຳໃຊ້ ໃນຮອບວຽນທີ III ພອມຈັດຕັ້ງປະຕິບັດຢູ່. ທັງໝົດຂອງການແຕ້ມກໍ່ຄືການອອກແບບຕ່າງໆໃນການຈັດຕັ້ງປະຕິບັດຕົວຈິງຈະຕ້ອງປະຕິບັດຕາມມາດຖານທີ່ໄດ້ອອກແບບແລ້ວເປັນຕົ້ນວ່າທາງດ້ານວັດຖຸອຸປະກອນຕ່າງໆ, ຂະໜາດ ທີ່ກຳນົດໄວ້ ແລະ ອື່ນໆ ພ້ອມນັ້ນກໍ ຕ້ອງຮັບປະກັນທາງດ້ານຄຸນນະພາບ ຂອງໂຄງການ ອີກ ດ້ວຍ.

ນອກຈາກນີ້ ກໍ່ຍັງມີການອອກແບບບາງຢ່າງ ທີ່ຕ້ອງໄດ້ມີການປັບປຸງໃຫ້ສົມບູນຂຶ້ນຕື່ມ ເພື່ອໃຫ້ແທດເໝາະກັບສະ ພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ ເປັນຕົ້ນວ່າ: ໂຮງຮຽນ, ສຸກສາລາປະຈຳບ້ານ, ຫລືລະບົບນ້ຳລິນ ເນື່ອງຈາກວ່າ ບາງເຂດຍັງບໍ່ມີເສັ້ນທາງ ທີ່ຂົນສົ່ງວັດ ຖຸດິບກໍ່ຄືອຸປະກອນການກໍ່ສ້າງຕ່າງໆ ຫລືບາງເຂດມີລາຄາຂອງວັດຖຸດິບສູງກວ່າທີ່ຄາດຄະເນໄວ້, ໃນກໍລະ ນີດັ່ງກ່າວທີມງານ ທລຍ ໄດ້ມີການປັບປຸງການອອກແບບ ແລະ ຄິດໄລ່ໃຫ້ແທດເໝາະກັບສະພາບຕົວຈິງ.

ໃນຕອນເລີ່ມຕົ້ນ ຂອງການຈັດຕປະຕິບັດວຽກງານ ທລຍ ໃນຮອບວຽນສາມ, ທລຍ ໄດ້ວາງ ແຜນ ທີ່ຈະປັບປຸງ ການອອກແບບໂຄງການຍ່ອຍໃນປື້ມຄູ່ມື ທີ່ໄດ້ເຮັດຂຶ້ນເພື່ອນຳ ໃຊ້ເຂົ້າໃນການຈັດຕັ້ງປະຕິບັດໃນຮອບວຽນທີ່ ສີ່ ແລະ ຫລັງຈາກ ປີ 2006 ການອອກແບບແມ່ນຈະສາມາດເຊື່ອມຕໍ່ໄປເຖິງຂໍ້ມູນລາຄາຫົວໜ່ວຍໃນລະບົບ ຖານຂໍ້ມູນ.

**ຄ. <u>ວຽກງານການຈັດຊື້-ຈັດຈ້າງ</u>**

ການຈັດຊື້ຈັດຈ້າງທີ່ທາງທີມງານ ທລຍ ໄດ້ນຳໃຊ້ແມ່ນ ປະກອບດ້ວຍ 2 ຮູບແບບຄື: 1. ຈັດຊື້ພາຍໃຕ້ໂຄງການຍ່ອຍ 2. ຈັດຊື້ຕາມລະບຽບການຂອງ ການບໍລິຫານການເງິນ ເຊິ່ງລາຍລະອຽດມີດັ່ງລຸ່ມນີ້:

1. ຈັດຊື້ພາຍໃນງົບປະມານຂອງໂຄງກນຍ່ອຍທີ່ກຳນົດ
   - ຈັດຊື້ພາຍໃຕ້ງົບປະມານສຳລັບກິດຈະກຳ ທີ່ກຳນົດໄວ້
   - ໂຄງການຈະສະເໜີ ລາຍລະອຽດ ໃຫ້ທີມງານ ທະນາຄານໂລກ ກວດກາຄືນ
   - ໂຄງການທີ່ນຳໃຊ້ແຮງງານຂອງຊຸມຊົນແມ່ນ 3 ໂຄງການຕໍ່ແຂວງ
   - ໂຄງທີ່ຢູ່ພາຍໃຕ້ການຈັດຊື້ -ຈັດຈ້າງ ຂອງວຽກຂະໜາດນ້ອຍ ແມ່ນ 3 ໂຄງການຕໍ່ແຂວງ
   - ໂຄງການທີ່ທຳການຈັດຊື້ ອຸປະກອນ ແມ່ນມີ 3 ໂຄງການຕໍ່ແຂວງ
   - ຈຳນວນລວມແມ່ນ 9 ໂຄງການ ຕໍ່ແຂວງ ທີ່ຕ້ອງຂໍຄຳເຫັນດີ ຈາກທະນາຄານໂລກ

2. ຈັດຊື້ຕາມລະບຽບການຂອງ ການບໍລິຫານການເງິນ ເຊິ່ງຈະມີລາຍລະອຽດຢູ່ໃນປື້ມຄູ່ມືການຈັດຕັ້ງປະຕິບັດ ທາງດ້ານການເງິນ

**ງ. ການປັບປຸງຄູ່ມືຂອງວິຊາການ**

ຄູ່ມືການຈັດຕັ້ງປະຕິບັດດ້ານວິຊາການແມ່ນໄດ້ສຳເລັດເປັນທັງສອງພາສາຄື: ພາສາອັງກິດ ແລະ ລາວ ພ້ອມນັ້ນກໍ ໄດ້ສົ່ງ ແຈກຢາຍໃຫ້ຫ້ອງການ ທລຍ ເມືອງໃນທຸກເມືອງ.

**ຈ. ການຈັດຊື້ ສິນຄ້າ**

**1. ການຈັດຊື້ຢູ່ໃນທ້ອງຖິ່ນ**

ປະຈຸບັນນີ້ ທລຍ ແມ່ນໄດ້ຊື້ສິນຄ້າພາຍໃນທ້ອງຖິ່ນ ເພື່ອເປັນການສະໜັບສະໜູນ ແລະ ສົ່ງເສີມເຂົາເຈົ້າ ແຕ່ໃນບາງສະພາບແລດລ້ອມກໍເປັນໄປບໍ່ໄດ້ໃນກໍລະນີທີ່ຮ້ານພາຍໃນທ້ອງຖິ່ນຂອງເຂົ້າເຈົ້າບໍ່ມີໃບ ອານຸຍາດດຳເນີນທຸລະກິດ

**2. ສັນຍາກັບຜູ້ຮັບເໝົາໂດຍກົງ**

ທລຍ ໄດ້ເຮັດສັນຍາໂດຍກົງກັບຜູ້ສະໜອງສິນຄ້າ, ໂດຍອີງຕາມຄູ່ມືຂອງກາຈັດ ຊື້-ຈັດຈ້າງ ຕົວຢ່າງວ່າ:ອຸປະກອນຂອງໂຮງຮຽນຈະມີພຽງໂຮງງານດຽວທີ່ມີສິດໃນການພິມປື້ມສຳລັບກະຊວງສຶກສາໃນ ສປປລາວ ສະນັ້ນ ທລຍ ໄດ້ສະເໜີໃຫ້ມີການເຮັດສັນຍາໂດຍກົງກັບບໍລິສັດໂດຍການນຳໃຊ້ໜັງສືແນະນຳໃຊ້ໜັງສືແນະນຳຈາກເຂດ ບັນຫານີ້ກໍຄືກັບການຈັດຊື້ເຄື່ອງເຕັກໂນໂລຢີຕ່າງໆ

**ສ. <u>ການຈັດຊື້ຈັດຈ້າງ ການບໍລິການ/ການຝຶກອົບຮົມ</u>**

**1. ການວ່າຈ້າງທີ່ປຶກສາ**

ສ່ວນໃຫຍແລ້ວຈະບໍຄ່ອຍມີການບໍລິການຂອງບໍລິສັດທີ່ປຶກສາສຳລັບການກໍ່ສ້າງໂຄງການຍ່ອຍຂອງຊຸມຊົນໃນບາງ ແຂວງວິຊາການສາມາດຊ່ວຍໃນການອອກແບບ ແລະ ຄິດໄລ່ລາຄາຂອງການກໍ່ສ້າງໄດ້

**2. ການວ່າຈ້າງດ້ານການຝຶກອົບຮົມ**

ການບໍລິການທາງດ້ານການຝຶກອົບຮົມແມ່ນເກືອບສຳເລັດໝົດແລ້ວ, ສຳລັບການຝຶກອົບຮົມກິດ ຈະກຳສ້າງ ລາຍໄດ້ແມ່ນຂ້ອນຂ້າງຍາກ ທີ່ຈະໃຫ້ແຂວງເປັນຜູ້ເຮັດ, ຕໍ່ກັບບັນຫານີ້ແມ່ນ ທລຍ ຈະຮ່ວມມືກັບໂຮງຮຽນການສ່າງເຊັ່ນ: ຢູ່ແຂວງ ຈຳປາສັກເຊິ່ງໂຮງຮຽນດັ່ງກ່າວຈະຂຶ້ນກັບ ກະຊວງສຶກສາ ແລະ ຊີ້ນຳໂດຍອົງການ DED ຂອງ ເຢັຍລະມັນ ໂຮງຮຽນດັ່ງກ່າວໄດ້ຊ່ວຍ ທລຍ ໃນການຝຶກອົບຮົມການລ້ຽງສັດ, ການເພາະພັນສັດ ແລະ ອື່ນໆ ໃນຮອບວຽນທີ ໜຶ່ງ ແລະ ທີສອງຜ່ານມາ.

**3.4.2. ຜົນສຳເລັດໃນໄລຍະຜ່ານມາ**

ກ່ອນການຈັດຕັ້ງປະຕິບັດ ໂຄງການຫລາຍໆໂຄງການ ແມ່ນໄດ້ຖືກເລືອກມາຈາກຊຸມຊົນ ແລະ ຈັດລຽງຕາມຄວາມ ຈຳເປັນ, ສະນັ້ນ ການເກັບກຳຂໍ້ມູນທາງດ້ານວິຊາການ ໂດຍສະເພາະການພັດທະນາໂຄງລ່າງ ພື້ນຖານ ໃນຊົນນະບົດ ໃນການກໍ່ສ້າງນັ້ນ ນອກຈາກຈະອີາໃຈໃສ່ເລື່ອງຄຸນນະພາບຂອງສິ່ງກໍ່ສ້າງແລ້ວກໍ່ຍັງໄດ້

ເອົາໃຈໃສ່ເລື່ອງມູນຄ່າຂອງການກໍ່ສ້າງ, ທຸກຂໍ້ມູນແມ່ນມີຄວາມຈຳເປັນທີ່ຕ້ອງໄດ້ຮູ້ ແລະ ຂໍ້ມູນທັງໝົດທີ່ເກັບ ກຳມາໄດ້ນັ້ນ ແມ່ນສາມາດນຳມາ ເພື່ອທຳການປຽບທຽບ ກັບ ການຈັດຕັ້ງປະຕິບັດ ຂອງ ທລຍ ເຊິ່ງຜົນຂອງການປຽບທຽບທາງດ້ານລາຄາຫົວໜ່ວຍຂອງ ທລຍ ກັບອົງການອື່ນໆໃນ ສປປລາວ ສາມາດເບິ່ງໄດ້ໃນຕາຕະລາງລຸ່ມນີ້:

**ຕາຕະລາງ24: ມູນຄ່າໂຄງການ ຂອງ ທລຍ ແລະ ໂຄງການອື່ນໃນ ສປປລາວ**

| ຊື່ໂຄງການຍ່ອຍ | ຫົວໜ່ວຍ | ມູນຄ່າຂອງ ທລຍ (ກີບ) | ມູ່າຄ່າຂອງ ໂຄງການ ອື່ນ |
|---|---|---|---|
| ຍົກລະດັບທາງຊົນນະບົດ | ກມ | 16,702,850 | 36,910,800 |
| ກໍ່ສ້າງໂຮງຮຽນ | (7x8m)+(ລະບຽງ1ມ) | 31,297,960 | 54,166,640 |
| ສຸກສາລາ | 80m$^2$+ ອຸປະກອນການແພດ | 127,161,352 | 178,500,000 |
| ຂົວເຫລັກ | 1ມ$^2$ | 2,066.000 | 3,500,000 |

ບູລິມະສິດ ທຳອິດຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ແມ່ນຄວາມເປັນເຈົ້າຂອງ ແລະ ຄວາມຍືນຍົງ, ການກໍສ້າງ, ດັດປັບປຸງໂຄງການນັ້ນແມ່ນເນັ້ນໜັກໃສ່ແຮງງານຂອງຊຸມຊົນໃນການກໍ່ສ້າງ ຫລາຍກວ່າໃຊ້ ເຄື່ອງຈັກ ຫລື ຜູ້ຮັບເໝົາ ໃນໂຄງການການທີ່ຊຸມຊົນ ສາມາດເຮັດເອງໄດ້ເຊັ່ນວ່າ: ການກໍ່ ສ້າງ ສຸກສາລາ, ໂຮງ ຮຽນ ເຊິ່ງ ທລຍ ຈະຊ່ວຍໃນອຸປະ ກອນທີ່ຊຸມຊົນບໍ່ມີເຊັ່ນ: ຊີເມັນ, ເຫລັກ, ສັງກະສີ, ຕະປູ, ແລະ ສິ່ງຂອງທີ່ຈຳເປັນຕ່າງໆ ນອກນັ້ນຊຸມຊົນຈະປະກອບສ່ວນເປັນດິນຊາຍ, ຫີນ, ໄມ້ ແລະ ແຮງງານ ແລະ ຜູ້ຊີ້ນຳ ຫລື ວິຊາການແມ່ນສາມາດ ຊອກເອົາໃນຊຸມຊົນນັ້ນ ຕໍ່ບັນຫາດັ່ງ ກ່າວ ຈິ່ງເຮັດໃຫ້ຕົ້ນທຶນຂອງ ທລຍ ທຽບໃສ່ໂຄງການອື່ນແມ່ນຕ່ຳກວ່າ.

ໂຄງການອື່ນໆໃນ ສປປລາວ ແມ່ນມີງົບປະມານຫລາຍຫລື ໂຄງການກູ້ຢືມເຊິ່ງວ່າ ວຽກທັງໝົດ ທີ່ໂຄງການນຳໃຊ້ແມ່ນໃຊ້ຊ່ຽວຊານຜູ້ທີ່ຮັບເໝົາທີ່ມີລະດັບການສຶກສາ ຫລື ມີປະສິລການ ແລະ ຄຸນວຸດທິສູງ ເຮັດ ໃຫ້ຊຸມຊົນບໍ່ມີ ສ່ວນຮ່ວມ ແລະ ຈະເຮັດໃຫ້ເຂົາເຈົ້າບໍ່ຮູ້ຄຸນຄ່າ ບໍ່ມີຄວາມເປັນເຈົ້າຂອງຕໍ່ສິ່ງສ້າງຂຶ້ນນັ້ນ ແລະ ໂຄງການດັ່ງກ່າວ ແມ່ນມີ ມູນຄ່າສູງ.

***ຜົນຂອງການຝຶກອົບຮົມວິຊາການຂອງທີມງານເຂດ ເພື່ອມາຊ່ວຍວຽກວິຊາການ***

ທີມງານເຂດ ແມ່ນມີຄວາມຕ້ອງການສຳລັບການຝຶກອົບຮົມດ້ານວິຊາການຫລາຍ, ສະນັ້ນ ທີມງານ ທລຍ ໄດ້ພະຍາຍາມຊ່ວຍເຂົາເຈົ້າໃນການຊີ້ນຳການຈັດຕັ້ງປະຕິບັດໂຄງການ ແຕ່ວ່າຍັງມີທີມງານເຂດຈຳ ນວນໜຶ່ງຂາດຄວາມຮູ້ດ້ານວິຊາການ ແລະ ບາງຄົນບໍ່ສາມາດອ່ານພາສາລາວໄດ້ໄດ້ເລີຍ, ບາງແຂວງແມ່ນສາມາດເຮັດວຽກ ຫລື ທຳການກໍ່ສ້າງໄດ້ເປັນຢ່າງດີ ເພາະທີມງານເຂດຂອງເຂົາເຈົ້າມີທັກສະກຳຄື ຄວາມຮູ້ດານວິຊາການດີບາງເຂດບໍ່ມີວິຊາການຈາກ ຂ້າງນອກ ຫລື ຜູ້ຊີ້ນຳຈາກແຫ່ງອື່ນມາເຮັດວຽກໃນເຂດ ຂອງເຂົ້າເຈົ້າເຊັ່ນວ່າ: ຢູ່ແຂວງຫົວພັນແມ່ນບໍ່ມີວິຊາການທ້ອງຖິ່ນເລີຍ ສະນັ້ນ, ເຂົາເຈົ້າຕ້ອງໄດ້ຮັບການຝຶກອົບຮົມຈາກໂຄງການອື່ນ ສຳລັບການກໍ່ສ້າງນ້ຳລິນ ແລະ ລະບົບຊົນ ລະປະທານ, ສ່ວນຢູ່ແຂວງສະຫວັນນະເຂດ ແລະ ຈຳປາສັກແມ່ນມີວິຊາການ ຫລື ຜູ້ຊີ້ນຳ ຈາກຂ້າງນອກແຕ່ມີຢູ່ໃນ ຕົວເມືອງເທົ່ານັ້ນ.

***ຂໍ້ສະເໜີກ່ຽວກັບການຝຶກອົບຮົມ ວິຊາການຂັ້ນເຂດ***

ຫລັງຈາກສຳເລັດກອງປະຊຸມ ຕັດສິນຄັ້ງສຸດທ້າຍ ຂອງແຕ່ລະເມືອງແລ້ວ ທລຍ ຈະແນະນຳ ຫລື ຕິດຕໍ່ວິທະຍາໄລ ຫລື ມະຫາວິທະຍາໄລໃນແຂວງທີ່ຈັດຕັ້ງປະຕິບັດ ທລຍ ຢູ່ເຖິງແນວໃດກໍ່ຕາມຢູ່ແຂວງ ຫົວພັນ, ຊຽງຂວາງ ແລະ ສາລະວັນ ຍັງບໍ່ທັນມີມະຫາວິທະຍາໄລ, ໂຮງຮຽນການສ່າງຕ່າງໆ, ສະນັ້ນ ຈຳເປັນຈະຕ້ອງໄດ້ທຳການປະກາດຫລື ຫລືກະຈາຍ ສຽງທາງວິທະຍຸ ເພື່ອຊອກຫາວິຊາການ ຜູ້ຈະໄປຊີ້ນຳ ແລະ ຈັດຝຶກ ອົບຮົມ ໃຫ້ທີມງານເຂດໃນສອງຫລັກສູດຄື:

\# **<u>ຫລັກສູດທີ1:</u>** ຝຶກອົບຮົມເລື່ອງການບໍລິຫານກ່ອນຈະເລີ່ມຕົ້ນລົງມືທຳການກໍ່ສ້າງ ແລະ ກ່ອນຈະມີການໂອນເງິນໃຫ້ເຂດ, ຊື່ຫົວຂໍ້ການຝຶກອົບຮົມແມ່ນ “ການບໍລິການໂຄງການ” ເຊິ່ງກວມ

1. ເອົາເຕັກນິກການ ກໍ່ສ້າງ
2. ການເຮັດສັນຍາ ແລະ ການບໍລິຫານ ການຈັດຊື້ຈັດຈ້າງ
3. ການຊີ້ນຳການກໍ່ສ້າງ

* ຜູ້ຝຶກອົບຮົມແມ່ນ ວິຊາການ ທລຍ ໃນຂັ້ນເມືອງ ຫລື ຜູ້ຊີ້ນຳຈາກຂ້າງນອກ ຫລື ຈາກມະຫາວິທະຍາໄລຕ່າງໆ

\# **<u>ຫລັກສູດທີ 2</u>**: ຝຶກອົບຮົມ ໃນຊ່ວງທີ່ກຳລັງກໍ່ສ້າງເຊິ່ງມີຫົວຂໍ້ວ່າ: “ການຕິດຕາມ ແລະ ປະເມີນຜົນຂອງໂຄງການ”*ເຊິ່ງຈະກວມເອົາ;*

1. ການຕິດຕາມ ແລະ ປະເມີນຜົນ
2. ການຝຶກອົບຮົມທາງດ້ານ ການບັນຊີ
3. ການກວດກາຂັ້ນເຂດ

\# <u>ຫລັກສູດ3</u>: ຫລັກສູດນີ້ແມ່ນ ຈະຖືກຈັດຂຶ້ນໃນຊ່ວງ ຈະມີການມອບຮັບໂຄງການ ໃຫ້ເຂດຮັບຜິດຊອບເຊິ່ງຫົວ ຂໍ້ແມ່ນ “ການບໍລິຫານ ບຳລຸງຮັກສາ ໂຄງການຍ່ອຍ” ເຊິ່ງຈະກວມເອົາ;

1. ບົດບາດທີມງານເຂດ
2. ເຕກນິກໃນການບຳລຸງຮັກສາ
3. ລະບົບບໍລິຫານ

ຫລັກສູນ ທີ 2 ແລະ ທີ 3 ແມ່ນໄດ້ຖືກຈັດຂຶ້ນໃນຮອບວຽນທຳອິດ ແລະ ທີສອງ ເຊິ່ງ ຜູ້ຝຶກອົບຮົມແມ່ນມາຈາກ ທລຍ ຂັ້ນເມືອງ ແລະ ແຂວງຮ່ວມມືກັບອົງການທີ່ກ່ຽວຂ້ອງໃນຂັ້ນເມືອງ ( ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ, ກະສິກຳ, ສາທາ ແລະ ສຶກສາ) ຫລັກສູດ 1 ແມ່ນໄດ້ກະກຽມ ແລະ ວາງແຜນ ຈະຈັດໃນຮອບວຽນ III.

ນອກຈາກນັ້ນ ວິຊາການເຂດກໍ່ມີຄວາມຕ້ອງການທີ່ຈະໄປຢ້ຽມຢາມ ການຈັດຕັ້ງປະຕິບັດໃນເຂດອື່ນ ທີ່ຢູ່ໃກ້ໆ ກັບເຂົາເຈົ້າເພື່ອເປັນການແລກປ່ຽນ ແລະ ເສີມສ້າງຄວາມຮູ້, ປະສົບການໃນການຈັດຕັ້ງປະຕິບັດ ເພື່ອນຳມາໃຊ້ໃນ ເຂດຂອງ ເຂົາເຈົ້າເອງ

ລາຍລະອຽດຂອງການຈັດຊື້ຈັດຈ້າງສຳລັບຮອບວຽນທຳອິດ ແລະ ຮອບວຽນສອງໄດ້ຕິດຄັດ ໃນເອກະສານຊ້ອນທ້າຍ 7 ແລະ ສຳລັບຮອບວຽນສາມ ແມ່ນຈະຕິດຄັດຢູ່ໃນເອກະສານຊ້ອນທ້າຍຂອງບົດລາຍງານປະຈຳປີ 2005

### 3.4.3. ບັນຫາ ແລະ ບົດຮຽນທີ່ຖອດຖອນໄດ້

1. ຈາກປະສົບການຕົວຈິງທີ່ໄດ້ຮັບ ທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາໃນແຕ່ລະ ແຂວງປະກົດວ່າ ທີມງານວິຊາການຍັງມີຄວາມຮູ້ຈຳກັດ, ຈຳນວນພະນັກງານ ວິຊາການໃນການສຳຫລວດ ແລະ ອອກແບບ ກໍ່ຍັງມີຈຳກັດເຊັ່ນກັນເພາະວ່າພະນັກງານສ່ວນໃຫຍ່ແມ່ນມີຄວາມຮູ້ທີ່ແຕກ ຕ່າງກັນ ແລະ ກໍ່ບໍ່ແມ່ນຜູ້ຊີ້ນຳດ້ານການກໍ່ສ້າງພື້ນຖານໂຄງລ່າງ ເພາະບາງຄົນແມ່ນມາຈາກສະຖາປັດ, ບາງຄົນມາຈາກຄົມມະນາ ຄົມ ແລະອື່ນໆ.

2. ເຄື່ອງມື ແລະ ອຸປະກອນທີ່ນຳໃຊ້ເຂົ້າໃນການສຳຫລວດ , ອອກແບບ ແລະ ກໍ່ສ້າງຄູ່ມືທີ່ໃຊ້ເຂົ້າ ໃນການກໍ່ສ້າງທັງໝົດແມ່ນພາສາໄທ ແລະ ພາສາອັງກິດ ສະນັ້ນບາງອັນທີ່ປຶກສາດ້ານວິຊາການກໍ່ບໍ່ສາມາດເຂົ້າໃຈໄດ້, ສິ່ງຜົນກະທົບ ໃຫ້ຜູ້ຊີ້ນຳວິຊາການຂັ້ນເມືອງບໍ່ສາມາດເຮັດການສຳຫລວດ ຫລື ອອກແບບບາງປະເພດໂຄງການ ເພາະພວກ ເຂົາຮູ້ສະເພາະດ້ານດັ່ງກ່າວ.

4. ເນື່ອງຈາກວ່າ ພະນັກງານວິຊາການຂັ້ນເມືອງ ແມ່ນມາຈາກ ຕ່າງແຂວງ ຫລື ຕ່າງເມືອງ, ສະນັ້ນ ຫລັງຈາກ ໜຶ່ງ ຫລື ສອງປີ ພະນັກງານດັ່ງກ່າວຕ້ອງໄດ້ກັບຄືນໄປບ້ານຂອງເຂົ້າເຈົ້າ, ເຮັດໃຫ້ ທລຍ ປະເຊີນກັບບັນ ຫາທີ່ ຊອກພະນັກງານ ມາຊ່ວຍໃນດ້ານດັ່ງກ່າວອີກ.

***ບັນຫາໃນການຈັດຊື້ຈັດຈ້າງງ ແລະ ການແກ້ໄຂ***

***1. ຄວາມຮັບຜິດຊອບໂດຍພື້ນຖານຂອງຊຸມຊົນ***

ຫລັກການໂດຍທົ່ວໄປ ທີ່ມອບຄວາມຮັບຜິດຊອບໂດຍພື້ນຖານຂອງຊຸມຊົນແມ່ນນອນຢູ່ໃນ ຫົວຂໍ້ທີ່ 6 ຂອງຄູ່ມືການຈັດຕັ້ງປະຕິບັດໂຄງການຍ່ອຍກ່ຽວກັບການຈັດຊື້-ຈັດຈ້າງ ແລະ ການເຮັດສັນຍາສຳລັບໂຄງການ ເຊິ່ງໃນຂະບວນການນີ້ ທລຍ ແມ່ນໄດ້ປຶກສາຫາລືດ້ານວິຊາການຮູບແບບຕ່າງໆ ໃນການ ຊ່ວຍ ການ ກະກຽມຊຽນບົດສະເໜີໂຄງການຍ່ອຍ ການພິຈາລະນາການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃນການບໍລິຫານກ່ຽວກັບການຊອກຫາຂໍ້ຕົກລົງເຫັນດີຈາກຊາວບ້ານຕໍ່ກັບໂຄງການຍ່ອຍໃນບາງເຂດ ພວກເຂົາເຫັນດີ ທີ່ຈະກູ້ຢືມເພື່ອພວກເຂົາຈະສ້າງຄວາມເຂັ້ມແຂວງໃຫ້ເຂົາເຈົ້າເອງ ແຕ່ເຂົາເຈົ້າກໍ່ບໍ່ສາມາດທີ່ປະຕິບັດໄດ້, ບັນຫານີ້ແມ່ນເຮັດໃຫ້ຕົ້ນທຶນຂອງໂຄງການເພີ່ມຂຶ້ນ ແລະ ຊຸມຊົນຕ້ອງປະກອບສ່ວນຫລາຍຂຶ້ນ, ບໍ່ພຽງແຕ່ເທົ່ານັ້ນ ຄວາມຮູ້ຂອງຊຸມຊົນໃນການກວດກາການແຈກຢາຍເຄື່ອງມື ແລະ ອຸປະກອນ ແລະ ຄວາມເຂົ້າໃຈສະເພາະໃນວຽກດັ່ງ

ກ່າວແມ່ນຍັງຕ່ຳຫລາຍ, ບັນຫານີ້ແມ່ນຕ້ອງການໃຫ້ມີລາຍລະອຽດດ້ານຄວາມຮູ້ທາງດ້ານວິຊາການ ເນື່ອງຈາກວ່າບາງຊຸມຊົນບໍ່ມີຄວາມຮູ້ ຫລື ຫລັກການ ດ້ານວິຊາການເລີຍ .

*2. ການຈັດຊື້-ຈັດຈ້າງ ສຳລັບການກໍ່ສ້າງຂະໜາດນ້ອຍ*

ແນວໂນ້ມຂອງການເຮັດສັນຍາ ກັບຜູ້ຮັບເໝົາແມ່ນບໍ່ມີປະສິດທິພາບ ຫລື ບໍ່ແນ່ນອນ ໂດຍສະເພາະໃນໂຄງການ ຂະໜາດໃຫຍ່ ຄືດັ່ງທີ່ໄດ້ອະທະບາຍໄວ້ໃນປື້ມຄູ່ມື ການຈັດຕັ້ງປະຕິບັດໂຄງການຍ່ອຍຈະນ້ອຍ ຫລື ໃຫຍ່ແມ່ນນຳ ໃຫ້ເອກະສານ ການເຮັດສັນຍາອັນດຽວກັນ ເຊິ່ງໃນເອກະສານ ທີ່ຕິດຂັດມາໃນຄູ່ມືການຈັດຕັ້ງປະຕິບັດນັ້ນ ມີພຽງສັນຍາດຽວທີ່ໄດ້ແນະນຳຈາກທະນາຄານໂລກ.

ວຽກງານຈັດຊື້-ຈັດຈ້າງແມ່ນວຽກງານໃໝ່ສຳລັບຊຸມຊົນ, ເຊິ່ງມັນເປັນການຍາກທີ່ເຂົາເຈົ້າຈະບໍລິຫານ ຫລື ເຂົ້າໃຈທຸກຂະບວນການ ຫລື ຂັ້ນຕອນ, ບົດບາດ ແລະ ຄວາມຮັບຜິດຊອບໃນການຈັດຊື້-ຈັດຈ້າງຂອງທີມງານເຂດຍັງບໍ່ໂປ່ງໃສ, ສະນັ້ນ ທລຍ ຄວນຈະຈັດຝຶກອົບຮົມໃຫ້ທີມງານເຂດຢ່າງໜ້ອຍສຸດສອງສາມຄັ້ງຕໍ່ປີ

ຕາມທຳມະດາແລ້ວການເຮັດການປະມູນແມ່ນຈະຕ້ອງມີໃບສະເໜີລາຄາຢ່າງໜ້ອຍສຸດແມ່ນ 3 ບ່ອນ, ແຕ່ບາງຄັ້ງແມ່ນມີໃບສະເໜີລາຄາພຽງບ່ອນດຽວ ຫລື ຜູ້ສະເໜີລາຄາພຽງຜູ້ດຽວ, ເຖິງແມ່ນວ່າຈະມີການປະກາດການປະມູນໃນຂັ້ນເຂດ, ເມືອງ ແລະ ແຂວງແລ້ວກໍ່ຕາມ

ໃນຂັ້ນຕົ້ນ ທລຍ ໄດ້ປຶກສາຫາລື ກັບພະແນກເຕັກນິກຂອງລັດ ຫລື ຫ້ອງການເມືອງ ເພື່ອຊ່ວຍໃນການສຳຫລວດ ຫລື ອອກແບບ ບາງໂຄງການ ທີ່ ທລຍ ບໍ່ສາມາດເຮັດໄດ້ ເມື່ອ ທລຍ ໄດ້ຂະຫຍາຍ ກໍຈະກຳໄປສູ່ເມືອງໃໝ່ ແລະ ໄດ້ຊ່ວຍ ໃນການເປັນທີ່ປຶກສາທາງດ້ານວິຊາການ ເຊິ່ງໄດ້ມີການແບ່ງການເຮັດວຽກອອກເປັນທີມ, ແຕ່ລະທີມຄວນຈະມີຜູ້ຊ່ຽວ ຊານ ໃນຫລາຍໆດ້ານ ທີ່ແຕກຕ່າງກັນເປັນຕົ້ນວ່າ ໃນເມືອງໜຶ່ງຢ່າງໜ້ອຍ 3 ຄົນ, ຜູ້ທີ່ມີຄວາມຮູ້ ກ່ຽວກັບຫົນທາງ, ກະສິກຳ ແລະ ການກໍ່ສ້າງ ເຊິ່ງຄົນເຫລົ່ານັ້ນ ສາມາດໃຫ້ຄຳປຶກສາຫາລື ແລະ ແກ້ໄຂບັນຫາໃນທີມງານຂອງເຂົາເຈົ້າໄດ້.

ຈາກປະສົບປະການຂອງ ທລຍ ນັ້ນ ໄດ້ສະແດງໃຫ້ເຫັນວ່າ ປື້ມຄູ່ມື ໃນການຈັດຕັ້ງປະຕິບັດນັ້ນຕ້ອງການໃຫ້ ຂະຫຍາຍຕື່ມໃນບາງພາກ, ເນື່ອງຈາກວ່າປື້ມຄູ່ມືນີ້ແມ່ນຖືກອອກແບບ ແລະ ພັດທະນາດ້ານການປະສົມທິດ ສະດີຈາກປື້ມຫລາຍໆປະເທດມາຮ່ວມເຂົ້າກັນໂດຍທີ່ປຶກສາຜູ້ທີ່ມີຄວາມຮູ້, ຄວາມສາມດໃນວຽກ ບາງຄູ່ມື ແມ່ນອີງຕາມແບບຂອງ ກະຊວງ, ບາງພາກຂອງຂັ້ນຕອນແມ່ນບໍ່ທັນເໝາະສົມ ສຳລັບການພັດທະ ນາ ຊົນນະ ບົດ, ໃນຂົງເຂດທີ່ທຸກຍາກ, ສະນັ້ນ ບາງພາກແມ່ນມີປະໂຫຍດສຳລັບສະຖານະການຈິງ ໃນໂຂງເຂດຊົນນະບົດຢູ່ ສປປລາວ ສະນັ້ນ, ຄູ່ມືດັ່ງກ່າວຄວນຈະໄດ້ມີການປັບປຸງຕາມປະສົບການຕາມປະ ສົບການທີ່ໄດ້ຮັບໃນແຕ່ລະແຂວງເພື່ອໃຫ້ການ ຈັດຕັ້ງປະຕິບັດ ວຽກງານ ໃນຕໍ່ໄປມີປະສິດທິຜົນກວ່າເກົ່າອີກ.

ໃນຊ່ວງປີ (2004-05), ການຈັດຊື້ຈັດຈ້າງຂອງທລຍ ແມ່ນປະກອບດ້ວຍຫລາຍຮູບແບບ ເຊັ່ນວ່າ: ການຈັດຊື້ສິນຄ້າ, ແຮງງານ ແລະ ການບໍລິການ ເຊິ່ງບັນຫາຕ່າງໆ ທີ່ປະເຊີນ ແລະວິທີການ ແກ້ໄຂ ໄດ້ອະທິ ບາຍລຸ່ມນີ້:

❖ *ການຈັດຊື້ວັດສະດຸ:*

ສຳລັບການຈັດຊື້ອຸປະກອນແມ່ນມີການລ້າຊ້າ, ບໍ່ທັນກັບເວລາທີ່ກຳນົດໄວ້ຊຶ່ງສາຍເຫດທີ່ພາໃຫ້ມີການລ້າຊ້າມີດັ່ງນີ້:

1. ສິນຄ້າທີ່ມີຢູ່ໃນທ້ອງຕະຫລາດ ແມ່ຍັງບໍ່ມີເຕັກໂນໂລຢີສູງຕາມມາດຖານທີ່ຕ້ອງການ
2. ບາງການຈັດຊື້ຈັດຈ້າງທີ່ຜ່ານຂັ້ນຕ່າງໆເຊັ່ນ: ການແຂ່ງຂັນປະມູນລະດັບຊາດ ບັນຫານີ້ແມ່ນຕ້ອງການໃຫ້ກະ ກຽມການລາຍງານ ສົ່ງໃຫ້ທະນາຄານໂລກ ເພື່ອຕອບຮັບ (ໃຊ້ເວລາດົນ)
3. ເອກະສານໃນຈ່າຍຄ່າທຳນຽມລວມທັງຄ່າພາສີຕ່າງໆ ແລະ ໜັງສືອື່ນໆຈາກຫ້ອງການບາງຄັ້ງ ແມ່ນໄດ້ ຮັບລ້າຊ້າ ແລະ ມີບັນຫາ
4. ສິນຄ້າເປ່ເພແມ່ນມັກເກີດຂຶ້ນເປັນປະຈຳໃນຊ່ວງການຂົນສົ່ງ, ສະນັ້ນຜູ້ສະໜອງຕ້ອງໄດ້ສົ່ງສິນຄ້າຕົວໃໝ່ມາແທນ ເຮັດໃຫ້ມີການລໍຖ້ານານສົມຄວນ.
5. ບາງຄັ້ງສິນຄ້າທີ່ໄດ້ມາແມ່ນບໍ່ຕົງກັບທີ່ ທລຍ ຫລື ໂຄງການຕ້ອງການ
6. ບາງເຕັກໂນໂລຊີ ແມ່ນມີຄູນນະພາບສູງກວ່າຄວາມສາມາດຂອງທີມງານທີ່ຈະນຳໃຊ້.
7. ສິນຄ້າສະເພາະບາງຢ່າງແມ່ນບໍ່ມີຍີຫໍ້ , ເຮັດໃຫ້ໄລຍະການໃຊ້ງານບໍ່ຄຸ້ມດົນ ແລະ ສິ້ນເປືອງຄ່າໃຊ້ຈ່າຍ ໃນການສ້ອມແປງ ຫລື ກໍ່ສ້າງແມ່ນຫຍຸ້ງຍາກ ໃນການວາງແຜນ ແລະ ຄິດໄລ່ໃນຂັ້ນເມືອງ ແລະ ຂັ້ນແຂວງ ທຽບໃສ່ເມືອງທີ່ເຄີຍ ມີໂຄງການອື່ນເຂົ້າມາຈັດຕັ້ງປະຕິບັດແລ້ວ.

❖ *ການຈັດຈ້າງແຮງງານ*

ຫ້ອງການ ທລຍ ຂອງແຂວງ ແລະ ເມືອງ, ໃນບາງແຂວງ ຫລື ເມືອງ ແມ່ນມີຫ້ອງທີ່ໃຫຍ່ ແລະ ບາງແຂວງ ມີຂະໜາດນ້ອຍ ແລະ ຄັບແຄບຫລາຍ ບາງເມືອງບໍ່ເຄີຍມີໂຄງການ ຫລື ອົງການທີ່ ບໍ່ຂຶ້ນກັບລັດຖະບານເຂົ້າໄປເຮັດວຽກເລີຍທັງໆທີ່ເມືອງດັ່ງກ່າວນັ້ນເປັນເມືອງທຸກຍາກ ສະນັ້ນ, ຕົ້ນທຶນໃນ ການສ້ອມງແປງຫລືກໍ່ສ້າງແມ່ນຫຍຸ້ງຍາກໃນການວາງແຜນ ແລະ ຄິດໄລ່ໃນຂັ້ນເມືອງ ແລະ ຂັ້ນແຂວງທຽບໃສ່ເມືອງ ທີ່ເຄີຍມີໂຄງ ການອື່ນເຂົ້າມາ ຈັດຕັ້ງປະຕິບັດ ກ່ອນແລ້ວ.

❖ *ການຈັດຊື້ຈັດຈ້າງການບໍລິການ*

ສຳລັບການຈັດຊື້ຈັດຈ້າງການບໍລິການ ແມ່ນໄດ້ຈັດຈ້າງ ທີມງານປະເມີນຜູ້ໄດ້ຜົນປະໂຫຍດ ແລະ ການ ກວດກາທາງດ້ານເຕັກນິກວິຊາການ, ໃນຕອນຕົ້ນ ທລຍ ຈະຊ່ວຍຫົວໜ້າທີມໃຫ້ມີການນຳ ພາທີມງານ ຂອງພວກເຂົາເຈົ້າໝາຍຄວາມວ່າ: ຫົວໜ້າທີມງານຕ້ອງສາມາດຊ່ວຍສະມາຊິກພາຍໃນທີມເຂົາເຈົ້າໃນການຈັດຕັ້ງປະຕິບັດວຽກໃຫ້ສຳ ເລັດ.

### 3.4.4. ແຜນວຽກທີ່ຈະເຮັດໃນຕໍ່ໜ້າ

ສຳລັບໜ້າວຽກສຳຄັນທີ່ໜ່ວຍງານຈະເລັ່ງໃສ່ໃນອານາຄົດມີ 5 ບັນຫາໃຫຍ່ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1/ ໜ່ວຍງານວິຊາການ ແລະ ຈັດຊື້ຈັດຈ້າງໄດ້ວາງແຜນທີ່ຈະເນັ້ນໃສ່ການຄວບຄຸມຄຸນນະພາບຂອງສິ່ງກໍ່ສ້າງໂດຍອາໃສການຊີ້ນຳ ແລະ ຮ່ວມມືກັບນັກສຶກສາ, ສະຖາບັນເຕັກໂນໂລຍີ ຫລື ພາກສ່ວນທີ່ກ່ຽວຂ້ອງເພື່ອນຳໃຊ້ເຂົ້າໃນການຄວບຄຸມຄຸນນະພາບດັ່ງກ່າວ

2/ ການຝຶກອົບຮົມດ້ານວິຊາການກໍ່ຍັງແມ່ນຄວາມຕ້ອງການອັນຈຳເປັນຫລາຍ ໂດຍສະເພາະແມ່ນຜູ້ຊ່ວຍວິຊາການໃໝ່ (ສຳລັບເມືອງໃໝ່) ໃນຂັ້ນເມືອງ ແລະ ຂັ້ນແຂວງ ທີ່ຍັງບໍ່ທັນເຄີຍຜ່ານການຝຶກອົບຮົມມາກ່ອນ

3/ ສັງລວມປະສົບການ ທາງດ້ານວິຊາການ ໃນແຕ່ລະແຂວງເພື່ອມາປັບປຸງຄູ່ມືຂອງວິຊາການ

4/ ການແລກປ່ຽນປະສົບການ ຂອງທີມງານວິຊາການ ໝາຍຄວາມວ່າ ເອົາທີມງານວິຊາການຢູ່ແຂວງໜຶ່ງໄປ ເຮັດວຽກຢູ່ອີກແຂວງໜຶ່ງ ເພື່ອແລກປ່ຽນບົດຮຽນຕົວຈິງ ໃນແຕ່ລະແຂວງ

5/ ສືບຕໍ່ຮ່ວມມືກັບ ຫ້ອງການວິຊາການໃນແຕ່ລະເມືອງເພື່ອຕິດຕາມ ແລະ ຊີ້ນຳ ເພາະວ່າເຂົາເຈົ້າແມ່ນມີປະສົບການຫລາຍ ແລະ ເຄີຍຖືກຝຶກອົບຮົມຈາກອົງການຈັດຕັ້ງຂອງເຂົາມາກ່ອນແລ້ວເຊິ່ງບັນຫານີ້ຈະຊ່ວຍກະຕຸ້ນເຮັດໃຫ້ຄຸນນະພາບຂອງໂຄງການສູງຂຶ້ນ

## 4.5. ກ່ຽວກັບພະນັກງານ (ການປະເມີນພະນັກງານ)

**ຕາຕະລາງ ທີ 24 ແມ່ນສະແດງໃຫ້ເຫັນ ເປີເຊັນຂອງ ພະນັກງານ ທີ່ລາອອກ ໃນຮອບວຽນ I ແລະ II**

| | 2003 | 2004 |
|---|---|---|
| ຂັ້ນສູນກາງ | 18% | 14% |
| ແຂວງຫົວພັນ | 13% | 6% |
| ສະຫວັນນະເຂດ | 24% | 0% |
| ຈຳປາສັກ | 26% | 0% |
| ລວມ | 20% | 6% |

ຕາຕະລາງຂ້າງເທິງສະແດງໃຫ້ເຫັນວ່າ ເປີເຊັນການລາອອກຂອງພະນັກງານ ໃນປີ 2004 ໂດຍສະເລ່ຍແມ່ນ 6 % ເຊິ່ງເປີເຊັນການລາອອກສູງສຸດແມ່ນຢູ່ຂັ້ນສູນກາງ 14% ສຳລັບສະຫວັນນະເຂດ ແລະ ຈຳປາສັກ ແມ່ນບໍ່ມີຜູ້ລາອອກ ເມືອງ, ປຽບທຽບກັບ ປີ 2003 ແມ່ນມີການລາອອກ ເຖິງ 20% ໝາຍວາມວ່າແຕ່ປີ 2003 ຫາ 2004 ມີການລາອອກ ຂອງພະນັກງານ ຫລຍ ຫລຸດລົງຫລາຍ ຫລຍ ໄດ້ປັບປຸງທາງດ້ານ ແລະ ການບໍລິຫານ ແລະ ໄດ້ເປີດໂອກາດໃຫ້ຂັ້ນທ້ອງຖິ່ນມີບູລິມະສິດຫລາຍກວ່າຄົນທີ່ມາຈາກທ້ອງຖິ່ນອື່ນຫລື ຈາກແຂວງ ອື່ນໆ.

ແຕ່ຕົກມາຮອດປີ 2005 ອັດຕາການລາອອກຂອງພະນັກງານພັດສູງຂຶ້ນຕື່ມປະມານ 35% ເຊິ່ງມີໃນຕໍາແໜ່ງທີ່ສໍາຄັນ ຫລາຍໆຕໍາແໜ່ງດ້ວຍກັນ ເປັນຕົ້ນວ່າ ຕໍາແໜ່ງຫົວໜ້າໜ່ວຍງານຕິດຕາມ ແລະ ປະເມີນຜົນ ເຊິ່ງ ທລຍ ໄດ້ປະເຊີນກັບບັນຫາທີ່ຈະກະຕຸ້ນ ແລະ ຊອກຫາຜູ້ປູ້ທີ່ມີຄຸນວຸດທິ ທີ່ເໝາະສົມເພື່ອເຂົ້າມາແທນໄດ້ ຍ້ອນການຮຽກຮ້ອງຄ່າຕອບແທນສູງກວ່າທີ່ ທລຍ ສາມາດໃຫ້ໄດ້.

<u>**ການປະເມີນຄວາມສາມາດຂອງພະນັກງານ**</u>

ກອງທຶນຫລຸດຜ່ອນຄວາມທຸກຍາກແມ່ນ ນໍາໃຊ້ຫລາຍຮູບແບບໃນການຕິດຕາມ ແລະ ປະເມີນຜົນ ການເຮັດວຽກຂອງພະນັກງານ ທລຍ ເຊິ່ງສິ່ງເຫລົ່ານັ້ນແມ່ນໄດ້ອະທິບາຍໃນບົດລາຍງານປະຈໍາປີ 2003 ຫລາຍໆຮູບການສໍາລັບການ ຕິດຕາມ ແລະ ປະເມີນຜົນ ແມ່ນໄດ້ນໍາໃຊ້ ໃນການລາຍຂອງກອງປະຊຸມ ປະຈໍາອາທິດ, ການປະເມີນແມ່ນຖືກ ປະຕິບັດໂດຍຫົວໜ້າໜ່ວຍງານຂອງແຕ່ລະໜ່ວຍໃນຂັ້ນສູນກາງ, ຂັ້ນແຂວງ ແລະ ເມືອງແມ່ນຜູ້ປະສານງານ ແຂວງ ເປັນຜູ້ປະເມີນ, ການປະເມີນລວມ ໂດຍທີມງານສູນກາງ ແມ່ນຈະຖືກຈັດຕັ້ງປະຕິບັດ ຫລັງຈາກທີ່ສໍາເລັດໃນ ແຕ່ລະແຂວງ, ເຖິງແນວໃດກໍ່ຕາມ ແບບຟອມ ຂອງການປະເມີນແມ່ນໄດ້ມີການຂະຫຍາຍຕື່ມໃນປີ 2004 ເພື່ອໃຫ້ແທດເໝາະກັບ ສະພາບຄວາມເປັນຈິງຂອງການ ປະຕິບັດວຽກງານ ແລະ ຈະແມ່ນພະນັກງານ ເປັນຜູ້ຂຽນ ແບບຟອມເພື່ອປະເມີນເຂົາເຈົ້າເອງກ່ອນ ແລ້ວຈະສົ່ງໃຫ້ຫົວໜ້າໜ່ວຍງານ ແລະ ຜູ້ອໍານວຍການພິຈາລະນາ ແລະ ມີຄໍາເຫັນ ເຊິ່ງການຕື່ມແບບຟອມການປະເມີນແມ່ນປະກອບດ້ວຍ 5 ມາດຕະຖານຄື:

1. ຄວາມສາມາດ ໃນການປະຕິບັດໜ້າວຽກທີ່ມອບໃຫ້.
2. ການເຮັດວຽກເປັນທີມ ແລະ ການສ້າງຄວາມສາມະຄີໃນທີມງານ.
3. ຄວາມຫ້າວຫັນໃນໜ້າທີ່ວຽກງານ ທີ່ຕົນເອງຮັບຜິດຊອບ.
4. ການທຸ້ມເທໃນການເຮັດວຽກ.
5. ການແກ້ໄຂບັນຫາ / ການທົດສອບ.

ເຊິ່ງພະນັກງານແຕ່ລະຄົນ ຈະຖືກຖາມເພື່ອໃຫ້ຄະແນນຕາມຄວາມເປັນໄປໄດ້ໃນຫ້າຕົວມາດຖານໃນຂ້າງ ເທິງເຊິ່ງແບບຟອມຈະມີລາຍການກວດສອບຕາມໜ້າທີ່ຮັບຜິດຊອບ TOR ຂອງແຕ່ລະຄົນ ສົມທຽບ ກັບການ ປະເມີນພະນັກງານ ແລະ ການປະເມີນຂອງຊ່ຽວຊານເຖິງແນວໃດກໍ່ຕາມຜູ້ອໍານວຍການຈະແມ່ນບຸກຄົນທີ່ສາມທີ່ຈະເປັນຜູ້ຊີ້ນໍາສຸງສຸດ ຢູ່ຂັ້ນຫ້ອງການສູນກາງ.

ອີງຕາມການປະເມີນຜົນຂອງວິຊາການ ສໍາລັບຮອບວຽນໜຶ່ງ ແລະ ຮອບວຽນສອງ ຄູ່ມືກໍຄືຂັ້ນຕອນຂອງການປະເມີນແມ່ນ ແລະ ເວລາທີ່ໃຊ້ສໍາລັບຮອບວຽນສາມ ເຊິງການປະເມີນແມ່ນໄດ້ນໍາໃຊ້ເຄື່ອງມືທັງສອງຝ່າຍ ຄືຜູ້ຊີ້ນໍາ ແລະ ຜູ້ຮັບການຊີ້ນໍາເພື່ອສະໜັບສະໜູນ ແລະ ຊ່ວຍໃນການເຮັດວຽກ ໃຫ້ປະສົບ ປະຜົນສໍາເລັດ ຕາມເປົ້າໝາຍຕັ້ງໄວ້ ເຊິ່ງຜູ້ຊີ້ນໍາ ຄວນຈະແນະນໍາວິທີໃນການເຮັດວຽກ ຂອງພະນັກງານໂດຍ ຜ່ານຈຸດປະສົງ ໃນການຈັດຕັ້ງປະຕິບັດຂອງໂຄງການ ທລຍ ໝາຍຄວາມວ່າພະນັກງານຈະຂຽນປະເມີນຕົວເອງກ່ອນ ໂດຍອີງໃສ່ໜ້າທີ່ຮັບຜິດຊອບ (TOR) ຂອງເຂົາເຈົ້າ ແລະ ປຶກສານໍາຜູ້ຊີ້ນໍາ, ເຊິ່ງຈຸດປະສົງ ຂອງການເຮັດການ ປະເມີນ ຢ່າງໜ້ອຍກວມເອົາ 3 ບັນຫາ ຄື:

- ມີລັກສະນະສະເພາະ, ທັງປະລິມານ ແລະ ຄຸນນະພາບ
- ເວລາຈຳກັດ
- ລະອຽດ ແລະ ເຂົ້າໃຈງ່າຍ

ເຊິ່ງການທົດສອບນັ້ນຈະຖືກເຫັນດີຈາກຜູ້ຊີ້ນຳ ແລະ ຜູ້ປະຕິບັດໃນຂັ້ນເລີ້ມຕົ້ ຫລັງຈາກນັ້ນແມ່ນຈະຖືກກວດສອບຄືນດ້ວຍຜູ້ຮັບຜິດຊອບຫລືຫົວໜ້າໜ່ວຍງານ, ເຊິ່ງການປະເມີນພະນັກງານໄດ້ອີງໃສ່ການຂຽນທົດສອບໃຫ້ຄະແນນ ເພື່ອບັນທຶກໄວ້ເປັນຫລັກຖານ.

<u>**ຈຸດດີຂອງການປະເມີນພະນັກງານ**</u>

- ແບບຟອມປະເມີນພະນັກງານ ແມ່ນຖືກໃຫ້ໃນຄວາມເຂົ້າໃຈຮ່ວມກັນລະຫວ່າງ ພະນັກງານ ແລະຜູ້ຊີ້ນຳ;
- ການປະເມີນແມ່ນໃຫ້ໂອກາດແກ່ຜູ້ຖືກຊີ້ນຳກໍຄື: ພະນັກງານສົ່ງກັບຄືນ ແລະ ມີການປຶກສາຫາລື ເພື່ອທຳຄວາມເຂົ້າໃຈໃຫ້ເຂົາເຈົ້າໃນຄວາມເປັນຈິງ ຂອງການເຮັດວຽກ;
- ພະນັກງານເລີ່ມຕົ້ນຕື່ມແບບຟອມຈົນສຳເລັດ ແລະ ຫລັງຈາກນັ້ນສົ່ງໃຫ້ໜ່ວຍທີ່ຮັບຜິດຊອບ ວຽກງານດັ່ງກ່າວເພື່ອໃຫ້ຜູ້ຊີ້ນຳ ຫລື ຜູ້ອຳນວຍການ ມີຄຳເຫັນຕື່ມ;

# 4. ສະຫລຸບຫຍໍ້ ແລະແຜນວຽກສຳລັບຮອບວຽນ III

## 4.1. ບົດສະຫລຸບຫຍໍ້

ເປັນໄລຍະເວລາ ຫລາຍກວ່າ 2 ປີເຄິ່ງ ຂອງການຈັດຕັ້ງໂຄງການ ທລຍ ຢູ່ ສປປລາວ ເຊິ່ງມັນໄດ້ສິ່ງຜົນໄດ້ຮັບທັງດ້ານດີ ແລະ ຂໍ້ຄົງຄ້າງ ສຳລັບການຈັດຕັ້ງປະຕິບັດໃນຮອບວຽນທີໜຶ່ງ ແລະ ຮອບວຽນ ທີສອງ. ສະນັ້ນ, ບັນດາເຄື່ອງມື ແລະ ທິດສະດີຕ່າງໆສຳລັບການຈັດຕັ້ງປະຕິບັດຕົວຈິງແມ່ນໄດ້ຖືກດັດປັບດ້ວຍທີມງານ ທລຍ ເພື່ອເປັນການທົດສອບ ແລະ ພັດທະນາຕື່ມໄປຄຽງຄູ່ ກັບການຈັດຕັ້ງປະຕິບັດວຽກງານແບບທັງຮຽນ ແລະ ປັບປຸງໄປພ້ອມຄືກັບການເລີ່ມຕົ້ນຂອງການຈັດຕັ້ງປະຕິບັດວຽກງານໃນຮອບວຽນທີສາມຫລາຍໆ ເຄື່ອງມື ແລະ ວິທີການ ໃນການຈັດຕັ້ງປະຕິບັດບາງຢ່າງແມ່ນໄດ້ມີການປັບປຸງໃຫ້ດີຂຶ້ນໂດຍອີງໃສ່ປະສົບການໃນສອງຮອບວຽນທີ່ຜ່ານມາເພື່ອຮັບປະກັນການເຮັດວຽກໃນຮອບວຽນຕໍ່ໆໄປປະສົບຜົນສຳເລັດຕາມເປົ້າໝາຍທີ່ກຳນົດໄວ້.

ໂຄງການທີ່ຖືກຈັດຕັ້ງປະຕິບັດໂດຍ ທລຍ ແມ່ນໄດ້ປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ ແລະ ຫລຸດຜ່ອນຄວາມທຸກຍາກ ໃນ ສປປລາວ, ເພື່ອເຮັດວຽກງານຫລຸດຜ່ອນຄວາມທຸກຍາກມີປະສິດທິຜົນໃນວຽກງານຫລຸດຜ່ອນຄວາທຸກຍາກ. ສະນັ້ນ, ທລຍ ຕ້ອງ ເຮັດວຽກທີ່ສອດຄ່ອງກັບຄວາມຕ້ອງການສະເພາະທີ່ກໍ່ໃຫ້ເກີດ ຜົນປະໂຫຍດໂດຍລວມໃນຊຸມຊົນທີ່ວຽກງານ ທລຍ ກຳລັງຈັດຕັ້ງປະຕິບັດວຽກງານຢູ່ ທັງເປັນການຮັບປະກັນຄວາມຍືນຍົງຂອງໂຄງການ.

ການກໍ່ໃຫ້ເກີດຄວາມຍືນຍົງໃນການນຳໃຊ້ໂຄງການຢ່າງປະສົບຜົນສຳເລັດນັ້ນ ຕ້ອງຂຶ້ນກັບການປຸກລະດົມຄວາມຄິດຂອງຊຸມຊົນໃນການຮັບຜິດຊອບ ແລະ ບຳລຸງຮັກສາສິ່ງກໍ່ສ້າງເຫລົ່ານັ້ນ, ພ້ອມດຽວກັນນັ້ນ

ກໍ່ແມ່ນການ ອອກແບບ ແລະການກໍ່ສ້າງ ທີ່ໄດ້ມາດຖານດີ ແລະ ການມີສ່ວນຮ່ວມຂອງຊຸມຊົນ ເພື່ອພັດ ທະນາແນວຄິດຂອງ ຄວາມ ເປັນເຈົ້າຂອງ ສິ່ງກໍ່ສ້າງ ເຫລົ່ານັ້ນ ໃຫ້ຫລາຍຂຶ້ນ.

**ຜົນໄດ້ຮັບລວມທີ່ຄາດໄວ້ ສຳລັບການຈັດຕັ້ງປະຕິບັດຂອງວຽກງານ ທລຍ**

ທຸກກິດຈະກຳ ທີ່ ທລຍ ຈັດຕັ້ງປະຕິບັດ ແມ່ນເພື່ອໃຫ້ໄດ້ຜົນໄດ້ຮັບຄື:

- ຊາວບ້ານໃນຫລາຍກວ່າພັນໆ ໝູ່ບ້ານມີວິດການເປັນຢູ່ ທີ່ດີຂຶ້ນ
- ປະກອບສ່ວນໃນວຽກງານການເຕີບໂຕ ແລະ ຍຸດທະສາດການລຶບລ້າງຄວາມທຸກຍາກ ຂອງລັດຖະບານ (NGPES)
- ມັນແມ່ນຮູບແບບຂອງຂະບວນການພັດທະນາໃນ ສປປລາວ

**ສິ່ງທ້າທາຍໃນອານາຄົດສຳລັບ ທລຍ**

- ການຂະຫຍາຍກິດຈະກຳ ຂອງ ທລຍ ຈາກ 10 ເປັນ 24 ເມືອງ ແມ່ນສິ່ງທີ່ທ້າທາຍ ຕົ້ນຕໍສຳລັບທີມງານ ທລຍ ທີ່ຈະຕ້ອງແບກຫາບພາລະທີ່ໜັກໜ່ວງກວ່າທີ່ຜ່ານມາກໍ່ຄືການເພີ່ມໜ້າວຽກຂຶ້ນ ແລະ ບໍ່ມີໂອກາດໃນການຝຶກອົບຮົມກໍ່ຄືການສ້າງຄວາມເຂັ້ມແຂງເນື່ອງຈາກວ່າທີມງານທີ່ມີຈຳນວນເທົ່າເດີມທີ່ຕ້ອງເຮັດວຽກທີ່ ເພີ່ມຂື້ນ ຫລາຍກວ່າເທົ່າຕົວ ທຽບໃສ່ຮອບວຽນ ໜຶ່ງ ແລະ ຮອບວຽນ ສອງ ທີ່ຜ່ານມາ.
- ການກະຈາຍຂໍ້ມູນໄປສູ່ເຂດທຸລະກັນດານກໍ່ແມ່ນສິ່ງທ້າທາຍສຳລັບ ທລຍ ທີ່ໄປປຸກລະດົມຈິດສຳນຶກຂອງຊຸມຊົນໃຫ້ເຂົ້າໃຈກ່ຽວກັບກິດຈະກຳກໍ່ຄືບົດບາດຂອງວຽກງານຫລຸດຜ່ອນຄວາມທຸກຍາກ ທັງນີ້ກໍ່ເພື່ອກະຕຸ້ນໃຫ້ເຂົາເຈົ້າປະກອບສ່ວນທັງດ້ານວັດຖຸກໍ່ຄືແຮງງານອື່ນໆແຕ່ງົບປະມານສຳລັບການກະຈາຍຂໍ້ມູນຂ່າວສານ ແມ່ນຍັງມີຈຳກັດ.
- ການຮັກສາເພດານເງິນບໍລິຫານ 25% ແລະ ມູນຄ່າໂຄງການຍ່ອຍ 75% ເຊິ່ງກຳນົດໃນແຜນ ການເຮັດວຽກຂອງ ທລຍ ເຊິ່ງການເພີ້ມຂຶ້ນຂອງງົບປະມານ ຂັ້ນເມືອງເຊິ່ງຈະເປັນຜົນທີ່ໃຫ້ເກີດການເພີ່ມຂຶ້ນຂອງການ ລົງທຶນ ຈິ່ງຈະສາມາດຮັກສາເພດານດັ່ງກ່າວໄວ້ໄດ້.
- ການຫລຸດມູນຄ່າຂອງການບໍລິກຫານໃຫ້ຕ່ຳກວ່າ 25% ແລະ ການປັບປຸງຄູ່ມືກໍ່ຄືວິທີການຈັດຕັ້ງປະຕິບັດບາງຢ່າງ ເພື່ອເປັນການຫລຸດຜ່ອນຕົ້ນທຶນ ຂອງການລົງທຶນ.
- ການຕິດຕາມ ແລະ ຝຶກອົບຮົມ ໃຫ້ຕົວແທນ ແລະ ປະສານງານເຂດ ຄວນຈະຖືກຈັດຂຶ້ນເລື້ອຍໆ ເຖິງແນວ ໃດ ກໍ່ຕາມ ພະນັກງານບັນຊີແມ່ນຍັງມີຈຳກັດມີພຽງໜຶ່ງຕຳແໜ່ງໃນແຕ່ລະແຂວງ ບໍ່ມີຜູ້ຊ່ວຍ ດ້ານການ ບັນຊີ, ເຊິ່ງ ທລຍ ໄດ້ພົບບັນຫາໃນການຕິດຕາມການລາຍງານດ້ານການເງິນ ທີ່ໃຊ້ໃນ ການຈັດຕັ້ງປະຕິບັດໂຄງການຍ່ອຍຈາກເຂດຕ່າງໆ. ສະນັ້ນທີມງານຂັ້ນເມືອງຈະໃຊ້ເວລາສ່ວນຫລາຍຊ່ວຍຜູ້ປະສານງານເຂດໃນການສະຫລຸບ ແລະ ຂຶ້ນແຜນງົບປະມານໃນແຕ່ລະເດືອນ ໂດຍສະເພາະທີມງານພັດທະນາຊຸມຊົນຂັ້ນເມືອງແມ່ນໄດ້ເຮັດວຽກໃກ້ຊິດກັບຕົວແທນຫລືປະສານງານເຂດເພື່ອຊ່ວຍເຂົາເຈົ້າໃນການເຮັດວຽກລາຍ ງານການ ເງິນແທນການເຮັດວຽກພັດທະນາຊຸມຊົນ.
- ຊາວບ້ານທັງໝົດແມ່ນສະແດງຄວາມຊື່ສັດໃນການກວດສອບທາງດານການໃຊ້ຈ່າຍ ພາຍໃນເຂົາເຈົ້າເອງເຊິ່ງເຮັດໃຫ້ທີມງານ ທລຍ ບໍ່ສາມາດເກັບກຳຫລັກຖານຕ່າງໆກ່ຽວກັບການສໍ້ໂກງແຕ່ຢ່າງໃດ ເພື່ອເຮັດ

ໃຫ້ວຽກດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທະຜົນ ພ້ອມທັງສາມາດກວດສອບໄດ້ ທີມງານ ທລຍ ຕ້ອງເຮັດວຽກໃກ້ຊິດກັບຊຸມຊົນຕື່ມເພື່ອໃຫ້ເຂົ້າໃຈເຖິງບັນຫາຂອງຊາວບ້ານ ໂດຍສະເພາະການຊອກຫາວິທີ ແກ້ໄຂບັນຫາທີ່ສົມເຫດສົມຜົນ ໃນເມື່ອເກີດ ມີການສໍ້ໂກງໃນແຕ່ລະຄັ້ງ.

- ຄວາມຍືນຍົງຂອງໂຄງການກໍຍັງແມ່ນສິ່ງທ້າທາຍສຳລັບ ທລຍ ເນື່ອງຈາກວ່າຂາດການຝຶກອົບຮົມ ສຳລັບຜູ້ຊີ້ນຳດ້ານວິຊາການຂອງ ທລຍ ສຳລັບການຄຸ້ມຄອງ - ບໍລິຫານ, ການຊີ້ນຳການກໍ່ສ້າງ, ການສຳຫລວດ, ອອກແບບ ແລະ ການຄວບຄຸມຄຸນນະພາບ, ເນື່ອງຈາກວ່າຈຳນວນຂອງຜູ້ຊີ້ນຳດ້ານວິຊາ ການທຽບໃສ່ຈຳນວນໂຄງ ການຍ່ອຍແມ່ນມີຈຳນວນໜ້ອຍເກີນໄປ.
- ການລາອອກຂອງພະນັກງານກໍ່ແມ່ນສິ່ງທ້າຍຕົ້ນຕໍທີ່ ທລຍ ກຳລັງປະເຊີນໃນປະຈຸບັນນີ້ ເຊິ່ງໄດ້ເຮັດ ທລຍ ຕ້ອງ ປະເຊີນ ບັນຫາຫລັກ ຄື: ການຊອກຫາຜູ້ຈະມາແທນໃນແຕ່ລະຕຳແໜ່ງແມ່ນຫຍຸ້ງຍາກ ຍ້ອນການຮຽກຮ້ອງຄ່າຕອບແທນສູງເກີນໄປ ພ້ອມນັ້ນການຮັບປະກັນຄວາມຕໍ່ເນື່ອງຂອງການຈັດຕັ້ງປະຕິບັດວຽກງານກໍ່ແມ່ນ ບັນຫາ ທີ່ ທລຍ ຕ້ອງປະເຊີນ ເມື່ອມີການລາອອກຂອງພະນັກງານໃນຫລາຍໆ ຕຳແໜ່ງ.

## 4.2. ກິດຈະກຳສຳລັບຮອບວຽນ III

ຫລັກງຈາກກອງປະຊຸມ ຈັດລຽງບູລິມະສິດຂັ້ນເມືອງ ໄດ້ສຳເລັດລົງເຫັນວ່າ 668 ໂຄງການຍ່ອຍແມ່ນໄດ້ວາງແຜນ ສຳລັບຈັດຕັ້ງປະຕິບັດໃນ 20 ຕົວເມືອງ ໃນ 5 ແຂວງເຊິ່ງຄາດວ່າຈະໃຊ້ງົບປະມານ ໃນການກໍ່ສ້າງທັງໝົດ 4.163.000 ໂດລາສະຫະລັດ ແຕ່ຫລັງຈາກກອງປະຊຸມຕັດສິນຂັ້ນເມືອງຄັ້ງສຸດທ້າຍ ທີ່ຖືກຈັດຂຶ້ນໃນລະຫວ່າງເດືອນພະຈິກ ຫາ ທັນວາ 2005 ໃນ 20 ຕົວເມືອງ ສຳລັບຮອບວຽນ 3 ມີ 533 ໂຄງການຍ່ອຍໄດ້ຖືກຄັດເລືອກໃນການຈັດຕັ້ງປະຕິບັດ ສຳລັບຮອບວຽນດັ່ງກ່າວ.

**ຕາຕະລາງ 25 ສະຫລຸບຈຳນວນໂຄງການໃຕຫລະປະເພດໃນແຕ່ລະເມືອງສຳລັບຮອບວຽນ III**

| | | ກະສິກຳ | ຄົມມະນາຄົມ | ສຶກສາ | ສາທາ | ກິດຈະກຳສ້າງລາຍຮັບ | ລວມ |
|---|---|---|---|---|---|---|---|
| **ຫົວພັນ** | | - | - | - | - | | |
| | ຊຽງຄໍ້ | 3 | 14 | 4 | 6 | 4 | 31 |
| | ສົບເບົາ | 2 | 5 | 6 | 3 | 4 | 20 |
| | ແອດ | 6 | 7 | 2 | 7 | 4 | 26 |
| | ຊຳໄຕ້ | 3 | 15 | 14 | 13 | 4 | 49 |
| | ຫົວເມືອງ | 3 | 4 | 5 | 16 | 5 | 33 |
| | ວຽງໄຊ | 4 | 10 | 7 | 8 | 4 | 33 |
| **ຊຽງຂວາງ** | | - | - | - | - | | |
| | ໜອງແຮດ | - | 11 | 2 | 11 | 8 | 32 |
| | ຄູນ | - | 7 | 8 | 20 | 5 | 40 |
| | ຄຳ | 3 | 7 | 3 | 6 | 5 | 24 |
| **ສາລະວັນ** | | - | - | - | - | | |

| | | | | | | | |
|---|---|---|---|---|---|---|---|
| | ສະມ້ອຍ | - | 0 | 2 | 12 | 4 | 18 |
| | ຕຸ້ມລານ | - | 6 | 4 | 8 | 4 | 22 |
| | ຕະໂອ້ຍ | - | 5 | 6 | 8 | 4 | 23 |
| ສະຫວັນນະເຂດ | | - | - | - | - | | |
| | ເຊໂປນ | - | 3 | 22 | 3 | 4 | 32 |
| | ວະລະບູລີ | - | 8 | 6 | 5 | 4 | 23 |
| | ນອງ | 1 | 7 | 1 | 1 | 4 | 14 |
| | ພີນ | 2 | 10 | 11 | 0 | 4 | 27 |
| ຈຳປາສັກ | | - | - | - | - | | |
| | ປະທຸມພອນ | - | 5 | 7 | 6 | 4 | 22 |
| | ສຸຂຸມາ | - | 3 | 11 | 1 | 4 | 19 |
| | ມູນລະປະໂມກ | - | 2 | 11 | 7 | 4 | 24 |
| | ໂຂງ | - | 4 | 12 | 1 | 4 | 21 |
| ລວມ | | **27** | **133** | **144** | **142** | **87** | **533** |
| | | 5% | 25% | 27% | 27% | 16% | 100% |

ຂໍ້ມູນໃນຕາຕະລາງ 25 ຂ້າງເທິງນັ້ນສະແດງໃຫ້ເຫັນເຖິງຈຳນວນໂຄງການທີ່ໄດ້ຖືກຕັດສິນ ແລະ ຈັດຕັ້ງປະ ຕິບັດໃນ ຮອບວຽນສາມ ໃນ 20 ຕົວເມືອງ ຂອງ 5 ແຂວງເປົ້າໝາຍ ເຊິ່ງໃນນັ້ນ ແຂວງທົວພັນປະກອບມີ 6 ຕົວ ເມືອງ ເຊິ່ງມີຫລາຍກວ່າແຂວງອື່ນໆ ເນື່ອງຈາກວ່າເປັນ ແຂວງທີ່ທຸກຍາກຫລາຍ ສ່ວນ ແຂວງອື່ນໆມີພຽງແຕ່ສາມ ຫາສີ່ຕົວເມືອງເທົ່ານັ້ນ, ເຊີ່ງຈຳນວນໂຄງການທີ່ແຕ່ລະແຂວງໄດ້ຮັບສຳລັບຮອບວຽນ III ແຂວງຫົວພັນໄດ້ຮັບ 192ໂຄງການຕາມດ້ວຍສະຫວັນນະເຂດ ແລະ ຊຽງຂວາງ ໄດ້ຮັບຈຳນວນເທົ່າກັນຄື: 96 ໂຄງການ, ຈຳປາສັກ 86 ແລະ ສາລະວັນ 63 ໂຄງການ ໃນຈຳນວນ ທັງໝົດ 533 ໂຄງການການ.

### 4.3. ແຜນວຽກສຳລັບຮອບວຽນທີ III

ແຜນວຽກປະຈຳປີ 2005-2006 ຂອງແຕ່ລະໜ່ວຍງານ ແມ່ນໃຫ້ເບິ່ງໃນເອກະສານຊ້ອນທ້າຍ *10*

### Annex

**ເອກະສານຊ້ອນທ້າຍ 1: ສະຫລຸບການຈັດຕັ້ງປະຕິບັດ ໂຄງການໃນຮອບວຽນ I ,II**

**ເອກະສານຊ້ອນທ້າຍ 1.1: ຂໍ້ມູນສຳລັບຮອບວຽນທີໜຶ່ງ ແລະສອງ**

**ເອກະສານຊ້ອນທ້າຍ 2: ແຜນວຽກສຳລັບ ການຈັດຕັ້ງປະຕິບັດ ໃນຮອບວຽນ II**

**ເອກະສານຊ້ອນທ້າຍ 3: ຜົນຂອງການສຳຫລວດ LECS 3**

**ເອກະສານຊ້ອນທ້າຍ 4: ບົດສະຫລຸບຫຍໍ້ ຂອງການເຮັດສຳມະນາໄລຍະເຄິ່ງການ**

ເອກະສານຊ້ອນທ້າຍ  5: ການຝຶກອົບຮົມທັງໝົດສຳລັບຮອບວຽນທີ  I, II.

ເອກະສານຊ້ອນທ້າຍ  6: ງົບປະມານ ແລະ ຂໍ້ມູນທັງໝົດຂັ້ນເມືອງ ໃນຮອບວຽນ II

ເອກະສານຊ້ອນທ້າຍ  7: ບົດສະຫລຸບການຈັດຊື້- ຈັດຈ້າງ 2003 ຫາ 2004

ເອກະສານຊ້ອນທ້າຍ  8. ງົບປະມານທີ່ແບ່ງປັນໃຫ້ເມືອງ ສຳລັບຮອບວຽນ  III

ເອກະສານຊ້ອນທ້າຍ  9: ສະຫລຸບຂໍ້ມູນທັງໝົດຂອງຮອບວຽນ  III

ເອກະສານຊ້ອນທ້າຍ 10: ແຜນວຽກຂອງແຕ່ລະໜ່ວຍງານໃນຮອບວຽນ III

Summary of PRF Sub-project Disbursement and Completion Progress - Cycle 1 (2003-2004) - A total of 248 sub-projects are being implemented in 10 districts

**Annex 1**

| Province/ District/ no. of villages | Type (and target numbers) of sub-projects / activities | No of units | No. of villages benefiting | | No. of sub-projects | | % of work progress as of December 2004 | No. Sub-projects completed | PRF Total planned expenditure (USD) | PRF Fund transferred to date (USD) | PRF Fund transferred to date (KIP) | % of funds transferred to date |
|---|---|---|---|---|---|---|---|---|---|---|---|---|
| | | | Plan | Actual | Moni tor | Actual | | | | | | |
| **Huaphanh Province** | | | | | | | | | | | | |
| **Sobbao** | Gravity fed water systems | 13 units | 14 | 14 | 13 | 13 | 100% | 13 | **120,850.00** | **120,850.00** | **1,202,942,494** | 100% |
